ໝວດວິຊາສະເພາະ ສາຍສ້າງຄູຕໍ່ເນື່ອງ

# ວັນນະຄະດີລ້ານຊ້າງ 2





**ສົກປີ 2022**

# ວັນນະຄະດີລ້ານຊ້າງ 2

| ສາຍພາສາລາວ ລະບົບຕໍ່ເນື່ອງ | ປີທີ 2 | ພາກຮຽນ 2 |
|---|---|---|

ຮຽບຮຽງໂດຍ:

ຊອ ນ.ອໍລະວັນ ສີຫາຈັກ

ລັດດາພອນ ໄຊໂກສີ

ກວດແກ້ໂດຍ:

ອຈ ນ. ຄໍາສະຫວັນ ຈັນສີຍະວົງ

ຊອ ປທ ນ.ບົວສະຫວັນ ທອມສີສົມບັດ

ສຸລິໄຊ ສີຜາຮາດ

ສົກປີ 2022

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ
ກົມສ້າງຄູ
ວິທະຍາໄລຄູສາລະວັນ

## ເອກະສານຮັບຮອງການກວດແກ້ບົດຮຽບຮຽງປຶ້ມວິຊາ: ວັນນະຄະດີລ້ານຊ້າງ 2

| ລ/ດ | ຊື່ຫົວຂໍ້ | ພາກວິຊາ | ຜູ້ຮຽບຮຽງ | ຜູ້ກວດແກ້ |
|---|---|---|---|---|
| 1 | ວັນນະຄະດີລ້ານຊ້າງ2 | ພາສາລາວ | ຊອ ນ ອໍລະວັນ ສີທາຈັກ<br>ນ ວັດຕານມອນ ໄຊໄກສີ | ອາຈານ ນ ຄໍາສະຫວັນ ຈັນສີຍະວົງ<br>ຊອ ປທ ນ ປິວສະຫວັນ ທອມສີສິມບັດ<br>ທ່ານ ສຸລິໄຊ ສີພາຣາດ |

| ຄະນະກຳມະການກວດສອບ | ລາຍເຊັນ |
|---|---|
| 1. ອາຈານ ນ ຄໍາສະຫວັນ ຈັນສີຍະວົງ | |
| 2. ຊອ ປທ ນ ປິວສະຫວັນ ທອມສີສິມບັດ | |
| 3. ທ່ານ ສຸລິໄຊ ສີພາຣາດ | |

ທີ່,ສາລະວັນ, ວັນທີ........................

ພາກວິຊາພາສາລາວ

ນ. ຄຳຂຽງ ຈັນທະວົງສັກ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ວິທະຍາໄລຄູສາລະວັນ
ສະພາວິທະຍາສາດ

ເລກທີ 118 /ສພ ສວ

# ເອກະສານຮັບຮອງ
## ອະນຸມັດຜ່ານການຮັບຮອງການຮຽບຮຽງປຶ້ມສາຍວິທະຍາສາດສັງຄົມ

- **ອີງຕາມ:** ຂໍ້ຕົກລົງວ່າດ້ວຍການຈັດຕັ້ງການເຄື່ອນໄຫວກິດຈະກຳ ສະພາວິທະຍາສາດຂອງ ວິທະຍາໄລຄູສາລະວັນ ປະຈຳສົກຮຽນ 2021-2022

ຈາກຜົນການກວດສອບ, ກວດກາທາງດ້ານເນື້ອໃນ, ຫຼັກການຂອງອະນຸກຳມະການເຫັນວ່າ ບົດຮຽບຮຽງປຶ້ມມີຄວາມຖືກຕ້ອງຕາມເນື້ອໃນຫຼັກສູດທີ່ໄດ້ກຳນົດ ແລະ ສະພາວິທະຍາສາດຈຶ່ງໄດ້ຮັບຮອງເອົາປຶ້ມເຫຼັ້ມນີ້ ເປັນສ່ວນໜຶ່ງໃນການສຶກສອນ ແລະ ຖືກນຳໃຊ້ໃນກິດຈະກຳການຮຽນ-ການສອນ ໃນວິທະຍາໄລຄູສາລະວັນ

| ຄະນະກຳມະການກວດສອບ | ລາຍເຊັນ |
|---|---|
| 1. ທ່ານ ປທ ມອນໄຊ ຂັນທະຈັກ | [signature] |
| 2. ທ່ານ ປອ ໃພທອງ ພົງສີງຄາມ | [signature] |

ທີ່,ສາລະວັນ, ວັນທີ 2 0 MAY 2022

ປະທານສະພາວິທະຍາສາດ

[signature]

ອຈ. ນ. ສົມປອງ ແສນທະວິສຸກ
Sompong SENTHAVISOUK

# ຄໍານໍາ

ເພື່ອເປັນການປັບປຸງຄຸນນະພາບ ແລະ ປະສິດທິພາບຂອງການສ້າງຄູ, ແນ່ໃສ່ເພີ່ມສະມັດຖະພາບຂອງຄູ ແລະ ພັດທະນາອາຊີບຄູໃຫ້ດີຂຶ້ນເທື່ອລະກ້າວນັ້ນ. ພວກຂ້າພະເຈົ້າຮຽບຮຽງປື້ມນີ້ຂຶ້ນມາ ເພື່ອຮັບໃຊ້ຢູ່ວິທະຍາໄລຄູສາລະວັນ,ການຄົ້ນຄວ້າ ແລະ ຮຽບຮຽງປື້ມວິຊາວັນນະຄະດີລ້ານຊ້າງ 2 ລະບົບ 11 + 3+2 ປີ 2 ເຫຼັ້ມນີ້ ຄະນະຮຽບຮຽງໄດ້ອີງໃສ່ເອກະສານພາຍໃນເຊິ່ງປຶ້ມຫົວນີ້ບັນຈຸດ້ວນເນື້ອໃນບົດຮຽນຈໍານວນ 4 ບົດເຊິ່ງເວົ້າເຖິ່ງສະພາບປະຫວັດສາດ ສະໄໝປະເທດຊາດສູນຄວາມເປັນເອກະລາດ , ປະຊາຊົນຖືກກົດຂີ່ຂູດຮີດຈາກສັດຕູນາຕ່າງດ້າວ, ເລື່ອງສານລຶບພະສູນ, ກາບເມືອງພວນ , ພື້ນວຽງ ແລະ ນອກນັ້ນຍັງເວົ້ານໍ້າໃຈຕໍ່ສູ້ຂອງນັກແຕ່ງ.

ຄະນະຮຽບຮຽງປຶ້ມເຫຼັ້ມນີ້ຂອງວິທະຍາໄລຄູສາລະວັນຫວັງຢ່າງຍິ່ງວ່າ ເນື້ອໃນປັບປຸງ ແລະ ຮຽບຮຽງໄວ້ໃນປຶ້ມວັນນະຄະດີເຫຼັ້ມນີ້ ຄົງຈະໃຫ້ຄວາມກະຈ່າງແຈ້ງແກ່ຜູ້ຮຽນເປັນສ່ວນຫຼາຍ, ແຕ່ຖ້າຫາກວ່າຍັງມີບ່ອນໃດບໍ່ຖືກຕ້ອງຢາກປະກອບສ່ວນໃນການແກ້ໄຂຂໍໃຫ້ທ່ານຜູ້ຊົມໃຊ້ກະລຸນາສົ່ງຂໍ້ຄິດເຫັນ ແລະ ຄໍາຕໍານິຕິຊົມມາຍັງຄະນະຮຽບຮຽງຍິນດີຮັບທຸກຄໍາຕິຊົມ.

# ສາລະບານ


ບົດທີ1ວັນນະຄະດີລ້ານຊ້າງສະໄໝຊຸດໂຊມ ........ 1

1. ສະພາບປະຫວັດສາດ ........ 1

1.1. ພະລາຊະບັນລັງທີ່ເປື່ອຍເຍື່ອຍ ........ 1

1.2 ການຕໍ່ສູ້ກູ້ຊາດຂອງເຈົ້າອານຸວົງ ........ 3

2. ສະພາບວັດທະນະທຳວັນນະຄະດີ ........ 4

3. ເນື້ອໃນວັນນະຄະດີ ........ 5

3.1 ນໍ້າໃຈຮັກຊາດຂອງຜູ້ແຕ່ງ ........ 5

3.2 ໂທດກຳຂອງພວກສັກດີນາສະຫຍາມທີ່ກໍ່ຂຶ້ນກັບປະຊາຊົນເມືອງພວນ. ........ 5

4. ສິລະປະໃນການປະດິດແຕ່ງ ........ 6

4.1 ການໃຊ້ສັບພາສາ ........ 6

4.2 ການວາດພາບພາຍໃນຈິດ ........ 6

ບົດທີ 2ສານລຶບພະສູນ ........ 8

1. ກ່ຽວກັບນັກແຕ່ງ ........ 8

2. ເນື້ອໃນຂອງສານລຶບພະສູນ ........ 9

2.1 ບັ້ນບັງລະທັດ ........ 9

2.2 ບັ້ນສິມທີ່ຄິດ ........ 12

2.3 ບັ້ນສຸດທີ່ອ່າວ ........ 14

3. ສິລະປະການແຕ່ງ ........ 18

3.1 ການໃຊ້ຕົວລະຄອນເພີນຈິດ ........ 18

3.2 ການວາດພາບພາຍໃນຈິດ ........ 18

3.3 ການໝູນໃຊ້ຄຳຜະຫຍາພາສິດ ........ 18

ບົດທີ3ກາບເມືອງພວນ ........ 29

1. ສະພາບຂອງການແຕ່ງ ........ 29

2. ເນື້ອໃນຂອງກາບ ........ 29

2.1 ໂທດກຳຂອງພວກສັກດີນາສະຫຍາມ ແລະສັກດີນາລາວ ........ 29

2.2 ຄວາມທຸກຂອງປະຊາຊົນເມືອງພວນ ........ 334

2.3 ການຕໍ່ສູ້ຂອງປະຊາຊົນເມືອງພວນ ........ 32

3. ສິລະປະໃນການແຕ່ງກາບເມືອງພວນ ....................................................................................................33

4. ສະຫຼຸບລວມ: ....................................................................................................33

ບົດທີ 4 ພື້ນວຽງ ....................................................................................................43

1. ໃນສະພາບອານາຈັກລາວລ້ານຊ້າງຮຸ່ງເຮືອງ ....................................................................................................43

2. ສະພາບປະຫວັດສາຂອງລາວສະໄໝອານາຈັກລ້ານຊ້າງເຊື່ອມໂຊມ ....................................................................................................44

2.1 ເຈົ້າອະນຸກຽມກອບກູ້ອິດສະຫຼະພາບ ....................................................................................................46

2.2 ເຈົ້າອະນຸຍົກທັບຈາກວຽງຈັນ ....................................................................................................47

2.3 ເຈົ້າອະນຸຖອຍທັບ ....................................................................................................48

2.4 ສະໜາມຮົບໜອງບົວລຳພູ ....................................................................................................49

2.5 ເຈົ້າອະນຸເຂົ້າຍຶດເອົາວຽງຈັນຄືນ ....................................................................................................56

2.6 ເຈົ້າອະນຸ ແລະ ເຊື້ອກະສັດວຽງຈັນຖືກຈັບ ....................................................................................................52

3. ສະພາບປະຫວັດສາດລາວແຕ່ປີ ຄ.ສ 1829 - 1893 ....................................................................................................53

4. ສະເໜີຫຍໍ້ເລື່ອງພື້ນວຽງ ....................................................................................................56

5. ວິເຄາະທາງດ້ານເນື້ອໃນ ....................................................................................................57

5.1 ສາເຫດທີ່ພາໃຫ້ເຈົ້າອະນຸຄຽດແຄ້ນ ແລະ ກະກຽມກຳລັງເພື່ອຕໍ່ສູ້. ....................................................................................................57

5.2 ສາຍເຫດທີ່ພາໃຫ້ຂະບວນການຕໍ່ສູ້ຂອງເຈົ້າ ອະນຸວົງຖືກປະລາໄຊ ....................................................................................................57

5.3 ເສິກສົງຄາມລະຫວ່າງສະຫຍາມກັບຍອນຜ່ານດິນແດນລາວ ....................................................................................................57

5.4 ດ້ານສິລະປະການແຕ່ງ ....................................................................................................57

ພື້ນວຽງ ....................................................................................................86

# ບົດທີ1
# ວັນນະຄະດີລ້ານຊ້າງສະໄໝຊຸດໂຊມ

## 1. ສະພາບປະຫວັດສາດ

### 1.1.ພະລາຊະບັນລັງທີ່ເປື່ອຍເຍື່ອຍ

ນັບແຕ່ສະຕະວັດທີ 17 ກ້າວເຂົ້າສູ່ສະຕະວັດທີ 18ລະບອບສັກດີນາລາວເລີ່ມວິກິດການທາງດ້ານການເມືອງ ແລະ ໄລຍະນີ້ເປັນໄລຍະທີ່ຊຸດໂຊມກວ່າໝູ່ຂອງລະບອບສັກດີນາ. ພາຍໃນສັກດີນາມີຄວາມຂັດແຍ່ງແບ່ງແຍກກັນ, ຍາດຊີງກັນເປັນເຈົ້າເປັນນາຍ. ດັ່ງນັ້ນ ເຮັດໃຫ້ລະບອບສັກດີນານັບມື້ນັບອ່ອນແອ ກາຍເປັນກໍາລັງທີ່ຕ້ານຊາດ ແລະ ຂາຍຊາດ ເພາະພວກມັນສະກັດກັ້ນທຸກການເຄື່ອນໄຫວຂອງສັງຄົມ ຍ້ອນວ່າ ແຕ່ກ່ອນປະເທດລ້ານຊ້າງເຄີຍເປັນເອກະລາດ, ເອກະພາບ,ມາຮອດປັດຈຸບັນນີ້ ປະເທດລ້ານຊ້າງຖືກແຕກແຍກກັນ. ຄວາມເປັນເອກະລາດແຕ່ກ່ອນນັ້ນຖືກຊຸດໂຊມ ແລະ ກາຍເປັນຫົວເມືອງຂຶ້ນຂອງຊາດອື່ນ. ໃນຕົວຈິງໃນໄລຍະກ້າວເຂົ້າສູ່ສະຕະວັດທີ 18ຕົ້ນ ສະຕະວັດທີ 19ປະເທດລ້ານຊ້າງກາຍເປັນຫົວເມືອງຂຶ້ນຂອງສັກດີນາສະຫຍາມ ຈາກນັ້ນກໍກາຍເປັນຫົວເມືອງຂຶ້ນຂອງຈັກກະພັດຝຣັ່ງຢ່າງຕໍ່ເນື່ອງກັນ.

ດັ່ງນັ້ນ ພວກເຮົາເວົ້າໄດ້ວ່າ ປະເທດລ້ານຊ້າງເຄີຍເປັນປະເທດທີ່ຮຸ່ງເຮືອງສີວິໄລໃນສະຕະວັດທີ 17ມາຮອດທ້າຍສະຕະວັດທີ 18ເຖິງຕົ້ນສະຕະວັດທີ 19ນີ້ຄວາມເປັນເອກະລາດຮຸ່ງເຮືອງສີວິໄລນັ້ນບໍ່ອາດຈະຄົງຕົວຕໍ່ໄປໄດ້ອີກ, ອໍານາດການປົກຄອງລວມສູນ, ສູນກາງຂອງລະບອບສັກດີນາລາວໄດ້ກ້າວໄປສູ່ການຊຸດໂຊມ.



ຮູບທີ 1: ເຈົ້າສຸລິຍະວົງສາ

- ພາຍຫຼັງເຈົ້າສຸລິຍະວົງສາສິ້ນພະຊົນໃນປີ1690ແລ້ວຫຼັງຈາກນັ້ນໃນພະລາຊະບັນລັງມີການຍາດຊີງກັນຂຶ້ນກໍາອໍານາດ. (ເລົ່າປະຫວັດຫຍໍ້ຂອງເຈົ້າ ສຸລິຍະວົງສາ).
- ມາຮອດເດືອນ 6ປີ 1690ພະຍາເມືອງຈັນໄດ້ຍົກທັບມາຢຶດເອົາວຽງຈັນແລ້ວກໍສະຖາປານາຕົນເອງຂຶ້ນເປັນເຈົ້າຊີວິດໃນໄລຍະ 6ເດືອນ. (ເລົ່າປະຫວັດຫຍໍ້ພະຍາເມືອງຈັນ).
- ຫຼັງຈາກນັ້ນເຈົ້າ ອົງຫຼໍ່ກໍຍົກທັບມາຕີວຽງຈັນຈັບເອົາພະຍາເມືອງຈັນໄປຂ້າຖິ້ມແລ້ວສະຖາປານາຕົນເອງຂຶ້ນເປັນເຈົ້າຊີວິດປົກຄອງ. (ເລົ່າປະຫວັດຫຍໍ້ເຈົ້າອົງຫຼໍ່).

- ເມື່ອເຈົ້າອິງຫຼໍ່ ສະເຫວີຍລາດໄດ້ 4ປີ ກໍໄດ້ຖືກເຈົ້າ ນັນທະລາດຍົກທັບມາຕີເຈົ້າ ອິງຫຼໍ່ແລ້ວຍຶດເອົາວຽງຈັນ ຈັບເຈົ້າອິງຫຼໍ່ໄປຂ້າຖິ້ມແລ້ວສະຖາປານາຕົນເອງເປັນເຈົ້າຊີວິດໃນປີ ຄ.ສ 1695. (ເລົ່າປະຫວັດເຈົ້າ ນັນທະລາດ ຕື່ມ).
- ເມື່ອເຈົ້ານັນທະລາດຄອງເມືອງໄດ້3ປີ, ຄືປີ 1698ເຈົ້າອິງເອ້ກໍໄດ້ຍົກທັບມາຕີເຈົ້ານັນທະລາດ ແລະ ຈັບເຈົ້ານັນທະລາດໄປຂ້າຖິ້ມແລ້ວຍົກຕົນເປັນເຈົ້າຊີວິດໃນປີນັ້ນເອງແລ້ວຕັ້ງຊື່ໃຫ້ຕົນເອງວ່າ: "ເສດຖາທິລາດ 2".
- ຮອດປີ 1706ເຈົ້າ ກິ່ງກິດສະລາດ ກັບ ເຈົ້າອິງຄໍາໄດ້ຍົກທັບມາຕີເອົາເມືອງ ຫຼວງພະບາງແລ້ວກໍຍົກທັບມາຕີເອົາວຽງຈັນ. ເວລານີ້ເຈົ້າເສດຖາທິລາດ 2 ( ຫຼືອິງເອ້ ) ຢ້ານບໍ່ໄຫວຈຶ່ງໄປຮ້ອງຂໍເອົາເຈົ້າຊີວິດກຸງສີອາຍຸດທະຍາມາຊ່ວຍ ໃນປີ 1707ໃນປີນີ້ເອງພວກສະຫຍາມໄດ້ເຂົ້າມາປະເທດລ້ານຊ້າງ.

ໃນຄັ້ງທໍາອິດແທນທີ່ເຂົາຈະເອົາກໍາລັງມາຊ່ວຍວຽງຈັນ ເພື່ອຕີຫຼວງພະບາງ ແຕ່ພວກມັນບໍ່ໄດ້ປະຕິບັດຄືແນວນັ້ນ, ເມື່ອມັນມາຮອດແລ້ວພັດມາຕົກທອດເລົ່າໂລມລະຫວ່າງ 2ນະຄອນໃຫ້ຖືກຕ້ອງປອງດອງກັນ ແລ້ວເຈົ້າເມືອງ2 ອານາຈັກຈຶ່ງແບ່ງເຂດຄວບຄຸມໃຫ້ຄື:

- ແຕ່ປາກນໍ້າເຫືອງຂຶ້ນເມືອເໜືອ ແມ່ນເຂດອານາຈັກລ້ານຊ້າງຫຼວງພະບາງ.
- ແຕ່ປາກນໍ້າເຫືອງລົງໃຕ້ ແມ່ນເຂດອານາຈັກລ້ານຊ້າງວຽງຈັນ.

ການແບ່ງ 2ເຂດອານາຈັກນີ້ ແມ່ນກົນອຸບາຍຍາວນານຂອງພວກສັກດີນາສະຫຍາມ ເພື່ອຮຸກຮານລາວ ແລະ ຍຶດເອົາດິນລາວໃນອານາຄົດ.

- ຮອດປີ 1714ທາງນະຄອນຈໍາປາສັກ ກໍໄດ້ປະກາດຕົວແຍກອອກເປັນເອກະລາດບໍ່ຂຶ້ນກັບວຽງຈັນມາຮອດໄລຍະນີ້ ອານາຈັກທີ່ເປັນເອກະລາດໃນເມື່ອກ່ອນໄດ້ແຍກອອກເປັນ 3 ອານາຈັກຄື:
- ອານາຈັກລາວລ້ານຊ້າງຫຼວງພະບາງ.
- ອານາຈັກລາວລ້ານຊ້າງວຽງຈັນ.
- ອານາຈັກລາວລ້ານຊ້າງຈໍາປາສັກ.

ປີ 1766ເປັນໄລຍະທີ່ພວກສະຫຍາມກະກຽມກໍາລັງ ແລະ ກະກຽມທຸກເງື່ອນໄຂເພື່ອມາຮຸກຮານຍຶດຄອງເອົາປະເທດລ້ານຊ້າງເປັນຫົວເມືອງຂຶ້ນຂອງພວກເຂົາ, ເຫດການທີ່ເກີດຂຶ້ນໃນປີ 1766ຄື ວໍລະລາດວົງສາໄດ້ເອົາພີ່ນ້ອງຂອງຕົນອອກຈາກວຽງຈັນໄປຕັ້ງບ້ານຢູ່ໜອງບົວລໍາພູຈັງຫວັດອຸດອນໂດຍບໍ່ຂຶ້ນກັບວຽງຈັນອີກ.

ສ່ວນເຈົ້າສຸລິບຸນຍະສານ ໄດ້ພະຍາຍາມປາບເຖິງ 2 ປີ ແຕ່ກໍບໍ່ສໍາເລັດຈຶ່ງໄປຂໍຄວາມຊ່ວຍເຫຼືອ ຈາກພະຍານະຄອນລາຊະສີມມາ ເຈົ້າເມືອງລາຊະສີມມາກໍເອົາກໍາລັງມາຊ່ວຍ, ເວລານີ້ ພະວໍລະລາດວົງສາກໍ່ແຕກໄປຢູ່ບ້ານດອນມົດແດງ (ຄືເມືອງອຸບົນດຽວນີ້) ແລະ ຂໍເຂົ້ານ້ອມຕໍ່ພະໄຊຍະກຸມມານເຈົ້ານະຄອນຈໍາປາສັກພາຍລຸນມາເຈົ້າວໍລະລາດວົງສາກໍຜິດໃຈຕໍ່ເຈົ້ານະຄອນຈໍາປາສັກຈຶ່ງຍົກເອົາຄອບຄົວໜີໄປຢູ່ບ້ານ ດອນມົດແດງຄືເກົ່າແລ້ວແຕ່ງໃຫ້ລູກຊາຍຊື່ວ່າ: ທ້າວ ກໍ່ານໍາເອົາເຄື່ອງບັນນາການໄປຂໍອ່ອນນ້ອມຕໍ່ພະເຈົ້າແຜ່ນດິນສະຫຍາມ (ໃນເວລານີ້ແມ່ນເຈົ້າຕາກສິນ).

ໂດຍອີງໃສ່ສະພາບແນວນັ້ນມາເຖິງປີ 1778ກອງທັບສະຫຍາມໄດ້ຍົກກໍາລັງມາຕີຍຶດເອົານະຄອນຈໍາປາສັກແລ້ວຍົກທັບຂຶ້ນຕີເອົາວຽງຈັນ ໃນປີ 1779ໄດ້ຢ່າງງ່າຍດາຍ. ເມື່ອພວກສະຫຍາມຍຶດເອົາວຽງຈັນໄດ້ແລ້ວ, ພວກມັນໄດ້ຈູດເລົາເຜົາຜານນະຄອນຫຼວງວຽງຈັນຢ່າງຮາບກ້ຽງພ້ອມທັງເກັບກວດເອົາມໍລະດົກຂອງຊາດເຮົາໄປຢ່າງຫຼວງຫຼາຍເຊັ່ນ: ພະແກ້ວມໍລະກົດ, ພະບາງ, ພະແຊກຄໍາ, ລະຄັງ, ຄ້ອງແຫຼ່ງຕະຫຼອດຮອດຄໍາພີປີດົກ ແລະກວດຕ້ອນເອົາປະຊາຊົນນາຍຊ່າງເກັ່ງຊໍານານງານ, ນັກສິລະປະ.ຈາກນັ້ນ, ພວກມັນໄດ້ບັງຄັບໃຫ້ເຈົ້າຫຼວງພະບາງຕ້ອງຍອມຈໍານົນອ່ອນນ້ອມຕໍ່ພວກສະຫຍາມ.

ສະຫຼຸບ: ນັບແຕ່ປີ 1779ເປັນຕົ້ນມາປະເທດລ້ານຊ້າງທັງໝົດໄດ້ກາຍເປັນຫົວເມືອງຂຶ້ນຂອງສະຫຍາມໂດຍກົງປະຊາຊົນລ້ານຊ້າງໄດ້ເປັນຂ້ອຍຂ້າຂອງຊາດອື່ນ. ໃນໄລຍະນີ້ຊົນຊັ້ນສັກດີນາລາວໄດ້ເສຍຄຸນປະໂຫຍດຕໍ່ຊາດຕໍ່ການຂະຫຍາຍຕົວທາງດ້ານປະຫວັດສາດ. ພວກມັນໄດ້ກາຍເປັນກຳລັງທີ່ເປື່ອຍເຍື່ອຍເນົ່າເໝັນກວ່າເວລາໃດໝົດ. ພວກມັນໄດ້ຍາດຊິງກັນຂຶ້ນນັ່ງເທິງພະລາຊະບັນລັງທີ່ທາດ້ວຍເລືອດເພື່ອຄວາມສະນຸກສ່ວນຕົວ, ຍ້ອນເຫດການດັ່ງກ່າວພວກມັນຈຶ່ງນຳພາປະເທດຊາດໄປເຖິງບ່ອນຫຼົ້ມຈົມກາຍເປັນຫົວເມືອງຂຶ້ນໃຫ້ແກ່ຊາດອື່ນ, ພວກເຂົາເປັນຜູ້ຢຽບຍ້ຳຜົນງານອັນລ້ຳຄ່າຂອງປູ່ຍາຕາຍາຍທີ່ສ້າງໄວ້ແຕ່ບູຮານ, ພວກເຂົາໄດ້ກາຍເປັນກຳລັງທີ່ທໍລະຍົດຊາດ, ປະຫວັດສາດຂອງຊາດຈະກ່າວປະນາມພວກເຂົາຢູ່ຕະຫຼອດເວລາ.

ແຕ່ຢູ່ເທິງທ້ອງຟ້າອັນມືດມົນນີ້ຍັງມີແສງສະຫວ່າງເລັກໜ້ອຍທີ່ສອດສ່ອງອອກມາອັນເປັນສັນຍາລັກໃຫ້ແກ່ປະຊາຊົນເຮົານັ້ນແມ່ນແສງສະຫວ່າງແຫ່ງນ້ຳໃຈຮັກຊາດ, ຄຽດແຄ້ນສັດຕູຂອງເຈົ້າອານຸວົງ, ຂອງຊົນຊັ້ນສັກດີນາຈຳນວນໜຶ່ງທີ່ບໍ່ເຫັນດີເຫັນພ້ອມກັບອຳນາດການປົກຄອງຂອງສັກດີນາສະຫຍາມ. ສະນັ້ນ, ພວກເຂົາເຈົ້າຈຶ່ງນຳພາປະຊາຊົນລຸກຂຶ້ນຕໍ່ສູ້ຕ້ານຄືນກັບພວກສັກດີນາສະຫຍາມຢ່າງລຽນຕິດກັນມາເດັ່ນກວ່າໝູ່ແມ່ນຂະບວນການຕໍ່ສູ້ຂອງເຈົ້າ ອານຸວົງທີ່ເປັນແວ່ນແຍງໃຫ້ແກ່ປະຊາຊົນທັງຊາດ, ມາເຖິງປັດຈຸບັນຄວາມເສຍສະຫຼະຢ່າງອົງອາດກ້າຫານຂອງນັກວິລະຊົນສະໄໝນັ້ນພວກເຮົາບໍ່ອາດຈະຫຼົງລືມໄດ້ ແລະ ປະຫວັດສາດກໍຈະບັນທຶກຄຸນງາມຄວາມດີຂອງເພິ່ນໄວ້ຕະຫຼອດໄປ, ແຕ່ເວົ້າເຖິງບຸກຄົນທີ່ຕ້ານຊາດ, ຂາຍຊາດປະຫວັດສາດກໍ່ຈະບັນທຶກຄວາມຊົ່ວຊ້າເລວຊາມຂອງພວກເຂົາຢ່າງບໍ່ຂາດໄລຍະຈາກນັ້ນ ປະຫວັດສາດກໍຈະກ່າວປະນາມພວກເຂົາຢູ່ຕະຫຼອດເວລາ.

## 1.2 ການຕໍ່ສູ້ກູ້ຊາດຂອງເຈົ້າອານຸວົງ

ພາຍຫຼັງພວກສັກດີນາສະຫຍາມສຳເລັດການຣຸກຮານປະເທດລ້ານຊ້າງແລ້ວມັນກໍໄດ້ດຳເນີນເອົາປະຊາຊົນລ້ານຊ້າງພ້ອມດ້ວຍມູນມັງມໍລະດົກອັນລ້ຳຄ່າຂອງພວກເຮົາຈຳນວນຫຼວງຫຼາຍໄປປະເທດໄທ, ເປັນຕົ້ນແມ່ນໃນປີ ຄ.ສ 1779ເຈົ້າຕາກສິນເຊິ່ງເປັນເຈົ້າຊີວິດຂອງສະຫຍາມໄດ້ບັງຄັບເອົາປະຊາຊົນລາວຈຳນວນໜຶ່ງໄປເປັນຂ້ອຍຂ້າຮັບໃຊ້ໃຫ້ແກ່ພວກມັນ, ປະຊາຊົນລາວລ້ານຊ້າງທີ່ຖືກເກັບເກນໄປນັ້ນແມ່ນໄດ້ຮັບຄວາມທຸກທໍລະມານຢ່າງແສນສາຫັດ ແລະຖືກລົ້ມຫາຍຕາຍຈາກເປັນຈຳນວນຫຼວງຫຼາຍຍ້ອນພະຍາດໂລຄາ, ການກິນຢູ່ຂາດເຂີນຍ້ອນຄວາມທຸກທໍລະມານນັ້ນເຂົາເຈົ້າໄດ້ລຸກຂຶ້ນຕ້ານຄືນເພື່ອກູ້ເອົາປະເທດຊາດຄືນມາ.



ຮູບທີ1: ຂະບວນການສູ້ຂອງເຈົ້າອະນຸວົງ

ສະໄໝເຈົ້າອິນທະວົງປົກຄອງນະຄອນຫຼວງວຽງຈັນປີ ຄ.ສ 1795ສະຫຍາມໄດ້ແຕ່ງຕັ້ງເຈົ້າອານຸວົງເປັນອຸປາຮາດ (ຮອງເຈົ້າຊີວິດ) ຈາກນັ້ນ ເຈົ້າອິນທະວົງໄດ້ສິ້ນພະຊົນເຈົ້າຊີວິດສະຫຍາມໄດ້ແຕ່ງຕັ້ງເຈົ້າອານຸວົງຂຶ້ນເປັນເຈົ້າຊີວິດປົກຄອງດິນແດນວຽງຈັນ ໃນປີ 1804.

ເຈົ້າອານຸວົງ ເປັນກະສັດທີ່ເກັ່ງກ້າສາມາດສະຫຼາດຫຼັກແຫຼມ, ເປັນນັກການຕ່າງປະເທດຢ່າງຄ່ອງແຄ້ວພະອົງເຄີຍໄດ້ເຮັດເສິກສົງຄາມກັບສັດຕູຫຼາຍເທື່ອ. ພາຍຫຼັງທີ່ຂຶ້ນກຳອຳນາດປົກຄອງລາຊະສົມບັດແລ້ວເຈົ້າອານຸວົງໄດ້ນຳພາສ້າງສາປະເທດຊາດທີ່ຖືກເສຍຫາຍໃນສົງຄາມຄືນໃໝ່ພະອົງພະຍາຍາມກໍ່ສ້າງ, ປັບປຸງ ແລະ ທ້ອນໂຮມຜູ້ມີນ້ຳໃຈຮັກຊາດເພື່ອກອບກູ້ຄວາມເປັນເອກະລາດມາໃຫ້ຊາດ, ພະອົງໄດ້ສ້າງພະລາຊະວັງຄືນ (ພະອົງໄດ້ຮັບຄວາມຮັກແພງຈາກກະສັດອົງຮາດຊະການທີ IIພະພຸດທະເລີດຫຼ້ານະພາໄລ). ກໍ່ສ້າງກຳແພງຕື່ມ, ກໍ່ສ້າງຂົວຂ້າມແມ່ນ້ຳຂອງຢູ່ທ່າວັດຊ້າງເຜືອກ ສີຊຽງໃໝ່), ສ້າງວັດສີສະເກດ ແລະ ປັວແປງວັດວາອາຮາມຕ່າງໆເຊັ່ນ: ວັດພະແກ້ວ, ທາດພະນົມ ແລະ ອື່ນໆ ພ້ອມນັ້ນພະອົງກໍ່ຍັງໄດ້ປັບປຸງການປົກຄອງທີ່ດີຂຶ້ນກວ່າເກົ່າເຊັ່ນ: ປັບປຸງກຳລັງ, ປຸກລະດົມນ້ຳໃຈຮັກຊາດເພື່ອປ້ອງກັນປະເທດຊາດ, ປົກປັກຮັກສາປະເທດຊາດ ແລະ ດຳເນີນການຕໍ່ສູ້ກູ້ຊາດ. ເມື່ອສຳເລັດການຈັດວາງກອງທັບແລ້ວເຈົ້າອານຸວົງ ໄດ້ກຽມຕົວເພື່ອຕ້ານກັບສະຫຍາມ. ພະອົງໄດ້ຍົກທັບຫຼວງໄປຕັ້ງຢູ່ບ້ານພັນພ້າວເພື່ອເປັນການເຝິກແອບ.

- ມາຮອດປີຈໍເດືອນຍີ່ປີ1827 ເຈົ້າອານຸວົງໄດ້ແຕ່ງຕັ້ງໃຫ້ເຈົ້າຣາຊະວົງຍົກທັບຂ້າມຂອງໄປບຸກໂຈມຕີສະຫຍາມເຈົ້າຣາຊະວົງໄດ້ຢຶດເອົານະຄອນລາຊະສີມມາ ແລະ ບັງຄັບໃຫ້ສະຫຍາມຕ້ອງສົ່ງຂະບວນທີ່ໄດ້ເກັບກວດໄປສະໄໝສົງຄາມນັ້ນຄືນ.
- ເມື່ອເຖິງເດືອນ3ປີ 1827ເຈົ້າອານຸວົງໄດ້ຖອຍທັບມາຕັ້ງໜອງບົວລຳພູ.
- ເດືອນ 4ປີ 1827ພວກສະຫຍາມໄດ້ລວບລວມກຳລັງມາຕີໜອງບົວລພູໃນເວລານັ້ນຢູ່ໜອງບົວລຳພູ ແມ່ນພະຍານາລິນເປັນຜູ້ບັນຊາ.
- ວັນທີ 1/6/1827ພະຍານາລິນໄດ້ຕໍ່ສູ້ຢ່າງຮ້າຍແຮງ ແລະເຮັດໃຫ້ສະຫຍາມຕາຍຢ່າງຫຼວງຫຼາຍ
- ວັນທີ 4/6/1827ຄ້າຍຂອງພະຍານາລິນຖືກແຕກພະຍານາລິນຖືກຈັບ ແລະ ບັງຄັບໃຫ້ຍອມຈຳນົນແຕ່ພະຍານາລິນບໍ່ຍອມເດັດຂາດລາວເວົ້າວ່າ "ເຮົາເປັນຊາດຊາຍທະຫານເມື່ອເສຍທີແລ້ວກໍ່ຕ້ອງຕາຍແຕ່ບໍ່ຍອມນ້ອມຕໍ່ສັດຕູເປັນເດັດຂາດ" ແມ່ທັບສະຫຍາມຈຶ່ງເອົາຊ້າງເຂົ້າແທງພະຍານາລິນຈົນຕາຍ.

ເດືອນ 6/1827ເຈົ້າອານຸວົງໄດ້ຈັດຕັ້ງກຳລັງບຸກໂຈມຕີພວກສະຫຍາມຢ່າງເດັດດ່ຽວພິລະອາດຫານ ແລະຍຶດເອົາວຽງຈັນຄືນໃນວັນທີ 7/8/1828ຈາກນັ້ນກໍບຸກໂຈມຕີກຳລັງຂອງສະຫຍາມທີ່ຍັງເຫຼືອຕາຍ ແລະຍຶດໄດ້ພາຫະນະສົງຄາມຈຳນວນໜຶ່ງ. ໃນເວລານັ້ນພະອົງໄດ້ແຕ່ຕັ້ງໃຫ້ເຈົ້າຣາຊະວົງໄລ່ຕີສະຫຍາມເຫັນວ່າການຕໍ່ສູ້ຂອງເຈົ້າຣາຊະວົງແມ່ນພິລະອາດຫານ.

ມາເຖິງເດືອນ 12/1829ເຈົ້າອານຸວົງຈຶ່ງຖືກກອງທັບສະຫຍາມຈັບ ແລະ ຖືກນຳເມືອທໍລະມານຢູ່ທີ່ບາງກອກຢ່າງປ່າເຖື່ອນເຈົ້າອານຸວົງທົນຕໍ່ຄວາມທໍລະມານອັນປ່າເຖື່ອນນີ້ບໍ່ໄດ້ເພິ່ນຈຶ່ງເປັນໄຂ້ລົ້ມເຈັບລົງ ແລະ ເລືອດໄຫຼຕະຫຼອດໄດ້ 3 ວັນກໍ່ສິ້ນພະຊົນໃນເດືອນ ຍີ່ (ແຮມ) ປີສະລຸ (1829) ລວມ ອາຍຸໄດ້ 60ປີ.

ສະຫຼຸບ: ຂະບວນການຕໍ່ສູ້ຂອງເຈົ້າອານຸວົງ ໄດ້ສິ້ນສຸດລົງດ້ວຍຄວາມເຈັບແຄ້ນແໜ້ນໃຈ. ບັນຫານີ້ປະຊາຊົນພົນລະເມືອງວຽງຈັນຫຼາຍແສນຄົນຖືກພວກສະຫຍາມເກັບກວດລົງໄປຢູ່ສະຫຍາມ ໃນໄລຍະນີ້ປະເທດລ້ານຊ້າງໄດ້ກາຍເປັນຫົວເມືອງຂຶ້ນໃຫ້ແກ່ສະຫຍາມຢ່າງສິ້ນເຊີງ. ລ້ານຊ້າງໄດ້ເສຍຄວາມເປັນເອກະລາດ, ເອກະພາບ ຈົນພວກລ່າເມືອງຂຶ້ນຝຣັ່ງມາປົກຄອງຕໍ່.

ເຖິງວ່າການຕໍ່ສູ້ຂອງເຈົ້າອານຸວົງຈະຢຸດຕິລົງຢ່າງເຈັບແຄ້ນແໜ້ນໃຈກໍ່ຕາມແຕ່ມັນກໍ່ໄດ້ສະແດງເຖິງຄວາມຮັກຊາດຄຽດແຄ້ນສັດຕູ. ປະຊາຊົນລາວທັງຊາດບໍ່ຍອມຈຳນົນຕໍ່ສັດຕູຜູ້ຮຸກຮານຢ່າງເດັດຂາດພວກເຂົາໄດ້ຕໍ່ສູ້ເພື່ອກອບກູ້ເອກະລາດ, ອິດສະຫຼະພາບມາສູ່ປະເທດຊາດອັນແສນຮັກຂອງຕົນຂະບວນການຕໍ່ສູ້ຂອງເຈົ້າອານຸວົງໄດ້ສະແດງເຖິງນ້ຳໃຈຮັກຊາດອັນສູງສົ່ງຂອງບັນດານັກວິລະຊົນແຫ່ງຊາດອັນແທ້ຈິງນັ້ນແມ່ນເຈົ້າອານຸວົງ, ເຈົ້າຣາຊະວົງ, ພະຍາ

ນາລິນ ເຊິ່ງເປັນຜູ້ທີ່ອາດຫານສະຫຼະເລືອດເນື້ອເພື່ອກູ້ຊາດນຳເອົາປະເທດຊາດພົ້ນຈາກການເປັນຂ້ອຍຂ້າຂອງຊາດອື່ນຈົນເຖິງວິນາທີສຸດທ້າຍແຫ່ງດວງວິນຍານ.

## 2. ສະພາບວັດທະນະທຳ - ວັນນະຄະດີ

ອີງໃສ່ສະພາບສັງຄົມທີ່ອານາຈັກລາວລ້ານຊ້າງຕົກເປັນຫົວເມືອງຂຶ້ນຂອງສະຫຍາມ, ດັ່ງທີ່ພວກເຮົາສະເໜີມາຂ້າງເທິງນັ້ນແມ່ນເປັນສິ່ງຈຳກັດເຮັດໃຫ້ວັດທະນະທຳອັນດີງາມຂອງຊາດລາວແມ່ນບໍ່ຂະຫຍາຍຕົວຖ້າທຽບໃສ່ໄລຍະກ່ອນຈົນມາຮອດສະໄໝເຈົ້າອານຸວົງເພິ່ນໄດ້ປັບປຸງນະຄອນວຽງຈັນຄືນໃໝ່ເຊັ່ນ: ຂຸດຄອງ ແລະ ກໍ່ສ້າງກຳແພງເມືອງ, ຍົກສາສະໜາຂຶ້ນ, ສ້າງ ແລະ ສ້ອມແປງວັດເກົ່າ. ເຈົ້າອານຸວົງໄດ້ເອົາໃຈໃສ່ປັບປຸງກໍ່ສ້າງພື້ນຖານວັດທະນະທຳຈຳນວນທີ່ເປັນປູສະນີຍະສະຖານຄື:

- ປີຄ.ສ1807ໄດ້ຊົງສ້າງພະຣາຊະວັງຂຶ້ນໃໝ່ນະຄອນວຽງຈັນ.
- ປີ ຄ.ສ 1808ໄດ້ເຮັດພິທີສະຫຼອງຂົວຢູ່ທາດພະນົມ.
- ປີ ຄ.ສ 1808 ພະອົງໄດ້ສ້າງວັດສີບຸນເຮືອງຂຶ້ນທີ່ເມືອງໜອງຄາຍ.
- ປີ ຄ.ສ 1812ສະຫຼອງທາດພະນົມ, ສ້າງຂົວຂ້າມແມ່ນ້ຳຂອງຢູ່ທີ່ວັດຊ້າງເຜືອກບ້ານສີຊຽງໃໝ່ທຸກວັນນີ້.
- ປີ ຄ.ສ 1816 ເຮັດບຸນສະຫຼອງຫໍພະແກ້ວ ແລະ ຫໍໄຕຢູ່ນະຄອນຫຼວງວຽງຈັນ.
- ປີ ຄ.ສ 1818ສ້າງວັດສີສະເກດ ແລະ ວັດສີສະເກດໄດ້ເປັນໃຈກາງສາສະໜາພຸດໃນໄລຍະນີ້ການສ້າງວັດນີ້ເປັນເວລາ 6 ປີ ຈິ່ງສຳເລັດເຈົ້າ ອານຸວົງໄດ້ທຳພິທີສາບານໃນວັດນີ້ ປີໜຶ່ງ 2ເທື່ອ.

ສະພາບ ແລະ ລັກສະນະຂອງວັນນະຄະດີສະໄໝນີ້ ແມ່ນບໍ່ຂະຫຍາຍຕົວວັນນະຄະດີສ່ວນຫຼາຍແມ່ນສືບທອດມາຈາກວັນນະຄະດີພື້ນເມືອງ, ສ່ວນເນື້ອໃນວັນນະຄະດີແມ່ນມີການຫັນປ່ຽນຫຼາຍ. ສ່ວນຫຼາຍແມ່ນເວົ້າເຖິງການຕໍ່ສູ້ກູ້ຊາດ ແລະ ຄຽດແຄ້ນສັດຕູ ແລະ ເນື້ອໃນເວົ້າເຖິງຄວາມເປື່ອຍເຍື່ອຍຂອງສັງຄົມສັກດີນາ,ເວົ້າເຖິງຄວາມທຸກທໍລະມານຂອງປະຊາຊົນ, ນັກແຕ່ງສ່ວນຫຼາຍແມ່ນຂຽນອອກມາດ້ວຍຄວາມເຈັບແຄ້ນແໜ້ນໃຈ ແລະ ຄຽດແຄ້ນສັດຕູໃນນີ້ມີສານລຶບພະສູນ, ກາບເມືອງພວນ ແລະ ພື້ນວຽງ.

ວັນນະຄະດີສະໄໝນີ້ແມ່ນບໍ່ຂະຫຍາຍຕົວເທົ່າທີ່ຄວນຍ້ອນສະພາບການ ແລະ ສັງຄົມຖືກບີບຮັດ, ການດຳລົງຊີວິດຂອງປະຊາຊົນລາວປະສົບກັບຄວາມຫຍຸ້ງຍາກສັບສົນ ເຊິ່ງເປັນສາຍເຫດສຳຄັນ ແລະ ສິ່ງຜົນສະທ້ອນໂດຍກົງຕໍ່ການຂະຫຍາຍຕົວຂອງວັນນະຄະດີ.ຈາກນັ້ນ, ບັນດານັກແຕ່ງ, ນັກຂຽນ, ນັກກະວີ ຫຼືໝໍຂັບໝໍລຳ ສ່ວນຫຼາຍແມ່ນຖືກກວາດຕ້ອນເອົາໄປຢູ່ສະຫຍາມສ່ວນທີ່ຍັງເຫຼືອນັ້ນກໍ່ພາກັນລີ້ຊ້ອນຢ່ອນຕົວບໍ່ຍອມສະແດງກິດຈະການໃດໆອອກຕໍ່ກັບການຂີດຂຽນ ແລະ ການປະດິດແຕ່ງເພາະຢ້ານກົວຕໍ່ໄພອັນຕະລາຍຈະມາເຖິງຕົນເອງ. ແຕ່ເຖິງຢ່າງໃດກໍຕາມໄລຍະນີ້ກໍ່ຍັງມີບາງບົດວັນນະຄະດີເກີດຂຶ້ນເຊັ່ນ:ສານລຶບພະສູນ, ປະມວນກາບເມືອງພວນ ແລະ ພື້ນວຽງ ເຊິ່ງມີເນື້ອໃນກ່າວປະນາມສັດຕູຂອງຊາດ, ປຸກລະດົມມູນເຊື້ອຕໍ່ສູ້ອັນພິລະອາດຫານຂອງຊາດດ້ວຍເນື້ອໃນເຊື່ອງຊ້ອນ ແລະ ເລິກແລບແນບນຽນ, ອີກປະການໜຶ່ງໃນສະໄໝນີ້ບັນດາໜັງສືເລື່ອງ (ໜັງສືຜູກ) ຫຼື ບັ້ງຈຸ້ມທີ່ເຮັດເປັນເອກະສານສຳຄັນໃນສະໄໝບູຮານທີ່ບັນທຶກກ່ຽວກັບຄວາມເປັນມາ ຫຼືສິ່ງໃດສິ່ງໜຶ່ງທີ່ເປັນປະຫວັດສາດຂອງພະທາດເຈດີສ່ວນຫຼາຍມັກຂຽນໃສ່ໄມ້ໄຜ່, ຂຽນໃສ່ໃບສາ ຫຼືໃບລານເປັນຈຳນວນຫຼວງຫຼາຍກໍ່ຖືກສະຫຍາມເກັບກວາດໄປໝົດ, ພາກສ່ວນທີ່ເອົາໄປບໍ່ໄດ້ກໍ່ຖືກທຳລາຍຈູດເຜົາກ້ຽງເຖິງວ່າເຫດການຈະຊົ່ວຮ້າຍຄືແນວນັ້ນ ແຕ່ວັນນະຄະດີກໍ່ບໍ່ໄດ້ຢຸດຢັ້ງມັນຍັງສືບຕໍ່ຊໍ່ດອກຂຶ້ນມາໃນຫມູ່ມະຫາຊົນ.

# 3. ເນື້ອໃນວັນນະຄະດີ

## 3.1ນ້ຳໃຈຮັກຊາດຂອງຜູ້ແຕ່ງ

ນ້ຳໃຈຮັກຊາດຂອງຜູ້ແຕ່ງໃນໄລຍະນີ້ແມ່ນຕ່າງກັບວັນນະຄະດີໄລຍະທີ I ເຊິ່ງໄລຍະນັ້ນຈະສະແດງອອກຜ່ານການວາດພາບທຳມະຊາດ, ຄວາມອຸດົມຮັ່ງມີ ແລະ ຄວາມສວຍສົດງົດງາມຂອງທຳມະຊາດ, ແຕ່ໄລຍະນີ້ນ້ຳໃຈຮັກຊາດປະກົດອອກແມ່ນເວົ້າເຖິງຄວາມຮັກຊາດ, ຄຽດແຄ້ນສັດຕູຜູ້ຮຸກຮານ, ເວົ້າເຖິງຄວາມເປັນຫ່ວງເປັນໄຍປະເທດຊາດທີ່ຖືກຫຼົ່ມຈົມເຊື່ອມໂຊມ ແລະ ເສຍຄວາມເປັນເອກະລາດໃຫ້ຊາດອື່ນສະແດງອອກໃນສານລຶບພະສູນວ່າ:

ໄຟກໍລຸກວົບໄໝ້ ເສນາດທະເມົາມຸດ

ແປວເປັ່ງ ເຮືອງອາລຸນ ຫອບແສງສູນຟ້າ

ເຫັນເປັນແນວນັ້ນນັກແຕ່ງໄດ້ປຸກລະດົມໃຫ້ປະຊາຊົນທັງຊາດຕ້ອງຄຳນຶງເຖິງປະເທດຊາດຖືກສູນເສຍຄວາມເປັນເອກະລາດ, ອິດສະຫຼະພາບ. ຈາກນັ້ນ ຈຶ່ງຕ້ອງມີວິທີການຕໍ່ສູ້ຕ້ານຄືນເພື່ອກອບກູ້ປະເທດຊາດຄືນມາ.ນັກແຕ່ງເວລາໃດກໍ່ຄຳນຶງເຖິງປະເທດຊາດຊອກຫາວິທີທາງເພື່ອຮຽກຮ້ອງໃຫ້ມວນຊົນເຫັນອົກເຫັນໃຈ ແລະ ປະກອບສ່ວນຕໍ່ສູ້ຢ່າງເອົາເປັນເອົາຕາຍ. ໃນເວລານີ້, ມີພຽງນັກແຕ່ງຄົນດຽວເປັນຜູ້ຕັ້ງບັນຫາຂຶ້ນເພື່ອໃຫ້ທຸກຄົນຄົ້ນຄິດ ແລະເປັນໃຈກັບນັກແຕ່ງຈາກນັ້ນ ກໍ່ພ້ອມກັນຕໍ່ສູ້ເພື່ອເອົາຊາດຄືນມາດັ່ງສານໄດ້ເວົ້າວ່າ:

ໃຈໜ່ອມອ້າຍ ໝາຍມຸ່ງພະໄມມິດ

ຊິຄ່ອຍ ປຸນປອງຮັກ ຮ່ວມຮຽງຮາວຖ້ານ

ສົມພານເບື້ອງ ປາລະມີຮຽງຮອດ ກັນແລ້ວ

ສຸດຟາກ ລວງເລີກລ້ຳ ພິລາກ້ຽວກ່ອມລຳ ໄດ້ເດ

ຜູ້ແຕ່ງໄດ້ຢືມເອົາຮູບພາບຄວາມຮັກອັນຫວານຊື່ນຂອງຄູ່ບ່າວ-ສາວມາເປັນຕົວແທນໃຫ້ແກ່ຄວາມຮັກອັນສຸດຊຶ້ງຂອງຕົນທັງນີ້, ກໍເພາະວ່າສະຖານະການໃນຂະນະນັ້ນແມ່ນຕົກຢູ່ໃນສະພາບ "ດາບຢູ່ເໜືອ ຄໍຢູ່ໃຕ້"ທຸກໆສຳນວນທີ່ໃຊ້ແຕ່ງສານລ້ວນແຕ່ມີລັກສະນະປຽບທຽບເຊື່ອງອຳ.

ສະຫຼຸບຈາກສິ່ງພິສູດມາຂ້າງເທິງນີ້ເຮົາອາດສະຫຼຸບໄດ້ວ່າ: ນ້ຳໃຈຮັກຊາດຂອງນັກແຕ່ງໄດ້ສະແດງອອກໃນວັນະຄະດີໄລຍະນີ້ແມ່ນການຄິດຄົ້ນ, ຊີ້ເຫດຊີ້ຜົນເພື່ອຊອກຫາຊ່ອງທາງຕໍ່ສູ້ກູ້ຊາດຄືນມາຕໍ່ສູ້ເພື່ອປົດແອກອອກຈາກການຄອບຄອງຂອງຊາດອື່ນ. ແຕ່ການເຄື່ອນໄຫວຕົວຈິງນັ້ນເຂົາເຈົ້າຍັງບໍ່ສະແດງອອກເທື່ອ. ລໍຖ້າໄລຍະຕໍ່ມາຈຶ່ງປະກົດຕົວໃຕ້ການນຳພາຂອງເຈົ້າອານຸວົງ. ຢູ່ໃນສານລຶບພະສູນໂທດກຳຂອງພວກສະຫຍາມແມ່ນຍັງບໍ່ທັນຈະແຈ້ງພຽງແຕ່ເປັນຮູບພາບແບບປິດໆເປີດໆຍ້ອນເງື່ອນໄຂປະຫວັດສາດບໍ່ອາດເວົ້າແຈ້ງ ແລະ ໄລຍະຕໍ່ມາຈະເວົ້າແຈ້ງຢູ່ໃນກາບເມືອງພວນ ແລະ ພື້ນວຽງ.

# 4. ສິລະປະໃນການປະດິດແຕ່ງ

## 4.1 ການໃຊ້ສັບພາສາ

ຢູ່ໃນສານກໍ່ຄືຢູ່ໃນກາບ ນັກແຕ່ງໄດ້ໃຊ້ສັບພາສາທີ່ມີເນື້ອໃນເລິກເຊິ່ງສະແດງອອກດ້ວຍມະໂນພາບຫຼາຍສີສັນ, ບາງເທື່ອກໍ່ໃຊ້ການສົມທຽບ, ບາງເທື່ອກໍ່ໃຊ້ສຳນວນຜະຫຍາ ແລະຄຳສຸພາສິດ. ນັກແຕ່ງໄດ້ເລືອກເຟັ້ນສັບພາສາທີ່ມີຮູບພາບເດັ່ນ, ມີຮູບປະທຳອັນກວ້າງຂວາງ ແລະ ມີຄວາມໝາຍດ້ານສັງຄົມ. ເວົ້າເຖິງຄວາມຄຽດແຄ້ນຂອງຕົນ ດັ່ງບົດກອນ:

**ຕົວຢ່າງ:** ໃຊ້ຄຳຜະຫຍາ ແລະ ຄຳສຸພາສິດ

| | | |
|---|---|---|
| | ປາເຂັ່ງຂ້ອນ | ໜອງກາງນາເຈົ້າຢ່າຟ້າວຢຽບຢ່ຳ |
| | ເກັດບໍ່ທັນລຸຍ | ຄຸຍບໍ່ທັນລົ້ມຢ່າຫວັງໄດ້ຂົ່ມຄໍ |
| ໂອຣຽມນີ້ | ເປັນດັ່ງປາຕາຍຂ້ອນ | ໜອງກາງນານເຂີນຂາດ |
| | ຝົນບໍ່ສິ່ງໂຜດໃຫ້ | ຕາຍແລ້ງແດດເຜົາ ແລນໍ |

+ ການນຳໃຊ້ຄຳສັບເຂົ້າໃນການສົມທຽບສິ່ງທີ່ກົງກັນຂ້າມເພື່ອໃຫ້ເຫັນທາດແທ້ ແລະຄວາມເປັນຈິງ

| | | |
|---|---|---|
| ຕົວຢ່າງ: | ອ້ອຍຫວານ | ພອຍວ່າສົ້ມໃຫ້ລອງຊົມພໍຮູ້ຂ່າວ |
| | ຫຼືຊິ ໄວ້ບາດຫຼ້າ | ໄຂແຈ້ງຂາດຄຳ |

+ ສັບທີ່ມີຮູບພາບເລິກເຊິ່ງທາງດ້ານເນື້ອໃນ

| | |
|---|---|
| ຄຶດຕໍ່ ດອກກັດເຄົ້າ | ບານຢູ່ກາງດົງ |
| ຄຶດຕໍ່ ເຄື່ອພາຍສິງ | ກໍເລົ່າມີລຳກ້ຽວ |

## 4.2 ການອາດພາບພາຍໃນຈິດ

ການອາດພາບພາຍໃນຈິດສ່ວນໃຫຍ່ແມ່ນສະແດງເຖິງລະບົບນຶກຄິດຂອງຜູ້ແຕ່ງສະແດງອອກໃນສານລຶບພະສູນແຕ່ຕົ້ນຕະຫຼອດປາຍ, ເວົ້າເຖິງຄວາມອຸກອັ່ງຄັ່ງແຄ້ນຢາກເຮັດຢາກກະທຳຂອງນັກແຕ່ງໃນການຕໍ່ສູ້ກູ້ຊາດ ໂດຍນຳໃຊ້ຮູບພາບຂອງຄວາມຮັກລະຫວ່າງບ່າວ - ສາວ ເພື່ອສະແດງເຖິງນ້ຳໃຈຮັກຊາດຂອງຕົນດັ່ງບົດກອນທີ່ວ່າ:

| | |
|---|---|
| ດຽວນີ້ ແພງສີສ້ອຍ | ສະເໜຫາເຈົ້າພີ່ |
| ສັງມາ ຂັງຢຶດໄວ້ | ຍາວໄດ້ໝື່ນອະສົງ ນີ້ເດ |
| ເຖິງຫາກ ເນົາຢູ່ຫ້ອງ | ທຽມແທບແພງຂວັນ ກໍດີ |
| ເໝືອນດັ່ງ ນອນແປວອັກຄີ | ບໍ່ຕາຍທະລອນເຍື້ອນ |

## 4.3ຈຸດດີ ແລະ ຈຸດອ່ອນ

**+ຈຸດດີ:** ສ່ອງແສງເຖິງຄວາມເປັນໄປຂອງການເຄື່ອນໄຫວຂອງສັງຄົມທີ່ປະເທດຊາດຕົກເປັນຫົວເມືອງຂຶ້ນຂອງຊາດອື່ນ. ສະນັ້ນ, ການດຳລົງຊີວິດຂອງປະຊາຊົນຈຶ່ງຕົກທຸກໄດ້ຍາກຢ່າງແສນສາຫັດ, ມີເນື້ອໃນສ່ອງແສງເຖິງໂທດກຳຂອງພວກສະຫຍາມທີ່ກໍ່ຂຶ້ນໃນຜືນແຜ່ນດິນລ້ານຊ້າງ ແລະ ເວົ້າເຖິງໂທດກຳຂອງພວກສັກດີນາລາວທີ່ໄດ້ສ້າງເງື່ອນໄຂໃຫ້ພວກສັດຕູທາງນອກເຂົ້າມາປົກຄອງປະເທດຊາດ.

**+ຈຸດຄ້າງຄາ:** ຍ້ອນການນຳໃຊ້ລະບົບປຽບທຽບເລິກເຊິ່ງ ຊຶ່ງເຮັດໃຫ້ຜູ້ອ່ານເຂົ້າໃຈຍາກໃນນັ້ນເຮັດໃຫ້ປະກົດການຕົວຈິງສະແດງອອກບໍ່ຈະແຈ້ງ.

ສຳລັບກາບເມືອງພວນເວົ້າເຖິງຕົວລະຄອນສັງຄົມ ແມ່ນປະກົດການຕົວຈິງກວ່າສານລຶບພະສູນແຕ່ເວົ້າເຖິງສຳນວນນັກແຕ່ງແມ່ນບໍ່ດູດດື່ມເພາະວ່າມັນຄ້າຍຄືຄຳເວົ້າທຳມະດາ.

ສະຫຼຸບ: ຜ່ານການພິສູດຂ້າງເທິງເຫັນວ່າວັນນະຄະດີໄລຍະນີ້, ຍັງມີຈຸດອ່ອນທາງດ້ານສິລະປະບາງເລັກນ້ອຍກໍຕາມ ນັ້ນແມ່ນຍ້ອນເງື່ອນໄຂປະຫວັດສາດບໍ່ອຳນວຍໃຫ້ນັກແຕ່ງໄດ້ແຕ່ງຕາມໃຈຂອງເຂົາເຈົ້າເທື່ອ. ເວົ້າເຖິງການເຄື່ອນໄຫວຂອງສັງຄົມວັນນະຄະດີນີ້ ແມ່ນມີຄຸນປະໂຫຍດອັນລ້ຳຄ່າໃນການສຶກສາອົບຮົມຄົນຮຸ່ນໃໝ່ໃຫ້ມີນ້ຳໃຈຮັກຊາດຄຽດແຄ້ນສັດຕູ ແລະສ້າງອຸດົມຄະຕິຂອງນັກຕໍ່ສູ້ກູ້ຊາດຍາມໃດກໍ່ບໍ່ຍອມຈຳນົນໃຫ້ແກ່ສັດຕູເປັນເດັດຂາດ, ບັນຫາການແຕ້ມແຕ່ງວັນນະຄະດີໄລຍະນີ້ຍັງມີຈຸດອ່ອນຄ້າງຄາກໍເນື່ອງມາຈາກທັດສະນະຂອງນັກແຕ່ງໃນການເບິ່ງສະພາບແວດລ້ອມ ແລະ ສັງເກດຕົວຈິງຕີລາຄາສະພາບຮອບດ້ານ ແຕ່ວັນນະຄະດີໄລຍະນີ້ກໍຍັງເປັນ

ວັນນະຄະດີແຫ່ງຊາດອັນແທ້ຈິງ ເຊິ່ງສະແດງເຖິງນໍ້າໃຈຮັກຊາດ ເປີດສາກໃຫ້ວັນນະຄະດີໄລຍະຕໍ່ມາສືບທອດຢ່າງມີຄຸນຄ່າ.

**ຄໍາຖາມຄົ້ນຄວ້າ**

1.) ຈົ່ງປຽບທຽບສີລະປະໃນການແຕ່ງວັນນະຄະດີລ້ານຊ້າງໄລຍະທີ IIກັບວັນນະຄະດີລ້ານຊ້າງໄລຍະທີ I (ພ້ອມທັງຍົກຕົວຢ່າງກອນແຕ່ລະໄລຍະມາພິສູດ)?

2.) ຈົ່ງປຽບທຽບນໍ້າໃຈຮັກຊາດຂອງນັກແຕ່ໃນໄລຍະທີ IIກັບໄລຍະທີ I?

3.) ການຕໍ່ສູ້ຂອງເຈົ້າອານຸວົງສະແດງອອກຄືແນວໃດ?

# ບົດທີ 2
# ສານລຶບພະສູນ

ສານ ມີຄວາມໝາຍວ່າຈົດໝາຍ ຫຼື ໜັງສືທີ່ຄົນບູຮານ ແລະ ຄົນສະໄໝປັດຈຸບັນຂຽນໃສ່ລານ ຫຼືເຈ້ຍເພື່ອຕິດຕໍ່ພົວພັນເຊິ່ງກັນ ແລະ ກັນຈະເປັນຄວາມຮັກບ່າວສາວ, ການພົວພັນການເມືອງ ອາດຍາເຈົ້ານາຍກໍເອີ້ນວ່າ ສານ ຫຼື ໜັງສືໄດ້ຄືກັນເຊັ່ນວ່າ: ສານລຶບພະສູນ, ສານຕາຕັ້ງ, ສານອອຍພອນ ແລະ ອື່ນໆ.

ສ່ວນວ່າ:"ສານລຶບພະສູນ" ມີຄວາມໝາຍວ່າ:"ໜັງສືປົດບັງຄວາມລັບ" ສະນັ້ນ ສານລຶບສູນ ຈຶ່ງມີເນື້ອໃນປົດລັບເຊື່ອງຊ້ອນຄວາມເຈັບແຄ້ນແໜ້ນໃຈຂອງນັກແຕ່ງ ແລະ ປະຊາຊົນລາວທັງຊາດ ແມ່ນການປົດລັບການກະກຽມການປຸກລະດົມ ແລະ ເຕົ້າໂຮມກໍາລັງຮັກຊາດເພື່ອລຸກຮືຂຶ້ນເຮັດການຕໍ່ສູ້ກູ້ຊາດຍາດເອົາເອກະລາດຈາກພວກສັກດີນາສະຫຍາມ.



## 1. ບາງຈຸດກ່ຽວກັບນັກແຕ່ງ

ສານລຶບພະສູນຖືເປັນຄໍາກອນຊັ້ນຍອດຂອງລາວອີກສະບັບໜຶ່ງທີ່ແຕ່ງຂຶ້ນ ໃນສະໄໝອານາຈັກລາວລ້ານຊ້າງໄດ້ສູນເສຍເອກະລາດໃຫ້ແກ່ສັກດີນາສະຫຍາມ ເຊິ່ງຜ່ານມາແລ້ວເປັນເວລາຮ້ອຍກວ່າປີ. ປັດຈຸບັນພວກເຮົາຍັງບໍ່ທັນຮູ້ເປັນທີ່ແນ່ນອນກ່ຽວກັບຜູ້ແຕ່ງສານ, ບາງຄົນກໍວ່າແມ່ນເຈົ້າອານຸວົງເປັນຜູ້ແຕ່ງບາງຄົນກໍວ່າບໍ່ແມ່ນ. ສະນັ້ນ ເມື່ອເບິ່ງເນື້ອໃນຕົວຈິງຂອງສານແຕ່ຕົ້ນຕະຫຼອດປາຍ, ເມື່ອເຮົາທົບທວນຄືນໄລຍະທີ່ປະເທດຊາດເສຍຄວາມເປັນ

ເອກະລາດແຫ່ງຊາດໃຫ້ສະຫຍາມຢ່າງໜ້າເຈັບແສບໃນປີ ຄ.ສ 1779, ຕົກມາຮອດ ຄ.ສ 1804ສົມເດັດເຈົ້າອານຸວົງ ໄດ້ຂຶ້ນຄອງລາຊະບັນລັງທີ່ວຽງຈັນພະອົງເຫັນທ່າດີມີໂອກາດເໝາະສົມຫຼາຍຢ່າງໃຫ້ແກ່ການປັບປຸງປະເທດຊາດບ້ານເມືອງປຸກລະດົມຈິດໃຈປະຊາຊົນລາວທັງຊາດໂດຍທາງລັບ,ເພື່ອຮັບໃຊ້ໃຫ້ແກ່ການລຸກຂຶ້ນຕໍ່ສູ້ກູ້ຊາດຍາດເອົາເອກະລາດຄືນມາໃຫ້ຊາດໃນຕົ້ນສະຕະວັດທີ XIX. ອີງໃສ່ສະພາບການທາງປະຫວັດສາດທີ່ກ່າວມາຂ້າງເທິງ, ນັກປາດນັກຄົ້ນຄວ້າຫຼາຍທ່ານໂດຍສະເພາະແມ່ນມະຫາສີ ລາວິລະວົງ ໄດ້ສັນນິຖານວ່າແມ່ນເຈົ້າອານຸວົງເປັນຜູ້ແຕ່ງຂຶ້ນ ໂດຍເຫດຜົນທີ່ວ່າປະເທດຊາດບ້ານເມືອງເສຍເອກະລາດ, ນະຄອນຫຼວງວຽງຈັນຖືກທຳລາຍມ້າງເພເຈົ້າອານຸມີຄວາມຄຽດແຄ້ນແໜ້ນໃຈຢ່າງຫາອັນປຽບບໍ່ໄດ້ ພະອົງຈຶ່ງໄດ້ນິພົນສານນີ້ຂຶ້ນເພື່ອປຸກລະດົມການກູ້ຊາດລາວທີ່ສູນເສຍໃນເມື່ອກ່ອນ ດັ່ງຄຳກອນໃນສານທີ່ວ່າ:

ຄະເຄື່ອນຄຸງແກ່ນເຫງົ້າ ກາກາບໄກວກະຈັດ
ເສລາເນົາພູຜາ ເກື່ອນທະລັງທະລາຍຢ້ອງ
ຄຸດທະອ້າປີກຂຶ້ນ ຂຳເມກເຮືອງລິດ
ຈັນໂທເນົາມົວມຸດ ມືດແສງສູນອ້ຳ

ບັນດາຮູບພາບຂອງສານຕອນນີ້ລ້ວນແຕ່ແມ່ນຮູບພາບຂອງປະເທດຊາດບ້ານເມືອງຖືກທຳລາຍດ້ວຍນ້ຳມືຂອງພວກສະຫຍາມ, ຍ້ອນຄຸດເຮືອງລິດຮູບພາບຂອງຄຸດແມ່ນຮູບພາບຂອງສັກດີນາສະຫຍາມ.

ອີກເຫດຜົນໜຶ່ງເວລາເຈົ້າອານຸວົງໄປກຸງເທບພະອົງໄດ້ພົບຄົນລາວທີ່ຖືກກົດຂີ່ຂູດຮີດພ້ອມດ້ວຍເຈົ້າຍິງດວງຄຳທີ່ພະອົງມີຄວາມຮັກໄຄ່ພະອົງໄດ້ຂໍຄືນລາວ, ພະແກ້ວມໍລະກົດ... ກັບມາວຽງຈັນ, ແຕ່ເຈົ້າແຜ່ນດິນສະຫຍາມບໍ່ໃຫ້. ພະອົງມີຄວາມເຈັບແຄ້ນແໜ້ນພະໄທສົມທົບກັບການສູນເສຍປະເທດຊາດ. ສະນັ້ນ, ສານຈຶ່ງມີລັກນະເວົ້າເຖິງຄວາມຮັກທີ່ແຝງດ້ວຍນ້ຳໃຈຮັກຊາດ ອັນດູດດື່ມ ດັ່ງກອນຕອນໜຶ່ງໄດ້ເວົ້າວ່າ:

ໃຈໜ່ອມອ້າຍ ໝາຍມຸ່ງພະໄມມິດ
ຊິຄ່ອຍປຸນປອງຮັກ ຮ່ວມຮຽງຮາວຖ້ານ
ສົມພານເບື້ອງ ປາລະມີຮຽງຮອດ ກັນແລ້ວ
ສຸດຟາກ ລວງເລີກລ້ຳ ພິລາກ້ຽວກ່ອມລຳ ໄດ້ເດ່
ແນນເກົ່າເກື້ອ ເກີດຮ່ວມຮຽງຮັກ ແລ້ວນັ້ນ
ໃຜຫ່ອນຂິນຂັດເຊີງ ສະຫວາດດູດາຍໄດ້

ບົດນິພົນສານລຶບພະສູນ, ຖ້າເຮົາອ່ານແບບຜິວເຜີນອາດມີການເຂົ້າໃຈວ່າມີຂໍ້ຄວາມລັກສະນະຄວາມຮັກບ່າວສາວທີ່ມັກຮັກກັນແຕ່ໄດ້ພັດພາກຈາກກັນໄປຄົນລະແດນ...ແຕ່ຫາກວ່າອ່ານໃຫ້ຄັກໆ,ຄົ້ນຄິດໃຫ້ເລິກເຊິ່ງເຖິງຖອງແລ້ວ ມັນຈະສ່ອງແສງໃຫ້ເຫັນສ່ວນເລິກທີ່ມີເນື້ອໃນປຸກລະດົມຈິດໃຈຮັກຊາດ. ເນື່ອງຈາກໄລຍະເວລາຂອງການແຕ່ງມັນມີສະພາບດ້ານການເມືອງໜີບຮັດ,ຜູ້ແຕ່ງຈຶ່ງບໍ່ປະສົງອອກນາມ ແລະ ສາມາດເວົ້າແຈ້ງເປີດແປນໄດ້ນັກແຕ່ງຈຶ່ງແຕ່ງຕາມແນວຄິດຂອງຕົນແບບປິດສະໜາເຊື່ອງຊ້ອນໃຫ້ຜູ້ອ່ານຜູ້ຟັງໃຊ້ປັນຍາຄົ້ນຄິດຕຶກຕອງເອົາເອງ.

## 2. ເນື້ອໃນຂອງສານລຶບພະສູນ

ຄວາມເຈັບແຄ້ນແໜ້ນໃຈທີ່ບໍ່ມີວັນລືມ ຄວາມຮັກຊາດອັນດູດດື່ມທີ່ແທ້ຈິງຂອງນັກແຕ່ງ ແລະ ປະຊາຊົນລາວໃນສະໄໝເຈົ້າອານຸວົງໄດ້ຈາລຶກໄວ້ຢູ່ໃນປຶ້ມ"ສານລຶບພະສູນ" ເມື່ອເຫັນວ່າປະເທດຊາດສູນເສຍຄວາມເປັນ

ເອກະລາດເປັນປະເທດສະລາດໃຫ້ແກ່ສັກດີນາສະຫຍາມ, ບ້ານເມືອງຖືກເຜົາຜານທຳລາຍຮ້າຍແຮງຈາກສັກດີນາຕ່າງດ້າວນັກແຕ່ງໄດ້ຍົກໃຫ້ເຫັນໂທດກຳຂອງສັກດີນາສະຫຍາມກໍ່ຂຶ້ນໃນຜືນແຜ່ນດິນລ້ານຊ້າງທີ່ສະຫງ່າລາສີ. ນັກແຕ່ງໄດ້ຍົກໃຫ້ເຫັນຫຼັກໝັ້ນຂອງຕົນເອງໃນການຕໍ່ສູ້ກູ້ຊາດໂດຍຜ່ານເນື້ອໃນສານ, ແມ່ນການປຸກລະດົມໂຄສະນາເພື່ອເຕົ້າໂຮມກຳລັງຮັກຊາດ, ປັບປຸງກຳລັງທັງກາຍ ແລະ ໃຈ, ກຽມພ້ອມເຮັດການຕໍ່ສູ້ກູ້ຊາດດ້ວຍກຳລັງປະກອບອາວຸດ.

## 2.1 ບັ້ນບັງລະຫັດ

### ກ.ເນື້ອໃນບັ້ນບັງລະຫັດ

ຈາກບັນນີ້ນັກແຕ່ງໄດ້ບົ່ງບອກເຖິງກົກປາຍສາຍເຫດທີ່ພາໃຫ້ຊາດສູນເສຍຄວາມເປັນເອກະລາດເປັນເຈົ້າຕົນເອງ. ນັກແຕ່ງມີຄວາມເຈັບແຄ້ນແໜ້ນໃຈຢ່າງບໍ່ມີວັນລືມຕໍ່ໂທດກຳອັນໃຫຍ່ຫຼວງຂອງສັກດີນາສະຫຍາມ. ຈາກນັ້ນ ນັກແຕ່ງຍັງໄດ້ປຸກລະດົມກຳລັງທັງກາຍ ແລະ ໃຈຕ້ອງເຮັດການຕໍ່ສູ້ກູ້ຊາດ. ທັງເປັນການຊີ້ບອກໃຫ້ເຫັນວ່າຢາກ.

### ຂ. ວິເຄາະເນື້ອໃນບັ້ນບັງລະຫັດ

ບັ້ນບັງລະຫັດ ແມ່ນເວົ້າເຖິງການປິດລັບ,ເປັນບັ້ນທີ່ຍືດຍາວກວ່າໝູ່ເນື້ອໃນສ່ອງແສງກວມລວມຫຼາຍດ້ານຕົ້ນຕໍແມ່ນນໍ້າໃຈຮັກຊາດຄຽດແຄ້ນສັດຕູ.ເມື່ອເຫັນປະເທດຊາດຖືກສູນເສຍມ້າງເພທຳລາຍບໍ່ອາດເບິ່ງຢູ່ລ້າໄດ້ຍິ່ງຄິດກໍຍິ່ງຄຽດແຄ້ນຈຶ່ງຊອກຫາວິທີແກ້ໄຂດ້ວຍການອຸທິດຊີວິດໃນການຕໍ່ສູ້ດັ່ງສານ ຕອນໜຶ່ງຂຽນວ່າ:

| | | |
|---|---|---|
| ດວງນີ້ຊື່ວ່າ | ບຸແຜ່ນທໍລະນີດັ້ນ | ກຸມພະກອນກຳໂຮບ |
| ເກາະກ່າຍ | ເກີຍໂລບລັ້ງວ | ສະເໜນຄ້ານໂຄ່ນຄອນ |
| ຄະເຄື່ອງ | ຄຸງແກ່ນເຫງົ້າ | ກຳກາບໄກວກະຈັດ |
| | ເສລາ ເນົາພູຜາ | ເກື່ອນທະລັງທະລາຍຢ້ອງ |
| ອານົນ | ເນົາແນບພື້ນ | ເຟືອນຟາດຟອງສະໝຸດ |
| | ນາໂຄຄະ | ຄາດໂຮງຮາມຢ້ອງ |

ສານທີ່ຍົກມາຂ້າງເທິງນີ້ສ່ອງແສງໃຫ້ເຫັນນັກແຕ່ງມີຄວາມຄຽດແຄ້ນກວ່າສິ່ງໃດໝົດ, ແມ່ນເຫດການປະຫວັດສາດຂອງຜືນແຜ່ນດິນລາວທີ່ມີຄວາມສວຍສົດງົດງາມອຸດົມສົມບູນ ແລະ ຈະເລີນຮຸ່ງເຮືອງ, ໃນເມື່ອກ່ອນຖືກໂຄ່ນຄອນມ້າງພັງທະລາຍ, ປະຊາຊົນໜີຈາກບ້ານເກີດເມືອງນອນຂອງຕົນຍ້ອນສັດຕູຮຸກຮານ, ຈາກນັ້ນສານຂຽນວ່າ:

| | | |
|---|---|---|
| ຄຸດທະ | ອ້າປີກຂຶ້ນ | ຂຳເມກເຮືອງລິດ |
| ຈັນໂທ | ເມົາມົວມຸດ | ມືດແສງສູນອໍ້າ |

ໄພສົງຄາມໄດ້ແຜ່ລາມລຸກໄໝ້ໄປທົ່ວອານາຈັກລາວລ້ານຊ້າງ ເວົ້າລວມເວົ້າສະເພາະແມ່ນຄອນຫຼວງວຽງຈັນທີ່ສວຍງາມຖືກເຜົາຜານມ້າງເພທຳລາຍ, ເຮັດໃຫ້ນະຄອນຫຼວງວຽງຈັນມືດມົວເສົ້າໝອງບົດອໍ້າ, ຍ້ອນຄຸດອ້າປິກເຮືອງລິດເດດອຳນາດແຜ່ລາມຮຸກຮານອານາຈັກລ້ານຊ້າງ ສານຂຽນວ່າ:

| | |
|---|---|
| ເມືອງມາບເຫຼື້ອມ | ແສງແກ້ວແກວ່ງທະລັງ |
| ໄຟກໍລຸກວິບໄໝ້ | ເສນາດທະເມົາມຸດ |
| ແປວເປັ້ງ ເຮືອງອາລຸນ | ຫອບແສງສູນຟ້າ |

ນີ້ສະແດງໃຫ້ເຫັນວ່າປະເທດຊາດບ້ານເມືອງບໍ່ໄດ້ຢູ່ໃນສະພາບປົກະຕິເກີດໄພສົງຄາມທຳລາຍຊີວິດຄົນເຮັດໃຫ້ປະຊາຊົນລົ້ມຫາຍຕາຍຈາກ, ມີຄວາມທຸກຍາກລຳບາກທາງຮ່າງກາຍ ແລະ ຈິດໃຈເຮັດໃຫ້ນັກແຕ່ງຄິດເຖິງຫາຄວາມສຸກສຳລານໃນອະດີດ ໃນເມື່ອປະເທດຊາດຍັງຢູ່ເຢັນເປັນສຸກ ສານຂຽນວ່າ:

| | |
|---|---|
| ຄຶດເມື່ອ ບາລັງຊ້ອນ | ໄສຍາອິນທະລາດ ປາງນັ້ນ |
| ສະໜຸກຍິ່ງລໍ້າ | ລືມເປື້ອງປິ່ນໄກວ |
| ທຸຍຮຸ່ງຫ້ອມ | ຄະນິງປ່ອງແປວສະໜຸດ |
| ຄະນິງນິງສີ | ພາກພະໄທມີໄດ້ |

ນີ້ແມ່ນການປຽບທຽບຄວາມສຸກໃນເມື່ອກ່ອນ, ທຸກຂົງເຂດປະເທດຊາດມີຄວາມສຸກຄວາມຈະເລີນເຮັດໃຫ້ຄົນລາວພັດພາກຈາກປະເທດຊາດໄປບໍ່ໄດ້. ເມື່ອຢາກຫວນຄືນໄປຫາສະພາບອັນສຳລານນັ້ນນັກແຕ່ງຕ້ອງຄົ້ນຄິດຫາວິທີທຳການຕໍ່ສູ້ກູ້ຊາດດ້ວຍກຳລັງປະກອບອາວຸດ ຈຶ່ງສາມາດກູ້ເອົາປະເທດຊາດຄືນມາໄດ້, ແຕ່ເຫັນວ່າຄວາມຄິດນັ້ນມັນສຸດທີ່ຫຍຸ້ງຍາກ, ຕ້ອງມີຄວາມລະມັດລະວັງ, ມີກຳລັງພໍເຂັ້ມແຂງ ແລະ ຮັບປະກັນທຸກດ້ານ. ຖ້າບໍ່ດັ່ງນັ້ນຄວາມຄິດຄວາມຫວັງບໍ່ອາດດຳເນີນໄປໄດ້ ໃນເມື່ອປະເທດຊາດຢູ່ໃນສະພາບຝຶດເຄືອງ.

| | | |
|---|---|---|
| ຄຶດໄດ່ | ທວຍທະລັງປິ້ນ | ຍໍຕາວເປື້ອງແກວ່ງ ເອົານັ້ນ |
| | ພູຟາດມ້າງ | ດູຕ້ອງຕອກກະແຈ |
| | ລຶບລ່ຽມດ້າວ | ໄຊປ່ອງແປວລະຫັດ |
| ຫຼືວ່າ | ໂທມທວງຂັດ | ມືດຂະໜອງເໜືອງໄໝ້. |

ໃນເມື່ອປະເທດຊາດຍັງຕົກຢູ່ໃນສະພາບທີ່ລົ້ມຈົມຕະຫຼອດມາ, ນັກແຕ່ງຍິ່ງຄິດຍິ່ງແຄ້ນ, ເມື່ອໃດຫາກສຳເລັດໜ້າທີ່ຈຶ່ງເຮັດໃຫ້ນັກແຕ່ງມີຄວາມເບີກບານມ່ວນຊື່ນ, ມີຄວາມສຸກທາງກາຍ ແລະ ໃຈ.ສະນັ້ນ, ນັກແຕ່ງໄດ້ສະແດງຫຼັກໝັ້ນອັນບໍ່ປ່ຽນແປງຂອງຕົນ ເພື່ອໃຫ້ປະຊາຊົນລາວຮູ້ຈັກທາດແທ້ແນວຄິດຈິດໃຈ ແລະ ໃຫ້ປະຊາຊົນທຸກໆຄົນຮ່ວມມືກັນ ດັ່ງສານຕອນໜຶ່ງຂຽນວ່າ:

| | |
|---|---|
| ໃຈໜ່ອມອ້າຍ | ໝາຍມຸ່ງພະໄມມິດ |
| ຊິຄ່ອຍ ປຸນປອງຮັກ | ຮ່ວມຮຽງຮາວຖ້ານ |
| ສົມພານເບື້ອງ | ປາລະມີຮຽງຮອດ ກັນແລ້ວ |
| ສຸດຟາກ ລວງເລີກລໍ້າ | ພິລາກ້ຽວກ່ອມລຳ ໄດ້ເດ |
| ແນນເກົ່າເກື້ອ | ເກີດຮ່ວມຮຽງຮັກ ແລ້ວນັ້ນ |
| ໃຜຫ່ອນ ຂືນຂັດເຊີງ | ສະຫວາດດູດາຍໄດ້ |

| | |
|---|---|
| ສົມຄວນໄດ້ | ຊີໄລວາງປະປ່ອຍ ເປັນລື |
| ແມ່ນວ່າ ສຸດຟາກຟ້າ | ທະຍານປີ້ປ່ອງເຖິງ |

ເວົ້າເຖິງຄວາມຮັກປະເທດຊາດບ້ານເກີດເມືອງນອນປຽບທຽບກັບຄວາມຮັກບ່າວສາວ ເຖິງວ່າສະພາບການຈະຫຍຸ້ງຍາກສັບສົນ ແຕ່ຫຼັກໝັ້ນໃນການຕໍ່ສູ້ຂອງນັກແຕ່ງບໍ່ຄອນແຄນ, ມັນຍິ່ງເພີ່ມທະວີກຳລັງວັງຊາທັງກາຍ ແລະໃຈຢ່າງໜັກແໜ້ນແກ່ນສານ ໃນການຕຽມໃຫ້ແກ່ການຕໍ່ສູ້ກູ້ຊາດດ້ວຍກຳລັງປະກອບອາວຸດ ຢາກເຮັດໄດ້ແນວນັ້ນກໍ່ຕ້ອງມີກຳລັງແຮງອັນມະຫາສານ(ປະຊາຊົນທັງຊາດ). ພ້ອມນັ້ນ ນັກແຕ່ງກໍ່ຄິດຮັກໄຄ່ສິງສານຄົນລາວທີ່ຕົກທຸກໄດ້ຍາກ, ພັດພາກຈາກປະເທດຊາດຄິດຮອດພາບທຳມະຊາດທີ່ສວຍສົດງົດງາມ ດັ່ງສານຕອນໜຶ່ງຂຽນວ່າ:

| | |
|---|---|
| ພີ່ຂໍ ຖາມຂ່າວນ້ອງ | ນົງຖ່າວຖະໜອມສີ |
| ຍັງຄອຍ ທົ່ງຄວາມສຸກ | ປົ່ງຊອນແຊມຊ້ອນ |
| ຫຼືວ່າ ຍັງປະສົງສ້າງ | ສົມພານພຽງພີ່ |
| ຂໍແຕ່ ນ້ອງນາດໄທ້ | ພະໄນຊ້ອນຂອດຮຽມ ພີ່ຖ້ອນ |

ນັກແຕ່ງມີການສົມທຽບກັບຫຼາຍບັນຫາເພື່ອເຮັດໃຫ້ຫຼາຍຄົນຄົ້ນຄິດ ແລະ ເຂົ້າໃຈຈຸດປະສົງຕໍ່ສູ້, ນັກແຕ່ງຍາມໃດກໍ່ລະທົມຂົມຂື່ນປຽບເໝືອນດັ່ງຮ່າງກາຍທີ່ນອນຢູ່ເທິງແປວອັກຄີ. ຈຶ່ງໄດ້ຄົ້ນຄິດຫາຫຼາຍວິທີການເພື່ອເຕົ້າໂຮມກຳລັງທັງໝົດປະເທດ ດັ່ງສານຕອນໜຶ່ງຂຽນວ່າ:

| | |
|---|---|
| ມະໂນທວານທຸກ | ທົ່ງໂຮມຮາວບ້ານ |
| ປັນດັ່ງ ອັກຄີໄໝ້ | ຟອນຟາງເພື່ອຍປ່າ |
| ຄິດໄຄ່ ຫອບແມ່ນ | ທັງຫ້າອາບສິງ |

ນັກແຕ່ງນັກຂຽນຕະຫຼອດຮອດຄົນຜູ້ທີ່ຮັກຊາດຍັງໄດ້ທວນຄືນເຖິງມູນເຊື້ອແຫ່ງການຕໍ່ສູ້ອັນພິລະອາດຫານຂອງປູ່ຍ່າຕາຍາຍ ໃນການຕ້ານກັບການຮຸກຮານຂອງສັດຕູພາຍນອກດ້ວຍການປະສານສາມັກຄີເປັນກ້ອນກຳລັງດຽວ, ບໍ່ຍອມເປັນຂ້ອຍຂ້າກຸລີຮັບໃຊ້, ບໍ່ຍອມປ່ອຍປະລະປະເທດຊາດຂອງຕົນ ແລະ ບໍ່ໜີຈາກບ້ານເກີດເມືອງນອນດັ່ງສານບາງຕອນຂຽນວ່າ:

| | |
|---|---|
| ຊາດທີ່ ພາສາເຊື້ອ | ອານົນນາມນາກ |
| ເນົ່າເນັ່ງ ພັນທະເມກກ້ຽວ | ສະເໜນຄ້ານໂຄ່ນຄອນ |
| ປຸນແປງ ຍວງຍັງໜ້າ | ພາສາບ້ວງບາດ |
| ມົນຕະລາດຕ້ອງ | ຕຶງໃຕ້ເພື່ອລິດທິ... |

ນັກແຕ່ງໄດ້ລະດົມຈິດໃຈປະຊາຊົນລ້ານຊ້າງທີ່ດຳລົງຊີວິດຢູ່ຮ່ວມຜືນແຜ່ນດິນຈົ່ງພ້ອມໃຈກັນຕໍ່ສູ້ ແລະ ຈຶ່ງໄດ້ຄົ້ນຄິດຕຶກຕອງໃຫ້ຖີ່ຖ້ວນ, ອັນໃດມັນຖືກ,ອັນໃດມັນຜິດ; ຂໍ້ຄວາມທີ່ນັກແຕ່ງທີ່ໄດ້ສະເໜີລ້ວນແຕ່ແມ່ນຈຸດປະສົງໃຫ້ທຸກຄົນພາຍໃນຊາດເພື່ອເຂົ້າຮ່ວມຂະບວນການກູ້ຊາດ.

## 2.2 ບັ້ນສົມທີ່ຄິດ

## ກ.ເນື້ອໃນບັ້ນສົມທີ່ຄິດ

ບັ້ນນີ້ແມ່ນການຊີ້ບອກໃຫ້ເຫັນຄວາມຄິດ ທີ່ມີຄວາມໝາຍເລິກເຊິ່ງຂອງນັກແຕ່ງ, ຊຶ່ງມີຈຸດປະສົງປຸກລະດົມປະຊາຊົນໂດຍທາງລັບເພື່ອເຮັດການຕໍ່ສູ້, ຊີ້ບອກໃຫ້ເຫັນການກະທຳທີ່ເປັນພື້ນຖານໃນການເລືອກເຟັ້ນຢ່າງຖືກຕ້ອງ, ແຕ່ຫາກວ່າຄວາມຄິດນີ້ມັນຍັງເປັນການປິດລັບຍັງບໍ່ທັນໄດ້ລົງມືປະຕິບັດເທື່ອ.

**ຂ.ວິເຄາະເນື້ອໃນບັ້ນສົມທີ່ຄິດ**

ບັ້ນນີ້ ແມ່ນການຊີ້ໃຫ້ເຫັນຄວາມນຶກຄິດຂອງຜູ້ແຕ່ງທີ່ສະແດງອອກກ່ຽວກັບວຽກງານການຕໍ່ສູ້ຊາດ, ຄວາມຄິດດັ່ງກ່າວນັ້ນເປັນຄວາມຄິດທີ່ເຕັມໄປດ້ວຍຄວາມໝາຍອັນເລິກເຊິ່ງ, ມີຄຸນຄ່າອັນໜັກແໜ້ນທີ່ສຸດ ນັ້ນກໍ່ຄືຄວາມຄິດເພື່ອອິດສະຫຼະພາບຂອງຊາດ. ນັກແຕ່ງໄດ້ສະເໜີໃຫ້ທຸກຄົນຕື່ນຕົວລຸກຂຶ້ນຕໍ່ສູ້ດ້ວຍກຳລັງອາວຸດຈຶ່ງຈະບັນລຸຜົນສຳເລັດ. ຖ້າມີຄວາມຈຳເປັນກໍອາດຫາຄວາມຊ່ວຍເຫຼືອຈາກກຳລັງພາຍນອກກໍ່ເປັນໄດ້ດັ່ງສານຕອນໜຶ່ງຂຽນວ່າ:

| | | | |
|---|---|---|---|
| ໂອນໍ ! ສານນີ້ຊື່ວ່າ | ສົມທີ່ຄິດຄອນຄ່າລ້ານ | ມະນີສີດວງປະເສີດ | |
| ຈັກຂອດ | ໂຣມຕ່ອນຕື້ | ຖະໜອມແກ້ວຄ່າເມືອງ | |
| ວ່າຢາກ | ຜາຍພົນລ້ອມ | ມະຫານິນຮຽງພ່າງ | |
| | ແສງອ່ອນອ້ອນ | ພິລາເຂັ້ມເຮື່ອເຮືອງ | |
| ຮຽມຢາກ | ໄປວານຝູງພີ່ນ້ອງ | ວິງວານໃຫ້ມາຊ່ວຍ | ຊິຄືລື |
| | ທັງໝູ່ຫໍ້ | ກະເລີງພ້ອມພໍ່ແກວ | |
| ເຊີນແມ່ | ມາຊ່ວຍຜັດສີແກ້ວ | ທຳມະໂຮງໃຫ້ແຈ້ງຮຸ່ງ | ແດ່ຖ້ອນ |
| ຫຼອນວ່າ | ບຸນສົ່ງໃຫ້ | ແສງເຫົ້າທົ່ວເມືອງ ບໍ່ຮູ້ | |

ນັກແຕ່ງໃຊ້ຄວາມຄິດເຫັນສ່ວນຕົວເພື່ອເຮັດໃຫ້ປະຊາຊົນຄົ້ນຄິດກັບບັນຫາໂດຍໄດ້ຍົກເອົາຫຼາຍບັນຫາມາປຽບທຽບ ແລະ ຕັ້ງຄຳຖາມໃນແງ່ທີ່ສຳຄັນຂອງວຽກງານຕໍ່ສູ້ກູ້ຊາດ. ຄວາມຄິດດັ່ງກ່າວນັ້ນມັນຈະເປັນໄປໄດ້ຫຼື ບໍ່? ນັກແຕ່ງໄດ້ຮຽກຮ້ອງໃຫ້ທຸກຄົນຕ້ອງຮູ້ຈັກເລືອກໃຊ້ອັນໃດມັນຖືກອັນໃດມັນຜິດ, ແຕ່ລະຄົນມີສິດຕີລາຄາດ້ວຍຕົນເອງ. ຖ້າເຫັນວ່າສ່ວນໃດທີ່ຖືກຕ້ອງເໝາະສົມກັບຄວາມເປັນຈິງແລ້ວກໍ່ຕ້ອງນຳໄປປະຕິບັດ ດັ່ງສານຕອນໜຶ່ງຂຽນວ່າ:

| | | |
|---|---|---|
| ທາງຫາກ | ມີຫຼາຍເສັ້ນ | ຕາມໃຈຊິເລືອກໄຕ່ ໄປຖ້ອນ |
| | ມັກເສັ້ນເວີ້ງ | ທາງລ້ຽວກໍ່ຫາກມີ |
| ອ້ອຍຫວານ | ພອຍວ່າສົ້ມ | ໃຫ້ລອງຊີມພໍຮູ້ຂ່າວ |
| ຫຼືຊິ | ໄວ້ບາດຫຼົ້າ | ໄຂແຈ້ງຂາດຄຳ |
| ຂອງຫວານ | ພອຍວ່າສົ້ມ | ຈວງຈັບຊິລືມອາດ ສາຕິ |
| ເຂົາຣໍ | ເຈົ້າວ່າຫວານກວ່າອ້ອຍ | ຊາວບ້ານເພິ່ນຊິຖາມ ບໍ່ຢ່າແລ້ວ |

ນັກແຕ່ງຊີ້ເຫດຜົນຕົວຈິງໃຫ້ປະຊາຊົນຮູ້ຈັກ, ສິ່ງທີ່ນັກແຕ່ງເວົ້າມານີ້ມັນເປັນເລື່ອງທີ່ແນ່ນອນຖືກຕ້ອງແລ້ວເພາະວ່າໄດ້ຜ່ານການຄົ້ນຄິດຕາມສະພາບຄວາມເປັນຈິງເພື່ອຄວາມແນ່ນອນຕື່ມອີກນັກແຕ່ງສະເໜີໃຫ້ປະຊາຊົນຮໍາຄະນຶງ. ຈາກບ່ອນນີ້ຈຶ່ງເຮັດໃຫ້ຄົນເຮົາຮູ້ວ່າ ກ່ອນຈະເຮັດຈະທຳຫຍັງລົງໄປຫາກບໍ່ມີການລະມັດລະວັງຈະເຮັດໃຫ້ວຽກງານນັ້ນບໍ່ສຳເລັດ ຫຼື ວ່າຖືກມ້າງເພ, ເວົ້າເຖິງການຕໍ່ສູ້ຍິ່ງມີຄວາມໝາຍສຳຄັນ, ຕ້ອງວາງແຜນທ້າງຫາກະກຽມ

ເພື່ອໃຫ້ພຽງພໍກັບຄວາມຕ້ອງການ ເຊິ່ງນັກແຕ່ງກໍໄດ້ມີຄວາມພະຍາຍາມໃນການໂຄສະນາຂົນຂວາຍປຸກລະດົມຈິດໃຈປະຊາຊົນລາວໃຫ້ເຂົ້າຮ່ວມຂະບວນການຕໍ່ສູ້ດັ່ງສານຂຽນໄວ້ຕອນໜຶ່ງວ່າ:

ຢ່າໄດ້ ເວົ້າຕໍ່ເຊື້ອ ຄົນໃກ້ຕ່າງແຊງ
ຄັນວ່າ ໄຂລະຫັດຟ້າ ຝົນລົມຊີ້ລົ້ນຂອບ ລົງແລ້ວ
ເກັ່ງທໍ່ ນໍ້າຖ້ວມກ້າ ນາແລ້ງຂາດເຂີນ ບໍ່ຮູ້
ຄັນບໍ່ ຂັນຕີເຢື້ອນ ກໍ່ເປັນຄວນສ້ອຍສ່ອນ ໄປແລ້ວ
ຢ້ານທໍ່ ເສຍໜ່ວຍແກ້ວ ດວງລໍ້າຄ່າເມືອງ ເຈົ້າເດ

ເພື່ອຄວາມແນ່ໃຈນັກແຕ່ງໄດ້ຖາມຂ່າວແນວຄິດຈິດໃຈຂອງປະຊາຊົນລາວທັງຊາດ ໃນການເຂົ້າຮ່ວມຂະບວນການຕໍ່ສູ້. ຖ້ານັກແຕ່ງເວົ້າແຈ້ງກວ່ານີ້ແມ່ນບໍ່ໄດ້,ແຜນການຕ່າງໆແມ່ນຈະຖືກເສຍລັບ, ເມື່ອເສຍລັບຂະບວນການຕໍ່ສູ້ຈະຖືກປາບປາມ, ຖ້າວ່າບໍ່ເວົ້າແຈ້ງປະຊາຊົນຈະບໍ່ຮູ້ຈັກ ດັ່ງກອນຕອນໜຶ່ງຂຽນວ່າ:

ເມື່ອບໍ່ ໄຂລະຫັດໃຫ້ ກໍເປັນຄວາມໃສສຽດ ໄປນັ້ນ
ຝູງໝູ່ ຊາວບອດໃບ້ ເຂົາຊິຮູ້ຮ່ອມໃດ
ແຂໍບໍ່ ຕີຫາງໃຫ້ ຊາວມອງຊິຮູ້ເມື່ອ ຄິງລີ
ຍັງຈັກ ຄຶດສະເດືອດຮູ້ ມີແຂ້ເງືອກງ ບໍ່ນັ້ນ
ຄັນບໍ່ ຟູຫາງໃຫ້ ແປນຕົວກໍຍິນຍາກ
ເປັນດັ່ງ ຕາບອດຫຼຽວເບິ່ງນໍ້າ ນັດທີກວ້າງກໍ່ວ່າຄວັນ

ນັກແຕ່ງມີຄວາມກະວົນກະວາຍໃຈຢູ່ບໍ່ເປັນສຸກ ໃນເມື່ອບໍ່ສາມາດລະບາຍຄວາມຄິດຄວາມເຫັນຢ່າງເປີດແປນໄດ້ເພາະວ່າຕອນນີ້ສັງຄົມປະເທດຊາດມັນຢູ່ໃນສະພາບທີ່ສັບສົນ. ສະນັ້ນຈຶ່ງມີຄວາມລະມັດລະວັງເປັນພິເສດ. ທຸກບັນຫາທີ່ນັກແຕ່ງຍົກມາຢາກໃຫ້ປະຊາຊົນລາວຮູ້ເຫັນປະທຸກກິດການ, ເຫດການເກີດຂຶ້ນຕະຫຼອດໄລຍະທີ່ນັກແຕ່ງໃຊ້ຄໍາຖາມຍັ່ງເບິ່ງແນວຄິດຂອງປະຊາຊົນ ໃນການເຂົ້າຮ່ວມຂະບວນການຕໍ່ສູ້, ນັກແຕ່ງໄດ້ສະເໜີຄວາມຄິດເຫັນສ່ວນຕົວຕໍ່ປະຊາຊົນຢ່າງມີເຫດຜົນວ່າ:

ຟັງເຍີ ຝູງໝູ່ມນ້ອຍ ນາງນາດນົງສະຫວັນ
ພີຢາກ ຖາມຂ່າວບ້ານ ເມືອງເກີດດວງສະໝອນ
ເຊີນແມ່ ທົງພະໄທຈິດ ຄ່ອຍຟັງນິທານກ້ອມ
ຫຼອນວ່າ ຖາມຜິດຂໍ້ ຂໍພອນອະນຸຍາດ
ຮຽມບໍ່ ໄດ້ເວົ້າວາດຂໍ້ ສະເໜີເຈົ້າເຫດມີ ດອກນາ.
ຄັນວ່າ ອື້ວບໍ່ໂສດາຝ້າຍ ເໜັນໝາງຊັ້ງແດດ ກໍ່ຕາມຖ້ອນ
ເຈົ້າຫາກ ຮູ້ເຫດພັງງ ຊິເຄືອງໃຫ້ຮ່ອມໃດ ນ້ອງເອີຍ

## 2.3 ບັ້ນສຸດທີ່ອ່າວ

**ກ. ເນື້ອໃນບັ້ນສົມທີ່ຄິດ**

ສານບັ້ນນີ້, ຜູ້ແຕ່ງຢາກເນັ້ນໜັກຄືນກ່ຽວກັບຄວາມຄິດ, ຄວາມຫວັງ, ຄວາມມຸ່ງມາດປາດຖະໜາອັນແຮງກ້າ ແລະ ຄວາມກະວົນກະວາຍອັນສຸດຊຶ້ງຂອງຕົນທີ່ຫວັງຢາກກອບກູ້ຊາດບ້ານເມືອງອອກ ຈາກເງື້ອມມືຂອງຜູ້ຮຸກຮານ ພ້ອມທັງປຸກລະດົມຂົນຂວາຍ, ໂຄສະນາປວງຊົນຜູ້ຮັກຊາດທັງຫຼາຍຂໍໃຫ້ພ້ອມກັນລຸກຂຶ້ນຕໍ່ສູ້ເພື່ອກອບກູ້ຊາດບ້ານ ເມືອງ. ຫາກທຸກຄົນບໍ່ພ້ອມພຽງຮຽງໜ້າກັນ, ບໍ່ມີຜູ້ນໍາພາທີ່ດີແນ່ນອນຄວາມຄິດຄວາມຫວັງຂອງຜູ້ແຕ່ງກໍບໍ່ອາດຈະ ເປັນຈິງໄດ້.

## ຂ. ວິເຄາະເນື້ອໃນບັ້ນສົມທີ່ຄິດ

ບັ້ນນີ້ແມ່ນບັ້ນທີ່ນັກແຕ່ງມີຄວາມເດັດດ່ຽວໃນການປະພຶດປະຕິບັດຕົວຈິງ ໂດຍຜ່ານຂະວິວັດຄົ້ນຄິດມາ ຕະຫຼອດໄລຍະເວລາອັນເຫິງນານ ແລະ ໄດ້ສະເໜີຄວາມຕັດສິນໃຈຂອງຕົນເອງຕໍ່ການກູ້ຊາດຕ້ານສັດຕູພາຍນອກ.

ນັກແຕ່ງກິນບໍ່ແຊບນອນບໍ່ຫຼັບມີອາການຮ້ອນຮົນກະວົນກະວາຍທຸກວັນເວລາ, ໃນກາຍ ແລະ ຈິດໃຈຂອງ ນັກແຕ່ງປຽບເໝືອນ ດັ່ງມີໂລຄາມາບັງບຽດນັບມື້ນັບມີອາການໜັກໜ່ວງເລື້ອຍໆ ດັ່ງສານໄດ້ຂຽນວ່າ:

..... ແສນສິ່ງ ໃນທວງເອົ້າ ຫົນຫວາຍຫາມື້ສ່ວງ ບໍ່ມີແລ້ວ
ເດືອນຍີ່ . ມາຮອດແລ້ວ ແສນຮ້ອນເທື່ອໄຫຼ
ຕັ້ງແຕ່ ເດືອນສາມຄ້ອຍ ລະດູເຖິງເດືອນສີ່ ມານັ້ນ
ເມຄະ ລົມໄຫຼລັ່ງຍ້ອຍ ຮໍ່າໜ້າບໍ່ຂາດສາຍ
ວ່າຈັກ ຝົງໄຟລີ້ ກໍ່ມາເປັນອັນຍາກ
ວ່າຈັກ ລົງແຊ່ນໍ້າ ກໍ່ມາຮ້ອນຮຸ່ນທວງ
ມັນຫາກ ຂົນຂັດເຂົ້າ ໃນທວງສຸດທີ່ອ່າວ
ເຮຮົນ ເລີຍຄັ່ງແຄ້ນ ຫານ້ອງກໍຫວັ່ງເວ
ຜັດແຕ່ ເດືອນຫ້າຂຶ້ນ ຖືຄີງໄຂ້ບໍ່ສວ່າງ
ເດືອນຫົກ ມາຮອດແລ້ວ ໜາວຊໍ້າຕື່ມຝົນ..

ນັກແຕ່ງມີຄວາມຮ້ອນອົກຮ້ອນໃຈ, ເຖິງເມື່ອຍາມລະດູຮ້ອນ ແທນທີ່ເຫຼືອຈະອອກແຕ່ຊໍ້າພັດໜາວ ແຕ່ລະ ມື້ລະວັນມີແຕ່ຄວາມອຸກອັ່ງໃນທວງເພື່ອຢາກໄດ້ເອກະລາດຄືນມາ, ຈຶ່ງປຸກລະດົມປະຊາຊົນລາວທັງຊາດໃຫ້ເຫັນໄດ້ ເຖິງຄວາມສໍາຄັນຂອງວຽກງານກູ້ຊາດ, ຖ້າບໍ່ເປັນໄປຕາມຄວາມຫວັງຂອງນັກແຕ່ງກໍຈະເຮັດໃຫ້ມີຄວາມເຈັບປວດ ຊອກຂຶ້ນຕື່ມອີກເລື້ອຍໆ ດັ່ງສານຕອນໜຶ່ງທີ່ວ່າ:

...ໂອນໍ ! ຮຽມນີ້ ເປັນດັ່ງປາຕາຍຂ້ອນ ໜອງນານເຂີນຂາດ.
ຝົນບໍ່ ສິ່ງໂຜດໃຫ້ ຕາຍແລ້ງແດດເຜົາ ເດນໍ
ຄຶດຕໍ່ ດອກຄັດເຄົ້າ ບານຢູ່ກາງດົງ
ຄຶດຕໍ່ ເຄື່ອພາຍສົງ ກໍເລົ່າມີລໍາກ້ຽວ
ອັນຫນຶ່ງ ເປັນດັ່ງຟ້າຜ່າໄມ້ ລໍາສ້ຽວສຽບໃຈ

ໃນເວລາທີ່ປະເທດຊາດຕົກເປັນຫົວເມືອງຂຶ້ນໃຫ້ແກ່ສັກດີນາສະຫຍາມ, ປະຊາຊົນລາວສ່ວນຫຼວງຫຼາຍໄດ້ຖືກເກັບກວດໜີຈາກບ້ານເກີດເມືອງນອນເຮັດໃຫ້ນັກແຕ່ງບໍ່ມີຄວາມມ່ວນຊື່ນລື້ນເລີງຢູ່ສຸກສະບາຍຫາຍຮ້ອນໄດ້ຄືໃນເມື່ອກ່ອນ, ຍາມໃດກໍມີແຕ່ຄວາມເຈັບເປັນເໝືອນດັ່ງວ່າມີໄມ້ສຽບແທງດວງໃຈດັ່ງສານຂຽນວ່າ:

...ປອດຫົວ    ຖືຄີງໄຂ້    ທັງຕົວບໍ່ມີເຫື່ອ
ຢ້ານແຕ່    ໝາກໄມ້ຄ້າງ    ກືນເຂົ້າກໍ່ຈື່ງຂົມ
ໃຜຜູ້    ເປັນໝໍແກ້    ມີຢາອິດເຍື້ອນປິ່ນ ປົວແມ
ຄັນວ່າ    ຫາຍພະຍາດຮ້ອນ    ຄຸນເຈົ້າບໍ່ເສຍຫາຍ ດອກນາ

ນັກແຕ່ງຄິດຫຼາຍຈົນເປັນໄຂ້ທີ່ບໍ່ມີຍາມຫາຍແຕ່ອາການໄຂ້ຂອງນັກແຕ່ງເວລານີ້ບໍ່ແມ່ນໄຂ້ທີ່ໃຊ້ຜ້າຫົ່ມ ຫຼືຜີງໄຟ, ມັນແມ່ນໄຂ້ຍ້ອນແນວຄິດ, ຍ້ອນເສຍປະເທດຊາດບ້ານເມືອງ... ຢາກແກ້ໄຂ້ພະຍາດປອດຫົວເປັນໄຂ້ກິນເຂົ້າບໍ່ແຊບກໍ່ມີຢາຊະນິດດຽວນັ້ນກໍຄືປະຊາຊົນທັງຊາດໂຮມເປັນຈິດໜຶ່ງໃຈດຽວລຸກຂຶ້ນຈັບອາວຸດຕໍ່ສູ້ກູ້ຊາດຍາດເອົາເອກະລາດຄືນມາໃຫ້ຊາດ, ປະເທດຊາດມີສັນຕິພາບ, ເອກະລາດ. ຈາກນັ້ນ ນັກແຕ່ງໄດ້ເວົ້າຕື່ມວ່າຢາກໄດ້ຄືແນວນັ້ນຕ້ອງມີການນຳທີ່ດີ, ມີກຳລັງແຮງປະສານສົມທົບຢ່າງກົມກຽວ ດັ່ງສານຂຽນວ່າ:

ຟັງເຢີ !    ແພງສີສ້ອຍ    ສະເໜຫາສຸດທີ່ອ່າວ ຮຽມເອີຍ
ພີ່ຊິ    ເຊື່ອງເງື່ອນໃຫ້    ເຫັນບັ້ນບ່ອນຊິໂຕນ
ຊາດທີ່    ເຮືອແພນນີ້    ວາງໂທມບາຍກູດ ຈື່ງເປັນດາຍ
ຂັດຖືກ    ເວວາດທ້າຍ    ຫົວພີ້ຫາກຊິນຳ
ໃຫ້ຄ່ອຍ    ແປງໂທມປ້ອງ    ຕາມຄຳຕິດຕໍ່ ແຊວຖ້ອນ
ແນມທໍ່    ໂທມກິນນ້ຳ    ຊິເປັນຂັນຮ້ອຍໝ່ວຍ ກໍຕາມຖ້ອນ
ແສນຊິ    ຟອງທຸ່ມກົ້ວ    ຄືນທ້າຍຫາກຊິແຊວ...

ຈາກບ່ອນນີ້ນັກແຕ່ງໄດ້ຊີ້ໃຫ້ເຫັນຈຸດໝາຍປາຍທາງຢ່າງເລິກລັບໃນການກະທຳ. ໃນຂະບວນການຕໍ່ສູ້ໜຶ່ງໆກໍ່ຕ້ອງມີຫົວໜ້າທີ່ດີມີຜູ້ນຳພາຂະບວນການມີກຳລັງແຮງມີຄວາມສາມັກຄີ, ປະຊາຊົນທຸກຄົນພ້ອມພຽງຮຽງໜ້າສູ້ຊົນປະຕິບັດຢ່າງບໍ່ທໍ້ຖອຍເຖິງວ່າສະພາບການຈະແສນຫຍຸ້ງຍາກປານໃດກໍ່ຕາມກໍ່ຕ້ອງກ້າວໄປເຖິງຜົນສຳເລັດແຫ່ງໄຊຊະນະຈົນໄດ້.

ນັກແຕ່ງໄດ້ສະແດງຫຼັກໝັ້ນທັດສະນະບໍ່ປ່ຽນແປງຂອງຕົນອີກເທື່ອໜຶ່ງ, ສະເໜີຄວາມຕັດສິນໃຈຢ່າງເດັດດ່ຽວໝຽວແໜ້ນ. ຍອມເສຍສະລະຊີວິດຂອງຕົນອຸທິດກາຍໃຈເພື່ອປະເທດຊາດເພື່ອຄວາມຜາສຸກຂອງປະຊາຊົນ ແລະ ເອກະລາດແຫ່ງຊາດຕໍ່ສູ້ຈົນເຖິງວິນາທີສຸດທ້າຍດັ່ງສານຕອນໜຶ່ງຂຽນວ່າ:

ມັນຫາກ    ເຄີຍຕາຍມ້ຽນ    ດອມຂັນເດືອນແປດ
ພີ່ບໍ່    ແໜງໝ່າຍເອື້ອ    ຊີວັງໄວ້ທໍ່ໃຍ
ເພິ່ນຫາກ    ລືວ່າຮ້າຍ    ໃຈອ້າຍຫາກປະສົງ...

ໃຜໆກໍ່ຮູ້ວ່າການຕໍ່ສູ້ກູ້ຊາດບໍ່ແມ່ນວຽກງານທີ່ງ່າຍດາຍ, ມັນສຸດແສນຫຍຸ້ງຍາກແຕ່ກໍ່ເປັນພາລະໜ້າທີ່ຂອງໝົດທຸກຄົນ, ນັບທັງນັກແຕ່ງກໍ່ເຊັ່ນດຽວກັນເມື່ອຄົນເຮົາວາງຈຸດປະສົງອອກກໍ່ຕ້ອງໄດ້ປະຕິບັດຕາມຈຸດປະສົງ ແລະ

ເສຍສະຫຼະທຸກສິ່ງທຸກຢ່າງເພາະວ່າຄົນເຮົາບໍ່ມັກການເປັນຂ້ອຍຂ້າຂອງຊາດອື່ນ, ບໍ່ໃຫ້ຊາດອື່ນມາຂົ່ມຂູ່ໜີບເຕັງ ........ ສະນັ້ນ ນັກແຕ່ງຈິ່ງຕັ້ງບັນຫາທີ່ກົງກັນຂ້າມກັບຕົວຈິງ ດັ່ງສານຂຽນວ່າ:

ອັນວ່າ ໃຈປະສົງຂ້ອຍ ຢາກໄຖນາເຮື້ອເກົ່າ
ຄັນເພິ່ນ ໄລຖິ້ມໄວ້ ພະອວນອ້າຍຫາກສະຫງວນ
ຊາດທີ່ນາເພື່ອງນີ້ ຕາມໄຖຄືຊິມ່ອນ ມືດາຍ
ເໜືອງເພິ່ນ ຫາກຂັງເປົ່ງໄວ້ ຂັງນໍ້າຊິຢູ່ດີ
ຮຽມຫາກ ເປັນຄົນຄ້ານ ປະສົງຫາແຕ່ນາເກົ່າ
ນາຊ່າວ ມີບໍ່ແພ້ ພະອວນອ້າຍບໍ່ປະສົງ...

ບັນຫາທີ່ກ່າວມານີ້ແມ່ນນັກແຕ່ງຍົກມາໃຫ້ພວກເຮົາເຫັນວ່າຄົນເຮົາຍາມໃດກໍ່ມີຫຼັກໝັ້ນບໍ່ວ່າຊ້າຍ, ອ່ຽງຂວາ, ບໍ່ຖໍ້ຖອຍຕໍ່ອຸປະສັກ, ປະເທດຊາດຕົນເອງກໍ່ຕ້ອງແມ່ນຕົນເອງເປັນເຈົ້າໃນການສ້າງພັດທະນາ, ບໍ່ຍິນຍອມໃຫ້ຊາດອື່ນມາຮຸກຮານ ແລະ ຕົນເອງກໍ່ບໍ່ຍອມໄປສ້າງຮັ່ງຄູນມີໃຫ້ແກ່ຊາດອື່ນ. ນອກຈາກນີ້ກອນຍັງໄດ້ເນັ້ນໜັກຕື່ມອີກເທື່ອໜຶ່ງວ່າຖ້າມະຫາຊົນຄົນລາວພາຍໃນຊາດຫາກມີຄວາມສາມັກຄີແໜ້ນແຟ້ນ, ບໍ່ຍອມເສຍສະຫຼະແລ້ວກໍ່ຈະໄດ້ຮັບໄຊຊະນະດັ່ງກອນທີ່ວ່າ:

ຄັນໄດ້ ຝັງຫຼັກແໜ້ນ ແສນຊິລົມມາຮ້ອຍຫ່າ ກໍຕາມຖ້ອນ
ພາຍພີ່ ຊົນອນທອດທະເນີ້ງ ແຫງນໜ້າເບິ່ງລົມ ດອກນາ..

ສານຕອນນີ້ມີຄວາມໝາຍວ່າໃນຂະບວນການຕໍ່ສູ້ກູ້ຊາດໜຶ່ງໆຄັນວ່າມີກຳລັງພຽງພໍໜັກແໜ້ນແກ່ນສານ, ມີບ່ອນຢືນຖືກຕ້ອງ, ສົມທົບທິດສະດີການນຳທີ່ດີ, ມີຜູ້ນຳພາຢ່າງຖືກຕ້ອງຄ່ອງແລ້ວເຮົາກໍ່ບໍ່ຫວັ່ນກົວຕໍ່ສະພາບທີ່ເກີດຂຶ້ນ.ນັກແຕ່ງມີຄວາມຫວັງຢ່າງແຮງກ້າມາເປັນເວລາດົນນານຈິ່ງຕັ້ງບັນຫາຂຶ້ນມາຫຼາຍຢ່າງໃຫ້ປະຊາຊົນຄົ້ນຄິດ ແລະ ຮ່ວມມືຕໍ່ສູ້. ຖ້າວ່າບໍ່ໄດ້ຕາມຄວາມຫວັງຂອງນັກແຕ່ງໃນຊາດນີ້ແລ້ວນັກແຕ່ງກໍ່ຍັງມີຄວາມຫວັງໄວ້ຢູ່ໃນ " ຊາດຊິມາ". ມັນແມ່ນຄວາມຫວັງທີ່ບໍ່ປ່ຽນແປງ ແລະ ບໍ່ຍອມລົດລະປະປ່ອຍໃນວຽກການກູ້ຊາດ. ດັ່ງສານຂຽນທີ່ວ່າ:

ຄັນບໍ່ ໄດ້ໜ່ອຍແກ້ວ ລູກປະເສີດມະຫາເພັດ ຮຽມນັ້ນ
ພີຊິ ຄືນທາງຫຼັງ ບວດເປັນສົມເຖົ້າ
ຕັ້ງຕໍ່ ປາລະມີສ້າງ ເອົາບຸນເປັນທີ່ເພິ່ງ
ຂໍໃຫ້ ພົບໜ່ອຍແກ້ວ ພີລາເຂັ້ມຊາດຊິມາ ແດ່ຖ້ອນ
ຫຼືວ່າ ຄັນບໍ່ ໄດ້ໜ່ອຍແກ້ວ ລູກປະເສີດມະຫາເພັດ ເພິ່ນພຸ້ນ
ມາຂອດ ໂຮງຮຽງສອງ ບໍ່ຍອມຍັງຄ້ານ
ແມ່ນຊິ ຕົກຂອບຟ້າ ພື້ນແຜ່ນພົມພະຈັກ ກໍດີ
ຮຽມຈັກ. ໝາຍຮຽງຮັກ ຮວມຊະນອນຈົນໄດ້

# 3. ສິລະປະການແຕ່ງ

## 3.1 ການໃຊ້ຕົວລະຄອນເພີນຈິດ

ນັກແຕ່ງໄດ້ຍົກເອົາຄວາມສຸກຂອງພະຍາອິນ, ເທວະດາຢູ່ເທິງສະຫວັນຊັ້ນຟ້າມາປຽບທຽບກັບຄວາມສຸກຂອງຄົນໃນໄລຍະທີ່ປະເທດຊາດລາວມີເອກະລາດ ແລະໄລຍະປະເທດຊາດຖືກທຳລາຍ ດັ່ງສານຂຽນວ່າ:

| | |
|---|---|
| ບັນລັງຊ້ອນ | ໄສຍາອິນທະລາດ |
| ສະໜຸກຍິ່ງລ້ຳ | ລົມເບື້ອງປິ່ນໄກວ |
| ດາວອະດິງຊັ້ນ | ເທວະດາເມືອງມອດ |
| ຕະຫຼົບຕ່າວຟື້ງ | ພິມານເຕົ້າຕຸ່ມຕອງ.. |

## 3.2 ການອາດພາບພາຍໃນຈິດ

ການອາດພາບພາຍໃນຈິດ ແມ່ນການພັນລະນາເຖິງແນວຄິດຈິດໃຈຂອງນັກແຕ່ງຢ່າງເລິກເຊິ່ງລະອຽດຖີ່ຖ້ວນຕາມຕົວລະຄອນ ແລະ ຖືກຕາມຄວາມຈິງຂອງສະພາບການ, ຍ້ອນນັກແຕ່ງຄິດຫຼາຍ, ໄດ້ລະບາຍຄວາມຄິດຄວາມຫວັງຂອງຕົນອອກໃນສານດັ່ງກອນຕອນໜຶ່ງທີ່ວ່າ: ...

| | | | |
|---|---|---|---|
| ໂອນໍ | ຮຽມນີ້ | ເປັນດັ່ງປາຕາຍຂ້ອນ | ໜອງນານເຂີນຂາດ |
| | | ຝົນບໍ່ສິ່ງໂຜດໃຫ້ | ຕາຍແລ້ງແດດເຜົາ ແລນໍ |
| | ຄິດຕໍ່ | ດອກກັດເຄົ້າ | ບານຢູ່ກາງດົງ |
| | | ຄິດຕໍ່ເຄື່ອພາຍສົງ | ກໍເລົ່າມີລຳກ້ຽວ |

## 3.3 ການໝູນໃຊ້ຄຳຜະຫຍາພາສິດ

ການໃຊ້ຄຳຜະຫຍາພາສິດບໍ່ພຽງແຕ່ເປັນການສ້າງບັນຍາກາດດູດດື່ມແກ່ຜູ້ອ່ານຜູ້ຟັງເທົ່ານັ້ນ, ຢູ່ໃນສານລຶບພະສູນມັນມີຄວາມໝາຍສຳຄັນລະຫວ່າງຫຼັກໝັ້ນຂອງນັກແຕ່ງຕໍ່ວຽກງານກູ້ຊາດດັ່ງສານທີ່ວ່າ:

| | | | |
|---|---|---|---|
| | ອັນວ່າ | ໃຈປະສົງຂ້ອຍ | ຢາກໄຖນາເຊື້ອເກົ່າ |
| | ຄັນເພິ່ນ | ໄລຖິ້ມໄວ້ | ພະອອນອ້າຍຫາກສະຫງວນ |
| ຫລືວ່າ | ຮຽມຫາກ | ເປັນຄົນຄ້ານ | ປະສົງຫາແຕ່ນາເກົ່າ |
| | ນາຊ່າວ | ມີບໍ່ແພ້ | ພະອ້ອນອ້າຍບໍ່ປະສົງ |

**ສະຫລຸບລວມ:**

ວັນນະກຳເລື່ອງສານລຶບພະສູນຕາມໄດ້ກ່າວມາແລ້ວນັ້ນລ້ວນແຕ່ແມ່ນຈຸດດີຂອງສານ ແລະ ນອກຈາກນີ້ຍັງມີຈຸດພິເສດທີ່ໜ້າສົນລະເສີນອີກດ້ວຍ ເພາະນັກແຕ່ງໃຊ້ສິລະປະໃນການແຕ້ມແຕ່ງບົດກະວີຂອງຕົນເປັນປິດສະໜາເຊື່ອອຳ ໂດຍພັນລະນາຂໍ້ຄວາມຄ້າຍກັບວ່າການພົວພັນລະຫວ່າງບ່າວ - ສາວທີ່ຮັກມັກກັນ ຊຶ່ງໄດ້ພັດພາກຫ່າງເຫີນກັນໄປ, ເຖິງວ່ານີ້ເຮັດໃຫ້ຜູ້ອ່ານບາງຄົນເຂົ້າໃຈຜິດພາດຕໍ່ເນື້ອໃນທີ່ນັກແຕ່ງຢາກເວົ້າເຖິງກໍຕາມ, ແຕ່ມັນກໍເປັນຈຸດພິເສດຂອງເລື່ອງເພາະມັນເປັນຄວາມສະຫຼາດຂອງນັກແຕ່ງທີ່ສາມາດພັນລະນາອຳພາງເຊື່ອງຊ້ອນຈຸດປະສົງໄດ້ດີ, ທັງນີ້ບໍ່ແມ່ນເຈດຕະນາຂອງນັກແຕ່ງທີ່ປະສົງໃຫ້ເປັນແນວນັ້ນ ແຕ່ມັນເປັນຍ້ອນສະພາບສັງຄົມ ແລະເງື່ອນໄຂຕົວຈິງຂອງປະຫວັດສາດໜີບຮັດໄວ້.

ບົດອ່ານເພີ່ມ

ສານລຶບພະສູນ

ຄັດຕອນ

ບັ້ນບັງລະທັດ

ດວງນີ້ ຊື່ວ່າບຸແຜ່ນທໍລະນີດັ້ນ ກຸມພະກອນກໍາໂຮບ
ເກາະກ່າຍ ເກີຍໂລບລ້ຽວ ສະເໜນຄ້ານໂຄນຄອນ
ຄະເຄື່ອນ ຄຸງແກ່ນເຫງົ້າ ກາກາບໄກວ່ກະຈັດ
ເສລາ ເນົາພູຜາ ເກື່ອນທະລັງລາຍຢ້ອງ
ອານິນ ເນົາແນບພື້ນ ເຟືອນຟາດຟອງສະໜຸດ
ນາໂຄຄະ ຄາດໂຮງຮາມຢ້ອງ
ຈັກກະວານເຫຼື້ອມ ຄີລີຫງວຍຫງ່ວນ
ນາຄະ ເຟືອນຟັ່ງຟ້າວ ຟູມເຟື້ອຍແຄ່ເຟືອຍ
ຄຸດທະ ອ້າປີກຂຶ້ນ ຂໍາເມກເຮືອງລິດ
ຈັນໂທ ເມົາມົວມຸດ ມືດແສງສູນອໍ້າ
ໃສສ່ອງ ເຮືອງຮາວຖ້ານ ລັງສີສຸລິເຍດ
ຍາມທ່ອງ ທ່ຽວລ່ອງຟ້າ ພິມານເອື້ອມອາດສະເໜີ
ມີຄະ ສິງສະຫວັນຢ້ອງ ບໍລະເມປະນິມແມ່
ເມືອງມາບເຫຼື້ອມ ແສງແກ້ວແກວ່ງທະລັງ
ໄຟກໍ ລຸກລຶບໄໝ້ ເສນາດທະມົວມຸດ
ແປວເປັ່ງ ເຮືອງອາລຸນ ຫອບແສງສູນອໍ້າ

<..................>

ນັບແຕ່ ໃຕ້ໂລກພື້ນ ພິນພາກພາຍພະວັກ ມານີ້
ທຸກສໍ່າ ຮໍາໆຄຶດ ໄຄ່ຄອງຄະນິງຕູ້ມ
ຄຶດເມື່ອບັນລັງຊ້ອນ ໄສຍາອິນທະລາດ ປາງນັ້ນ
ສຸກຍິ່ງລໍ້າ ລີມເປື້ອງປິ່ນໄກວ
ຫຸຍຮຸ່ງຫ້ອມ ຄະນິງປ່ອງແປວລະຫັດ
ຄະນິງນິງສີ ພາກພະໄທມີໄດ້
ຄຶດໄຄ່ ທວຍທະລັງປີ້ນ ຍໍຕ່າວເປື້ອງແກວ່ງເອົານັ້ນ
ພູຟາດມ້າງ ດູຕ້ອງຕອກກະແຈ
ລຶບລ່ຽມດ້າວ ໄຂປ່ອງແປວລະຫັດ
ຫຼືວ່າ ໂທມທວງຂັດ ມືດຂະໜອງເໜືອນໄໝ້
ຫຼືຈັກ ທວຍທິງອູ້ມ ຈັກກະວານຮຽງຮ່ວມ ເອົານັ້ນ
ກໍ່ວທິ ຟ້າແປ່ຂວໍ້າ ຂະໜານເຄົ້າຄວີ່ຄວາມ
ມົວມືດໄໝ້ ມ້າງແຜ່ນພັນທະກຶດ

ກັບເລົ່າ ເລີຍລືມຂະຫຼັງ ຕອບແທນເຖິງເຕົ້າ

<..................>

ລາຫູ ຮຽງຕົ້ນເຂົ້າ ສູນພະຈັນແຖມເລົ່າ

ມືດມືດ ກຸມກົບຟ້າ ບັງກົ້ງກອມສະເໜີ

ອາທິດ ທຽວລ່ອງຟ້າ ເງື້ອມແງ່ພະໂຍມບິນ

ລາຫູບັງ ເຫຼື້ອມລັງສີເສົ້າ

ອັນວ່າ ຈັນທະລັງເຫຼື້ອມ ບໍ່ມີເພັງແຮມຄໍ່າ

ອາທິດ ບໍ່ເບັ່ງບ້າ ເພັງແຈ້ງດັ່ງພະຈັນ

ຍາມເມື່ອ ດີຖີຕັ້ງ ເດີມລະດູບານໃໝ່

ດອກເກດ ບານເຮື່ອເຮົ້າ ໝາມລ້ອມແຄ່ລໍາ

ເຈົ້າຜູ້ ບໍ່ລິສຸດເຊື້ອ ດວງຫອມດອກເດື່ອ ຮຽມເອີຍ

ສະພັ່ງພົ້ວ ພວງພີ່ສາລະພີ

ກັນນິກາການ ເຮື່ອໄພພົງດ້າວ

ພູມມະລິນແສ້ວ ສະແຫວງອອງເອົາກິ່ນ

ຍູທາງ ສຸກຢູ່ຝັ້ນ ແຝງກົ້ວກິ່ນລະອອງ

ຊາດທີ່ ຫົງຫ່ອນຫັນໜີເອັ້ນ ວາງໃສສ່ອງ ໄດ້ເດ

ປະກອບ ຮຽງແກ່ນແກ້ວ ການຮ້ອນຫ່ອນຊີຖອຍ ເມື່ອໃດ

ກົວແຕ່ ເດີນໄກຮ້າງ ຄໍາພະໄມມາຍຫ່າງ ເສຍແລ້ວ

ຄິດໄຄ ຮຽງປະກອບແກ້ວ ການຖ້ອຍຖອດຂະໜອງ ເມືອ
ໃດ

ຄໍານີ້ ໄວ້ແກ່ອິນທະລາດເຈົ້າ ຍໍາຂະໜ່ອມທົງຄິດ

ພໍພະໄທຈັກ ໄຄ່ຄອຍເຫັນໜ້າ

ຂໍແກ່ ເທໂວປ້ອງ ປຸນສານສົມຊ່ອຍ ຮຽມທ້ອນ

ຂໍໃຫ້ ເຖິງທີ່ຊັ້ນ ຊົມເກືອມສະໜີ

ຊາດທີ່ ພາສາເຊື້ອ ອານົມນາມນາກ

ເນົ່າເນັ່ງ ພັນທະເມກກ້ຽວ ສະເມັ່ນຄ້ານໂຄນຄອນ

ປຸນແປງ ຍວງຍັງໜ້າ ພາສາບ້ວງບາດ

ມົນຕະຫຼາດຕ້ອງ ຕຶງໃຕ້ເພື່ອລິດທີ

<..................>

ລາງຄືນ ກ້ຽງແຕ່ລີ້ນ ຖະແຫຼງລ້ຽວໂລບໃນ

| | | |
|---|---|---|
| | ຮູ້ລາຍຖ້ອຍ | ບໍ່ມີຢູ່ອາຈາ |
| ອັນທີ່ | ພາຍໃນຂຶມ | ເຝື່ອນຮຶນລັງລ້າວ |
| ຊາດທີ | ບອນບຸນລ້າວ | ຫຼີງເຫັນບໍ່ມີຖືກ   ຕາມແລ້ວ |
| ເປັນດັ່ງ | ດ້ວງບຸນໄມ້ | ໃນຫັ້ນສ່ອງບໍ່ເຫັນ |
| ນ້ຳສະໝຸດ | ເລິກ ແລະ ຕື້ນ | ກວ້າງໃຫຍ່ເປັນກະແສ |
| ຢ່ອນໂຍນ | ໂຍທະກາ | ກໍຍັງຖອກເຖິງໄດ້ |
| | ຄົນຊົງໄວ້ | ໃຫ້ຍໍແຍງປານແວ່ນ ແທ້ເນີ |
| | ຕິໂຍກເຍົ້າ | ເອົາຖ້ອຍສູຄວາມ |
| ຄັນວ່າ | ຮູ້ເຫດແລ້ວ | ປັ້ນບ່ອນດວງສະໜິດ |
| | ເອົາຄຳເຮືອງ | ຖອດເຖິງຖະແຫຼງຖ້ອຍ |
| ເປັນທີ່ | ອັດສະຈັນແທ້ | ສິງສານຄວນໝ່າຍ |
| ເປັນດັ່ງ | ທຸກຂະຕະບ່າວທ້າວ | ປາງນັ້ນສະແໜງຕາຍ |
| ເມຍເລົ່າ | ນອນຄອກຂ້າງ | ກັບສາວເປັນໂຈນ |
| ສອງເຊືອ | ພອຍທຳເວັນ | ຜູກຕີບາທ້າວ |
| ແໜງວ່າ | ບໍ່ມີວິສຸກຳທ້າວ | ລົງມາຜາຍໂຜດ   ປາງນັ້ນ |
| ກໍສ່ວນ | ມໍລິມິ່ງມ້ຽນ | ຕາຍຖິ້ມຈຸ່ມຈົມ  ບໍ່ຢ່າແລ້ວ |
| ອິນຈິງ | ຜາຍໂຜດໃຫ້ | ພື້ນທີ່ກຳເວນ |
| ພະກໍ | ເດີນໄພສິນ | ໝື່ນດອຍດົງຂັ້ນ |
| ພອຍເລົ່າ | ເຖິງເມືອງໄທ້ | ນະຄອນສີສັດຕະນາກ |
| ພະກໍ | ທານທອດໃຫ້ | ລາງວັນມາກພໍແສນ |
| ລືຊາ | ເຖິງເມືອງພາລານະສີ | ໝູ່ຍິງຍິນຍ້ອງ |
| | ຝ່າຍສະຫາຍເກີຜູ້ | ທັງເມຍທີນະໂທດ |
| ເຂົາກໍ | ເດີນດຸ່ງດັ້ນ | ເຖິງເຈົ້າຄວ່າຂໍ |
| ພະກໍ | ທານທອດໃຫ້ | ພໍດີອີ່ມສອງເຊືອ |
| ແລ້ວຈິ່ງ | ຈຳນຳໜີ | ພາກເມືອງມີໂອ້ |

# ບັ້ນສິມທີ່ຄຶດ

ໂອນໍ ສານນີ້ຊື່ວ່າສິມທີ່ຄຶດຄອນຄ່າລ້ານ ມະນີສີດວງປະເສີດ
ຈັກຂອດໂຮມຕ່ອນຕື້ ຖະໜອມແກ້ວຄ່າເມືອງ
ວ່າຢາກພາຍພົນລ້ອມ ມະຫານິນຮຽງຜ່າງ
ແສງອ່ອນອ້ອນ ພິລາເຂັ້ມເຮື່ອງເຮືອງ
ຮຽມຢາກ ໄປວາງຝູງພີ່ນ້ອງ ວິງວານໃຫ້ມາຊ່ວຍ ຊິຄືລື
ທັງໝູ່ຫົ້ ກະເລີງພ້ອມພໍ່າແກ້ວ
ເຊີນແມ ມາຊ່ວຍຜັດສີແກ້ວ ທຳມະໂລງໃຫ້ແຈ້ງຮຸ່ງ ແດທ້ອນ
ຫຼອນວ່າ ບຸນສິ່ງໃຫ້ ແສງເທົ້າທົ່ວເມືອງ ບໍ່ຮູ້
ຮຽມຢາກ ຂັດໜ່ວຍແກ້ວ ມີຄ່າແສນຄຳ ພຸ້ນນາ
ປຽບປຸນທຳມະໂລງ ໃຫ້ຮຸ່ງເຮືອງເມືອງຟ້າ
ມະນີໂຊແກ້ວ ເຮືອງແສງໃຫ້ຮຸ່ງ
ຫີນແຮ່ ຕົກສະແງ່ເງື້ອມ ເກົາທົ້ນຂູດທອງ

<.................>

ຮຽມບໍ່ ຕິຖະແຫຼງເລື່ອງ ເຫີງເຊີງປັດວາດ ໃຜນັ້ນ
ບໍ່ໄດ້ ຕ້ານກວ່າຖອຍ ຂວັນເຈົ້າສວກສີ
ທາງຫາກ ມີຫຼາຍເສັ້ນ ຕາມໃຈຊິເລືອກໄຕ່ ໄປທ້ອນ
ມັກເສັ້ນເວີ້ງ ທາງລ້ຽວກໍຫາກມີ

<.................>

ຫາກບໍ່ ໂສດາແທ້ ຄືນມາຂໍສິ່ງ ໄປທ້ອນ
ວ່າຊິກິນ ໝາກໄມ້ ຕ່າງເຂົ້າກໍຊ່າງໃຈ ເຈົ້າທ້ອນ
ໃຜບໍ່ ຈຳໃຈເຈົ້າ ກິນສານຂອງເບື່ອ ເມີນາ
ເຈົ້າຫາກ ເປັນຜູ້ຮູ້ ສັ່ງມາໃຫ້ເພື່ອເຕືອນ
ບຸນບໍ່ ເຄີຍພໍ້ເຂົ້າ ສາລີກາຂາວອ່ອນ
ຍອດບຸນເຈົ້າພັດວ່າຫວານກວ່າອ້ອຍ ເມືອໜ້າຫາກຊິເຫັນ ດອກໝາ

## ບັ້ນສຸດທີ່ອ່າວ

| | | |
|---|---|---|
| ໂອນໍ! ຮຽນນີ້ | ເປັນດັ່ງປາຕາຍຂ້ອນ | ໜອງນໍ້າເຂີນຂາດ |
| ຝົນບໍ່ | ລົງໂຜດໃຫ້ | ຊິຕາຍແລ້ງແດດເຜົາ ແລນໍ |
| ຄິດຕໍ່ | ດອກຄັດເຄົ້າ | ບານຢູ່ກາງດົງ |
| ຄິດຕໍ່ | ເຮືອພາຍສົງ | ກໍເລົ່າມີລຳກ້ຽວ |
| ພີ່ນີ້ | ພີ່ນີ້ເປັນດັ່ງໜາມຄອງຂ້ອງ | ຂວາງຄໍຄ້າງຢູ່ ນັ້ນແລ້ວ |
| ອັນໜຶ່ງ | ເປັນດັ່ງຟ້າຜ່າໄມ້ | ລຳສ້ຽວສຽບໃຈ |
| ເຈົ້າຫໍ່ | ມາຄາຄ້າງ | ກະຈອງຈັນຊິກໃຫຍ່ |
| ຜີບໍ່ | ຄາໜີບໄວ້ | ຊິໝາຍຫິວຫອບເອົາພີ່ແລ້ວ |
| ນອນຫຼັບ | ຝັນເຫັນແກ້ວ | ພີລາແດງດວງຍອດ ຮຽມພຸ້ນ |
| | ສະເດັດສູ່ຫ້ອງ | ໂຮງແຈ້ງສ່ອງໃສ |
| ຝັນວ່າ | ຈັນທະຈອນເຂົ້າ | ມາຮຽງຫັດຖະບາດ |
| ແລ້ວເລົ່າ | ນ້າວແຜ່ນຜ້າ | ສະແດງຕຸ້ມຫົ່ມນອນ |
| ແສນສິ່ງ | ໃນທອງເອົ້າ | ຫົນຫວາຍຫາມື້ສວ່າງ ບໍ່ມີແລ້ວ |
| ເດືອນຍີ່ | ມາຮອດແລ້ວ | ແສນຮ້ອນເຫື່ອໄຫຼ |
| ຕັ້ງແຕ່ | ເດືອນສາມຄ້ອຍ | ລະດູເຖິງເດືອນສີ່ ມານັ້ນ |
| ເມຄະ | ລົມໄຫຼຫຼັ່ງຍ້ອຍ | ຮຳໜ້າບໍ່ຂາດສາຍ |
| ວ່າຈັກ | ຝົງໄຟຫຼີ້ | ກໍມາເປັນອັນຍາກ |
| ວ່າຈັກ | ລົງແຊ່ນໍ້າ | ກໍມາຮ້ອນຮຸ່ມທວງ |
| | ມັນຫາກຂີດຂັດເອົ້າ | ໃນຊວງສຸດທີ່ອ່າວ ຜູ້ດຽວແລ້ວ |
| ເຮຣິນ | ເລີຍຄັ່ງແຄ້ນ | ຫານ້ອງກໍຫວັ່ງເວ |
| ຜັດແຕ່ | ເດືອນຫ້າຂຶ້ນ | ຖືຄົງໄຂ້ບໍ່ສວ່າງ |
| ເດືອນຫົກ | ມາຮອດແລ້ວ | ໜາວຊໍ້າຕື່ມຝົນ |
| ເດືອນເຈັດ | ເດືອນແປດຄວນທີ່ເອົ້າ | ເດືອນເກົ້າຄວນທີ່ຮ້ອນ |
| ເດືອນສິບ | ເດືອນສິບເອັດຂຶ້ນ | ພໍກະຊາມພັດໄຂ້ສັ່ນ |
| ເດືອນສິບສອງ | ມາຮອດແລ້ວ | ຄຳໄຂ້ກໍບໍ່ຫາຍ |
| ຍັງແຕ່ | ພໍເຜີຍຜ້າ | ຖືຄົງພໍສະໜ່ອຍ |
| ຄຸ້ມສວ່າງ | ມາລະນ້ອຍ | ຖືຂຶ້ນສັ່ນສາຍ |
| ລາງເຫື່ອ | ບາຍເອົາເຂົ້າ | ມາກິນດອມເພື່ອນ |

| | | |
|---|---|---|
| ຕົກຄະມະ | ເລີຍເລົ່າແຄ້ນ | ກໍບາຍຖີ້ມໃສ່ຝາ |
| | ເລີຍເລົ່າໝາງໝັນເຂົ້າ | ທັງປາລາເລີກ |
| | ເລີຍເລົ່າຕຸມແຕ່ຜ້າ | ຜືນກວ້າງກ່ອມນອນ ພີ່ແລ້ວ |
| | ປວດຫົວຖືຄືງໄຂ້ | ທັງຕົວບໍ່ມີເຫື່ອ |
| | ຢ້ານແຕ່ໝາກໄມ້ຄ້າງ | ກິນເຂົ້າກໍຈີ່ງຂົມ |
| ໃຜຜູ້ | ເປັນໝໍແກ້ | ມີຢາອິດເຢື້ອນປິ່ນ ປົວແມ |
| ຄັນວ່າ ດອກນາ | ຫາຍພະຍາດຮ້ອນ | ຄຸນເຈົ້າບໍ່ໃຫ້ເສຍ |
| ປວດຫົວ | ເຄີຍໄດ້ຄົ້ນ | ບາຍສົ້ມໝາກສົ້ມໂອ |
| ຟັງເຍີ! | ແພງສີນ້ອຍ | ສະເໜຫາສຸດທີອ່າວ ຮຽມເອີຍ |
| ພີ່ຊິ | ເຊື່ອງເງື່ອນໃຫ້ | ເຫັນບົ້ນບ່ອນຊິໂຕນ |
| ຊາດທີ່ | ເຮືອແພນີ້ | ວາງໂຫມບາຍກູດ ຈີ່ງເປັນດາຍ |
| ຂັດຖືກ | ເວວາດທ້າຍ | ຫົວພີ່ຫາກຊິນໍາ |
| ໃຫ້ຄອຍ | ແປງໂຫມປ້ອງ | ຕາມຄໍຕິດຕໍ່ ແຊວທ້ອນ |
| ເຊີນກູດ | ບິດແງກທ້າຍ | ເວເຂົ້າຊິໂຕນ ແດ່ທ້ອນ |
| ແນມທໍ່ | ໂຫມກິນນໍ້າ | ຊິເປັນຮ້ອຍໜ່ວຍກໍ່ຕາມທ້ອນ |
| ມັນຫາກ | ເຄີຍຕາຍມ້ຽນ | ດອມຂັນເດືອນແປດ |
| ພີ່ບໍ່ | ແໜງໜ່າຍເອື້ອ | ຊິວັງໄວທໍ່ໄຍ |
| | ໃນໃຈອ້າຍ | ຊິໝາຍຕາຍດອມເຮ່ວ ນາງແລ້ວ |
| ເພີ່ນຫາກ | ລືວ່າຮ້າຍ | ໃຈອ້າຍຫາກປະສົງ |
| ໄຖນາ | ຍາມເດືອນຫາ | ຝົນຊຸຮວາຍຢູ້ສົ່ງ ບໍ່ມາແລ້ວ |
| ເດືອນຈຽງ | ເດືອນຍີ່ຫວ່ານເຂົ້າກ້າ | ເດືອນຫ້າຈີ່ງຊິດໍາ |
| ປີນີ້ | ຖືງັນເຈົ້າ | ແດງຫຼວງຟ້າຊິສີ່ງ ສີ່ງໃດນໍ |
| | ນາແຊງໄຖບໍ່ໄດ້ | ຕົ້ມກົ້ວໜ້າພະນຽງ |
| ວ່າຢາກ | ຕີຝາຍຂົ້ນ | ທາງເໜືອນໍ້າເຂີນຂາດ ເສຍແລ້ວ |
| ວ່າຢາກ | ອາໃສນໍ້າຫ້ວຍນອຍ | ເໜືອງຊໍ້າຂາດເຂີນ |
| ປານນີ້ | ດາວສະເດັດກົ້ວ | ດວງແຂ້ຊິມືດມຸ່ງ ບໍ່ມີແລ້ວ |
| ຮູ້ວ່າ | ສຸລີໂຍມາແລ່ນກຸ້ມ | ກຸມພະຈັນມົວມືດ |
| ອັງຄານ | ມາບັງບຽດເບື້ອງ | ບັງແກ້ວໜ່ວຍພະຈັນ |
| ໂອນໍ! | ພະຈັນມາແສນເສົ້າ | ເສຍສີໜອງໜິ່ນ |

ມະນີເທດ ເປັນແທ່ນແກ້ວ ຕ່າງຜ້າຫົ່ມໜາວ
ອັນວ່າ ໃຈປະສົງຂ້ອຍ ຢາກໄຖນາເຮື້ອເກົ່າ
ຄັນເພິ່ນ ໄລຖິ້ມແລ້ວ ພະອວນອ້າຍຫາກສະຫງວນ
ຊາດທີ່ ນາເຟືອງນີ້ ຕາມໄຖຄືຊິມ່ອນ ມີດາຍ
ເໜືອງເພິ່ນ ຫາກຂັງເປົ່ງໄວ້ ຂັງນ້ຳຊິຢູ່ດີ
ຮຽມຫາກ ເປັນຄົນຄ້ານ ປະສົງຫາແຕ່ນາເກົ່າ
ນາຊ່າວ ມີບໍ່ແພ້ ພະອວນອ້າຍບໍ່ປະສົງ
ຫົງຄຳຜ້າຍ ເວຫາເຫີນເມກ ງາມເດ
ກາດຳ ວ່າຢາກບິນແທບພື້ນ ກໍອຢານບາດຊິຫູນ
ແຊວເຍີ! ຝຸງຄົນທ້າຍ ຂັນໂຫມທັງຖໍ່
ດຽວນີ້ ຟອງທຸມກົ້ວ ແຊວເຂົ້າບ່ອນຮອມ
ຄັນໄດ້ ຝັງຫຼັກແໜ້ນ ຝົນຊິລົມມາຮ້ອຍຫ່າ ກໍຕາ
ທ້ອນ
ພາຍພີ່ ຊິນອນທອດທະເນີ້ງ ແຫງນໜ້າເບິ່ງລົມດອກນາ
ຟັງເຍີ! ບົວພັນສ້ອຍ ຈຳປາມະນີເທດ ຮຽມເອີຍ
ພີ່ຊິ ຖາມຂ່າວເຈົ້າ ຟັງແລ້ວຄ່ອຍຄະນີງ ພີ່ທ້ອນ
ຮຽມຢາກ ເອົາໄໝກ້ຽວ ຈຳປາແດງຄ້ອງເກດ
ເໝືອນພີ່ ໄດ້ສະສວ່າຍລ້າງ ພິທູນເຂັ້ມໃຫ້ສວ່າງໃຈ
ຄືວ່າ ຢາກໄປເອົານ້ຳ ອາໂນມາມາລ້າງສວ່າຍ ສີນັ້ນ
ມະຫານິນ ມັນຫາກຕິກສີແລ້ວ ພຽນລ້າງຫາກຊິໃສ ດອກນາ
ດຽວນີ້ ເຮົາບໍ່ໄດ້ຫາສຽດຂໍ້ ໄສເຮືອງຕໍ່ໃຜ ດອກນາ
ອັນໜຶ່ງ ຮຽມຢາກຖາມຂ່າວໂພສີສ້ອຍ ກາງສະຖານຕົ້ນຕໍ່າ ຮຽມພຸ້ນ
ມັນຫາກ ມີຫົ່ມກວ້າງ ຄົນເຂົ້າຄັ່ງໂຮມ ຢູ່ລື
ກາດຳ ວ່າຢາກເຊີຍຊິມກົ້ວ ຊາຍເຫີນຫອມກິ່ນ ວ່າລື
ຕີແຕ່ ໂຕຣູບຮ້າຍ ດຳປີ້ແປກກາ
ກາດຳ ວ່າຢາກລິງລ້ອຍນ້ຳ ອະໂນມາໃຫ້ຂ່າວຜ່ອງ ຊິຄືລື
ແລ້ວຈິ່ງ ເຫາະຫອບຜ້າຍ ໃຫໃສແຈ້ງດັ່ງພະຈັນ
ພີ່ນີ້ ເກີດແຕ່ນ້ອຍ ບໍ່ເຄີຍຈອບຄຳລະຫັດ
ເຈົ້າຫາກ ເຄີຍຮຽວາງຫຼວງ ອິດກູກພໍສະດຸ້ງ
ຮຽມຫາກ ງຶມງົວຍ້າຍ ເດີນໄປທັງຕາບອດ ແທ້ແລ້ວ

| | | |
|---|---|---|
| ຂໍໃຫ້ | ພະພີເຈົ້າ | ຈູງເຂົ້າໃສ່ທາງ ແດ່ທ້ອນ |
| ໂອນໍ | ວ່າຢາກໄຂສະເພົາແກ້ວ | ໃຫ້ເຫັນແຮຮໍາຈີບ |
| ຈັນເທດ | ຂັງອີ່ມໄວ້ | ໃນຫັ້ນໝື່ນໄຫ |
| ນໍ້າຫາກ | ໄຫຼພັດຂ້ອຍ | ໄຫຼເອົາກໍາມາຍາກ ໃຈເດ |
| ຕິທໍ່ | ເຮືອເຫຼັ້ມນ້ອຍ | ຟອງຊໍ້າເສືອກໜີ ພີແລ້ວ |
| ຟັງເຢີ! | ໂສມສະໜິດນ້ອງ | ຈໍາປາບານເກົ່າ ຮຽມເອີຍ |
| ພີ່ຢາກ | ຖາມຂ່າວສັດສິງຊ້າງ | ເສືອສາງງູອດ ມີລີ |
| ປານນີ້ | ດວງມະນີສ້ອຍ | ແພງແສນສຸດທີອ່າວ |
| ຍັງຊິ | ຄິດສະເດືອດຕ້ອງ | ປະຫຽນຕັ້ງດັ່ງປະສິງ ບໍ່ເດ |
| ຮູ້ວ່າ | ມີເຄືອຊ້ອນ | ວາງອອນປະເປົາ ແພງເອີຍ |
| ຂໍຂອດ | ພັນທະມິດໄວ້ | ແສນຕື້ຢ່າໃຫ້ຫາຍ ພີ່ທ້ອນ |
| ຢ່າໄດ້ | ໄລຖີ່ມຖີ້ມ | ຄືໄໝເຂັນຂາດ |
| ຢ່າໄດ້ | ເປັນທ່ອນບັ້ນ | ຄືຝ້າຍຂາດໄນ ພີ່ເນີ |
| ໝາຍຈັກ | ທົ່ງຜືນຜ້າ | ແຊງລະຄອນກ້ຽງກໍ່າ |
| ບຸນບໍ່ | ຍູ້ສິ່ງໃຫ້ | ຊິຟູນດ້ອຍກະຕ່ຽວຂ່າວ ພີ່ແລ້ວ |
| ຄັນບໍ່ | ໄດ້ໜ່ວຍແກ້ວ | ລູກປະເສີດມະຫາເພັດ ຮຽມນັ້ນ |
| ພີ່ຊິ | ຄືນາງຫຼັງ | ບວເປັນໂສມເຖົ້າ |
| ຕັ້ງຕໍ່ | ປາລະມີສ້າງ | ເອົາບຸນເປັນທີ່ເພິ່ງ |
| ຂໍໃຫ້ | ພົບໜ່ວຍແກ້ວ | ພິລາເຂັ້ມຊາດຊິມາ ແດ່ທ້ອນ |
| ໂອນໍ! | ມາອີດູປາຊີວນ້ອຍ | ຢາກຊິມໄດຄໍາຄາດ |
| ປາບຶກ | ມາຢູ່ຊ້ອນ | ຕັນຕ່ອນບ່ອນຊິວ |
| ຟັງເຢີ! | ດາວພະກາຍກົ້ວ | ພະຈັນໃສແສງໂຍດ ເທິງພຸ້ນ |
| ຮຽມຢາກ | ຖາມຂ່າວຫີນກ້ອນລ້ານ | ກາງນໍ້າມາກມູນ ແດ່ທ້ອນ |
| ຝູງໝູ | ເຮືອຊາວຄ້າ | ນາວັງຍັງຂຶ້ນລ່ອງ ບໍ່ເດ |
| ອີກພີ່ | ຢາກລອບຂຶ້ນ | ຢາມແກ້ວໜ່ວຍພພະຈັນ |
| ຂວັນພີ່ | ຫາກເຄີຍຕາຍຍ້ອນ | ດອມຜາຊັນບໍ່ມີຈື່ມ ອີຫຍັງແລ້ວ |
| ຄຶດຫາກ | ຕົກຮອມແລ້ວ | ພະອອນອ້າຍກໍ່ຈິ່ງໄປ ດອກນາ |
| ຜີບໍ່ | ຄາຂອງຄາ | ຢາກລອງໂຕນແປວເບິ່ງ ດູນັ້ນ |
| ຜີວ່າ | ເຮືອຫາກຕ້ອງຫີນແມ່ຊ້າງ | ເວທ້າຍຫາກຊິເຫັນ |
| ຫຼືເບິ່ງ | ຫີນກ້ອນລ້ານ | ຊ້າງໃຫຍ່ພໍໂຂງ |

| | | |
|---|---|---|
| ເຊີນເຈົ້າ | ແຍງທຽນຄຳ | ເບິ່ງຍາມເງົາແກ້ວ |
| ພໍເຫັນ | ເຫັນກະບວນເບື້ອງ | ທາງຊີລິງຫາຮ່ອມ ໄປນັ້ນ |
| ພໍໃຫ້ | ເຫັນຮຸ່ງແຈ້ງ | ຄອງລຽບບ່ອນຊີໂຕນພີ່ທ້ອນ |
| ສອງຫາກ | ທຽວທາງເອີ້ງ | ໄກກັນບໍ່ມີຈອບ ເປັນແລ້ວ |
| ເຈົ້າອິດ | ຖາງປ່າໄມ້ | ພໍໃຫ້ສ່ອງເຫັນ ແດ່ທ້ອນ |
| ຮຽມນີ້ | ເປັນດັ່ງເດືອນດຳສູ້ | ປະສິງແຍງຍັງແອ່ນ |
| ເຫຼັກໝາ | ດຳປອດປີ້ | ແຍຍງໄດ້ກໍບໍ່ເຫັນ |
| ໂອນໍ! | ຄວາມທຸກຂ້ອຍ | ພື້ນທີ່ແສນຖະໜັດ |
| ໂຮມຢູ່ | ໃນທວງຖີມ | ຜູ້ດຽວພະອວນອ້າຍ |
| ອັນວ່າ | ຈອມກະສັດພຸ້ນ | ເທທວງທິນສະຫວາດ ບໍ່ນໍ |
| ຢ່າໄດ້ | ປະອີກຂະໜ່ອມໄວ້ | ແດດິ້ນຜູ້ດຽວ ແດ່ເນີ |
| ໂອນໍ | ມາອີຕິນກາດຳເດ | ຢາກທວຍທິງພິທູນເທດ |
| ແກ້ວບໍ່ | ເມີນມຸ່ງໃຫ້ | ແສນຊິດິ້ນກໍຫາກຮຸນ |
| ຄັນວ່າ | ນ້ອງບໍ່ປອງປຸນໃຫ້ | ຫາຍໂພຍພໍເດືອດທວງນັ້ນ |
| ຂວັນພີ່ | ໄປທ່ຽວກື້ວ | ກິນເຂົ້າຜອກຜີ ພີ່ແລ້ວ |
| ຂໍແກ່ | ຈອມກະສັດໄທ້ | ກູນາເບື້ອນໂຜດ ມາທ້ອນ |
| ອີກພີ່ | ປຸ້ນຢູ່ຄ້າງ | ທາງໃຕ້ຫາກຊີຄອຍ |
| ເຈົ້າຜູ້ | ໂສມສະເຫຼົາເນື້ອ | ອິນຂຽນໄຂ່ຮູບ ມານັ້ນ |
| ພີ່ບໍ່ | ໄດ້ບັກແບ່ນໜ້າ | ແໜເຊື້ອງໃສ່ໃຜ |
| ເຈົ້າຜູ້ | ປັນຍາສ້ຽມ | ອິດທົງຍານເບື້ອນໂຜດ |
| ພໍໃຫ້ | ໄດ້ບ່ອນໝັ້ນ | ນຳເຈົ້າແຕ່ຂວັນ |
| ອັນວ່າ | ຊາຕາແຄ້ວ | ແນນໄກແສນໂຍດ ກໍດີທ້ອນ |
| ຂໍໃຫ້ | ຫຍັບຄຽນເຂົ້າ | ມາໃກ້ຢາໃຫ້ໄກ |
| ເຈົ້າຜູ້ | ປັນຍາສ້ຽມ | ອິດຫຼົງຍານເບືອງສອງ ດູທ້ອນ |
| ຈັກວ່າ | ເລີກແລະຕື້ນ | ເປັນບັ້ນຮ່ຳຄະນິງ |
| ອັນໃຫ້ | ໜຳໃຈຂ້ອຍ | ຢາກຂໍທົງທຽມແທບ |
| | ເປັນແຜ່ນຜ້າ | ຮຽງຕູ້ມບໍ່ຫ່າງຄີງ ພີ່ແລ້ວ |
| | ໂອນໍ! | ດວງນີ້ຊື່ວ່າ |
| | +ສຸດທີ່ອ່າວແດດັ່ນດິ້ນ | ຍິນກະສັນສຸດທະຍິ່ງ |
| ວ່າຢາກ | ປອງປຸນອູ້ມ | ມະນີໂຊກໍມາຍາກ |

| | | |
|---|---|---|
| ຫີນແຮ່ | ງາມບໍ່ແພ້ | ບໍ່ປານແກ້ວໜ່ວຍໃສ |
| ຄັນບໍ່ | ໄດ້ໜ່ວຍແກ້ວ | ລູກປະເສີດມະຫາເພັດ ເພິ່ນພຸ້ນ |
| ມາຂອດ | ໂຮງຮຽງສອງ | ບໍ່ຍອມຍັງຄ້ານ |
| ແມ່ນຊິ | ຕຶກຂອບຟ້າ | ພື້ນແຜ່ນພົມມະຈັກ ກໍດີ |
| ຮຽມຈັກ | ໝາຍຮຽງຮັກ | ຮວມຊະນອນຈິນໄດ້ |
| ຍັງຊິ | ນິຍົມໃຫ້ | ຮຽງສອງສົມປະກອບ ບໍ່ເດ |
| ຫຼືຈັກ | ປະປ່ອຍໄວ້ | ໂຮງເສົ້າໝົ່ນໝອງ |
| ແມ່ນຈັກ | ວອນວານໃຫ້ | ອິງລັງກາກົງລາດ ກໍດາຍແລ້ວ |
| ບັງເກີດ | ເປັນໝອກກົ້ວ | ຄວັນກຸ້ມບໍ່ສ່ອງໃສ |
| ທຸກທີ່ | ຍົມມະນາຍ້ອຍ | ໃນຫວງຫິນສະຫວາດ |
| ກໍບໍ່ | ບົກເຫືອດໄດ້ | ຫວງເອົ້າອັງກະສັນ |
| ສຸດທີ່ | ນອນບູມໄຫ້ | ຄະນິງໄຫຼເຫຼືອອ່າວ ຣຸນແລ້ວ |
| ກໍບໍ່ | ເຫັນໜ່ວຍແກ້ວ | ໄກລ້ຳຍິງປະມານ |
| ໂອນໍ! | ລາສີມາສົມກົ້ວ | ກຸມພະຈັນມົວມິດ ເສຍແລ້ວ |
| ອັງຄານ | ເລີຍເລົ່າຊ້ຳ | ເປັນຝ່າບຽດບັງ |
| ດຽວນີ້ | ຈັນທະລາເສົ້າ | ເສຍແສງສູນອໍ່າ ໄປແລ້ວ |
| ນັກຂັດ | ຕະລຶກຟ້າ | ມົວເສົ້າບໍ່ສອງແສງ |
| ຮຽມຫາກ | ແປງເຊີງໄວ້ | ບໍ່ໂສດາຄໍາຊີກເກົ່າ |
| ຊາດທີ່ | ແນວນາມເຊື້ອ | ລາຊະສີສັດໃຫຍ່ |
| ບໍ່ຫ່ອນ | ບິນສອດແສ້ວ | ໄປໄດ້ດັງແຫຼວ |
| ຟັງເຢີ | ຈັນທະລັງເຫຼື້ອມ | ແພງສີສຸດທີ່ອາວ ຮຽມນັ້ນ |
| ຢ່າໄດ້ | ລະແຮ້ງເຖົ້າ | ກາຮ້າຍຮອນເຮ |
| ກາດໍາ | ວ່າຢາກໝາຍເອົາແກ້ວ | ທໍາມະໂຮງມາຮອດ ພິລານັ້ນ |
| ດຽວນີ້ | ຄໍາຄ່າເຂົ້າຍັງໄປແລ້ວ | ປີເປົ້າຈັ່ງຊິເອົາ |
| ເຈົ້າຜູ້ | ປັນຍາສ້ຽມ | ຜະຫຍາຄົມຄອຍຮໍ່າ ດູທ້ອນ |
| ຖວາຍແກ່ | ອີກຂະໜ່ອມພຸ້ນ | ພໍໃຫ້ຮໍ່າຄະນິງ ແດ່ເນີ |
| ດວງນີ້ | ຊື່ວາບັງລະຫັດໄວ້ | ພາຍໃນໃຫ້ຄຶດຮໍ່າດູຖ້ອນ |
| ມັບແມບ | ພໍໃຫ້ຮູ້ | ປະຫຽນໄວ້ສະເດືອກເຫັນ |
| ເມືອຈັກ | ແປປັ່ນແທ້ | ກົວລົມຊີຟອງຟາດ |
| ຢ້ານແຕ່ | ຫີນກ້ອນລ້ານ | ແຊວເຂົ້າຢູ່ຕັນ ນັ້ນເດ |

| | | |
|---|---|---|
| | ບຸນບາບໃຫ້ | ຮຽງສອງເປັນຄູ່ |
| ຄັນວ່າ | ບຸນບໍ່ນ້າວແນບໃຫ້ | ຄືຊິມ້ຽນມອດຊີວັງ |
| ວ່າຈັກ | ຍົກນິ້ວຍື | ຢຽວແກ້ວກໍບໍ່ເຖິງ |
| ບຸນເອີຍ | ອິດພໍຊູຊັກໃຫ້ | ພຽງສອງສີມປະກອບ ກັນແມ |
| ຢ່າໄດ້ | ລະອິກຂະໜ່ອມໄວ້ | ສອງຂ້າງຫາງສະເທີນ ແດ່ທ້ອນ |
| | ໂສມສະເຫຼົາໜ້າ | ອິນຂຽນແປງຮູບ ຮຽມເອີຍ |
| ຄໍາພີ່ | ຕ້ານຕໍ່ນ້ອງ | ຍາໃຫ້ຫາງສະເທີນ |
| ສັງມາ | ທຸກຂະໜອດຂ້ອນ | ຂະຫຼັງທວງສຸດທີ່ອາວ |
| ຍັງຊິ | ໄດ້ກ່ອມກ້ຽວ | ເຜືອຝັ້ນດັ່ງປະສົງ ບໍ່ນໍ |
| ດຽວນີ້ | ແພງສີສ້ອຍ | ສະເໜຫາເຈົ້າພໍ່ |
| ສັງມາ | ຂັງຢຶດໄວ້ | ຍາວໄດ້ໝື່ນອະສົງ ນີ້ເດ |
| ເຖິງຫາກ | ເນົາຢູ່ຫ້ອງ | ທຽມແທບແພງຂວັນ ກໍ່ດີ |
| ເໝືອນດັ່ງ | ນອນແປວອັກຄີ | ບໍ່ຕາຍທະລອນເຍື້ອນ |
| ບໍ່ແມ່ນ | ບຸນເຮົາແລ້ວ | ເວນມາຈໍາພາກ |
| ຮູ້ວ່າ | ເວນນາດຖະເນື້ອ | ນໍາໃຫ້ຫ່າງສອງ |
| ສຸດທີ່ອ່າວ | ເປັນຄົນໃບ້ | ປວງທະວາຫຼົງວາດອອນເອີຍ |
| ຝົນຫາກ | ຕົກຮົ່ວຍ້ອຍ | ຮໍາໜ້າກໍຈິ່ງໝາວ |
| ວ່າຈັກ | ໝາຍຮຽງແກ້ວ | ມະນີໂຊທໍາມະລາດ ຮຽມພຸ້ນ |
| ບຸນບໍ່ | ຍູ້ສິ່ງໃຫ້ | ແສນຊິດິ້ນກໍຫາກຮຸນ ດອກນາ |

# ບົດທີ 3

# ກາບເມືອງພວນ

## 1. ຄວາມເປັນມາຂອງກາບເມືອງພວນ

ກາບເມືອງພວນນີ້ ອາດອາດຈະແຕ່ງຂຶ້ນໃນໄລຍະປະເທດລາວເສຍຄວາມເປັນເອກະລາດແກ່ຊາດອື່ນ. ໄລຍະຂອງການແຕ່ງແມ່ນພາຍຫຼັງການຕໍ່ສູ້ຂອງເຈົ້າ ອານຸວົງໄດ້ສິ້ນສຸດລົງເພາະວ່າໃນເວລານັ້ນການເປັນຢູ່ຂອງປະຊາຊົນແມ່ນຕົກທຸກໄດ້ຍາກ, ດິນແດນເມືອງພວນກໍແມ່ນພາກສ່ວນໜຶ່ງທີ່ຖືກພວກສະຫຍາມເກັບກວດໄປ. ອາດເວົ້າໄດ້ວ່າ ທຸກຂົງເຂດໝູ່ບ້ານແມ່ນຖືກເກັບກວດໄປໝົດນັບຕົວເມືອງຮອດຊົນນະບົດ.



ຮູບທີ 1: ເມືອງພວນ

ເວົ້າເຖິງນາມຜູ້ແຕ່ງ " ກາບເມືອງພວນ " ນີ້ພວກເຮົາບໍ່ອາດຮູ້ໄດ້, ນັກແຕ່ງກໍບໍ່ບອກເວລາແຕ່ງ ແລະ ນາມຂອງຕົນໃຫ້ຮູ້ນຳ.

ເວົ້າເຖິງລັກສະນະຂອງກາບຖ້າພວກເຮົາອ່ານບົດກາບຈະເຫັນວ່າມີລັກສະນະປະຊາຊົນສູງ ເປັນຫຍັງຈຶ່ງເປັນແນວນັ້ນ ເພາະມັນໄດ້ສະແດງເຖິງຄວາມຮຽກຮ້ອງຕ້ອງການ, ຄວາມມຸ່ງຫວັງຂອງປະຊາຊົນ, ສະແດງເຖິງຈິດໃຈຂອງປະຊາຊົນ, ອ່ານແລ້ວເຂົ້າໃຈງ່າຍເອີ້ນວ່າມີລັກສະນະສາມັນຊົນ. ນອກນັ້ນກາບເມືອງພວນຍັງມີລັກສະນະປະຫວັດສາດ ແລະ ລັກສະນະວັນນະຄະດີອີກ.

– ກາບເມືອງພວນມີລັກສະນະປະຫວັດສາດ

ກາບເມືອງພວນມີລັກສະນະປະຫວັດສາດ ກໍເນື່ອງຈາກວ່າກາບນີ້ໄດ້ເວົ້າເຖິງການເປັນໄປຂອງເມືອງພວນໃນຄາວກ່ອນ. ເມືອງພວນເປັນເມືອງໜຶ່ງທີ່ມີຄວາມເປັນເອກະລາດທາງດ້ານເສດຖະກິດ,ວັດທະນະທຳກໍ່ຂະຫຍາຍຕົວເຊັ່ນ:ການກໍ່ສ້າງພະທາດເຈດີກໍ່ສອຍສົດງົດງາມ, ບັນຫານີ້ມັນໄດ້ສ່ອງແສງເຂົ້າໃນເນື້ອໃນຂອງກາບຢ່າງຈະແຈ້ງ.

– ກາບເມືອງພວນມີລັກສະນະວັນນະຄະດີ

ເມື່ອເວົ້າເຖິງກາບແມ່ນເວົ້າເຖິງສິລະປະໃນການແຕ່ງ, ເວົ້າເຖິງປະເພດແຕ່ງກາບແມ່ນມີລັກສະນະສິລະປະສູງກວ່າວັນນະຄະດີຄຳຮ້ອຍແກ້ວ, ກາບແມ່ນປະເພດຄຳຮ້ອຍກອງ ສະນັ້ນ, ມັນມີລັກສະນະດູດດື່ມ ແລະມ່ວນອອນຊອນກວ່າວັນນະຄະດີຄຳຮ້ອຍແກ້ວແຕ່ກາບມັນບໍ່ຫຼາຍຄືຄຳເວົ້າທຳມະດາ.

## 2. ເນື້ອໃນຂອງກາບ

ກາບເມືອງພວນສ່ອງແສງໄດ້ຫຼາຍເນື້ອໃນ ແຕ່ພວກເຮົາສະເໜີພຽງແຕ່ 3 ເນື້ອໃນຄື:

1.) ສ່ອງແສງໂທດກຳຂອງພວກສັກດີນາສະຫຍາມ ແລະສັກດີນາລາວທີ່ມີຕໍ່ປະຊາຊົນເມືອງພວນ.

2.) ສ່ອງແສງເຖິງຄວາມທຸກຂອງປະຊາຊົນເມືອງພວນ.

3.) ສ່ອງແສງເຖິງການຕໍ່ສູ້ຂອງປະຊາຊົນເມືອງພວນ.

### 2.1 ໂທດກຳຂອງພວກສັກດີນາສະຫຍາມ ແລະສັກດີນາລາວ

ຫຼັງຈາກອານາຈັກລາວລ້ານຊ້າງຖືກຕັດແບ່ງແລ້ວ ພວກສັກດີນາສະຫຍາມກໍ່ຖືເອົາເມືອງພວນເປັນແຂວງໜຶ່ງຂອງພວກມັນ, ເວລານັ້ນແຜນດິນເມືອງພວນທີ່ເຄີຍກວ້າງໃຫຍ່ໄດ້ກາຍເປັນຫົວເມືອງຂຶ້ນຂອງສະຫຍາມ. ໃນເວລາຊາດລາວເຮົາເປັນຫົວເມືອງຂຶ້ນໃຫ້ແກ່ສະຫຍາມນັ້ນພວກສັກດີນາພາຍໃນກໍມີການຂັດແຍ່ງກັນນັບມື້ນັບສູງຂຶ້ນ. ສະແດງອອກມີພວກທີ່ຍອມຮັບເອົາການຊ່ວຍເຫຼືອຈາກປະເທດອື່ນ ຫຼືຍອມກົ້ມຫົວອູ່ເຂົ້າມອບປະເທດຕົນຂຶ້ນກັບຊາດອື່ນເຮັດໃຫ້ປະເທດຊາດໃນໄລຍະທີ່ຮຸ່ງເຮືອງກວ່າໝູ່ນັ້ນໄດ້ຕົກມາຢູ່ໃນໄລຍະສູນເສົ້າກວ່າໝູ່ສະແດງອອກຄື:

| | |
|---|---|
| ຍາມນັ້ນ ເມືອງພວນກວ້າງ | ສີແສງເຮືອງຮຸ່ງ |
| ວັດວາອາຮາມ ເຈດີພຽນກໍ່ສ້າງ | ເຮືອງເດດລັງສີ |
| ເລີຍເລົ່າ ມີສັດຕູທວນເຖິງ | ເປ່ເພຄອງແກ້ວ |
| ຊຸດກົ່ນມ້າງ | ພະທາດແກ່ນໃຈເມືອງ |
| ທັງອາຮາມຫຼວງຄອງເມືອງ | ຍຸບທະລາຍສູນເສົ້າ |

ບັນຫານີ້, ມັນໄດ້ສ່ອງແສງເຖິງການເປເພ ທຳລາຍປຸ່ນປູ່ຮຸກຮານຂອງພວກສັດຕູ. ມັນແມ່ນໂທດກຳຂອງພວກສັກດີນາສະຫຍາມກໍ່ຂຶ້ນຕໍ່ກັບປະຊາຊົນເມືອງພວນເຂົາເຈົ້າເຮັດໄດ້ແນວນີ້ກໍຍ້ອນສັກດີນາລາວມີການຮ່ວມມືອອກແຮງບັງຄັບປະຊາຊົນຕາມໝູ່ບ້ານຕ່າງໆເຮັດໃຫ້ໄດ້ຕາມຄວາມມຸ່ງຫວັງຂອງພວກສັກດີນາສະຫຍາມ. ຍ້ອນພວກສັກດີນາລາວບໍ່ໄດ້ເອົາຫົວຊາຕໍ່ຊີວິດຂອງປະຊາຊົນ. ຖ້າວ່າສັກດີນາລາວຫາກມີການຕ້ານຄືນພວກສັກດີນາ

ສະຫຍາມເຂົາກໍ່ບໍ່ສາມາດເຮັດໄດ້ຕາມໃຈຂອງພວກເຂົາ. ປະຊາຊົນໄດ້ຮັບຄວາມທຸກຍາກລໍາບາກຢ່າງແສນສາຫັດ ເພາະວ່າໄດ້ເປັນຂ້ອຍຂ້າໃຫ້ແກ່ຊາດອື່ນ. ໃນເມື່ອຖືກເກັບກວດໄປໄທປະຊາຊົນນັບມື້ນັບຕົກທຸກໄດ້ຍາກການເດີນທາງກໍ່ລໍາບາກສັບສົນບໍ່ຈັກວ່າຫາບບໍ່ຈັກວ່າຄອນ. ທັງເຈຍລູກເຈຍຫຼານ ສະແດງອອກຢູ່ໃນກາບຄື:

...ລັດກວາດຄົວລົງ ຍະຍົງຍະຍ້າຍ

ຖືກຫາບເຫຼືອແຮງ ລູກແພງຍັງນ້ອຍ

ຄາດຄ້ອຍຄາໄປ ຕາມແຕ່ວິໄສ

ທາງໄກມາກມາຍ ງົວຄວາຍທັງຄົນ......

ຕໍ່ກັບເຈົ້າຫົວຈົວເນນເຊິ່ງເປັນຜູ້ທີ່ປະຊາຊົນນັບຖືເພິ່ງພາທາງດ້ານຈິດໃຈກໍ່ຄືວັດຖຸພວກເຂົາກໍບໍ່ໄວ້ໜ້າຖືກບັງຄັບເກັບກວດເອົາໄປຄືກັບປະຊາຊົນສະແດງໃນກາບວ່າ:

ເຈົ້າຫົວຈົວເນນ ເຂົ້າເພນບໍ່ທັນ

ຈັ່ງຫັນບໍ່ຮອດ ຫົວຫອດທັງແຄນ

ເມື່ອເປັນຄືແນວນັ້ນແລ້ວບາງຄົນກໍລອດບາງຄົນກໍບໍ່ລອດແມ່ນສຸດແລ້ວແຕ່ພົກໄຫວໃຜລາວ. ສ່ວນຜູ້ທີ່ສະຫຍາມຈັບໄດ້ນັ້ນກໍຖືກໄປເປັນຂ້ອຍຂ້າ.

ໃນເວລາທີ່ພວກສະຫຍາມເຂົາຕົວະຍົວະເອົາຄົນລາວໄປນັ້ນເບື້ອງຕົ້ນພວກເຂົາເວົ້າວ່າຈະເອົາໄປເຮັດໄຮ່ເຮັດສວນ. ເມື່ອເອົາເຄື່ອງຄົນລາວໄປຮອດແຄມຝັ່ງຂອງແລ້ວກໍເອົາປະຊາຊົນຂ້າມຝັ່ງໄປຢູ່ຕົວເມືອງໜອງຄາຍ, ເມື່ອໄປຮອດໜອງຄາຍພວກເຂົາກໍຈັດໃຫ້ປະຊາຊົນເຮົາໄດ້ເຮັດນາ, ເຮັດສວນ ແຕ່ວ່າເຮັດບ່ອນນີ້ບໍ່ທັນໄດ້ເກັບກ່ຽວກໍໄລ່ປະຊາຊົນໄປເຮັດຢູ່ບ່ອນໃໝ່. ດັ່ງນັ້ນຈຶ່ງເຮັດໃຫ້ປະຊາຊົນບໍ່ມີບ່ອນເພິ່ງພາອາໃສ ຈຶ່ງພົບກັບຄວາມອຶດຢາກບໍ່ມີບ່ອນຊອກຢູ່ຫາກິນຕໍ່ມາປະຊາຊົນກໍມີການລົ້ມຫາຍຕາຍຈາກຢ່າງມາກມາຍກ່າຍກອງດັ່ງກອນທີ່ວ່າ:

ເຮັດໄຮ່ນາສວນ ບໍ່ລະບວນຈໍາຍ້າຍ

ຄັບຄ້າຍຄາໄປ ນາຍໄທຊາບອກ

ໜີອອກພັນລໍາ ດໍານາເດືອນຫົກ

ຝົນຕົກທີ່ຫົ່ມ ລະງົມເດືອດຮ້ອນ

ຂອດຂ້ອນຄົນຕາຍ ໜອງຄາຍລົ້ນເລີດ

ບັງເກີດອຶນລະຫົນ ເສຍຄົນມໍລະນາດ

ການຈາກບ້ານເກີດເມືອງນອນຂອງເຂົາເທື່ອນີ້ມັນບໍ່ແມ່ນດ້ວຍຄວາມສະໝັກໃຈຫຼື ຄວາມມຸ່ງຫວັງຂອງເຂົາເຈົ້າ, ປະການນີ້ແມ່ນຄວາມຈໍາເປັນທີ່ເຂົາຕ້ອງອໍາລາຄາຈາກ. ເຂົາເຈົ້າອອກຈາກບ້ານຈາກເຮືອນດ້ວຍການຟາຍນໍ້າຕາຢ່າງເຫືອດແຫ້ງ, ດ້ວຍຄວາມທຸກລະທົມຂົມຂື່ນ ແລະດ້ວຍຄວາມສິມເພດເວດທະນາຈິດ. ດັ່ງນັ້ນ ເມື່ອພົບກັບຄວາມອຶນລະຫົນທີ່ບໍ່ອາດຈະກະໄວ້ລ່ວງໜ້າກ່ອນນັ້ນເຂົາເຈົ້າຈໍາຕ້ອງສະດຸ້ງ, ສະເທືອນ, ລັງເລໝົດຫວັງ ດັ່ງກາບວ່າ:

... ກິນແໜງພາຍຕົວ ງົວແລະຄວາຍ

ຈົບຫາຍເສຍເປົ່າ ບ້ານເກົ່າເຮື້ອ

ເປັນປ່າຜັກຫົມ ຮົ່ມມະໂນ

ໃນໃຈໂສກເສົ້າ ຜູ້ຢູ່ບ້ານ

ຂາຍເຂົ້າເອົາເງິນ ເຂົ້າເຕັມເລົ້າ

ເພິ່ນຫາກເອົາເສຍ ເຂົ້າເຕັມເຍຍ

ເພິ່ນກໍ່ເອົາແລ້ວ ທັງເຄື່ອງຢາວ

ປັດແຜ້ວບໍ່ຄາ ສາລີກາຈາພົວຄືຄ້ອຍ...

ຕໍ່ກັບສະພາບການຂ້າງເທິງນັ້ນຜູ້ຮັ່ງແຮງນັບມື້ຮັ່ງມີຜູ້ທຸກແຮງນັບມື້ທຸກ, ຜູ້ຮັ່ງມີໄດ້ກໍເນື່ອງຈາກວ່າເອົາຂອງເພິ່ນມາເປັນຂອງຕົນເອງ ຈໍາພວກນີ້ລ້ວນແຕ່ແມ່ນໄມ້ມືຂອງພວກສະຫຍາມໃນສະໄໝນີ້ພວກສັກດີນາບາງຈໍານວນທີ່ທຸກໄຮ້ກໍກາຍເປັນຜູ້ທີ່ຮັ່ງມີ, ຍ້ອນການກອບໂກຍເອົາຂອງຜູ້ອື່ນມາເປັນຂອງຕົນ. ຈໍາພວກນີ້ແມ່ນຈໍາພວກທີ່ລູບແຄ່ງເລຍຂາຂອງສັດຕູເພື່ອຫາຄວາມສະໜຸກສ່ວນຕົວ. ນອກຈາກການເກັບກວດເອົາເຄື່ອງຂອງປະຊາຊົນແລ້ວພວກມັນຍັງຂຸດກົ່ນເອົາເຄື່ອງຂອງທີ່ຫວງຫ້າມຢູ່ຕາມຣົມຕາມເຈດີນັ້ນໄປຮ້າຍແຮງກວ່ານັ້ນພວກມັນຍັງເອົາຮູບພະເຈົ້າມາຫຼໍ່ເປັນເງິນ. ສິ່ງນີ້ລ້ວນແຕ່ຜິດຕໍ່ຮີດຄອງຂອງສາສະໜາ ດັ່ງກາບໄດ້ຂຽນວ່າ:

| | |
|---|---|
| ..... ລັກຂອງທານ | ມາລ້ຽງລູກເຕົ້າ |
| ເອົາພະເຈົ້າ | ມາຫໍ່ເປັນເງິນ |
| ລັກຂອງຄົນ | ໄປຂາຍໃນລາດ |
| ຂຸດພະທາດ | ທັງກົ່ນຫຼັກສິນ...” |

ພວກສັກດີນາລາວໄດ້ສ້າງເງື່ອນໄຂໃຫ້ພວກສັກດີນາໄທໄປເກັບກວດເອົາປະຊາຊົນໄປເປັນຂ້ອຍຂ້າມ້າໃຊ້ໃຫ້ແກ່ພວກເຂົາເຈົ້າ. ຈາກນັ້ນ ພວກເຂົາຍັງເປັນຜູ້ປຸ້ນສະດົມເອົາສັບສິນຂອງປະຊາຊົນເພື່ອໄປສ້າງຮັ່ງຄູນມີໃຫ້ແກ່ພວກເຂົາ, ພວກເຂົາເປັນຜູ້ຂູດເນື້ອເຖືອໜັງຂອງປະຊາຊົນເມືອງພວນ ເພື່ອກິນອີ່ມນຸ່ງອຸ່ນ ແຕ່ກົງກັນຂ້າມຄວາມອີບອຸ່ນຂອງພວກສັກດີນານັ້ນປະຊາຊົນເມືອງພວນພັດມີແຕ່ຄວາມທຸກຍາກປາກໝອງ.

## 2.2 ຄວາມທຸກຂອງປະຊາຊົນເມືອງພວນ

ປະຊາຊົນເມືອງພວນເມື່ອປະສົບກັບສະພາບບ້ານແຕກສາແລກຂາດຄືແນວນີ້ ພວກເຂົາໄດ້ຮັບຄວາມທຸກທໍລະມານທັງກາຍ ແລະ ຈິດໃຈ.

- ຄວາມທຸກທາງດ້ານຈິດໃຈ: ແມ່ນພວກເຂົາໄດ້ພັດພາກຈາກບ້ານເກີດເມືອງນອນທີ່ແສນຮັກ ແລະ ຫວງແຫນຂອງຕົນເພາະຕົນໄດ້ເຄີຍດໍາລົງຊີວິດມາແຕ່ນ້ອຍ. ແຕ່ຕົກມາຮອດບັດນີ້ເຂົາເຈົ້າຈໍາຕ້ອງໄດ້ຫ່າງເຫີນຈາກໄປໂດຍຖືກບັງຄັບຈາກຊາດອື່ນ. ເຂົາເຈົ້າຄິດຮອດຄິດເຖິງຖິ່ນຖານພູມລໍາເນົາ, ໄຮ່ນາ, ຮົ້ວສວນ, ຫ້ວຍນໍ້າວັງປາ, ເພື່ອນມິດສະໜິດແໜ້ນໃນການດໍາລົງຊີວິດ, ເວລານີ້ຖິ່ນຖານພູມລໍາເນົາໄດ້ຖືກປ່ອຍປະລະເລີງ, ໄດ້ກາຍເປັນປ່າຮ້າງ. ອີກຢ່າງໜຶ່ງພວກເຂົາຕໍ່າຄອຍນ້ອຍໃຈເພາະສູນເສຍເຄື່ອງຂອງຊັບສິນຕ່າງໆທີ່ຕົນໄດ້ສະສົມຂຶ້ນໄວ້ດ້ວຍນໍ້າເຫື່ອນໍ້າໄຄມາເປັນເວລາຫຼາຍຟ້າຫຼາຍປີ ປັດຈຸບັນເຄື່ອງຂອງເຫຼົ່ານັ້ນໄດ້ກາຍເປັນຂອງຄົນອື່ນ ໂດຍທີ່ຕົນເອງບໍ່ໄດ້ຈໍາໜ່າຍຂາຍອອກ. ເມື່ອຄິດເຖິງມັນແລ້ວຍິ່ງເພີ້ມຄວາມອຸກອັ່ງຢ່າງໜ້າສົມເພດເວດທະນາຄືດັ່ງກາບໄດ້ຂຽນວ່າ:

| | |
|---|---|
| ... ມາຍິນທຸກໜໍ | ໄດ້ຂໍເຊົາເຮືອນ |
| ມາຫຼົ້ນເຮືອນ | ໄດ້ຂໍເຊົາບ້ານ |
| ມາຂີ້ຄ້ານ | ໄດ້ຂໍເຂົ້າເງຍຕົນ. |

- ຄວາມທຸກທາງດ້ານຮ່າງກາຍ: ທຸກທາງດ້ານຮ່າງກາຍນັ້ນ ເຂົາເຈົ້າໄດ້ຕົກເປັນຂ້ອຍຂ້າຮັບໃຊ້ໃຫ້ແກ່ພວກສັກດີນາສະຫຍາມ. ເຂົາເຈົ້າໄດ້ຖືກກົດຂີ່ຂູດຮີດຢ່າງໜັກໜ່ວງພວກສັກດີນາສະຫຍາມໄດ້ໃຊ້ອໍານາດບີບບັງຄັບເຂົາເຈົ້າຢ່າງໄຮ້ປານີ ເຂົາເຈົ້າຕົກທຸກໄດ້ຍາກລໍາບາກຂາດເຂີນ, ເສື້ອຂາດໜ້າຜ້າຂາດຫຼັງ, ເຂົ້າຂາດແລງແກງຂາດໝໍ້ດັ່ງກາບໄດ້ຂຽນວ່າ:

| | |
|---|---|
| ສວນດັ່ງໄທຄົວ | ເມົາມືອຍືດປາກ |
| ເປັນພາກເປັນໄພ | ຕາມແຕ່ວິໄສ |
| ຊອກເຂົ້າຫາປາ | ຜະລາຜະລັງ |
| ທຸກຂັງເຂາະຂອດ | ຄິດຮອດຄໍາຕາຍ... |

ຍ້ອນພວກສັກດີນາລາວຮ່ວມມືກັບພວກສັກດີນາສະຫຍາມ, ເຂົາເຈົ້າບໍ່ເຫັນຄວາມທຸກຂອງປະຊາຊົນ. ຈາກນັ້ນການຊື້ການຂາຍນັບຮຸນແຮງຈຸດໜັກແມ່ນການຊື້ເຂົ້າຊື້ນກິນແພງທີ່ສຸດ ການເຮັດວຽກນັບມື້ນັບໜັກໜ່ວງ. ສະພາບຄືແນວນັ້ນຍິ່ງເຮັດໃຫ້ປະຊາຊົນມີຄວາມຄຽດແຄ້ນຂຶ້ນຕື່ມຍ້ອນຄວາມທຸກຍາກປາກໝອງຂອງປະຊາຊົນເມືອງພວນເຂົາເຈົ້າອົດບໍ່ໄດ້ຈິ່ງພ້ອມໃຈກັນລຸກຂຶ້ນຕໍ່ສູ້.

## 2.3 ການຕໍ່ສູ້ຂອງປະຊາຊົນເມືອງພວນ

ເມື່ອປະຊາຊົນຖືກກົດຂີ່ຂູດຮີດຢ່າງໜັກຄືແນວນັ້ນເຂົາເຈົ້າກໍ່ໄດ້ເພີ່ມຄວາມຄຽດແຄ້ນຂຶ້ນຢ່າງບໍ່ອາດອົດກັ້ນໄວ້ໄດ້,ເຂົາເຈົ້າຈຶ່ງໄດ້ຊວນກັນລຸກຂຶ້ນຕໍ່ສູ້ກັບພວກສັກດີນາສະຫຍາມດ້ວຍວິທີການໂຕນໜີ, ຕັດສິນໃຈເດັດດ່ຽວບໍ່ຍອມຈຳນົນເຂົາເຈົ້າຄິດວ່າຍອມຕາຍເປັນຜີດີກວ່າຍອມຈຳນົນເປັນຂ້ອຍ.ດັ່ງນັ້ນ ພວກເຂົາຈຶ່ງໄດ້ພາກັນລັກໜີລັດປ່າລັດດົງເພື່ອກັບຄືນບ້ານເກີດເມືອງນອນຂອງຕົນດັ່ງກາບຂຽນວ່າ:

| | | |
|---|---|---|
| ... | ພ່ອງຫຼົບໄປປ່າ | ພ່ອງຄາຢູ່ຢ້າວ |
| | ພ່ອງຟ້າວໂຕນໜີ | ພ່ອງມີຄົນໄຂ້ |
| | ພ່ອງໄວ້ຄົນໂຊ | ໂລຄາບຽດຕ້ອງ |
| | ພ່ອງຍັງເນີປ່າ | ໄປຄວ່າໂຄຈອນ. |

ໃນຄະນະທີ່ພາກັນລົບໜີນັ້ນບາງພວກກໍ່ປອດໄພ, ບາງພວກກໍຖືກພວກສັກດີນາສະຫຍາມຕາມທັນໃນເວລາທີ່ພວມຈະຂ້າມນໍ້າ ດັ່ງກາບໄດ້ຂຽນວ່າ:

| | |
|---|---|
| " ລາງພ່ອງນັ້ນ | ເສິກຜ່າໃນເຮືອ |
| ເຂົ້າ ແລະເກືອ | ວາງເສຍໝາກລົ້ນ " |

ເມື່ອເຂົາເຈົ້າແຕກສະລຸຜຸຜາຍໄປຕາມປ່າດົງຕ່າງຄົນຕ່າງໄປ, ຜົວພັດພາກຈາກເມຍ,ລູກພັດພາກຈາກພໍ່ແມ່, ເມື່ອໝົດເຂົ້າຖົງກໍ່ຫາກິນໝາກໄມ້ຫົວມັນໃຫ້ພໍມີຊີວິດຢູ່ລອດ, ບາງພວກກໍ່ກິນຖືກໝາກໄມ້ເບື່ອກໍ່ຕາຍ ດັ່ງກາບໄດ້ຂຽນວ່າ:

| | |
|---|---|
| " ຜູ້ກິນໜ້ອຍ | ຍັງອ່າວນານຕາຍ |
| ຜູ້ກິນຫຼາຍ | ຕາຍມໍລະນາດ |
| ເພຍຊາມາດ | ທັງໝູ່ຕາຍກອງ |
| ຜູ້ໄປກ່ອນ | ຕາຍໝົດບໍ່ຍັງ |
| ຍິນທຸກຄອຍ | ຮ້ອງໃຫ້ຫາກັນ |
| ສຽງນີ້ນັ້ນ | ທັງກົວທັງຟ້າວ..." |

ການຕາຍນີ້ເປັນສິ່ງທີ່ເວດທະນາສິງສານຄື: ຕາຍຢູ່ຕາມແມ່ນໍ້າ, ພູຜາປ່າເລິກ, ຕາຍຢູ່ຕາມທົ່ງຫຍ້າຫວ່າງເຫວ, ຕາຍຕາມຕົ້ນໄມ້ໃຫຍ່ດັ່ງກາບຂຽນວ່າ:

| | |
|---|---|
| "... ຕາຍເປັນຜີ | ຢູ່ດົງດອນໄມ້ |
| ຕາຍຄ້າງໄຄ | ເປັນເຫຍື່ອປາຜາ |
| ຕາຍຢູ່ໃນພູໃນຜາ | ບໍ່ມີຄົນມ້ຽນ |
| ທຸກທີ່ທ້ຽນ | ຍິນໜ້າອາເຫຍືອງ |
| ຄົນທັງເມືອງ | ບໍ່ເລີງສິ່ງນີ້ |
| ເບິ່ງພຸ້ນພີ້ | ເຫັນຢູ່ເຮືອເລືອ |
| ກົກໄມ້ຕາຍ | ແຮງຊໍ້າມີຫລາຍ |
| ກົກໄມ້ໃຫຍ່ | ດູຫຼາຍຂ້ອນໄຂ່ວ..." |

ຍ້ອນການຕາຍອັນນີ້ໄດ້ເຮັດໃຫ້ເຂົາເຈົ້າພັດພາກຈາກກັນ, ເຮັດໃຫ້ເຂົາເຈົ້າມີຄວາມຄິດຮອດ, ຄິດເຖິງກັນລະຫວ່າງຜົວເມຍ, ລູກນ້ອຍ ແລະພີ່ນ້ອງວົງສາ ດັ່ງກາບໄດ້ຂຽນວ່າ:

"... ຜົວ ແລະເມຍ ອາງເສຍແມ່ເຖົ້າ
ຝູງລູກເຕົ້າ ໜີປະມານດາ
ສາລິກາ ຈາຜົວຄືຄ້ອຍ
ປະລູກນ້ອຍ ຍັງບໍ່ທັງຕາຍ
ອີ່ດູເດ ສາຍຄໍເຈົ້າຫຼ້າ
ເປັນກຳພ້າ ໃຫ້ຢູ່ຄົນດຽວ
ໃນໄພຂຽວ ບໍ່ມີພີ່ນ້ອງ..."

ຈາກການຕໍ່ສູ້ດ້ວຍວິທີການເອົາຕົວລອດນີ້ມັນໄດ້ສ້າງຄວາມເສຍຫາຍ, ລົ້ມຕາຍ ແລະເຈັບແສບໃຫ້ແກ່ຊາວເມືອງພວນ ແລະ ອີກດ້ານໜຶ່ງພວກເຮົາກໍຍິ່ງເຫັນແຈ້ງໂທດກຳຂອງພວກສະຫຍາມ ແລະ ພວກເຈົ້າຂຸນມູນນາຍລາວຈຳນວນໜຶ່ງເປັນຜູ້ປະກອບສ່ວນເຮັດໃຫ້ຊາວພວນມີຄວາມທຸກທາງດ້ານຮ່າງກາຍ ແລະຈິດໃຈ.

## 3. ສິລະປະໃນການແຕ່ງກາບເມືອງພວນ

ວັນນະກຳເລື່ອງນີ້ຂຽນເປັນກາບກອນ ສິລະປະໃນການແຕ່ງມີຖ້ອຍຄຳສຳນວນບໍ່ເກາະກ່າຍລ່ຽນໄຫຼດີປານໃດ ແລະບໍ່ຖືກຕາມກົດເກນຂອງກາບດີເທົ່າທີ່ຄວນ ແຕ່ວ່າມີເນື້ອໃນຕໍ່ສູ້ຢ່າງຈະແຈ້ງ. ສັບພາສາທີ່ນັກແຕ່ງໃຊ້ໃນການແຕ່ງບໍ່ຫຍາບຊ້າ, ເປັນຊັບພາສາທີ່ປະຊາຊົນເຄີຍໃຊ້ ສະນັ້ນຈິ່ງເຮັດໃຫ້ເນື້ອໃນຂອງກາບຈະແຈ້ງ.

## 4. ສະຫຼຸບລວມ:

ວິທີການແຕ່ງຂອງນັກແຕ່ງສ່ວນຫຼາຍດີ, ເນື້ອໃນຈະແຈ້ງເຮັດໃຫ້ຜູ້ອ່ານເຂົ້າໃຈງ່າຍ ແຕ່ສັບພາສາທີ່ນັກແຕ່ງຂຽນແມ່ນພາສາທ້ອງຖິ່ນອາດຈະເຮັດໃຫ້ຄົນທ້ອງຖິ່ນອື່ນເຂົ້າໃຈຍາກບາງເລັກນ້ອຍ. ເຖິງຢ່າງໃດກໍຕາມເນື້ອໃນຂອງກາບໄດ້ສ່ອງແສງໃຫ້ພວກເຮົາເຫັນໂທດກຳຂອງສະຫຍາມທີ່ກໍ່ຂຶ້ນຕໍ່ປະຊາຊົນເມືອງພວນຢ່າງຈະແຈ້ງ.ໃນກາບໄດ້ສ່ອງແສງເຖິງການດຳລົງຊີວິດອັນແສນທໍລະມານຂອງປະຊາຊົນເມືອງພວນພາຍໃຕ້ແອກປົກຄອງຂອງສະຫຍາມ ປະຊາຊົນຖືກກົດຂີ່ຂູດຮີດຢ່າງໜັກໜ່ວງ.ເຂົາເຈົ້າອົດບໍ່ລົນທົນບໍ່ໄດ້ຈິ່ງພາກັນຕໍ່ສູ້ດ້ວຍວິທີການໂຕນໜີ. ນີ້ກໍແມ່ນກົດເກນອັນໜຶ່ງໃນການດຳລົງຊີວິດໃນສັງຄົມທີ່ມີການກົດຂີ່ຂູດຮີດໜັກມັນກໍ່ຕ້ອງມັກຈະເກີດມີການຕອບໂຕ້ຕ້ານຄືນຄືກັນເປັນທຳມະດາ.

**ຄຳຖາມຄົ້ນຄວ້າ**

1.) ພວກສະຫຍາມມ້າງເພທຳລາຍເມືອງພວນຄືແນວໃດ ອີງໃສ່ 9 ບົດໃນກາບ?

2.) ປະຊາຊົນເມືອງພວນຖືກພວກສະຫຍາມເກັບກວດໄປຄືແນວໃດ?

3.) ຄວາມທຸກຂອງປະຊາຊົນເມືອງພວນສ່ອງແສງອອກຜ່ານກາບເມືອງພວນຄືແນວໃດ?

4.) ຮູບການຕໍ່ສູ້ຂອງປະຊາຊົນເມືອງພວນສ່ອງແສງອອກຜ່ານກາບເມືອງພວນຄືແນວໃດ?

ກາບເມືອງພວນ

(ຄັດຕອນ)

“ໂຫດກຳຂອງພວກສັກດິນາສະຫຍາມ ທີ່ມີຕໍ່ປະຊາຊົນເມືອງພວນ”



ຮູບທີ 1: ການຖືກກົດຂີ່ຂູດຮີດຂອງປະຊາຊົນ

| | |
|---|---|
| ບ້ານນອກເນີນາ | ລາດຮ້ອງພູຜາ |
| ອານາທັ່ງຄ້າຍ | ວ້ຽນທ້າຍ ແລະ ແສງ |
| ບ້ານເລັ້ງນາຄອນ | ບ້ານມ່ອນບ້ານຮ້າງ |
| ບ້ານແກ່ອນາຄາຍ | ບ້ານຝາຍບ້ານໂຖດ |
| ບ້ານໝົດບ້ານຫງັນ | ບອມໝັ້ນຄັງວຽງ |
| ບ້ານສີຖູນ | ຊຸນນາງປັດກວາດ |
| ວຽນທາດຊຽງຄຳ | ຈຳນຳເອົາຕົວ |
| ງົວຄວາຍໃສ່ຕ່າງ | ບ້ານກາງບ້ານດາວ |
| ຄົນລາວແປກປົນ | ເອົາຄົນໄປໄລ່ |
| ບ້ານໄຜ່ເມືອງພານ | ພາງຊານນ້ອຍ |
| ລູກຫ້ອຍຊຽງລຸນ | ໃຫ້ສູນເສຍເປົ່າ |
| ບ້ານເຂົ້າເມືອງສາຍ | ນ້ຳຈັ່ງຮວາຍ |
| ເມືອງຟ້າເມືອງຕ້າ | ເມືອງລາວໄປໜ້າ |
| ລາວມາແກມລາດ | ຈັກກວາດຄົວລົງ |
| ດິນອິງຢ່າຢູ່ | ເຂົ້າສູ່ສີມພານ |
| ບ້ານຫ້ານບ້ານຫຼວງ | ບ້ານຄວງນາແມນ |
| ພັນພຽງຜ້ຽນແສນ | ບ້ານວຽນບ້ານມ່ອນ |
| ຈັດດ່ວນເອົາມາ | ບ້ານພານເມືອງ |
| ບ້ານທອງບ້ານເຫຼັກ | ບ້ານເຮັກນາລະ |
| ບໍ່ລະບໍ່ໄລ | ບ້ານໄຊນາບີ |
| ຝູງນີ້ບໍ່ວາງ | ບ້ານຊ້າງບ້ານໜອງ |
| ບ້ານຄອງບ້ານບານ | ຢານານເອົາໄປ |
| ປຸງໃຍນາຂາບ | ບ້ານຍາບຸນາເພິ່ງ |
| ລັດລົງຂູດ້ານ | ທ່າລ້ານເມືອງມຽນ |
| ປາກຽນທຸກແດນ | ບ້ານແປນສອງຮັກ |
| ບ້ານພັກຂາຍເຫຼັກ | ເຕັກໄປຍ້າຍຍ່າງ |
| ບ້ານອ່າງຊາຍຄຳ | ແນບນຳໄປເຝົ້າ |
| ຊຸມເຮົານາບົວ | ບໍ່ກົວເອົາໂທດ |
| ເມືອງໂປດເມືອງປານ | ລົງທາງກ່ອນໝູ່ |
| ຜາທັ່ງໄຂຢູ່ | ນາຊູນາເໜີ |
| ບ້ານເສີບ້ານສີ | ໜອງກ້າພູມີ |
| ຊ້າງສີພັນເທື່ອ | ລົງທາງພູອ້າວ |

| | |
|---|---|
| ຄັ່ງສ້າວຈັ່ງເມືອງ | ເຄືອງໃຈມິ່ງມີ |
| ສິມສີໜອງຄ້າງ | ເຂດຂ້າງຈຸ້ຍເມືອງ |
| ຮຸ່ງເຮືອງເລີຍເສົ້າ | ເຂົ້າປາອາຫານ |
| ເປັນຂອງສະຫານ | ເຂົາຕີເຂົາຟາດ |
| ໂອກາດເມືອງມາງ | ຮ້ອງຄາງຫົວໄຫ້ |
| ເສິກໄດ້ຄົວລີ້ງ | ເຂົາປີ້ງຄຳຄ່າ |
| ເຂົາຜ່າເອົາຄົວ | ເອົາຕົວເປັນຂ້າ |
| ກົ່ວຫຍ້າຄັ່ງໂພນ | ເສິກໂຈນແພ່ນານ |
| ໄທມານໄທຍວນ | ທັ້ງພວນທັ້ງລາວ |
| ຍິງສາວຮ້ອງໄຫ້ | ເສິກໄດ້ປັນກັນ |
| ນາເນດນອງຕາ | ຊຽງແດດຊຽງງາ |
| ວັດວາສູນເສົ້າ | ບ້ານເປົ້າບອມພໍ |
| ຍໍຄົວໄປຊ້ຳ | ລີ້ງກ້ຳເມືອງຫຼວງ |
| ແຕ່ນັ້ນທັ້ງປວງ | ຊຸນຫຼວງຝ່າຍພີ່ |
| ເມືອງນີ້ທ່ຽວທັນ | ເພຍພັນຜູ້ອາວ |
| ຕັດຂາດໂຮມຄົວ | ບ້ານບົວບ້ານຖ້ຳ |
| ຈຳນນຳຊຽງຢາ | ບ້ານຊານນ້ຳຈຽບ |
| ໄປລຽບເກັບເອົາ | ບ້ານງິ້ວບ້ານເຕົາ |
| ຂອງເຮົາແຕ່ພໍ່ | ບ້ານກໍ່ແຝງຄົວ |
| ຊື່ວຍາມບ້ານຊ່າວ | ບ້ານມາວສອນຄູ |
| ພູຊາວບ້ານຫວດ | ໄປກວາດຄົວລີ້ງ |
| ນາພິງສາມຫຍ້າ | ທັບພ້າໄທຂັນ |
| ທ່ຽວທັນໂດຍຕາມ | ບ້ານໜາມບ້ານໝີ່ |
| ແລ້ງຈີ່ນາຈອນ | ບ້ານມອນເມືອງກັດ |
| ໄປຈັດຄົວລີ້ງ | ດິນອີງຢ່າຢູ່ |
| ເຂົ້າສູ່ສິມພານ | ແຕ່ນັ້ນມີນານ |
| ເຈົ້າສານຍົກຍ້າຍ | ທັ້ງຄ້າຍທັ້ງຜອງ |
| ລັດກວາດຄົວລີ້ງ | ຍະຍິງຍະຍາບ |
| ຖືຫາບເຫຼືອແຮງ | ລູກແພງຍັງນ້ອຍ |
| ຄາດຄ້ອຍຄາໄປ | ຕາມແຕ່ວິໄສ |
| ທາງໄກມາກມາຍ | ງົວຄວາຍທັ້ງຄົນ |

ລີພົນໄຫຼລັ່ງ          ຄັບຄັ່ງເມືອງນອງ
ອອກເມືອງຫຼຽວລໍ່          ຕ້ານຕໍ່ຈາກັນ
ນີ່ນັນເດັກນ້ອຍ          ຄັ່ງຄ້ອຍເນີທອງ
ທາງຫຼວງລະໄວ້          ພ່ອງໄຫ້ພ່ອງຫົວ
ພ່ອງກົວຄຳຕາຍ          ລາງພ່ອງເສຍດາຍ
ກົວຕາຍອຶດເຂົ້າ          ຈຳເຈົ້າເລີງເລີງ
ຄອບຄົວລີງໂຮມ          ທ່າໂທມທ່າເຮືອ
ກາງເໜືອທາງຕ່ຳ          ທຸກສ່ຳຂົນຂວາຍ
ຫາເຂົ້າທັງເກືອ          ຫາເຮືອທັງແພ
ໄມ້ພາຍໄມ້ກໍ່          ຫຼີງແລປ່າໄມ້
ແຕ່ງໄດ້ເລີຍລີງ          ປິດປີງປາກນ້ຳ
ຄຳທຸກຂະມອດຂ້ອນ          ເຖີງພວກຊາວຄົວ
ເຈົ້າຫົວຈົວເນນ          ເຂົ້າເພນບໍ່ທັນ
ຈັ່ງທັນບໍ່ຮອດ          ຫົວຫອດຄາງແຄນ
ໝື່ນແສນພາຍນອກ          ແມ່ອອກທັງຫຼາຍ
ຂຸນນາຍທັງປວງ          ເຫຼືອທວງທຸກອາວ
ຈັກກ່າວພາຍຫຼັງ          ພ່ອງໜີພ່ອງຍັງ
ເພພັງແຕກມ້າງ          ຕຶກຂ້າງເມືອງແກວ
ໄປຊອດໄປແຜ້ວ          ລີ້ຢູ່ພັກນອນ
ລ້ຽງລູກທັງຫຼານ          ເມືອງແທ້ເມືອງພານ
ພ່າງງານຊຸ້ນນ້ອຍ          ພໍຮ້ອຍນາຍສິບ
ຄົນດິບເຂົ້າບວດ          ຝູງບວດເປັນນາຍ
ເສຍຄາຍເອົາຈິດ          ຂຽນຂີດເອົາຄົວ
ເອົາງົວໃສ່ຕ່າງ          ເມືອງພ່າງເມືອງງານ
ບ້ານລັນເມືອງໂຄມ          ທ່າໂທມຊຽງແລ
ທ່າແພນນາຫາດ          ປັດກວາດລີງໄປ
ເຊື່ອໄທຄວາມຍິວະ          ເຍົ້າຍິວະຄົວລີງ
ປະສີງເມືອງກວ້າງ          ມັກສ້າງນາແທ່ນ
ບໍ່ຍາກບໍ່ແຄນ          ຍິວະເຍົ້າເສຍຄາຍ
ພອຍຈັດຄົວກາຍ          ຄົນຫາຍກ້າໂກດ

ເຖິງຂອງນ້ຳໃຫຍ່ ເຮັດໄຮ່ທຳສວນ
ບໍລະບວນຍ້າຍ ຄັບຄ້າຍຄາໄປ
ນາຍໄທຊຳບອກ ໜີອອກພັນສາ
ດຳນາເດືອນຫົກ ຝົນຕົກທີ່ທົ່ມ
ລະງົມເດືອດຮ້ອນ ຂອດຂ້ອນຄົນຕາຍ
ໜອງຄາຍລ້ຳເລີດ ບັງເກີດມີນລະຫົນ
ເສັຍຄົນມໍລະນາດ ຝູງໝູ່ໄທຄົວ
ເຂີນຂາດເຂົ້ານ້ຳ ທຸກເຮັ່ງກ້ຳ
ຂຳເຂືອກເຫຼືອຫຼາຍ ກິນແໜງພາຍຕົວ
ງົວ ແລະ ຄວາຍ ຈິບຫາຍເສຍເປົ່າ
ບ້ານເກົ່າເຮືອ ເປັນປ່າຜັກຫົມ
ຣົມມະໂນ ໃນໃຈໂສກເສົ້າ
ຜູ້ຢູ່ບ້ານ ຂາຍເຂົ້າເອົາເງິນ
ເຂົ້າເຕັມເລົ້າ ເພິ່ນຫາກເອົາເສຍ
ເຂົ້າເຕັມເຍຍ ເພິ່ນກໍ່ເອົາແລ້ວ
ທັງເຄື່ອງຢ້າວ ປັດແຜ້ວບໍ່ຄາ
ສາລິກາຈາກຫົວຄີຄ້ອຍ ອູ້ມລູກນ້ອຍມາຢູ່ແທນເຮືອນ
ສອງສາມເດືອນ ເຈົ້າເຮືອນມາຮອດ
ຂໍແວ່ຈອດ ເຊົາຢ້າວເຊົາເຮືອນ
ມາຍິນທຸກ ໄດ້ຂໍເຊົາເຮືອນ
ມາຍິນເອືອນ ໄດ້ຂໍເຊົາບ້ານ
ມາຂີ້ຄ້ານ ໄດ້ຂໍເຂົ້າເຍຍຕົນ ໜ່າຍເດ
ໜ່າຍບໍ່ແພ້ ເວນຫາກພາເປັນ
ບໍ່ຢາກເຫັນ ເລົ່າມາພົບພໍ້
ໜ່າຍໄທທໍ້າ ຖືຫຼາບຂາຍເກືອ
ໜ່າຍໄທເໜືອ ຂາຍເກືອ ແລະ ຜ້າ
ໜ່າຍໄທຂ້າ ຄ້ຽວໝາກເບຍເຍຍ
ລະໄລເສຍ ໄມ້ເຈຍເໜັບເກົ້າ
ຣິດແຕ່ເຄົ້າ ຂັດພ້າຜັກຫວາຍ
ຣິດມື້ຣວາຍ ພາຍຖືຖົງປຽດ

ມຸ່ງແຕ່ຕ່ຽວ    ສາຍຫຼຽດພາຍໂຍນ
ເປັນໂຊນໂກນ    ສັງມາຄ້ຽວໜາກ
ໂລກປິ່ນແປ້    ດູຫຼາກຫຼາຍອັນ
ເປັນດາວຄວັນ    ແຜ່ນດິນໄຫວຫວັ່ນ
ພູລັ່ນກ້ອງ    ສຽງກະສັ່ນທັ່ງເມືອງ
ໝາທັງເມືອງ    ກາງຄືນຫອນເຫົ່າ
ເມືອງ ແລະ ບ້ານ    ສູນເປົ່າບາງບິກ
ຝົນຕົກຣຳ    ແຜ່ນດິນກາຍເມືອ



ຮູບທີ 1: ປະຊາຊົນຊາວພວນ

## ຄວາມທຸກຂອງປະຊາຊົນ

| | |
|---|---|
| ສ່ວນດັ່ງໄທຄົວ | ເມົາມົວອຶດຢາກ |
| ເປັນພາກເປັນໄພ | ຕາມແຕ່ວິໄສ |
| ຊອກເຂົ້າຫາປາ | ຜະລາຜະລັງ |
| ທຸກຂັງເຂາະຂອດ | ຄິດຮອດຄຳຕາຍ |
| ດັບວາຍສິ່ງຂອງ | ອຸບາດທຳກິນ |
| ຄືຄົນຜີບ້າ | ຊະໂລຊະລາ |
| ຮັກສາພວກໄພ່ | ຈັດໄລ່ໂຮມກັນ |
| ຫຼາຍວັນບໍ່ຄົບ | ພ່ອງຫຼົບໄປປ່າ |
| ພ່ອງຄາຢູ່ຢ້າວ | ພ່ອງຟ້າວໂຕນໜີ |
| ພ່ອງຄົນໄຂ້ | ພ່ອງໄວຄົນໂຊ |
| ໂລຄາບຽດຕ້ອງ | ພ່ອງຍັງເມີນາ |
| ໄປຄວ່າໂຄຈອນ | ໂດຍອາຈານທອນ |
| ໂຜດທານຊີວິດ | ບຸນພິດປານີ |
| ແຕ່ນັ້ນຕີ | ລັງສີຄາຄ້ອຍ |
| ໄພ່ນ້ອຍຊາວຄົວ | ຍິນກົວຍາກເຍື້ອນ |
| ຢູ່ຄ້ຳກິນ | ແຜ່ນດິນໝອງຄາຍ |
| ກາຍເກີດເປັນທຸກ | ເກີດຂີ້ຍຸກມາກຫຼາຍ |
| ຄົນຕາຍທຸກມື້ | ຊື້ເຂົ້າຊ້ຳແພງ |
| ນາແຊງໄປແກ່ | ກິນແຕ່ໝໍ່ໄມ້ |
| ນາຍໄທທຽວທ່ອງ | ເວົ້າບ່ອງຄວາມມາ |
| ທຸລະທຸໄລ | ຈັດກວາດເຂົ້າໄປ |
| ບໍ່ໄດຄາດແຄ້ວ | ກວາດແລ້ວຄົວລາວ |
| ສົງຄາວໄປໜ້າ | ບາດຫຼ້າພາຍລຸນ |
| ຄິດປຸນດູຖີ່ | ໜ້າທີ່ແວນດີ |
| ໂຕນໜີແວນເປືອງ | ເຖິງເມືອງຈຶ່ງເຊົາ |

ຮີບເດົາດາຖ້ຳ ດູໜ້າຍິງຊາຍ
ຊຸບສິນອານັນ ລະຫັດວ່າດີ
ລາຕີທ່ຽງຄ້າຍ ຮີບຍ້າຍລີງເຮືອນ
ເບື້ອງໃຕ້ເບື້ອງເໜືອ ພາຍເຮືອລ່ອງໄຫຼ
ລີງໄປແລ້ວຈອດ ໃສ່ຖອດເຮືອລີງ
ພາຍຖີງຂັດໄຖ ແລ້ວໄລ່ຄືວຄືນ
ເຂົ້າໄພເຖີງເຖື່ອນ ລະເລື່ອນເລີຍຕາຍ
ໜອງຄາຍຫ້ວງຕື່ມ ເຂົາຄືນເນືອງນອງ
ແຕ່ງກັນຮຽວຮີບ ເຂົາຖີບນາຄືວ
ຜົວເມຍພັດພາກ ໜີຈາກຄືນທາງ
ລາງຄືນເຂົາໄດ້ ຮ້ອງໄຫ້ໃນດົງ
ບາງຄືນລືມຫຼົງ ໃນດົງປ່າໄມ້
ລາງຄືນໄດ້ແລ້ວ ເລີຍລັກໂຕນໜີ
ເກຈິຊະນາ ຄ້າງຄາໃນປ່າ
ລາງພ່ອງນັ້ນ ເສິກຜ່າໃນເຮືອນ
ເຂົ້າແລະເກືອ ວາງເສຍມາກລິ້ນ
ຝູງພ່າຍພົ້ນ ພໍໜູ່ເລີຍໄປ
ເຖີງຂັ້ນໄດ ຫາປະຕູຫໍ້
ຈຶ່ງພົບພໍ້ ຝູງແຕກໂຮມກັນ
ລີງຂັ້ນໄດ ເປັນຫີນກ່າຍກ້ອນ
ຟ້າແດດຮ້ອນ ຝົນເລົ່າເລີຍຕົກ
ຕົກທາງໂຮມ ປົກເປັນຫຼາຍເສັ້ນ
ຜູ້ກເອັ້ນ ຫຼົງຢູ່ໃນດົງ
ໜົດເຂົ້າຖົງ ຫາກິນລູກໄມ້
ຫາບໍ່ໄດ້ ຕາຍຕຸ່ມທັງຄືວ
ບາງພ່ອງນັ້ນ ເສຍຜົວທັງລູກ
ບາງພ່ອງນັ້ນ ເສຍລູກທັງຂອງ
ລາງຄືນນັ້ນ ຢອງໄປເຈຍລະຈາກ
ຂ້າມປ່າໄມ້ ບຸນຫາກຍັງຊູ
ຂຶ້ນເມືອພູ ເສິກຢູ່ນຳກັນ

ຂຶ້ນພົ້ນແລ້ວ　　ຈັດຈຶ່ງຫາກັນ
ເຂົ້າປ່າໄລ່　　ເສິກນຳບໍ່ທັນ
ເຂົ້າປ່າຫັນ　　ເສິກນາບໍ່ໄດ້
ເຂົ້າປ່າໄມ້　　ຫຼີງຝ່າຍພູໂຮງ
ພັດກັນຫຼີງ　　ໃນດົງພໍໝູ່
ລາງພ່ອງນັ້ນ　　ຄ້າງຢູ່ໃນໄພ
ຕາມວິໄສ　　ໄຕ່ຮອຍນຳຊ້າງ
ຂ້າມຍ່ານກວ້າງ　　ເຖິງທີ່ເຊົານອນ
ໄປໂຄຈອນ　　ເລີຍເຫັນໝາກໄມ້
ເກັບໄດ້ແລ້ວ　　ມາຜ່າຊີມດູ
ແຊບຫອມຫວານ　　ມະທຸປຸນປານແປກ
ຂອງແຊບແທ້　　ເຮົາຈູບດີຫຼື
ບຸນພາຍຫຼັງ　　ເຮົາມີຈຶ່ງໄດ້
ກອງໄວ້ແລ້ວ　　ໄປຫາບເອົາມາ
ກິນຜາລາ　　ມີແຮງອີ່ມທ້ອງ
ຍູທ່າງຍ່າງ　　ໄປໜ້າເປັນສັງ
ໝູ່ມາຫຼັງ　　ບໍ່ໃຫ້ລ້າ.
ໝູ່ມາໜ້າ　　ຖາມຊື້ວ່າແພງ
ສີແດງໆ　　ບໍ່ຄອຍຕາລ່ຳ
ໝາກຄໍ້ຕ່ຳ　　ຂາຍໃຫ້ບາດສາມ
ໜ້ອຍບໍ່ນານ　　ອາຫານລ້ຳເລີດ
ໄສ້ຢູ່ທ້ອງ　　ກາຍເກີດເປັນໂພຍ
ເປັນໂຮງໂຮຍ　　ຄືລີງເມົາໝ້ອງ.
ໄສຢູ່ທ້ອງ　　ບັງເກີດໂງເງ
ເປັນຮວ່ານເຣ　　ເໝືອນໄກ່ບ້າຄ້ອນ
ພິດຮຸ່ງຮ້ອນ　　ຈຸຕິຕາຍໄປ
ຜູ້ກິນໜ້ອຍ　　ຍັງອ່າວນານຕາຍ
ຜູ້ກິນຫຼາຍ　　ໄປມໍລະນາດ
ເພຍຊະມາດ　　ທັງໝູ່ຕາຍກອງ
ປະເສຍຂອງ　　ກາງດົງດ່ານດ້າວ

| | |
|---|---|
| ຫອກແລະງ້າວ | ຖົງເຄື່ອງອັນດີ |
| ມີຄຸດແສງ | ອັນແພງຂະໜາດ |
| ເສຍຄຸດຄ່າ | ອາກາດອັນຄຶງ |
| ປະເສຍຖົງ | ເງິນຄຳບໍ່ເອື້ອ |
| ຕາຍຢູ່ເຮືອ | ເປັນເຜດເປັນຜີ |
| ເສຍຄົນດີ | ກວານຫຼວງເຈົ້າເຫັນ |
| ດັບຊີບເຊື້ອ | ຫຼານເຫຼັ້ນບໍ່ຫຼໍ່ |
| ໝູ່ມາກ່ອນ | ຕາຍໝົດບໍ່ຍັງ |
| ໝູ່ມາຫຼັງ | ສ່ວນຍັງແມ່ນນ້ອຍ |
| ຍິນທຸກຄ້ອຍ | ຮ້ອງໄຫ້ຫາກັນ |
| ສຽງນີ່ນັ້ນ | ເພິ່ງກົວຟັງຟ້າວ |
| ປືນ ແລະ ງ້າວ | ຂີນໄຂວ່ວາງໄປ |
| ຂອງໄພສິນ | ຄີລີຂີງເຂດ |
| ຂອງຕ່າງເທດ | ບໍ່ຮູ້ຢ່າກິນ |
| ຂອງຕ່າງດິນ | ບໍ່ຫ່ອນເຄີຍຮູ້ |
| ມາມຸດມູ້ | ອຶດຢາກມືວຕາຍ |
| ມາເສຍດາຍ | ຄົນຕາຍມາກລົ້ນ |
| ໜີເສິກພົ້ນ | ມາຈອບຄວາມຕາຍ |

<...... >

| | |
|---|---|
| ຝູງຕານາຍ | ທັງປວງກ່າວໄວ້ |
| ກໍຫາໄດ້ | ຄືດັ່ງດຽວກັນ |
| ເວັນນຳທັນ | ລືຜົນພາຍຫຼືກ |
| ຫົວລະຄຶກ | ວິບາກພາຍຫຼັງ |
| ຜົວເພິ່ນຍັງ | ຜົວໂຕຕາຍຈາກ |
| ໝ້າຍແລະຮ້າງ | ມັນຫາກເລິງມີ |
| ຕາຍເປັນຜີ | ຢູ່ດົງດອນໄມ້ |
| ຕາຍຄ້າງໄຄ້ | ເປັນເຫຍື່ອປາຝາ |
| ຕາຍຢູ່ໃນພູໃນຜາບໍ່ | ມີຄົນມຽນ |
| ທຸກທີ່ຫ້ຽນ | ຍິນໜ່າຍອາເຫຍືອງ |
| ຄົນທັງເມືອງ | ບໍ່ເລິງສິ່ງນີ້ |

| | |
|---|---|
| ເບິ່ງພຸ້ນພີ້ | ເຫັນຢູ່ເອື້ອເລືອ |
| ກົກໄມ້ໃຫຍ່ | ແຮ່ງມີຫຼາຍ |
| ກົກໄມ້ຕາຍ | ຄູຫຼາຍຂອນໄຂວ່ |
| ເປືອລູກໄມ້ | ໝາກໜ້ອງຜິເວນ |

# ບົດທີ 4
# ພື້ນວຽງ

## 1. ສະພາບປະຫວັດດສາດ

### ▪ ວຽງຈັນກາຍເປັນເມືອງຫຼວງໃໝ່ຂອງລາວ

ໃນ ຄ.ສ. 1548, ເຈົ້າເຊດຖະວັງໂສ, ລາຊະໂອລົດຂອງເຈົ້າໂພທິສາລະລາດເຊິ່ງເປັນກະສັດແຫ່ງອານາຈັກລ້ານຊ້າງ ແລະມີທີ່ສໍານັກຢູ່ເມືອງຫຼວງພະບາງ, ໄດ້ຮັບການອະພິເສກໃຫ້ໄປເປັນເຈົ້າອານາຈັກລ້ານນາ, ສອງປີຕໍ່ມາ, ບິດາຂອງພະອົງໄດ້ເຖິງແກ່ພິລາໄລ. ເມື່ອຂ່າວນີ້ຊາບເຖິງພະອົງ, ພະອົງກໍຂ້າວກັບຄືນຫຼວງພະບາງ ເພື່ອຈັດພິທີຖວາຍເພີງສົບພະບິດາ ແລະຈັດລະບຽບການໃນລາຊະສໍານັກຄືນໃໝ່, ພະອົງໄດ້ຮັບການອະພິເສກໃຫ້ເປັນເຈົ້າອານາຈັກລ້ານຊ້າງສືບຕໍ່ຈາກພະບິດາ ພະອົງຂຶ້ນຄອງບັນລັງໃນພະນາມອັນເປັນທີ່ຮູ້ກັນທົ່ວໄປວ່າເຈົ້າໄຊເຊດຖາທິລາດ ຫຼືເຈົ້າໄຊຍະເຊດຖາທິລາດ (ຕໍ່ໄປຈະໃຊ້ແຕ່ ຄໍາດຽວຄື "ເຈົ້າໄຊເຊດຖາທິລາດ").ສ່ວນວ່າອານາຈັກລ້ານ

ນານັ້ນພະອົງໄດ້ມອບໃຫ້ພະຍາກົງກາງລາດເປັນຜູ້ເບິ່ງແຍງ. ເວລາກັບຄືນຫຼວງພະບາງນີ້, ພະອົງໄດ້ອັນເຊີນພະພຸດທະຮູບອັນເປັນທີ່ສັກກະລະບູຊາ ແລະເຄົາລົບນັບຖືຂອງປວງຊົນໃນສະໄໝນັ້ນອົງໜຶ່ງເຊິ່ງເປັນທີ່ຮູ້ກັນທົ່ວໄປວ່າ ພະແກ້ວ ຫຼືພະແກ້ວມໍລະກົດ (ຕໍ່ໄປຈະໄດ້ໃຊ້ແຕ່ຄໍາດຽວຄືພະແກ້ວ) ເມືອນໍາດ້ວຍ.



ຮູບທີ 1: ນະຄອນຫຼວງວຽງຈັນ

ເຈົ້າໄຊເຊດຖາທິລາດໄດ້ປະເຊີນໜ້າກັບຄວາມທ້າທາຍທີ່ໜັກໜ່ວງຕັ້ງແຕ່ເລີ່ມຕົ້ນລັດຊະການຂອງພະອົງ ໃນຊຸມປີທີຫົກສິບຂອງສະຕະວັດທີສິບຫົກ, ພະມ້າໄດ້ຂະຫຍາຍອິດທິພົນມາທາງທິດຕາເວັນອອກ. ເມື່ອຜາບເມືອງຕ່າງໆທີ່ຢູ່ໃນລັດສານຮຽບຮ້ອຍແລ້ວກະສັດຂອງພະມ້າຜູ້ມີນາມວ່າ ບາຍິນນອງ (1551-1581) ໄດ້ສືບຕໍ່ປະຕິບັດແຜນການໃນການກາຍເປັນເຈົ້າຈັກກະພັດຕິລາດຂອງຊາວພຸດຄືທ້ອນໂຮມເອົາເມືອງຕ່າງໆທີ່ຖືກສາສະໜາພຸດ ເຊິ່ງຢູ່ໃນອາຊີຕາເວັນອອກສຽງໃຕ້ໃຫ້ເຂົ້າຢູ່ໃນຄວາມຄຸ້ມຄອງຂອງພະອົງ. ຫຼັກຖານຫຼາຍຢ່າງໄດ້ຢັ້ງຢືນເຖິງຄວາມພະຍາຍາມທີ່ຈະເຮັດໃຫ້ແຜນຂອງພະອົງປາກົດເປັນຈິງ, ເຂດພາກເໜືອ ແລະພາກຕາເວັນອອກສຽງເໜືອຂອງອານາຈັກລ້ານນາຖືໄດ້ວ່າເປັນເຂດທໍາອິດທີ່ຖືກບຸກເພື່ອຍຶດຄອງຈາກກອງທັບຂອງບາຍິນນອງ. ແມ່ນວ່າການປະຕິບັດການດັ່ງກ່າວນີ້, ຈະພົບກັບຄວາມຫຍຸ້ງຍາກອັນເນື່ອງມາຈາກການຕໍ່ສູ້ຕ້ານຄືນຢ່າງເດັດດ່ຽວຂອງເສນາອາມາດ ແລະ ປະຊາຊົນໃນຂົງເຂດພາຍໃຕ້ການນໍາຂອງພະເຈົ້າໄຊເຊດຖາທິລາດກໍຕາມ, ເມື່ອຮອດ ຄ.ສ 1558, ເມືອງຊຽງໃໝ່ອັນເປັນຫົວໃຈຂອງອານາຈັກລ້ານນາກໍໄດ້ຕົກຢູ່ໃນກໍາມືຂອງບາຍິນນອງ ແລະຕໍ່ມາອີກໜຶ່ງປີເມືອງຊຽງແສນກໍຕົກຢູ່ໃນຊະຕາກໍາອັນດຽວກັນ.

ເຈົ້າໄຊເສດຖາທິລາດຊົງຫຼິງເຫັນວ່າ ຫາກພະມ້າຍັງສືບຕໍ່ຄວບຄຸມຫຼັ້ງນໍ້າຂອງຕອນເທິງບໍລິເວນເໜືອຂອງເມືອງຊຽງແສນຢູ່, ພະມ້າອາດບຽດຍຶດຫຼວງພະບາງເວລາໃດກໍ່ໄດ້ເພາະວ່າຫຼວງພະບາງຢູ່ໃກ້ເຂດອິດທິພົນຂອງພະມ້າ. ເສັ້ນທາງໜຶ່ງທີ່ຄວນປະຕິບັດເພື່ອຫຼີກເວັ້ນຈາກການບຸກບຽດຍຶດຂອງພະມ້າກໍຄືຍ້າຍເມືອງຫຼວງຈາກຫຼວງ

ພະບາງສູ່ວຽງຈັນ. ການທີ່ພະອົງເລືອກເອົາວຽງຈັນເປັນເມືອງຫຼວງກໍສະແດງໃຫ້ເຫັນການເຫັນກວ້າງມອງໄກຂອງພະອົງ. ວຽງຈັນເປັນເມືອງທີ່ມີເມືອງອື່ນເຊິ່ງສາມາດໃຊ້ເປັນເມືອງດ່ານໜ້າທັງສີ່ດ້ານ, ດ້ານເໜືອແມ່ນຫຼວງພະບາງ, ດ້ານຕາເວັນອອກແມ່ນຊຽງຂວາງ, ດ້ານໃຕ້ແມ່ນສະຫວັນນະເຂດ ແລະດ້ານຕາເວັນຕົກແມ່ນໜອງບົວລຳພູ. ອັນສຳຄັນອີກອັນໜຶ່ງກໍຄືວ່າວຽງຈັນຕັ້ງຢູ່ໄກຈາກເຂດອິດທິພົນຂອງພະມ້າສາມຮ້ອຍກ່ວາກິໂລແມັດ. ສະພາບແວດລ້ອມເຫຼົ່ານີ້ກໍອາດເຮັດໃຫ້ເຈົ້າໄຊເສດຖາທິລາດເຫັນວ່າວຽງຈັນສົມຄວນເປັນເມືອງຫຼວງຂອງອານາຈັກລ້ານຊ້າງຢ່າງຍິ່ງ, ດ້ານໜຶ່ງອີກຢູ່ວຽງຈັນຫາກຕ້ອງການຕິດຕໍ່ພົວພັນເພື່ອຜູກມິດໄມຕີກັບອະຍຸດທະຍາກໍ່ສະດວກກ່ວາ. ດ້ວຍເຫດຜົນນີ້, ມາຮອດ ຄ.ສ. 1563,ພະທາດສີສອງຮັກຈຶ່ງໄດ້ຮັບການສ້າງຂຶ້ນທີ່ເມືອງດ່ານຊ້າຍແຂວງເລີຍ(ປະເທດໄທ) ໂດຍກຳລັງພົນຂອງລ້ານຊ້າງແລະອະຍຸດທະຍາ(ລາວແລະໄທ).

ວຽງຈັນຕັ້ງຢູ່ໃຈກາງທົ່ງພຽງອັນກວ້າງໃຫຍ່ ເຊິ່ງປະກອບດ້ວຍດິນປູກຝັງທີ່ອຸດົມສົມບູນ, ທົ່ງພຽງດັ່ງກ່າວນີ້ສາມາດໃຊ້ເປັນແຫຼ່ງຜະລິດສະບຽງອາຫານເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການດ້ານໂພຊະນາການຂອງປະຊາກອນໃນເມືອງຫຼວງວຽງຈັນໄດ້ຢ່າງພຽງພໍ ໂດຍສະເພາະກໍແມ່ນຊາວວັງ. ບັນຫານີ້ກາຍເປັນສິ່ງດຶງດູດເອົາຜູ້ຄົນໃຫ້ຍ້າຍເຂົ້າມາຕັ້ງຖິ່ນຖານໃນເຂດວຽງຈັນ ນັບທັງການຍ້າຍເມືອງຫຼວງຈາກຫຼວງພະບາງສູ່ວຽງຈັນໂດຍເຈົ້າໄຊເຊດຖາທິລາດອີກດ້ວຍ. ເຖິງຢ່າງໃດກໍດີ, ປິຍະຊາດ ສິນທຸສະອາດ ເຊິ່ງແມ່ນນັກວິຊາການຂອງໄທໄດ້ໃຫ້ຄຳເຫັນຕໍ່ສາເຫດໃນການຍ້າຍເມືອງຫຼວງຂອງອານາຈັກລ້ານຊ້າງໃນລັກສະນະທີ່ຕ່າງອອກໄປອີກ, ໃນບົດວິທະຍານິພົນປະລິນຍາໂທຂອງເພິ່ນ, "ສົງຄາມຂອງອານາຈັກລ້ານຊ້າງໃນລະຫວ່າງກາງສະຕະວັດທີ 16 ແລະກາງສະຕະວັດທີ 18", ມີຂໍ້ຄວາມທີ່ພາດກ່າຍເຖິງສາເຫດໃນການຍ້າຍເມືອງຫຼວງຂອງອານາຈັກລ້ານຊ້າງວ່າ: ເຂດໃຕ້ຂອງອານາຈັກລ້ານຊ້າງ ແມ່ນເຂດທີ່ເຜົ່າລາວເທິງ (ຫຼືຕາມທີ່ເພິ່ນເອີ້ນວ່າ "ຂ້າ") ຕັ້ງຖິ່ນຖານຢູ່ໃນເຂດຫຼັ່ງແມ່ນ້ຳຂອງຕອນກາງ ແລະແມ່ນ້ຳຊີ, ເຜົ່າດັ່ງກ່າວນີ້ແມ່ນເຜົ່າດັ່ງເດີມຂອງອານາຈັກລ້ານຊ້າງ ເຊິ່ງໄດ້ຕັ້ງຫຼັກແຫຼ່ງໃນເຂດນີ້ກ່ອນການເຂົ້າມາຢູ່ຂອງເຜົ່າລາວ. ເຂົາເຈົ້າເປັນເໝືອນດັ່ງເຄື່ອງຄຣູທີ່ມີພະລັງຕໍ່ອານາຈັກລ້ານຊ້າງ ແຕ່ພັດລົງຢູ່ໄກຈາກເມືອງຫຼວງ ເຊິ່ງສ້າງຄວາມລຳບາກໃຫ້ແກ່ເຈົ້າຊີວິດໃນການບໍລິຫານ ເມື່ອຍ້າຍມາຢູ່ວຽງຈັນການຄຸ້ມຄອງກໍສະດວກຂຶ້ນ.

- **ວຽງຈັນໃນຍຸກແຫ່ງຄວາມຮຸ່ງເຮືອງ**

ຫຼັງຈາກການຫາຍຕົວໄປ (ສິ້ນພະຊົນ) ຂອງເຈົ້າໄຊເຊດຖາທິລາດ ໃນປີ ຄ.ສ. 1572,ອານາຈັກລ້ານຊ້າງໄດ້ຕົກເຂົ້າສູ່ຍຸກວິກິດເປັນເວລາສອງທົດສະວັດ. ຄວາມສັບສົນວຸ້ນວາຍເກີດມີຂຶ້ນຍ້ອນປະເທດຊາດຂາດຜູ້ນຳທີ່ເຂັ້ມແຂງ ແລະບໍ່ໄດ້ຮັບການຍອມຮັບນັບຖືຈາກພົນລະເມືອງທຸກຊັ້ນຄົນ, ຍິ່ງກວ່ານັ້ນ, ຊົນຊັ້ນຂຸນນາງ ແລະຜູ້ປົກຄອງຫົວເມືອງຕ່າງໆ. ຜູ້ໃດກໍຢາກຂຶ້ນເປັນເຈົ້າປົກຄອງອານາຈັກລ້ານຊ້າງທາງດ້ານການທະຫານ, ດິນແດນພາກເໜືອຂອງປະເທດຖືກພະມ້າຍຶດຄອງ, ເຖິງຢ່າງໃດກໍຕາມ, ຫຼັງຈາກປີ ຄ.ສ.1593, ອຳນາດຂອງພະມ້າກໍຄ່ອຍໆອ່ອນລົງ ເພາະວ່າຜູ້ສືບບັນລັງຕໍ່ຈາກບາຍິນນອງບໍ່ມີສະມັດຖະພາບພຽງພໍໃນການບໍລິຫານ ຈຶ່ງເປັນໂອກາດໃຫ້ອານາຈັກສະຫຍາມ ແລະລ້ານຊ້າງປະກາດຄວາມເປັນເອກະລາດ. ຜົນທີ່ຕິດຕາມມາກໍຄື ໃນປີ ຄ.ສ. 1599,ຊາວລ້ານຊ້າງທີ່ໄດ້ຖືກກວາດຕ້ອນໄປ ແຕ່ສົງຄາມຄັ້ງກ່ອນກໍໄດ້ພາກັນຫຼົບໜີກັບຄືນບ້ານເກີດເມືອງນອນຂອງຕົນ ແຕ່ກໍໄດ້ມີຈຳນວນບໍ່ໜ້ອຍທີ່ໄດ້ຖືກຈັບສົ່ງຄືນໃຫ້ພະມ້າໂດຍເຈົ້າເມືອງຊຽງໃໝ່.

ຄວາມສັບສົນວຸ້ນວາຍໃນການສືບທອບບັນລັງຂອງອານາຈັກລ້ານຊ້າງຍັງຄົງສືບຕໍ່ເປັນໄປຢ່າງຕໍ່ເນື່ອງ ແລະທະວີຄວາມຮຸນແຮງທີ່ສຸດໃນລັດຊະການຂອງພະນ້ອມແກ້ວ (ໂອລົດຄົນທີສອງຂອງວໍລະວົງສາທຳມິກາລາວ) ເຊິ່ງຂຶ້ນຄອງລາດໃນ ຄ.ສ.1627. ປະຊາຊົນພົນລະເມືອງໃນເມືອງຫຼວງວຽງຈັນ ຈຳນວນໜຶ່ງເກີດມີຄວາມເບື່ອໜ່າຍຕໍ່ການຍາດຊີງບັນລັງລະຫວ່າງຄົນໃນລາຊະວົງ ຈຶ່ງພາກັນໜີອອກຈາກເມືອງໄປຕັ້ງຖິ່ນຖານໃໝ່ຢູ່ຕາມຝັ່ງຂອງເບື້ອງຕາເວັນຕົກລາມລົງໄປຈົນຮອດດິນກຳປູເຈຍ.

ເມື່ອຮອດລາຊະການຂອງເຈົ້າສຸລຍະວົງສາ ຫຼື ເຈົ້າສຸລິຍະວົງສາທຳມິກະລາດ ( 1638 – 1695)ຕໍ່ໄປຈະໃຊ້ຊື່ດຽວຄື: “ເຈົ້າສຸລິຍະວົງສາ ” ຄວາມສັບສົນວຸ້ນວາຍຕ່າງໆໃນພະລາຊະບັນລັງຈຶ່ງໄດ້ຖືກປັດກວາດ. ພະະອົງປັບປຸງລະບົບການປົກຄອງດ້ວຍການໃຫ້ອອກກົດໝາຍ ແລ້ວກໍຍຶກົດໝາຍເປັນຫຼັກໃນການບໍລິຫານ. ໃນດ້ານອື່ນພະອົງໄດ້ສົ່ງເສີມການຮ່ວມມື ແລະ ການຄ້າກັບ່າງປະເທດຕ່າງໆ. ໃນລາຊະການຂອງພະອົງ ສະພາບການບ້ານເມືອງມີຄວາມສະຫງົບ ແລະ ທ່ຽງໝັ້ນ; ປະຊາຊົນພົນລະເມືອງທ່າງເຮັດນາຄ້າຂາຍ. ເງື່ອນໄຂນີ້ໄດ້ເຮັດໃຫ້ອານາຈັກລ້ານຊ້າງມີຄວາມຮຸ່ງເຮືອງເຫຼືອງເຫຼື້ອມຈົນມີຊື່ສຽງທົ່ວສາລະທິດ.

## 2. ສະພາບປະຫວັດສາຂອງລາວສະໄໝອານາຈັກລ້ານຊ້າງເຊື່ອມໂຊມ

- **ລາຊະການເຈົ້າອະນຸ ຄສ 1804 – 1829**

ເມື່ອເຈົ້າອິນທະວົງສິ້ນພະຊົນແລ້ວ, ເຈົ້າອານຸວົງໄດ້ຂຶ້ນຄອງລາດແທນໃນປີ ຄ.ສ 1804ນັ້ນເອງ, ເຈົ້າອະນຸ ( ຫຼື ໃນສີລາເລກວັດສີສະເກດວຽງຈັນຮຽກວ່າ: ສົມເດັດເຈົ້າໄຊຍະເຊດຖາທິລາດ ທີ 3 ), ເກີດເມື່ອປີກຸນ ຄ.ສ 1767,ພະອົງເປັນກະສັດທີ່ກ້າຫານເຄີຍໄດ້ເຂົ້າສົງຄາມສູ້ຮົບກັບຂ້າເສິກສັດຕູຫຼາຍເທື່ອ ໂດຍສະເພາະແມ່ນໄລຍະທີ່ພະອົງດຳລົງຕຳແໜ່ງເປັນມະຫາອຸປະຮາດຢູ່ນັ້ນ.ເຈົ້າອານຸມີລາຊະບຸດ ແລະ ລາຊະທິດາຫຼາຍອົງຄື:

(1) ເຈົ້າສຸດທິສານ (ໂປ້)

(2) ເຈົ້າລາຊະວົງ (ເຫງົ້າ)

(3) ເຈົ້າລາຊະບຸດ (ໂຍ້)

(4) ເຈົ້າເດ້

(5) ເຈົ້າບົບ

(6) ເຈົ້າດວງຈັນ

(7) ເຈົ້າຄຳແພງ

(8) ເຈົ້າໝູຈີນ

(9) ເຈົ້າປານ

(10) ເຈົ້າສຸວັນນະຈັກ.

(11) ເຈົ້ານາງ ດາວັນ

(12) ເຈົ້ານາງ ວຽງຄຳ

(13) ເຈົ້າໄຊຍະສານ

(14) ເຈົ້າເຮືອ

(15) ເຈົ້າໝັ້ນ

(16) ເຈົ້າຊ້າງ

(17) ເຈົ້າຈິ່ງຄຳ

(18) ເຈົ້າຂັດຕິຍະ

(19) ເຈົ້າພຸດທະສາດ

(20) ເຈົ້າດີສະພົງ

ເມື່ອພະອົງໄດ້ຂຶ້ນຄອງບ້ານເມືອງແລ້ວກໍໄດ້ພະຍາຍາມທຳການຟື້ນຟູລາວລ້ານຊ້າງໃຫ້ຄືນສູ່ສະພາບປົກກະຕິຄື:

ໃນປີ ຄ.ສ. 1806, ພະອິງໄດ້ເລີ່ມນຳພາປະຊາຊົນສ້າງພະລາຊະວັງ ແລະ ຫໍໂຮງຂຶ້ນໃນຂະນະຄອນວຽງຈັນ.

ໃນປີ ຄ.ສ 1807, ໄດ້ສະເດັດໄປນຳພາປະຊາຊົນສ້າງ ແລະສະຫຼອງຂົວຢູ່ວັດທາດພະນົມ.

ໃນປີ ຄ.ສ 1808,ເລີ່ມປົວແປງເມືອງໜອງຄາຍໃຫ້ຈະເລີນຮຸ່ງເຮືອງ ແລະສ້າງວັດສີບຸນເຮືອງຂຶ້ນທີ່ໜອງຄາຍ.

ໃນປີ ຄ.ສ 1810, ນຳພາສ້າງຂົວຂ້າມແມ່ນ້ຳຂອງລະຫວ່າງບ້ານສີຊຽງໃໝ່ກັບວຽງຈັນ ແລະວຽງຈັນໃນປີ ຄ.ສ 1812ໄດ້ໄປສະຫຼອງວັດທາດພະນົມ.

ໃນປີ ຄ.ສ 1816, ໄດ້ສ້ອມແຊມຫໍພະແກ້ວ ແລະ ທຳບຸນສະຫຼອງຫໍພະແກ້ວພ້ອມທັງຫໍໄຕ.

ໃນປີ ຄ.ສ 1818,ໄດ້ສະເດັດໄປປາບກະບົດອ້າຍສາເກດໂງ້ງ ເມືອງຈຳປາສັກ, ໃນປີດຽວກັນນີ້ໄດ້ສ້າງວັດສະຕະສະຫັດສາລາມ (ວັດສີສະເກດ) ຂຶ້ນທີ່ວຽງຈັນ.

ເຖິງປີ ຄ.ສ 1821, ພະອິງຈຶ່ງຂໍຕັ້ງເຈົ້າລາຊະບຸດໂຍ້ ພະລາຊະບຸດຂອງພະອິງໃຫ້ເປັນເຈົ້ານະຄອນຈຳປາສັກແທນເຈົ້າໜານ້ອຍທີ່ໄປເສຍຊີວິດຢູ່ກຸງເທບ ແລະ ຕັ້ງເຈົ້າຄຳປ້ອມ ( ຜູ້ເປັນຫຼານ ), ໃຫ້ເປັນມະຫາອຸປາຮາດ. ເຈົ້າລາຊະບຸດໂຍ້ ເມື່ອໄດ້ເປັນເຈົ້ານະຄອນຈຳປາສັກແລ້ວ ກໍໄດ້ລົງມືສ້າງແປງບ້ານເມືອງຄື: ໄດ້ສ້າງກຳແພງເມືອງຈຳປາສັກ, ໄດ້ຂຸດຄອງອ້ອມເມືອງ ແລະ ສ້າງກຳແພງວັງຂຶ້ນໃໝ່. ນອກນັ້ນ ກໍໄດ້ສ້າງຫໍພະແກ້ວຂຶ້ນອີກ ແລະ ໄດ້ປ່ຽນວິທີເກັບສ່ວຍຈາກລາຊະດອນໃໝ່ ແລະ ທັງໄດ້ສ້າງເມືອງຄຳເກິ່ງໃຫ້ເປັນປ້ອມສຳລັບປ້ອງກັນສັດຕູເປັນຕົ້ນ.

ພະອິງເຄີຍເປັນແມ່ທັບຜູ້ກ້າຫານ, ເຄີຍໄດ້ເຮັດສົງຄາມຊ່ວຍເຫຼືອປະເທດສະຫຍາມມາຫຼາຍຄັ້ງ. ດັ່ງນັ້ນ, ເຈົ້າແຜ່ນດິນສະຫຍາມອົງທີ 2 ເຊິ່ງມີນາມວ່າ: ພະພຸດທະເລີດຫຼ້ານະພາໄລ ຈຶ່ງຊົງຮັກແພງສະໜິດສະໜົມກວ່າກະສັດອື່ນໆທີ່ເປັນປະເທດສະລາດຂອງສະຫຍາມໃນເວລານັ້ນ, ເຊິ່ງສະແດງອອກໃນການຖືກຮັບຕ້ອນເວລາພະອົງໄປຢ້ຽມຢາມບາງກອກເທື່ອສຸດທ້າຍດ້ວຍເຮືອຄຳ ແລະຖືກຫາມດ້ວຍຕັ່ງຟອກເງິນ.

## 2.1 ເຈົ້າອະນຸກຽມກອບກູ້ອິດສະຫຼະພາບ

ການຄົ້ນຄິດຫາຊ່ອງທາງກອບກູ້ອິດສະຫຼະພາບນັ້ນ ເຈົ້າອານຸໄດ້ກຽມມາດົນນານແລ້ວຕັ້ງແຕ່ເວລາດຳລົງຕຳແໜ່ງເປັນມະຫາອຸປະຮາດພຸ້ນ. ຕະຫລອດ 10 ປີ ທີ່ເຈົ້າອານຸເປັນເຈົ້າມະຫາອຸປະຮາດນັ້ນເພິ່ນໄດ້ຕັດສິນໃຈຕໍ່ສູ້ທ້ອນໂຮມລາວເພື່ອປະກາດອິດສະຫຼະພາບຕາມເສັ້ນທາງທີ່ເຈົ້ານັນທະເສນເຄີຍເຮັດມາ ແລະ ຕາມການແນະນຳຂອງເຈົ້າອິນທະວົງ, ທັງດຳເນີນນະໂຍບາຍເອົາໃຈສັກດິນາສະຫຍາມຢ່າງສຸດຄວາມສາມາດ. ເມື່ອພະອົງຂຶ້ນຄອງລາດທີ່ວຽງຈັນພະອົງກໍພະຍາມຍາມຟື້ນຟູປັບປຸງອານາຈັກໃຫ້ເຂັ້ມແຂງ. ຕົກມາຮອດປີ ຄ.ສ 1825,ເຫດການທຳມະຊາດໄດ້ເກີດຂຶ້ນທີ່ວຽງຈັນ ຄືໃນເດືອນ 5 ເກີດພະຍຸພັດຫໍພະທັກ, ເດືອນ 6 ເກີດພະຍຸພັດໂຮງຫຼວງເພ ແລະ ມາຮອດເດືອນ 8 ກໍເກີດແຜ່ນດິນໄຫວ; ໃນປີດຽວກັນນີ້ເອງເຈົ້າແຜ່ນດິນສະຫຍາມອົງທີ 2 (ອົງທີ່ຮັກແພງເຈົ້າອານຸ) ກໍ່ໄດ້ສິ້ນພະຊົນ ແລ້ວພະນັ່ງເກົ້າໄດ້ຂຶ້ນສະເຫວີຍລາດແທນ.

ໃນງານປົງສົບນີ້ ເຈົ້າອານຸສະເດັດໄປກຸງເທບພ້ອມດ້ວຍບ່າວໄພເສນາອາມາວຈຳນວນຫຼວງຫຼາຍ. ເມື່ອສຳເລັດການປົງສົບແລ້ວ, ເຈົ້າແຜ່ນດິນສະຫຍາມໄດ້ບັງຄັບໃຫ້ຄົນລາວທີ່ລົງໄປນຳເຈົ້າອານຸນັ້ນໄປຕັດຕົ້ນຕານທີ່ເມືອງສຸພັນບຸລີ ແລ້ວໃຫ້ແກ່ລົງໄປເມືອງສະໝຸດປາການເພື່ອສ້າງເປັນປ້ອມສູ້ຮົບຄືດັ່ງນັກວິຊາການໄທເວົ້າວ່າ: " ຊາວອັງກິດໃນເວລານັ້ນກໍໄດ້ຈົດຈຳວ່າ ຊາວລາວໄດ້ໄປເຮັດວຽກສັບທຸກຢູ່ປາກນ້ຳເຈົ້າພະຍາ ເພື່ອສ້າງກິດຈະກຳປ້ອງກັນທາງທະເລ, ຊາວຕ່າງດ້າວໃນສະໄໝນັ້ນໄດ້ເອີ້ນກິດຈະກຳນັ້ນວ່າ " " ປ້ອມລາວເພື່ອຮູ້ຮົບ ".

ກ່ອນທີ່ເຈົ້າອະນຸຈະກັບຄືນວຽງຈັນນັ້ນ ພະອົງໄດ້ທູນຂໍເອົາພວກລະຄອນລຳຜູ້ຍິງໃນວັງ ແລະ ຂໍເອົາເຈົ້າຍິງດວງຄຳເຊິ່ງເປັນນ້ອງສາວພ້ອມກັບຂໍເອົາຄອບຄົວຄົນລາວທີ່ຢູ່ເມືອງສະລະບູລີໃຫ້ຂຶ້ນມາວຽງຈັນຕາມການຮ້ອງຂໍ

ຂອງພວກເຂົາເຈົ້າ, ແຕ່ເຈົ້າແຜ່ນດິນສະຫຍາມບໍ່ໄດ້ອະນຸມັດໃຫ້ຈັກຢ່າງ. ພະອົງຈຶ່ງມີຄວາມມຸ່ງໝັ້ນໃນການກອບກູ້ເອົາເອກະລາດຍິ່ງຂຶ້ນ.

ໃນປີ ຄ.ສ 1826, ພາຍຫລັງເຈົ້າອະນຸສະເດັດກັບຈາກປະເທດສະຫຍາມແລ້ວພະອົງກໍ່ໄດ້ເຊີນພະບໍລິມວົງສານຸວົງ ແລະ ຂ້າລາຊະການຜູ້ໃຫຍ່ມາປຶກສາເພື່ອທຳການກູ້ອິດສະຫຼະພາບໃຫ້ພົ້ນຈາກຄວາມເປັນທາດ, ພະບໍລິມວົງສານຸວົງ ແລະ ຂ້າລາຊະການຜູ້ໃຫຍ່ທີ່ເຂົ້າປຶກສາມີ

(1) ເຈົ້າມະຫາອຸປະຣາດ (ຕິດສະ).

(2) ເຈົ້າສຸດທິສານ (ໂປ້)

(3) ເຈົ້າລາຊະວົງ (ເຫງົາ)

(4) ເຈົ້າລາຊະບຸດ (ໂຍ້)

(5) ເຈົ້າພະຍາເມືອງຈັນ

(6) ພະຍາເມືອງແສນ

(7) ພະຍາເມືອງກາງ

(8) ພະຍາເມືອງຊ້າຍ

(9) ປະລັດເມືອງແສນ

(10) ປະລັດເມືອງຈັນ

(11) ເພຍຊານົນກົມມະສັດສະດີ

ໃນເວລານັ້ນ ອານາຈັກວຽງຈັນມີຫົວເມືອງຂຶ້ນຢູ່ 79 ຫົວເມືອງ, ເຈົ້າອະນຸປຶກສາວ່າ: ເວລານີ້ໃນກຸງເທບມີແຕ່ເຈົ້ານາຍໜຸ່ມນ້ອຍຂຸນນາງຜູ້ໃຫຍ່ກໍມີໜ້ອຍ, ຝີມືຕີທັບຈັບເສິກກໍບໍ່ແຂງແຮງເໝືອນແຕ່ກ່ອນທັງເຈົ້າເມືອງນະຄອນລາຊະສີມາກໍບໍ່ຢູ່ຫົວເມືອງ, ຕາມທາງບໍ່ມີບ່ອນຂັດຂ້ອງ. ປະການໜຶ່ງພວກອັງກິດກໍ່ກຳລັງເຂົ້າມາກໍ່ກວນຢູ່ທາງພາກໃຕ້ຂອງສະຫຍາມ, ພະອົງຄິດວ່າສົມຄວນແລ້ວຈະທຳການແກ້ແຄ້ນ. ເຈົ້າອຸປະຣາດຕິດສະທັນຄັດຄ້ານວ່າເມືອງໄທເປັນເມືອງໃຫຍ່ ເຖິງແມ່ນວ່າເຮົາຕີໄດ້ແລ້ວເປັນຈະຕັ້ງຢູ່ບໍ່ໄດ້ ເພາະລາສະດອນຈະໂຮມກັນເຂົ້າເປັນກະບົດພວກເຮົາຈະໄດ້ຮັບຄວາມລຳບາກເໝືອນຢູ່ເທິງຂວາກເທິງໜາມ, ເຈົ້າອານຸຈຶ່ງຕອບວ່າ: ຖ້າເຮົາຮັກສາໄວ້ບໍ່ໄດ້ເຮົາກໍ່ຈະກວາດເອົາຄອບຄົວຄົນລາວຂຶ້ນມາໄວ້ວຽງຈັນແລ້ວຈັດການປ້ອງກັນຮັກສາດ່ານຊ່ອງແຄບທາງພູເຂົາໄວ້, ພວກໄທຈະບໍ່ສາມາດຂຶ້ນມາຕີພວກເຮົາໄດ້ເພາະທາງໄກ ແລະ ກັນດານຫຼາຍ, ການຈະສົ່ງສະບຽງອາຫານໃຫ້ກັນກໍ່ລຳບາກເຫັນທີ່ຈະຮັບໄຊຊະນະແນ່ນອນ.

ເມື່ອປຶກສາກັນແລ້ວ, ເຈົ້າອະນຸກໍໄດ້ແຕ່ງໃຫ້ເຈົ້າອຸປະຣາດຕິດສະເປັນແມ່ທັບຍົກກຳລັງໄປທາງເມືອງກາລະສິນ, ເມືອງຮ້ອຍເອັດ, ເມືອງສຸວັນນະພູມ, ເມືອງຂອນແກ່ນ, ເມືອງຊົນບົດ; ໃຫ້ເຈົ້າລາຊະບຸດ (ໂຍ້) ເຈົ້າເມືອງຈຳປາສັກລົງມາທາງເມືອງເຂັມມະລາດ, ເມືອງອຸບົນ, ເມືອງຍະໂສທອນ, ເມືອງສີສະເກດ, ເມືອງເດຈອຸດົມໃຫ້ກວາດຕ້ອນເອົາຄອບຄົວຢູ່ຫົວເມືອງເຫຼົ່ານັ້ນຂຶ້ນມາໄວ້ວຽງຈັນແລ້ວຍົກທັບໄປທັນກັນຢູ່ເມືອງໂຄລາດ, ພ້ອມກັນນັ້ນເຈົ້າອະນຸໄດ້ແຕ່ງພະລາຊະສານ ແລະ ເຄື່ອງມຸງຄຸນບັນນາການໃຫ້ນັກພູມິນກັບຂ້າລາຊະການ 50 ຄົນ, ຖືຂຶ້ນໄປຖວາຍເຈົ້າມັນທາຕຸລາດ (ເຈົ້າຄອງນະຄອນຫຼວງພະບາງ) ເພື່ອຊັກຊວນເກ້ຍກ່ອມໃຫ້ຮ່ວມມືກັນທຳການກູ້ຊາດ. ຕອນໜຶ່ງຂອງສານກ່າວວ່າ "...ຮ່ວມກຳລັງກັນບໍ່ໃຫ້ເມືອງລາວສືບຕໍ່ຂຶ້ນກັບສະຫຍາມ ແລະ ຖ້າສຳເລັດແລ້ວກໍຈະຖວາຍເມືອງລາວໃຫ້ເຈົ້າຊີວິດຫຼວງພະບາງເພື່ອໃຫ້ເມືອງລາວມີແຕ່ເຈົ້າດຽວ ແລະ ເປັນອັນໜຶ່ງອັນດຽວກັນເໝືອນດັ່ງແຕ່ກ່ອນ, ສ່ວນເຮົາເອງ(ເຈົ້າອະນຸ) ຈະໄປບວດຢູ່ວັດຄືເຈົ້າງຸ່ມ." ຝ່າຍເຈົ້າມັນທາຕຸລາດກໍ່ໄດ້ຕອບສະໜອງຕາມຄຳ

ຮຽກຮ້ອງຂອງເຈົ້າອະນຸຄືພະອິງໄດ້ສົ່ງກຳລັງພົນ ແລະສະບຽງອາຫານໄປເມືອງປາກລາຍເພື່ອເປັນກຳລັງໜູນທາງຝ່າຍເມືອງພວນເຈົ້ານ້ອຍຊຽງຂວາງກໍໄດ້ສົ່ງກຳລັງພົນມາຊ່ວຍເຈົ້າອະນຸເຊັ່ນດຽວກັນ.

## 2.2 ເຈົ້າອະນຸຍົກທັບຈາກວຽງຈັນ

ເມື່ອຕົກແຕ່ງກອງທັບຮຽບຮ້ອຍແລ້ວ, ເຈົ້າອນຸກໍຍົກທັບຫຼວງອອກຈາກວຽງຈັນຂ້າມນ້ຳຂອງໄປຕັ້ງຢູ່ບ້ານພັນພ້າວຝຶກແອບກອງທັບຢູ່ທີ່ນັ້ນ.ເຖິງເດືອນຍີ່ແຮມ ປີຈໍ ຄ.ສ 1827, ຈຶ່ງແຕ່ງໃຫ້ເຈົ້າລາຊະວົງເປັນແມ່ທັບໜ້າຄຸມທະຫານ3.000 ຄົນ, ຍົກລົງໄປນະຄອນລາຊະສີມາ, ໂດຍຕົວະວ່າ: ສົມເດັດເຈົ້າແຫ່ງກຸງເທບໃຫ້ເກນກອງທັບໄປລົບກັບອັງກິດ, ພະຍາຍົກກະບັດກໍເຊື່ອເປີກເຂົ້າໃຫ້ເຈົ້າລາຊະວົງຕາມປະສົງແລ້ວເຈົ້າລາຊະວົງຈຶ່ງໃຫ້ພະຍາເມືອງຂວາກັບພະຍາເມືອງຊຽງໃຕ້ຍົກກຳລັງໄປເມືອງລາຊະບູລີ. ສ່ວນເຈົ້າລາຊະວົງຍົກກຳລັງຕາມຫຼັງລົງໄປແລ້ວຕັ້ງຢູ່ບ້ານຂອນຂວາງ, ເຖິງເດືອນສາມແຮມ ໙ ຄ່ຳ (20.2.1827), ພະຍາເມືອງຂວາໄດ້ພາເອົາພະຍາສຸລະລາຊະວົງ ເຈົ້າເມືອງສະລະບູລີກັບຫຼວງພົນ ກອງຄຳ, ກອງຊຽງ, ກອງສິງ ຂຶ້ນມາເຝົ້າເຈົ້າລາຊະວົງຢູ່ບ້ານຂອນຂວາງ, ເຈົ້າລາຊະວົງສັ່ງວ່າດຽວນີ້ ພວກອັງກິດຈະຍົກເຂົ້າມາຕີກຸງເທບ, ໃຫ້ກວດຕ້ອນເອົາຄອບຄົວລາວທີ່ຢູ່ເມືອງສະລະບູລີ ຂຶ້ນໄປຢູ່ວຽງຈັນຈຶ່ງຈະພົ້ນໄພ, ພວກນາຍກອງ, ນາຍໝວດເມືອງສະລະບູລີກໍຈັດການຕາມສັ່ງ.

ຝ່າຍເຈົ້າອະນຸກັບເຈົ້າສຸດທິສານໄດ້ໂອກາດດີແລ້ວກໍ່ໄດ້ຍົກກຳລັງໄປຕາມຫຼັງ, ເຈົ້າລາຊະວົງໄປເຖິງເມືອງນະຄອນລາຊະສີມາ ໃນເດືອນ 3ແຮມ 6ຄ່ຳ (17.2.1827) ໄດ້ຢຸດຕັ້ງຢູ່ບຶງທະເລທາງຕາເວັນອອກເມືອງນະຄອນລາຊະສີມາ, ໄດ້ຕັ້ງຄ້າຍໃຫຍ່ 7ຄ້າຍ, ມີພົນຮົບປະມານ 80.000ຄົນ. ເວລານັ້ນພະຍານະຄອນລາຊະສີມາຜູ້ເປັນເຈົ້າເມືອງໄດ້ນຳກຳລັງອອກໄປເມືອງຂຸຂັນເພື່ອປາບປາມພວກຂະເໝນເມືອງຂຸຂັນ, ເຈົ້າອະນຸຈຶ່ງເຂົ້າຍຶດເອົາເມືອງນະຄອນລາຊະສີມາໄດ້ໂດຍງ່າຍ ແລ້ວສັ່ງໃຫ້ພະຍາພົມພັກດີຍົກກະບັດເມືອງນະຄອນລາຊະສີມາກວາດເອົາຊາວລາວຢູ່ເມືອງນະຄອນລາຊະສີມາຂຶ້ນວຽງຈັນໃຫ້ໝົດພາຍໃນເວລາ 4ວັນ, ພະຍາພົມພັກດີຍົກກະບັດປະຕິບັດຕາມ.

ຝ່າຍພະຍາປະລັດເມືອງນະຄອນລາຊະສີມາເຊິ່ງເປັນຜົວຂອງນາງໂມອອກໄປເມືອງຂັນນຳເຈົ້ານະຄອນລາຊະສີມາ, ເມື່ອໄດ້ຊາບຂາວວ່າເຈົ້າອະນຸກວາດເອົາຄອບຄົວລາວນະຄອນລາຊະສີມາໄປໝົດແລ້ວ ກໍຟ້າວກັບຄືນມາ ແລະ ເຂົ້າເຝົ້າເຈົ້າອະນຸວ່າຈະຂໍຕາມສະເດັດໄປຢູ່ວຽງຈັນ, ເຈົ້າອະນຸກໍອະນຸຍາດໃຫ້ພະຍາປະລັດກັບພະຍາພົມພັກດີຍົກກະບັດເຊິ່ງເປັນຊາວເມືອງນະຄອນລາຊະສີມາເປັນຜູ້ຄວບຄຸມຄົນອົບພະຍົບຂຶ້ນມາວຽງຈັນ. ພໍມາເຖິງທົ່ງສຳລິດກໍຕັ້ງພັກຄອບຄົວຢູ່ທີ່ນັ້ນ, ພະຍາປະລັດກັບນາງໂມ ແລະພະຍາພົມພັກດີຍົກກະບັດພ້ອມກັນລັກໜີໄປຫາກອງທັບຂອງພະຍານະຄອນເມືອງລາຊະສີມາແລ້ວນຳທະຫານເມືອງນະຄອນລາຊະສີມາເຂົ້າຕີຕຳຫຼວດລາວ 50ຄົນເຈົ້າອະນຸໄດ້ຊາບດັ່ງນັ້ນຈຶ່ງສັ່ງໃຫ້ເຈົ້າສຸດທິສານ, ເຈົ້າປານ, ເຈົ້າກຟ້າຄຸມທະຫານ 3.000ຄົນ ຂຶ້ນມາເມືອງນະຄອນລາຊະສີມາອີກ,ການຕໍ່ສູ້ໄດ້ດຳເນີນໄປຢ່າງແຂງແຮງ ສຸດທ້າຍກອງທັບພະຍານະຄອນລາຊະສີມາທີ່ມີອາວຸດ ແລະກຳລັງເໜືອກວ່ານັ້ນກໍສາມາດຍຶດເອົາພວກຄົວເມືອງໂຄລາດນັ້ນຄືນໄດ້ແລ້ວຕັ້ງທັບຢູ່ທົ່ງສຳລິດເພື່ອຕີໜາບດ້ານຫຼັງຂອງກອງທັບວຽງຈັນ. ດັ່ງນັ້ນ, ເຈົ້າສຸດທິສານຈຶ່ງໄດ້ຖອນທັບຄືນໄປທູນພະລາຊະບິດາຂອງຕົນ.

## 2.3 ເຈົ້າອະນຸຖອຍທັບ

ເມື່ອເຈົ້າລາຊະວົງໄດ້ກວາດຫົວເມືອງສະລະບູລີຂຶ້ນມາເຖິງໂຄລາດຈຶ່ງເຂົ້າເຝົ້າພະບິດາ. ພໍດີເວລານັ້ນຊາບວ່າທາງກຸງເທບພວມຍົກກອງທັບໃຫຍ່ຂຶ້ນມາປາບຈຶ່ງປຶກສາກັນວ່າຖ້າຈະຕັ້ງທັບຮັບຢູ່ເມືອງນະຄອນລາຊະສີມາກໍຢ້ານຖືກຕີຂະໜາບ, ຫາກຂຶ້ນໄປຖອຍຕັ້ງຮັບຢູ່ເມືອງໜອງບົວລຳພູເຫັນຈະດີກວ່າ. ສະນັ້ນ ເຈົ້າອະນຸຈຶ່ງຖອຍທັບຄືນມາຕັ້ງຢູ່ເມືອງໜອງບົວລຳພູປ່ອຍຄອບຄົວເມືອງນະຄອນລາຊະສີມາໃຫ້ກັບຄືນໄປ. ສ່ວນເຈົ້າລາຊະວົງໃຫ້ຍົກຂຶ້ນໄປທາງເມືອງຫຼົ່ມສັກ.ເຈົ້າອະນຸຖອຍທັບຂຶ້ນຕັ້ງຢູ່ເມືອງໜອງບົວລຳພູໃນເດືອນ 4ແຮມ 11ຄ (23.3.1827) ແລ້ວຕັ້ງຄ້າຍຢູ່ພູເຂົ້າສານບ່ອນທາງສອງແຍກທີ່ຈະມາວຽງຈັນ, ໃຫ້ພະຍາສຸໂພກັບຊານົນເປັນນາຍທັບ. ຄ້າຍພ້ອມດ້ວຍ

ທະຫານ 20.000 ຄົນ, ໃຫ້ພະຍານາລົນຕັ້ງຄ້າຍຢູ່ໜອງບົວລຳພູເຊິ່ງມີທະຫານ 9ຄົນ, ໃຫ້ພະຍາຊຽງສາຕັ້ງຄ້າຍຢູ່ບ້ານສະໜົມ, ໃຫ້ພະຍາກອງຄຳຕັ້ງຄ້າຍຢູ່ຊ່ອງງົວແຕກສ່ວນເຈົ້າອຸປະຮາດຕິດຕັ້ງຄ້າຍຢູ່ເມືອງສຸວັນນະພູມ.

- **ກອງທັບສະຫຍາມມາຕໍ່ສູ້**

ຝ່າຍເຈົ້າແຜ່ນດິນປະເທດສະຫຍາມ ຫຼັງຈາກເຈົ້າລາຊະວົງໄດ້ໄປກວາດຕອນເອົາຄອບຄົວເມືອງສະລະບູລີໄປໝົດແລ້ວຈຶ່ງຊາບຈາກພະສຸລິຍະພັກດີວ່າກອງທັບລາວຈະຍົກລົງໄປຕີກຸງເທບ . ພະອົງສັ່ງໃຫ້ຈັດການປ້ອງກັນພະນະຄອນເປັນການໃຫຍ່, ໃຫ້ຕັ້ງຄ້າຍລ້ອມພະນະຄອນໄວ້ແຕ່ທົ່ງງົວພອງ (ຫົວລຳໂພງ) ໄປຈົນເຖິງທົ່ງບາງກະປິ, ແລ້ວໃຫ້ເກນເອົາພົນເສີກຈາກເມືອງຝ່າຍໃຕ້, ຝ່າຍເໜືອເຂົ້າມາໂຮມກັນໃນວັນທີ 3ມີນາ 1827,ຈາກນັ້ນ ຈຶ່ງໃຫ້ກົມພະລາຊະວັງບໍວອນສະຖານມົງຄົນເປັນແມ່ທັບຍົກຂຶ້ນມາທາງສະລະບູລີ, ຕັ້ງທັບຢຶດທ່າເຮືອເຂົາພະພຸດທະບາດເພື່ອຄອຍຖ້າທັບຈາກຫົວເມືອງຕ່າງໆ, ເມື່ອທັບທັງຫຼາຍມາພ້ອມກັນແລ້ວ ກົມພະລາຊະວັງບໍວອນແມ່ທັບໃຫຍ່ຈຶ່ງແຕ່ງໃຫ້ພະຍາແສນສາກອນ, ພະຍາກາລະໂຫມລາຊະເສນາ, ພະຍາວິໄຊຍະຮົບທະລາ, ພະຍານະລົງວິໄຊເປັນແມ່ທັບໜ້າທີ່ 1,ກົມໝື່ນພະເລດໂຍທິນ, ກົມໝື່ນເສນີບໍລິລັກເປັນທັບໜ້າທີ 2,ກົມໝື່ນເສນີເທບເປັນກາງ, ກົມໝື່ນນະລານຸຊິດກັບກົມໝື່ນສະຫວັດວິໄຊເປັນປີກຊ້າຍປີກຂວາ, ກົມໝື່ນລາມອິດສະເລດ, ກົມໝື່ນທິເບດບໍວອນ, ກົມໝື່ນເທບພິນພັກດີ, ພະນະເລນທອນລາຊາເປັນແມ່ທັບຍົກຂຶ້ນມາທາງດົງພະຍາໄພເພື່ອບຸກຕີກອງທັບເຈົ້າອະນຸ. ໃຫ້ພະຍາມະຫາໂຍທາຄຸມກອງທັບມອນຂຶ້ນມາທາງດົງພະຍາກາງ, ໃຫ້ພະຍາອະໄພພູທອນຄຸມທະຫານຫົວເມືອງຝ່າຍເໜືອ 3.000 ຄົນ ຂຶ້ນມາທາງເມືອງພິສະນຸໂລກ ເພື່ອບຸກຕີກອງທັບເຈົ້າລາຊະວົງທີ່ຕັ້ງຢູ່ເມືອງຫຼົ່ມມສັກ, ໃຫ້ພະຍາລາຊານິກຸນ, ພະຍາລາມຄຳແຫງ, ພະຍາລອງເມືອງ, ພະຍາຈັນທະບູລີ ຍົກທັບເມືອງຕະບອງຂຶ້ນມາທາງພາກສຸລິນ, ແລະ ໃຫ້ຂຶ້ນມາທາງເມືອງປາຈີນ, ເມືອງປະຈັນຕະຄາມອີກຈຳນວນ 4ທັບຄືທັບພະຍາລາຊະສຸພາວະດີ, ທັບເຈົ້າພະຍາພະລະຄັງ, ທັບກົມໝື່ນພິຊິດພູເບນ ແລະ ທັບໝື່ນສຸລິນທະລະລັກເພື່ອເຂົ້າຕີທັບເຈົ້າອຸປະຮາດທີ່ຕັ້ງຢູ່ເມືອງສຸວັນນະພູມ.

ເຖິງເດືອນ 5ແຮມ, ຄ.ສ 1827, ກອງທັບຫຼວງຂອງສະຫຍາມກໍຍົກມາເຖິງເມືອງນະຄອນລາຊະສີມາ. ຈາກນັ້ນກົມພະລາຊະວັງບໍວອນແມ່ທັບໃຫຍ່ຂອງສະຫຍາມຈຶ່ງແຕ່ງໃຫ້ພະຍາລາຊະສຸພາວະດີເອົາທະຫານ 6.000ຄົນ, ຍົກຂຶ້ນມາທາງເມືອງຈຳປາສັກ, ພໍມາເຖິງເມືອງພິມາຍ (ໃນຂົງເຂດແຂວງ ນະຄອນລາຊະສີມາ) ກໍປະທະກັບກອງທັບຂອງເຈົ້າໂຖງ. ການສູ້ຮົບແກ່ຍາວຫຼາຍວັນເຫັນວ່າກຳລັງທະຫານສະຫຍາມຫຼາຍກວ່າກອງທັບຂອງເຈົ້າໂຖງກໍປະຄ້າຍແຕກຄອຍຄືນມາເມືອງສຸວັນນະພູມເພື່ອສົມທົບກັບກອງທັບເຈົ້າອຸປະຮາດ, ພະຍາລາຊະສຸພາວະດີຈຶ່ງຍົກທັບມາຕັ້ງຢູ່ເມືອງຂອນແກ່ນແລ້ວມີໜັງສືໄປຫາເຈົ້າອຸປະຮາດວ່າເມື່ອເຈົ້າອຸປະຮາດລົງໄປກຸງເທບແຕ່ເມື່ອກ່ອນເຄີຍເວົ້າວ່າ: " ເຈົ້າອະນຸຈະເປັນກະບົດນັ້ນບັດນີ້ສົມຈິງແລ້ວຂໍໃຫ້ເຈົ້າອຸປະຮາດໄປຕີວຽງຈັນໃຫ້ໄດ້, ທັບຫຼວງຈະຂຶ້ນໄປໂດຍສະດວກ ແລະ ເຮົາຈະຍົກໜູນເຈົ້າອຸປະຮາດໄປ". ຄັນເຈົ້າອຸປະຮາດໄດ້ຮັບໜັງສືນີ້ແລ້ວກໍມີພະໄທສົງໄສຫຼາຍເພິ່ນຄິດວ່າການທີ່ພະຍາລາຊະສຸພາວະດີມີໜັງສືມາເຖິງນັ້ນຈະເປັນອຸບາຍໃຫ້ເຈົ້າອະນຸສົງໄສຕົນແທ້, ແຕ່ເຈົ້າອຸປະຮາດເຫັນວ່າຈະອຳໄວ້ບໍ່ໄດ້ ເພິ່ນຈຶ່ງສົ່ງໜັງສືໄປຖວາຍ ເຈົ້າອານຸເພື່ອໃຫ້ພະອົງເຫັນວ່າໄທຍຸຍົງໃຫ້ແຕກກັນ.

ຝ່າຍເຈົ້າອຸປະຮາດຄັນໄດ້ສົ່ງໜັງສືນັ້ນມາຖວາຍເຈົ້າອະນຸແລ້ວກໍຖອຍກອງທັບມາຕັ້ງຢູ່ໜອງຫານ, ກອງທັບພະຍາລາຊະສຸພາວະດີຍົກນຳຂຶ້ນມາເມືອງຍະໂສທອນ, ເຈົ້າເມືອງຍະໂສທອນໄດ້ອອກຕໍ່ສູ້ຢ່າງແຂງແຮງແຕ່ກໍສູ້ຕ້ານກອງທັບສະຫຍາມບໍ່ໄດ້ຈຶ່ງແຕກຖອຍຄືນມາ.

## 2.4 ສະໜາມຮົບໜອງບົວລຳພູ

- **ກອງທັບລາວຖືກຕີຖອຍຈາກຄ້າຍໜອງບົວລຳພູ**

ກອງທັບຫຼວງຂອງໄທໄດ້ແຕ່ງໃຫ້ພະຍາແສນຍາກອນ, ພະຍາກະລາໂໝລາຊະເສນາ, ພະຍາວິໄຊຍະບູລິນທະລາ, ພະຍານະລິງຄະວິໄຊ ແລະ ໝ່ອມເຈົ້າຊຸນເນຖຸມຄົນໂທດເປັນກອງໂຈນ ລວມມີ 8.400ຄົນໃຫ້ເປັນທັບໜ້າຍົກຂຶ້ນມາບຸກຕີຄ້າຍໜອງບົວລຳພູ, ກອງທັບສະຫຍາມທັງ5ທັບໄດ້ບຸກຕີຄ້າຍຂອງພະຍານະລິນໃນວັນອັງຄານ ວັນທີ 1ເດືອນພຶດສະພາ ປີ 1827. ພະຍານະລິນ (ແມ່ນທັບລາວ)ໄດ້ນຳກຳລັງໄປຕໍ່ສູ້ຢ່າງແຂງແຮງ ແລະໄດ້ຂ້າຟັນພວກທະຫານສະຫຍາມລົ້ມຕາຍລົງເປັນຈຳນວນຫຼວງຫຼາຍ, ແມ່ທັບໃຫຍ່ຂອງສະຫຍາມຜູ້ໜຶ່ງຊື່ພະຍາກຽດຖືກພະຍານະລິນຟັນຕາຍ. ແຕ່ເນື່ອງຈາກວ່າທະຫານສະຫຍາມມີກຳລັງຫຼາຍກວ່າ ແລະ ມີກອງໜູນຫຼັ່ງມາເພີ່ມບໍ່ຂາດ, ມາເຖິງວັນສຸກທີ 4ເດືອນພຶດສະພາ ປີ 1827, ຄ້າຍຂອງພະຍານະລິນເຖິຍແຕກ, ທະຫານສະຫຍາມຈັບພະຍານະລິນໄດ້ແລ້ວສົ່ງໄປໃຫ້ກົມລາຊະວັງບໍວອນເຈົ້າແມ່ທັບໃຫຍ່, ກົມລາຊະວັງບໍວອນເຫັນຝີມືພະຍານະລິນເກັ່ງກ້າ ຈຶ່ງຖາມວ່າ “ ຈະຍອມອ່ອນນ້ອມ ຫຼືບໍ່ຖ້າຍອມອ່ອນນ້ອມຈະລ້ຽງໄວ້ ” ແຕ່ພະຍານາລິນໄດ້ຕອບວ່າ: “ ເປັນຊາຍຊາດທະຫານຖ້າເສຍທີແລ້ວກໍຕ້ອງຕາຍ ” ເຈົ້າແມ່ທັບສະຫຍາມຈຶ່ງເອົາຊ້າງແທງພະຍານະລິນໃຫ້ສິ້ນຊີວິດ. ເມື່ອກອງທັບສະຫຍາມຕີຄ້າຍຂອງພະຍານະລິນໄດ້ແລ້ວກໍຍົກມາຕັ້ງຢູ່ທົ່ງສົ້ມປ່ອຍໄກຈາກຊ່ອງເຂົ້າສານປະມານ 10ກິໂລແມັດ.

ກອງທັບສະຫຍາມອີກ3ກອງຄື ກອງທັບເຈົ້າພະຍາອະໄພພູທອນ, ກອງພະຍາເພັດພິໄຊ ແລະ ກອງພະຍາໄກໂກສາໄດ້ຍົກຂຶ້ນມາຕີກອງທັບເຈົ້າລາຊະວົງທີ່ເມືອງຫຼົ່ມສັກ, ເຈົ້າລາຊະວົງໄດ້ນຳກຳລັງຕໍ່ສູ້ປ້ອງກັນຢູ່ຫຼາຍວັນ ເຫັນຈະປ້ອງກັນໄວ້ບໍ່ໄດ້ຈຶ່ງຖອຍລົງມາຫາພະບິດາຢູ່ທີ່ຊ່ອງເຂົ້າສານເມືອງໜອງບົວລຳພູ, ຝ່າຍເຈົ້າອະນຸເມື່ອໄດ້ຊາບວ່າຄ້າຍຂອງພະຍານະລິນເສຍໃຫ້ແກ່ສະຫຍາມແລ້ວກໍ່ແຕ່ງໃຫ້ພະຍາສຸໂພ, ພະຍາຊານົນຮັກສາຄ້າຍ. ສ່ວນພະອົງກັບເຈົ້າລາຊະວົງ ແລະ ເຈົ້າສຸດທິສານຟ້າວຖອນຄືນມາວຽງຈັນ ເພື່ອຈັດການປ້ອງກັນພະນະຄອນ.

- **ການປິດລ້ອມກອງທັບສະຫຍາມທີ່ທົ່ງລົ້ມປ່ອຍ**

ຝ່າຍພະຍາສຸໂພ,ພະຍາຊານົນເມື່ອໄດ້ຊາບຂ່າວວ່າກອງທັບສະຫຍາມຕີຄ້າຍຂອງພະຍານະລິນແຕກແລ້ວກໍຍົກທັບມາຕັ້ງຢູ່ທົ່ງສົ້ມປ່ອຍ, ຈຶ່ງມີໜັງສືໄປຫາພະຍາຊຽງສາ, ພະຍາກອງຄຳໃຫ້ຍົກຕີຕ້ານສົ້ມປ່ອຍ, ເມື່ອນັດກັນພ້ອມແລ້ວກອງທັບລາວທັງ 3ກອງ, ຍົກມາລ້ອມກອງທັບສະຫຍາມຢູ່ທີ່ທົ່ງສົ້ມປ່ອຍທັງ 3ດ້ານ. ພວກສະຫຍາມຍົກອອກມາຕໍ່ສູ້ກໍຖືກທະຫານລາວຕີແຕກຖອຍເຂົ້າໄປໃນຄ້າຍ. ແຕ່ນັ້ນມາທະຫານສະຫຍາມກໍບໍ່ກ້າອອກມາລັບກາງເດີນໄດ້, ກອງທັບລາວຈຶ່ງຕັ້ງລ້ອມໄວ້ 7ວັນ, ເຮັດໃຫ້ພວກສະຫຍາມອຶດອາຫານ ແລະ ລົ້ມຕາຍລົງຢ່າງຫຼວງຫຼາຍ, ຄ້າຍສະຫຍາມທີ່ທົ່ງສົ້ມປ່ອຍເກືອບຈະແຕກຢູ່ແລ້ວ, ພໍດີເວລານັ້ນກອງທັບສະຫຍາມບັນຊາໂດຍກົມໝື່ນເສນີບໍລິລັກໄດ້ຍົກມາຕີກອງທັບລາວທາງດ້ານຫຼັງ, ກອງທັບລາວຈຶ່ງໄດ້ຫັນກຳລັງມາຕໍ່ສູ້ກອງທັບຂອງກົມໝື່ນເສນີບໍລິລັກ ດັ່ງນັ້ນ, ພວກທະຫານສະຫຍາມທີ່ຢູ່ໃນຄ້າຍຈຶ່ງແຕກອອກໄດ້. ເຖິງວັນອາທິດ ວັນທີ13ເດືອນພຶດສະພາປີ 1827, ກອງທັບລາວທີ່ຕັ້ງລ້ອມທັບໄທສະຫຍາມໄວ້ນັ້ນກໍແຕກແຍກກັນໄປຄົນລະທາງ. ກອງທັບຂອງພະຍາຊຽງສາໄດ້ຖອຍມາຕັ້ງຢຢູ່ບ້ານໂພນຊຽງຫວ່າງແຄມຫ້ວຍຫຼວງເມືອງໂພນພີໄສ.

- **ນະຄອນຫຼວງວຽງຈັນຖືກຍຶດ ແລະທຳລາຍໂດຍສະຫຍາມ**

ເມື່ອກອງທັບລາວທີ່ຕັ້ງຢູ່ຊ່ອງພູເຂົ້າສານຖອຍໜີໝົດແລ້ວກອງທັບສະຫຍາມຈຶ່ງຍົກຂ້າມພູລົງມາ. ຝ່າຍເຈົ້າອະນຸເມື່ອຊາບວ່າຄ້າຍພູເຂົ້າສານເສຍແລ້ວກໍພາພະລາຊະໂອລົດ, ພະລາຊະທິດາ ແລະ ມະເຫສີຂີ່ເຮືອລ່ອງນ້ຳຂອງລົງໄປແລ້ວຂຶ້ນໄປເມືອງມະຫາໄຊກອງແກ້ວ. ຈາກນັ້ນກໍຂ້າມຊາດແດນໄປພັກເຊົາຢູ່ເມືອງເງ້ອານ (ປະເທດຫວຽດນາມ) ພ້ອມດ້ວຍພະບໍລິມວົງສານຸວົງ ຄື: ເຈົ້າລາຊະວົງ, ເຈົ້າສຸດທິສານ, ເຈົ້າໄຊຍະສານ, ເຈົ້າເສືອ, ເຈົ້າ

ເຖື່ອນ, ເຈົ້າໝັ້ນ, ເຈົ້າຊ້າງ, ເຈົ້າອິງຄໍາ, ເຈົ້າຂັດຕິຍະ ເຈົ້າພຸດທະຊາດ, ເຈົ້າດິດສະພັງ, ເຈົ້າເຕ້, ເຈົ້າໜູຈີນ, ເຈົ້າສຸພັນ ກັບບຸດເຈົ້າອຸປະຮາດຊື່ ເຈົ້າເອບ, ເຈົ້າປານ, ເຈົ້າສຸພົມ, ເຈົ້າອິງ ແລະ ມານດາຂອງເຈົ້າອຸທະຮາດອີກດ້ວຍ.

ສ່ວນເມືອງວຽງຈັນພາຍຫຼັງທີ່ເຈົ້າອະນຸສະເດັດໜີໄປ 5ວັນ, ກອງທັບໄທສະຫຍາມກໍຍົກມາເຖິງເມືອງພັນພ້າວ ແລະຂ້າມມາຢຶດເອົາວຽງຈັນ, ທະຫານສະຫຍາມໄດ້ທໍາການປຸ້ນເກັບກວາດເອົາຊັບສິນບັດ ແລະເຄື່ອງຂອງອັນລໍ້າຄ່າຢູ່ພະລາຊະວັງ ແລະທົ່ວເມືອງວຽງຈັນໄປໝົດ.ຈາກນັ້ນ ກໍສັ່ງໃຫ້ຕັດຕົ້ນໄມ້ກິນໝາກ, ທໍາລາຍກໍາແພງເມືອງຖິ້ມໝົດ.

## 2.5 ເຈົ້າອະນຸເຂົ້າຢຶດເອົາວຽງຈັນຄືນ

ພາຍຫຼັງກວາດຕ້ອນເອົາປະຊາຊົນ ແລະ ຊັບສິນຂອງຊາວວຽງຈັນລົງໄປກຸງເທບແລ້ວ, ເຈົ້າແຜ່ນດິນສະຫຍາມຍັງໄດ້ເວົ້າໃຫ້ແມ່ທັບນາຍກອງວ່າ " ຕົວເຈົ້າອະນຸຍັງຈັບບໍ່ໄດ້ຈະກັບມາຕັ້ງບ້ານເມືອງອີກປະການໃດກໍຍັງບໍ່ແຈ້ງ, ເມືອງວຽງຈັນບໍ່ຄວນເອົາໄວ້ເປັນເມືອງອີກ ".

ໂດຍຕອບສະໜອງຕາມຄວາມປະສົງຂອງເຈົ້າແຜ່ນດິນສະຫຍາມ, ພະຍາລາຊະສຸພາວະດີຈຶ່ງຍົກທັບມາມ້າງເພເມືອງວຽງຈັນອີກໃນເດືອນ 7. 1828, ໂດຍຍົກທັບຂຶ້ນມາທາງເມືອງໜອງບົວລໍາພູແລ້ວແຕ່ງໃຫ້ພະຍາລາດລອງເມືອງ, ພະຍາພິໄຊສົງຄາມ, ພະຍາທຸກຂະລາດ, ພະຍານະຄອນລາຊະສີມາ ແລະ ຫຼວງເລນທະລະວິຊິດຄຸມທະຫານ 500ຄົນ, ຍົກມາຢູ່ເມືອງພັນພ້າວກ່ອນແລ້ວພະຍາລອງເມືອງຈຶ່ງໃຫ້ພະຍາພິໄຊສົງຄາມ, ພະຍາທຸກຂະລາດກັບຫຼວງສຸເລນທະລະວິຊິດຄຸມທະຫານ 300ຄົນ, ຂ້າມມາວຽງຈັນ ແລະໄດ້ຕັ້ງທັບຢູ່ວັດກາງ (ບໍລິເວນທີ່ໂຮງແຮມລ້ານຊ້າງຕັ້ງຢູ່ໃນປະຈຸບັນ).

ຝ່າຍເຈົ້າອະນຸເມື່ອໄປເຖິງດາຍຫວຽດແລ້ວກໍໄດ້ໄປຂໍຄວາມຊ່ວຍເຫຼືອຈາກແມ່ທັບໃຫຍ່ຂອງດາຍຫວຽດ, ຫວຽດຈຶ່ງໄດ້ແຕ່ງກໍາລັງພົນ 20.000 ຄົນ, ມາຕັ້ງຢູ່ເມືອງຕາມດອງ ແລະ ສົ່ງສານສະບັບໜຶ່ງໄປຫາແມ່ທັບໄທ (ພະຍາລາຊາສຸພາວະດີ). ສານບາງຕອນກ່າວວ່າ " ເມືອງວຽງຈັນກັບກຸງເທບເປັນເມືອງໄມຕີສະໜິດປຽບເໝືອນຮີມສົບກັບແຂ້ວບໍ່ພໍ້ເຫດອັນໃດ, ເຫດໃດຈຶ່ງຍົກທັບຂຶ້ນມາທໍາລາຍເມືອງວຽງຈັນເສຍໃຫ້ໄພ່ບ້ານພົນລະເມືອງແຕກຕື່ນໄປ " ແລະ ຕອນທ້າຍຂອງສານໄດ້ກ່າວວ່າ " ໜັງສື ນີ້ແຈ້ງໃຫ້ທ່ານຍົກກອງທັບກັບໄປຢູ່ແດນຂອງທ່ານ ແລະ ທ່ານກວາດເອົາຄອບຄົວແດນແກວໄປເທົ່າໃດຂໍໃຫ້ສົ່ງມາທາງໄມຕີຈະໄດ້ຮອບຄອບຍືນນານສະເໝີໄປ ". ແຕ່ຕໍ່ມາກໍ່ບໍ່ມີເຫດການຫຍັງເກີດຂຶ້ນ.

ເມື່ອເຈົ້າອະນຸປະທັບຢູ່ເງ້ອານ (ຫວຽດນາມ) ໄດ້ 1ປີກວ່າກໍກະກຽມຈະກັບຄືນມາວຽງຈັນ. ເວລານັ້ນ ເຈົ້າແຜ່ນດິນຫວຽດນາມໄດ້ໃຫ້ຄໍາໝັ້ນສັນຍາວ່າຈະສົ່ງທູດຖືພະລາຊະສານຂອງຕົນໄປຖວາຍເຈົ້າແຜ່ນດິນສະຫຍາມເພື່ອຂໍໂທດໃຫ້ເຈົ້າອະນຸເອງ.

ເຈົ້າອະນຸພ້ອມດ້ວຍລາຊະວົງໄດ້ກັບຄືນມາວຽງຈັນພ້ອມທະຫານລາວ 1.000 ກວ່າຄົນ ແລະ ທະຫານຫວຽດນາມ 80ຄົນ, ພະອົງໄດ້ນໍາກໍາລັງໄປພັກຢູ່ຫໍພະແກ້ວ.ເວລານັ້ນ ກອງທັບສະຫຍາມໄດ້ ດູຖູກຢຽບຢໍ່ຄົນລາວທັງບໍ່ໃຫ້ເຂົ້າກິນ ແລະ ໄດ້ເອົາປືນຍິງທະຫານລາວຕື່ມອີກ, ເຈົ້າອະນຸເກີດຄວາມໂກດແຄ້ນທີ່ສຸດຈຶ່ງນໍາກໍາລັງປິດລ້ອມໂຈມຕີຢ່າງແຂງແຮງເຮັດໃຫ້ທະຫານໄທ 300ຄົນ ຖືກຂ້າຕາຍເກືອບໝົດ, ລອດຕາຍ 45ຄົນ.ເມື່ອຮູ້ຂ່າວນີ້ກອງທັບສະຫຍາມທີ່ຕັ້ງຄ້າຍຢູ່ເມືອງພັນພ້າວ ກໍຟ້າວປົບໜີອອກຈາກຄ້າຍ, ຝ່າຍເຈົ້າອະນຸໄດ້ຊາບຂ່າວກອງທັບເຈົ້າພະຍາລາຊະສຸພາວະດີຍົກໜີຈາກເມືອງພັນພ້າວແລ້ວ ຈຶ່ງໃຫ້ທະຫານຂ້າມໄປມ້າງເພ " ພະເຈດີປາບວຽງ " ທີ່ແມ່ທັບໃຫຍ່ຂອງສະຫຍາມສ້າງໄວ້ຢູ່ເມືອງພັນພ້າວແລ້ວເຊີນພະເສີມມາໄວ້ທີ່ເມືອງວຽງຈັນຄືເກົ່າ.

ສ່ວນເຈົ້າລາຊະວົງຍົກກອງທະຫານນຳຕີກອງທັບສະຫຍາມໄປທັນຢູ່ບ້ານຫົວບົກຫວານ. ເມືອງໜອງຄາຍໃນວັນທີ 18ຕຸລາ1828, ໄດ້ສູ້ຮົບກັນຈົນຖຸງຕົວ, ແຕ່ກອງທັບຂອງເຈົ້າລາຊະວົງມີທະຫານໜ້ອຍ, ເຈົ້າລາຊະວົງຂີ່ມ້າເອົາຫອກແທງເຈົ້າພະຍາລາຊະສຸພາວະດີຖືກທ້ອງນ້ອຍ, ເຈົ້າພະຍາລາຊະສຸພາວະດີລົ້ມລົງ, ຫຼວງພິຊິດນ້ອງເຈົ້າພະຍາລາຊະສຸພາວະດີແລ່ນເຂົ້າມາຊ່ວຍ, ເຈົ້າລາຊະວົງຈຶ່ງຫັນໜ້າມາສູ້ຫຼວງພິຊິດ ແລະ ເອົາດາບຟັນຫຼວງພິຊິດຕາຍກັບບ່ອນ, ພໍຈະໂດດເຂົ້າຟັນເຈົ້າພະຍາລາຊະສຸພາວະດີອີກ, ນາຍທະຫານໄທຄົນໜຶ່ງໄດ້ຍິງປືນມາຖືກຫົວເຂົ່າເຈົ້າລາຊະວົງລົ້ມລົງ, ພວກທະຫານລາວຈຶ່ງເຂົ້າມາຫາມເອົາເຈົ້າລາຊະວົງຫຼົບໜີອອກມາ. ເມື່ອມາຮອດວຽງຈັນຈຶ່ງເຂົ້າປຶກສາກັບພະລາຊະບິດາເວລານີ້ທະຫານຂອງເຮົາຍັງເຫຼືອໜ້ອຍເຫັນວ່າຈະສູ້ ແລະ ຕ້ານທານກັບທະຫານສະຫຍາມບໍ່ໄດ້, ຄວນປະເມືອງແລ້ວໜີໄປປະເທດດາຍຫວຽດອີກ. ເມື່ອປຶກສາກັນແລ້ວເຈົ້າອະນຸກໍພາຄອບຄົວໜີຈາກນະຄອນວຽງຈັນອີກໃນເດືອນ 11ອອກໃຫມ່ 11ຄ່ຳ, ກົງກັບວັນທີ 19ເດືອນ 10ເວລາ ຂ້ອນແຈ້ງ, ສ່ວນເຈົ້າລາຊະວົງຂີ່ເຮືອລ່ອງລົງໄປເມືອງມະຫາໄຊກອງແກ້ວ.

ຝ່າຍພະຍາລາຊະສຸພາວະດີເມື່ອລຸກຂຶ້ນໄດ້ກໍເບິ່ງເຫັນບາດບໍ່ເຂົ້າເລິກກໍ່ເອົາຢາໃສ່ ແລ້ວໃຫ້ທະຫານຕາມນຳກອງທັບເຈົ້າລາຊະວົງມາ, ເມື່ອເຖິງເມືອງພັນພ້າວຈຶ່ງໃຫ້ທະຫານ 600ຄົນຂ້າມມາວຽງຈັນ, ທະຫານໄທ 600ຄົນນຳຫາເຈົ້າອະນຸບໍ່ທັນ, ທັນແຕ່ເຈົ້າສຸດທິສານ, ເຈົ້າເຕ້, ເຈົ້າບັນ, ເຈົ້າດວງຈັນ, ເຈົ້ານາງຄວັນ (ບຸດເຈົ້າອະນຸ), ເຈົ້າຫຼອດຫຼານ ແລະເຈົ້ານາງມາໄລ, ເຈົ້ານາງວອນພະຊາຍາຂອງເຈົ້າອະນຸ ແລະເຊື້ອສາຍພະອົງຜູ້ອື່ນອີກ ເຊິ່ງໄລ່ທັນຢູ່ບ້ານໄຜ່ໃນວັນທີ 23ຕຸລາ, ຈຶ່ງຈັບສົ່ງມາໄວ້ເມືອງພັນພ້າວ ແລະໃຫ້ສົ່ງໄປກຸງເທບກ່ອນ.ຈາກນັ້ນ ເຈົ້າພະຍາລາຊະສຸພາວະດີແມ່ທັບສະຫຍາມຈຶ່ງຂ້າມມາວຽງຈັນແລ້ວເກນທະຫານຊາວບ້ານຊາວເມືອງທີ່ຍັງເຫຼືອຢູ່ນັ້ນໃຫ້ມ້າງເພບ້ານເມືອງພ້ອມທັງຫໍໂຮງ ແລະ ເອົາໄຟຈູດເຜົາໃຫ້ໄໝ້ກ້ຽງບໍ່ໃຫ້ຊາວບ້ານ, ຊາວເມືອງວຽງຈັນບໍ່ໃຫ້ຍັງເຫຼືອຫຍັງຈັກຢ່າງໂດຍບໍ່ໃຫ້ຕັ້ງເປັນບ້ານເປັນເມືອງໄດ້ອີກ. ແລ້ວກໍມາກວາດຕ້ອນເອົາຄອບຄົວຄົນລາວຕາມບ້ານນອກບ້ານນາສົ່ງລົງໄປກຸງເທບຈົນໝົດໃນເດືອນທັນວາ1828ນັ້ນເອງ.

## 2.6 ເຈົ້າອະນຸ ແລະ ເຊື້ອກະສັດວຽງຈັນຖືກຈັບ

ມາເຖິງເດືອນ 12ອອກໃຫມ່ 15ຄ່ຳ (ວັນທີ 12 ເດືອນ 11), ເຈົ້ານ້ອຍເມືອງພວນຈຶ່ງໃຫ້ເພຍກາງເມືອງກັບເພຍມະຫາໄຊມາລາຍງານຕໍ່ພະຍາລາຊະສຸພາວະດີແມ່ທັບສະຫຍາມຢູ່ວຽງຈັນວ່າຈະອາດແຕ່ງກອງທັບອອກລັດດ່ານບໍ່ໃຫ້ເຈົ້າອະນຸໜີໄປໄດ້ ແລະ ຈະພະຍາຍາມຈັບເຈົ້າອະນຸໃຫ້ໄດ້, ຂໍຢ່າໃຫ້ກອງທັບໄທຍົກຂຶ້ນມາເມືອງພວນເລີຍ, ແລ້ວເຈົ້ານ້ອຍເມືອງພວນກໍແຕ່ງກອງທະຫານອອກລັດຫາເຈົ້າອະນຸພວກທະຫານນຳໄປພໍ້ເຈົ້າອະນຢູ່ຕີນພູວົງ, ຈຶ່ງໃຫ້ທະຫານ 50ຄົນລ້ອມໄວ້,ເຈົ້ານ້ອຍຈຶ່ງໃຫ້ເພຍນາມໂຄດ, ເພຍອຸທຸມລົງມາບອກແມ່ທັບສະຫຍາມເຂົາຈຶ່ງໃຫ້ພະອິນທະລາເດດ, ພະສຸພັນຊຽງສາກັບເພຍເມືອງກາງຍົກທະຫານ 300ຄົນ ຂຶ້ນໄປເພື່ອຈະຈັບເຈົ້າອະນຸ, ຝ່າຍເຈົ້າພະຍາມັນທາຕຸລາດ, ເຈົ້ານະຄອນຫຼວງພະບາງກໍແຕ່ງໃຫ້ທ້າວມະຫາພົມກັບໝານຂັດຕິຍະອອກຊອກຈັບເຈົ້າອະນຸເຊັ່ນດຽວກັນ, ໄປພໍ້ນາຍດ່ານເມືອງພວນພວກນາຍດ່ານເມືອງພວນຈຶ່ງພາໄປຈັບເຈົ້າອະນຸໄດ້ພ້ອມດ້ວຍນາງຄຳປ້ອງ, ເຈົ້ານາງທອງດີ, ເຈົ້ານາງຄຳໃສ, ເຈົ້ານາງບຸດສະບາພະຊາຍາຂອງເຈົ້າອະນຸ ແລະ ຫຼານສາວອີກຄົນ. ແລ້ວທ້າວມະຫາພົມກໍຄຸມຄັງລົງມາສົ່ງໃຫ້ກອງທະຫານຂອງພະອິນທະລາເດດຢູ່ຫາດເດືອຍ, ພະອິນທະລາເດດກໍຄຸມລົງມາສົ່ງເຈົ້າພະຍາລາຊະສຸພາວະດີທີ່ວຽງຈັນໃນເດືອນອ້າຍອອກໃໝ່15ຄ່ຳ, ກົງກັບວັນທີ 12/12/1828. ພະຍາລາຊະສຸພາວະດີຈຶ່ງໃຫ້ທະຫານ 300ຄົນ ຄຸມເຈົ້າອະນຸກັບຍາດຕິວົງລົງໄປກຸງເທບ, ພໍໄປເຖິງເມືອງສະລະບູລີພະຍາໄຊວາລີເຊິ່ງມາຕັ້ງກອງສົ່ງສະບຽງອາຫານຢູ່ທີ່ນັ້ນຈຶ່ງໃຫ້ສ້າງກົງໃສ່ເຈົ້າອະນຸແລ້ວຕັ້ງປະຈານໄວ້ຢູ່ກາງເຮືອ, ຈາກນັ້ນພະຍາອະນຸລັກໂຍທາກັບພະໂຍທາສົງຄາມໄດ້ເອົາເຮືອດັ່ງກ່າວປະຈານລົງໄປຕາມທາງຈົນເຖິງກຸງເທບເມື່ອເດືອນສີ່ ອອກໃ

ໝ່11ຄ່ຳ, ກົງກັບວັນທີ 15/ 1/1829. ເຈົ້າແຜ່ນດິນສະຫຍາມຈຶ່ງໃຫ້ເຈົ້າອະນຸ ແລະຍາດວົງຊັງໄວ້ທັງໝົດແລ້ວສັ່ງກົມຕຳຫຼວງສ້າງບ່ອນປະຈານໄວ້ຕໍ່ໜ້າພະທີ່ນັ່ງຄືສ້າງກົງເຫຼັກໃຫຍ່ສຳລັບໃສ່ເຈົ້າອະນຸວົງກົງໜຶ່ງ ແລະ ກົງເຫຼັກນ້ອຍສຳລັບໃສ່ບຸດທິດາ ແລະ ພະຊາຍາອີກ 13ກົງ, ນອກນັ້ນມີເຄື່ອງລົງໂທດເຊັ່ນຄົກສາກສຳລັບຕຳມີເບັດສຳລັບເກາະແຂວນ, ມີໝໍ້ຂາງສຳລັບຕົ້ມ, ມີຂວານສຳລັບຜ່າເອິກ, ມີເລື່ອຍສຳລັບເລື່ອຍ ແລະ ມີຂາຢັ່ງໄວ້ສຳລັບສຽບທັງເປັນ, ເວລາເຊົ້າໆກໍໄຂເອົາເຈົ້າອະນຸອອກມາພ້ອມດ້ວຍເຈົ້າລາຊະບຸດໂຍ້, ເຈົ້າສຸດທິສານ, ເຈົ້າເປ້, ເຈົ້າປານ, ເຈົ້າດວງຈັນ, ເຈົ້າສຸວັນນະຈັກ, ເຈົ້າປັນເຊິ່ງເປັນບຸດຂອງເຈົ້າອະນຸກັບນາງຄຳປ້ອງ, ອັກຄະລະຊາຍາຂອງເຈົ້າອະນຸຖືວີກ້ານໝາກພ້າວໄປນັ່ງວີຢູ່ໃນກົງ, ໃຫ້ພວກອະນຸຊາຍາ (ເມຍນ້ອຍ) ແຕ່ງຕົວຖືຖ້ວຍກະເບື້ອງໃສ່ເຂົ້າປາອາຫານໄປລ້ຽງກັນໃນກົງຕໍ່ໜ້າປະຊາຊົນທຸກໆວັນບໍ່ໃຫ້ຂາດ. ພໍເຖິງເວລາບ່າຍ, ກໍເອົາພວກລູກຫຼານຂອງເຈົ້າອະນຸມາຂຶ້ນງອຍເທິງຂາຢັ່ງໃຫ້ຮ້ອງປະຈານໂທດທຸກໆຄືນ, ເວລາຄ່ຳກໍ່ເອົາຂັງໄວ້ຄືເກົ່າ, ພວກສະຫຍາມທໍລະມານເຈົ້າອະນຸ ແລະ ຍາດວົງສາຢູ່ດັ່ງນີ້ໄດ້ 8ວັນ, ເຈົ້າອະນຸກໍເກີດພະຍາດລົງແດງສິ້ນພະຊົນໄປ.ເມື່ອເຈົ້າອະນຸສິ້ນພະຊົນແລ້ວເຈົ້າແຜ່ນດິນສະຫຍາມໃຫ້ເອົາສົບໄປສຽບປະຈານໄວ້ທີ່ສຳເຫຼືອກໃນກຸງເທບ,ສ່ວນການທີ່ຈະປະຫານຊີວິດພວກພະໂອລົດ ແລະ ພະທິດານັ້ນກໍເລີຍມິດໄປ.

ເຈົ້າອະນຸເກີດປີກຸນ ຄ.ສ 1767, ສິ້ນພະຊົນເມື່ອເດືອນ 2.1829, ລວມອາຍຸໄດ້ 62ປີ. ນັ້ນແມ່ນຊະຕາກຳຂອງນະຄອນຈັນທະບູລີສີສັດຕະນາຄະນະຫຸດທີ່ໄດ້ສ້ຽງສຸດລົງພ້ອມກັບການສິ້ນພະຊົນຂອງເຈົ້າອະນຸຕະຫລອດຈົນເຖິງເຊື້ອສາຍວົງສາວົງກະສັດນະຄອນວຽງຈັນກໍໄດ້ສິ້ນສຸດລົງຈົນໝົດກ້ຽງໃນຄາວນີ້ດ້ວຍ. ປະຊາຊົນພົນລະເມືອງລາວວຽງຈັນຫຼາຍແສນຄົນກໍໄດ້ຖືກກວາດຕ້ອນລົງໄປຢູ່ເມືອງໄທແລ້ວກາຍເປັນພົນລະເມືອງໄທມາຈົນເທົ່າທຸກວັນນີ້.

## 3. ສະພາບປະຫວັດສາດລາວແຕ່ປີ ຄ.ສ 1829 - 1893

ພາຍຫຼັງທີ່ໄດ້ປາບປາມຂະບວນການກູ້ເອກະລາດຂອງລາວເຊິ່ງນຳໂດຍເຈົ້າອະນຸແລ້ວພະຍາລາຊະສຸພາວະດີກໍກັບຄືນບາງກອກ ແລະໄດ້ເລື່ອນຊັ້ນເປັນພະຍາບໍດິນເດຊາ. ພ້ອມດຽວກັນນັ້ນພວກສະຫຍາມກໍໄດ້ຕົກລົງລົບລ້າງກົງຈັກການປົກຄອງລາວທີ່ມີມາແຕ່ກ່ອນນັ້ນໃຫ້ໝົດສິ້ນໄປ ແລະ ໃຫ້ຍົກເລີກປະເທດສະລາດວຽງຈັນແລ້ວໂຮມເອົາຫົວເມືອງຕ່າງໆທີ່ເຄີຍຂຶ້ນກັບອານາຈັກລ້ານຊ້າງວຽງຈັນນັ້ນມາເປັນເມືອງຂຶ້ນໂດຍກົງ, ບໍ່ແມ່ນເມືອງສ່ວຍຄືແຕ່ກ່ອນ ແລະ ໄດ້ຈັດແບ່ງການປົກຄອງລາວອອກເປັນ 3 ເຂດ, ໂດຍໄດ້ສົ່ງຂ້າຫຼວງຜັດປ່ຽນກັນຂຶ້ນມາປະຈຳແຕ່ລະເຂດ ຄື:

- ຫົວເມືອງພາກຕາເວັນອອກສຽງເໜືອມີສູນກາງຢູ່ທີ່ເມືອງໜອງຄາຍ.
- ຫົວເມືອງພາກຕາເວັນອອກມີສູນກາງຢູ່ຈຳປາສັກ.
- ຫົວເມືອງພາກເໜືອມີສູນກາງຢູ່ທີ່ຫຼວງພະບາງ.

ສ່ວນເມືອງລາວກາງຢູ່ທີ່ເມືອງນະຄອນລາຊະສີມາ ແລະ ເມືອງອື່ນໆທີ່ຂຶ້ນກັບເມືອງນີ້ກໍຍັງໃຫ້ສືບຕໍ່ຂຶ້ນໂດຍກົງຕໍ່ບາງກອກຢ່າງໜັກແໜ້ນກວ່າເກົ່າ.

ພາຍຫຼັງການຕົກລົງຍົກເລີກປະເທດສະລາດວຽງຈັນ ແລະ ຈັດແບ່ງການປົກຄອງລາວແລ້ວພະຍາບໍດິເດຊາກໍໄດ້ຖືກແຕ່ງຕັ້ງໃຫ້ຂຶ້ນມາປັບປຸງອຳນາດການປົກຄອງລາວ ໃນທ້າຍປີ 1829.ໃນສະໄໝທີ່ພວກເຂົາຍົກທັບຂຶ້ນມາປາບປາມຂະບວນການຕໍ່ສູ້ຂອງປະຊາຊົນລາວເຊິ່ງນຳໂດຍເຈົ້າອະນຸນັ້ນແລ້ວກໍ່ຕາມແຕ່ວ່າປະຊາຊົນລາວທົ່ວໄປແມ່ນບໍ່ຍອມຢູ່ພາຍໃຕ້ອຳນາດການປົກຄອງຂອງພວກເຂົາຈຶ່ງເຮັດໃຫ້ຫົວເມືອງລາວທາງຝ່າຍຕາເວັນອອກຍັງບໍ່ທັນຮຽບຮ້ອຍດີ.ດັ່ງນັ້ນ, ພະຍາບໍດິເດຊາຈຶ່ງໄດ້ຮັບແຜນການຈາກບາງກອກແລ້ວໄດ້ຂຶ້ນມາຈັດການປົກຄອງລາວ

ໂດຍຕັ້ງຈຸດສູນກາງຢູ່ໜອງຄາຍ, ຫຼວງພະບາງ ແລະຈຳປາສັກ.ແຕ່ໃນບາງເຂດທີ່ກວ້າງໃຫຍ່ຫຼາຍພວກເຂົາກໍ່ໄດ້ຕັ້ງຈຸດສູນກາງຂຶ້ນຕື່ມອີກເຊັ່ນ: ຢູ່ເມືອງລາວພາກຕາເວັນອອກນອກຈາກມີສູນກາງຢູ່ຈຳປາສັກແລ້ວພວກເຂົາກໍ່ໄດ້ຕັ້ງຂຶ້ນອີກຢູ່ກຸດປະໄທ (ເຊິ່ງແມ່ນແຂວງເມືອງສີຂໍລະພູມດຽວນີ້). ໃນແຕ່ລະຈຸດພວກເຂົາອອກລາດຕະເວນໄປປັບປຸງ ແລະ ແຕ່ງຕັ້ງອຳນາດການປົກຄອງໃນເມືອງຕ່າງໆພ້ອມທັງຈົດສຳມະໂນ ແລະ ຕັ້ງກອງສັກເລກໄປພ້ອມເພື່ອເກັບສ່ວຍອາກອນໄປເຂົ້າຄັງຫຼວງຢູ່ບາງກອກ.

ຢູ່ຈຳປາສັກ, ເຈົ້າຮຸຍກໍໄດ້ຖືກແຕ່ງຕັ້ງໃຫ້ເປັນເຈົ້ານະຄອນຈຳປາສັກ. ພວກສະຫຍາມໄດ້ວາງຂໍ້ບັງຄັບໃຫ້ເກັບເສຍສ່ວຍໃຫ້ສະຫຍາມຄື: ຈຳປາສັກເສຍປີລະ100ຊິ່ງ (8.000 ບາດໃນສະໄໝນັ້ນ), ເກັບສ່ວຍຊາຍສະກັນທຸກໆຄົນລະ4 ບາດ1 ສະຫລຶງ, ຖ້າເປັນຄົນສະລາ ຫຼືພິການເກັບຜູ້ລະ2 ບາດ 1 ສະຫຼຶງ (1 ສະຫຼຶງນັ້ນແມ່ນຄ່າເຜົາ ຫຼືເອີ້ນວ່າຄ່າສົ້ນເປືອງໄຟ).

ນອກຈາກສະຫຍາມໄດ້ບັງຄັບໃຫ້ອານາຈັກຈຳປາສັກເສຍສ່ວຍປີລະ 100ສັ່ງແລ້ວຍັງໃຫ້ສົ່ງເຄື່ອງບັນນາການໃຫ້ບາງກອກ 3ປີຕໍ່ຄັ້ງອີກຄື: ຕົ້ນໄມ້ຄຳຕົ້ນໜຶ່ງເປັນຄຳໜັກ 10ບາດ, ຕົ້ນໄມ້ເງິນຕົ້ນໜຶ່ງເປັນເງິນໜັກ 10ບາດ, ງາຊ້າງໜັກ2 ຫາບ, ນໍລະມາດໜັກ 2ຊັ່ງຈີນ, ໝາກແໜ່ງໜັກ 4ຫາບເປັນທຳນຽມແຕ່ນັ້ນມາ. ເຈົ້າຮຸຍເປັນເຈົ້າເມືອງຈຳປາສັກຈົນຮອດປີ 1841ກໍສິ້ນຊີວິດ. ຈາກນັ້ນ ສະຫຍາມກໍແຕ່ງຕັ້ງເຈົ້ານາກຄອງຈຳປາສັກຈົນຮອດປີ 1851, ເຈົ້ານາກກໍລົງໄປບາງກອກແລ້ວສິ້ນຊີວິດຢູ່ບາງກອກ. ຫຼັງຈາກນັ້ນເຈົ້າຊີວິດສະຫຍາມກໍບໍ່ໄດ້ແຕ່ງຕັ້ງຜູ້ໃດປົກຄອງຈຳປາສັກອີກ.

ການປົກຄອງຫົວເມືອງລາວໃນທຸກເຂດໃນໄລຍະນີ້ມີລັກສະນະໜັກໜ່ວງມີການຜັດປ່ຽນເຈົ້ານາຍມາປົກຄອງເລື້ອຍໆເປົ້າໝາຍກໍເພື່ອຕັ້ງກອງສັກເລກໃຫ້ທົ່ວເຖິງແນ່ໃສ່ເກັບສ່ວຍສາອາກອນໃຫ້ໄດ້ຫຼາຍ, ສະພາບເສດຖະກິດ, ວັດທະນະທຳສັງຄົມໃນໄລຍະນີ້ຕົກຕ່ຳທີ່ສຸດ. ດ້ານວັດທະນະທຳ, ເຂົາອອກກົດໝາຍບັງຄັບບໍ່ໃຫ້ຄົນລາວຫຼິ້ນແອ່ວລາວແຄນ, ເມື່ອວັນສຸກແຮມ 14 ຄໍ່າ ປີສະລຸ ພ.ສ 2408, ຄ.ສ 1865ວ່າລາວເປັນຂ້າສະຫຍາມ, ສະຫຍາມບໍ່ເຄີຍເປັນຂ້າລາວຈະເອົາຢ່າງລາວມາເປັນພື້ນເມືອງສະຫຍາມບໍ່ສົມຄວນ, ຕັ້ງແຕ່ພາກັນຫຼິ້ນລາວແຄນຢ່າງດຽວກໍກວ່າ 10ປີ ມາແລ້ວຈິນ. ເປັນພື້ນເມືອງ ແລະ ສັງເກດເຫັນການຫຼິ້ນລາວແຄນຊຸກຊຸມຢູ່ໃສຝົນກໍຕົກນ້ອຍລ່ວງໂລຍໄປ . ເຂົ້ານາລອດຕາຍມາກໍຍ້ອນນປ່າມາຊ່ວຍ, ເມືອງທີ່ລາວຫຼິ້ນລາວແຄນຫຼາຍເມື່ອລະດູຝົນໆໜ້ອຍເຮັດນາກໍເສຍຫາຍບໍ່ງາມ... ໃຫ້ງົດການຫຼິ້ນລາວແຄນເສຍຢ່າຫ້າມມາເບິ່ງ, ຟັງ ແລະ ຢ່າຫຼິ້ນເອງເສຍ.. ປະກາດອັນນີ້ ຖ້າບໍ່ຟັງຍັງຂຶ້ນຫຼິ້ນລາວແຄນຢູ່ຈະໃຫ້ຮຽກພາສີໃຫ້ແຮງ, ໃຜຫຼິ້ນຢູ່ໃສກໍ. ຮຽກແຕ່ເຈົ້າຂອງທີ່ ແລະ ຜູ້ຫຼິ້ນ, ຖ້າລັກຫຼິ້ນຈະຈັບປັບໄໝໃຫ້ເສຍພາສີສອງຕໍ່ສາມຕໍ່ຄຳປະກາດນີ້ ແມ່ນຝືນຕໍ່ຄວາມຮູ້ສຶກຂອງປະຊາຊົນລາວທີ່ຕິດພັນກັບສຽງລຳສຽງແຄນມັນເປັນຄຳປະກາດທີ່ໄຮ້ມະນຸດສະທຳ.ຕໍ່ກັບຝ່າຍອານາມເຊິ່ງໄດ້ຮັບການເສຍສ່ວຍຈາກລາວກໍຖືກເສຍຜົນປະໂຫຍດ ແລະ ຖືກຫຍາມຂັບໄລ່ອອກຈາກລາວ. ພວກອານາມໄດ້ສະເໜີຕໍ່ສະຫຍາມ ເພື່ອໃຫ້ເຈົ້າປົກຄອງຢູ່ວຽງຈັນທີ່ສະຫຍາມລຶບລ້າງໄປແລ້ວເພື່ອໃຫ້ມີສະພາບຄືແຕ່ກ່ອນຄືໃຫ້ລາວສົ່ງບັນນາການໃຫ້ທັງສອງເມືອງ (ສະຫຍາມ ແລະ ອານາມ) ພວກອານາມຈຶ່ງໄດ້ສົ່ງບັນຊຸນວຽນເປັນຫົວໜ້າລາຊະທູດນຳສານໄປຮອດບາງກອກໃນເດືອນ 4ຂຶ້ນ 10ຄ່ຳ ຄ.ສ 1829, ເນື້ອໃນສານວ່າ:

" .. ປະທ້ວງຕໍ່ສະຫຍາມທີ່ສະຫຍາມໄດ້ຂ້າລາຊະທູດອານາມ ແລະ ທະຫານອານາມຕາຍ 50ຄົນ, ຢູ່ນະຄອນພະນົມ ແລະ ປະທ້ວງກອງທັບສະຫຍາມນຳໂດຍຊິດຊຸມກົມ, ຫຼວງນະລາທີ່ຍົກທັບລ່ວງເກີນເຂົ້າໄປເກັບສ່ວຍໃນເມືອງພູຕິເຂດແດນອານາມຂໍໃຫ້ສະຫຍາມສົ່ງຕົວທຸງວິໄຊ, ຊິດຊຸມກົມ, ຫຼວງນະລາໄປສືບສວນຢູ່ອານາມໂດຍສະເພາະ".ໃຫ້ສານນັ້ນຝ່າຍອານາມຍັງໄດ້ກ່າວວ່າ " ເມືອງວຽງຈັນຂຶ້ນຕໍ່ສອງຝ່າຍບໍ່ຄວນຈະໃຫ້ສາບສູນໄປຂໍໃຫ້

ແຕ່ງເມືອງວຽງຈັນໄວ້ຄືເກົ່າ.” ເຈົ້າເມືອງອານາມມີຄວາມເສຍດາຍເມືອງວຽງຈັນເປັນຢ່າງຍິ່ງເພາະເປັນເມືອງສືບເຊື້ອສາຍກະສັດລາວກວ່າສອງພັນປີກ່ອນເມືອງສະຫຍາມ ແລະ ເມືອງອານາມບັດນີ້ຂໍໃຫ້ກຸງສີອາຍຸດທະຍາຕັ້ງເມືອງວຽງຈັນຂຶ້ນຄືແຕ່ເກົ່າ.

ຝ່າຍສະຫຍາມແຕ່ງຕັ້ງໃຫ້ພະອະນຸລັກພູທອນເປັນຫົວໜ້າທູດນຳສານ ແລະ ເຄື່ອງບັນນາການໄປອານາມໃນເດືອນ 4ປີຊວດນັ້ນ ຄ.ສ 1829, ເນື້ອໃນຂອງສານແມ່ນຂຽນຕອບຝ່າຍອານາມແບບບໍ່ຈະແຈ້ງ ແລະ ມີເລ່ກົນເຊັ່ນ: ການຈັດຕັ້ງເມືອງວຽງຈັນໃຫ້ເປັນເມືອງຄືເກົ່ານັ້ນເຫັນຈະຫຍັງຊ້າຢູ່ ແລະ ວ່າກອງທັບສະຫຍາມຍັງບໍ່ທັນກັບມາເທື່ອຜູ້ໃດເຮັດຜິດແນວໃດກໍຍັງບໍ່ຮູ້ ແລະ ຊື່ທີ່ມີຢູ່ໃນສານກໍບໍ່ຖືກກັບຊື່ຂອງສະຫຍາມຈຶ່ງບໍ່ຮູ້ວ່າແມ່ນຜູ້ໃດແທ້ກອງທັບກັບມາຮຽບຮ້ອຍແລ້ວຈຶ່ງຈະສອບຖາມເບິ່ງ.

ຝ່າຍອານາມເມື່ອໄດ້ຮູ້ເນື້ອໃນຂອງສານແລ້ວ ຈຶ່ງຂຽນສານຕອບປະທ້ວງຕໍ່ສະຫຍາມອີກຫຼາຍຂໍ້ ແລະ ຍັງຂໍເອົາຕົວພະຍານະລົງຄະວິໄຊ, ພະຍາວຊິດສົງຄາມ ແລະ ຫຼວງນະລາໄປສອບສວນຢູ່ອານາມ ແລະມີສານປະທ້ວງຫຼາຍສະບັບ ເຊິ່ງລ້ວນແຕ່ສະແດງຄວາມບໍ່ພໍໃຈຕໍ່ສະຫຍາມ. ຝ່າຍສະຫຍາມເມື່ອເຫັນຝ່າຍອານາມໂກດເຄືອງແຮງຈຶ່ງແຕ່ງໃຫ້ພະຈັກກະລາເປັນລາຊະທູດນຳສານ ແລະ ເຄື່ອງບັນນາການໄປອານາມໃນວັນທີ 13ມີນາ 1830,ສານສະບັບນີ້ລ້ວນແຕ່ແມ່ນການແກ້ຕົວເຊິ່ງເຮັດໃຫ້ເຈົ້າຊີວິດອານາມບໍ່ພໍໃຈທັງບໍ່ຍອມຮັບເຄື່ອງບັນນາການຫຍັງໝົດ ແລະ ໄດ້ມີການໂຕ້ຕອບກັນຢ່າງຮຸນແຮງຂຶ້ນ, ເມື່ອເຫັນວ່າຝ່າຍສະຫຍາມບໍ່ຍອມຕັ້ງເມືອງວຽງຈັນໃຫ້ມີເຈົ້າປົກຄອງຄືເກົ່າ, ຝ່າຍອານາມຈຶ່ງຕັ້ງເຈົ້າລາຊະວົງໃຫ້ເປັນເຈົ້າເມືອງວຽງຈັນແທນເຈົ້າອະນຸ ເຮັດໃຫ້ສະຫຍາມມີຄວາມບໍ່ພໍໃຈຕໍ່ອານາມຫຼາຍຂຶ້ນ.ເຈົ້າຊີວິດສະຫຍາມມີຄວາມໂກດແຄ້ນໃຫ້ອານາມຈົນເຖິງຂັ້ນອອກປາກວ່າ “ ສະໄໝອົງຈັນເປັນກະບົດໜີໄປອານາມກໍຮັບເອົາໄວ້, ອະນຸເປັນກະບົດໜີໄປອານາມກໍຮັບໄວ້ ແລ້ວຍັງແຕ່ງຕັ້ງຂຸນນາງອານາມມາຕັ້ງບ້ານເມືອງຄືເກົ່າ, ເຮັດກັບຂະເໝນກໍທຳນອງດຽວກັນ, ມີແຕ່ຄິດກີດກັ້ນເຂດແດນໂດຍສະຫຍາມຂົ່ມຂີ່ຍົກຕົວຂຶ້ນເປັນດົກ - ວາງ - ເດ່ ຈະເປັນໄມຕີຕໍ່ກັນໄດ້ແນວໃດ ”.

ພ້ອມດຽວກັນນັ້ນສະຫຍາມໄດ້ຈັດກອງທັບ 2ກອງໃຫ້ມາປາບປາມບັນດາຫົວເມືອງລາວທີ່ຍັງແຂງເມືອງບໍ່ຍອມຂຶ້ນຕໍ່ສະຫຍາມ ແລະ ເພື່ອໃຫ້ມາປັບປຸງການປົກຄອງຢູ່ລາວຄືກອງທັບພະມະຫາເທບປ້ອມຍົກມາຕັ້ງຢູ່ເມືອງນະຄອນພະນົມ. ກອງທັບຂອງພະລາຊະສຸລິນກໍຍົກມາຕັ້ງຢູ່ເມືອງໜອງຄາຍ. ກອງທັບສະຫຍາມທັງ 2ກອງ ໄດ້ຍົກອອກຈາກບາງກອກໃນວັນທີ 23ພະຈິກ 1833 ເຊິ່ງມັນເຮັດໃຫ້ຄວາມສຳພັນລະຫວ່າງສະຫຍາມກັບອານາມຂາດລົງນັບແຕ່ມື້ນັ້ນມາ.

ກອງທັບສະຫຍາມທີ່ມາຕັ້ງຢູ່ໜອງຄາຍ ພວກເຂົາໄດ້ອອກກວາດຕ້ອນ ແລະ ເກັບເກນກົດຂີ່ຮີດວັດຖຸສິ່ງຂອງຈາກປະຊາຊົນລາວໃນເຂດເມືອງໜອງຄາຍ, ເລີຍ, ຂອນແກ່ນ, ວຽງຈັນ...ໂດຍສະເພາະພວກເຂົາໄດ້ຕິດຕາມມາເຂັ່ນຂ້າປະຊາຊົນລາວທີ່ກັບຄືນມາຢູ່ເມືອງຮ້າງວຽງຈັນເປັນປະຈຳ, ຕົ້ນຕໍແມ່ນແນ່ໃສ່ຕິດຕາມເຈົ້າລາຊະວົງທີ່ອານາມຕັ້ງເປັນເຈົ້າວຽງຈັນແທນສະຫຍາມທີ່ສະຫຍາມຈັບໄປບາງກອກ, ສະຫຍາມເຮັດແນວນັ້ນເພື່ອບໍ່ໃຫ້ປະຊາຊົນລາວມາຕັ້ງຖິ່ນຖານເຮັດໄຮ່ເຮັດນາໃນຂົງເຂດນີ້ ແລະ ເພື່ອໃຫ້ວຽງຈັນເປັນເມືອງຮ້າງຕະຫລອດການຈົນເຮັດໃຫ້ເຈົ້າລາຊະວົງເຄື່ອນໄຫວຢູ່ເຂດນີ້ບໍ່ໄດ້ຈຶ່ງຕ້ອງໄດ້ລົງໄປເຄື່ອນໄຫວຢູ່ເຂດມະຫາໄຊ ( ຄຳມ່ວນ) ພາຍຫຼັງການເກັບເກນປະຊາຊົນໄດ້ຈຳນວນພົນ ແລະ ສະບຽງອາຫານພຽງພໍແລ້ວພວກເຂົາກໍຍົກທັບຂຶ້ນໄປຕີເມືອງພວນ, ເມືອງຊຽງຂວາງ, ເມືອງຮົ່ມ, ຊຽງຄຳ, ຊຽງດີ ແລະ ກວາດຕ້ອນເອົາປະຊາຊົນລາວລົງໄປບາງກອກ.

ກອງທັບພະມະຫາເທບປ້ອມທີ່ມາຕັ້ງຢູ່ນະຄອນພະນົມນັ້ນກໍໄດ້ອອກເກັບເກນເອົາຄົນ ແລະວັດຖຸສິ່ງຂອງໃນເຂດອຸບົນ, ເຂັມມະລາດ, ມຸກດາຫານ, ນະຄອນພະນົມ... ພ້ອມດຽວກັນນັ້ນພວກເຂົາກໍໄດ້ຕິດຕາມປາບປາມຈັບກຸມປະຊາຊົນລາວທີ່ເຄີຍຮ່ວມຂະບວນກັບເຈົ້າອະນຸມາລົງໂທດຢ່າງຮຸນແຮງປ່າເຖື່ອນເຮັດໃຫ້ປະຊາຊົນລາວຝັ່ງ

ຂວາແມ່ນ້ຳຂອງຈຳນວນຫຼວງຫຼາຍໄດ້ແຕກກັນໄປຢູ່ຕາມຕົວເມືອງຝັ່ງຊ້າຍແມ່ນ້ຳຂອງ. ນອກນັ້ນ, ພວກສະຫຍາມຍັງໄດ້ຈັດຕັ້ງກອງທັບຂຶ້ນອີກເຊິ່ງຕັ້ງໝັ້ນຢູ່ມຸກດາຫານໂດຍພະຍາໂຍທາເປັນຜູ້ຄວບຄຸມເພື່ອຍົກທັບໄປຕີເມືອງພະລານ, ເມືອງຟອງ, ເມືອງຈຳພອນ, ເມືອງພິນ, ເມືອງເຊໂປນ...ປະຊາຊົນໃນບັນດາຫົວເມືອງດັ່ງກ່າວກໍໄດ້ຕໍ່ສູ້ຕ້ານຄືນຢ່າງທໍລະຫົດອົດທົນເຮັດໃຫ້ພວກເຂົາບໍ່ສາມາດກົດຂີ່ຂູດຮີດເກັບເກນປາບປາມໄດ້ຕາມໃຈມັກ, ບໍ່ສາມາດຈັດຕັ້ງການປົກຄອງປະຊາຊົນຢ່າງທົ່ວເຖິງໂດຍສະເພາະແມ່ນເຂດລາວພວນ ແລະລາວກາວ, ເຂດທີ່ປະຊາຊົນໃຊ້ເປັນສູນກາງໃນການຕໍ່ສູ້ກັບສະຫຍາມໃນເທື່ອນີ້ແມ່ນຫຼືງແມ່ນ້ຳຂອງບໍລິເວນແຕ່ເຊບັ້ງຫຽງມາເຖິງເຊບັ້ງໄຟສະຫຍາມເຂົ້າໄປບໍ່ໄດ້ເລີຍ.

ສະນັ້ນ, ເພື່ອແກ້ໄຂບັນຫານີ້ພວກສະຫຍາມໄດ້ນຳໃຊ້ນະໂຍບາຍເອົາຄົນລາວຂ້າຄົນລາວຄືເກນເອົາຄົນລາວໃນຫົວເມືອງລາວເຂົ້າເປັນທະຫານ, ບັງຄັບພວກຂ້າລາຊະການ ແລະພວກລູກຫຼານຂອງເຈົ້າອະນຸທີ່ຖືກຈັບເປັນ "ຊະເລີຍ" ແຕ່ປາງສົງຄາມຕໍ່ສູ້ເພື່ອເອກະລາດ ໃນລະຫວ່າງປີ 1827-29ເຊິ່ງຍັງຖືກຄຸມຂັງຢູ່ນັ້ນໃຫ້ອອກມາປະກອບເຂົ້າໃນກອງທັບທີ່ແມ່ນຄົນສະຫຍາມມາເປັນນາຍເພື່ອນຳໄປປາບປາມຈັບກຸມປະຊາຊົນລາວ ທີ່ຍັງບໍ່ຍອມອ່ອນນ້ອຍຕໍ່ສະຫຍາມຢູໃນຫຼາຍທ້ອງຖິ່ນໂດຍພວກເຂົາໄດ້ຈັດອອກເປັນ 4 ກອງ ເຊິ່ງເກນເອົາຈາກຕົວເມືອງຕ່າງໆເຊັ່ນ: ນະຄອນພະນົມ, ກາລະສິນ, ສາກົນນະຄອນ, ໜອງຫານ, ທ່າອຸເທນ, ໄຊບູລີ, ສາກົນ, ເມືອງແສນ, ໜອງຄາຍ, ເມືອງພູວຽງ, ມຸກດາຫານ, ເຂັມມະລາດ, ອຸບົນ ລວມຈຳນວນພົນໄດ້ 10.300ຄົນ, ທັງ 4ກອງແມ່ນໃຫ້ເຈົ້ານາຍລາວທີ່ຖືກເປັນສະເລີຍມາເປັນນາຍກອງ ໂດຍພາຍໃຕ້ການບັນຊາຂອງພະມະຫາສົງຄາມ (ຄົນໄທ) ເຊິ່ງຕັ້ງ ບັນຊາຢູ່ນະຄອນພະນົມ ໄດ້ຍົກພົນຂ້າມຂອງມາຝັ່ງຊ້າຍໃນວັນທີ 31ມີນາ 1842ແລ້ວເຂົ້າໄປຕີເດີວັງ, ເຊໂປນ, ເມືອງພິນ, ເມືອງນອງ, ເມືອງຊຽງຮົ່ມຜາບັງ. ປະຊາຊົນໃນບັນດາຫົວເມືອງເຫຼົ່ານີ້ລ້ວນແຕ່ບໍ່ຍອມຈຶ່ງຕໍ່ສູ້ຕ້ານຄືນ ແຕ່ຈຳນວນພົນສະຫຍາມຍົກມາຫຼວງຫຼາຍຈຶ່ງສູ້ບໍ່ໄດ້ ໄດ້ພາກັນແຕກເຂົ້າປ່າໄປຈົນໝົດ, ພວກສະຫຍາມໄດ້ແຕ່ງຄົນໄປທ່ຽວຊອກກວາດຕ້ອນເອົາຄອບຄົວມາຄືນເກ່າຍກ່ອມມາໄດ້ ແລະ ຈັບໄດ້ແດ່ລວມທັງຫມົດ 1.077ຄົນ, ໄດ້ຊ້າງ 20ໂຕ ແລະ ເມື່ອກວາດຕໍ່ໄປປະຊາຊົນກໍ່ພາກັນໜີໄປຢູ່ເຂດອານາມຈົນໝົດ. ພວກສະຫຍາມໄດ້ຈູດເຜົາບ້ານເຮືອນເສຍໝົດ.ເມື່ອເຈົ້າຊີວິດສະຫຍາມຮູ້ວ່າກອງທັບຕົນມີຈຳນວນພົນ 10.000ປາຍຄົນ. ແຕ່ກວາດຄົນໄດ້ແຕ່ພຽງພັນປາຍທໍ່ນັ້ນ ຈຶ່ງບໍ່ພໍໃຈເພາະບໍ່ສົມກັບເປັນກອງທັບໃຫຍ່ຈຶ່ງເອົາຜິດກັບຄົນລາວວ່າບໍ່ຈິງໃຈຕໍ່ສະຫຍາມ ແລ້ວໄປເຂົ້າຂ້າງກັນເອງ.

ດັ່ງນັ້ນ ພວກເຂົາຈຶ່ງລົງໂທດໃຫ້ກອງທັບທັງໝົດຢູ່ສືບຕໍ່ໄປອີກ 8ປີ, ເພື່ອຄອຍຖ້າຈັບເອົາປະຊາຊົນລາວທີ່ຈະກັບມາຈາກອານາມ ຫຼືຈາກເຂດພູຜາປ່າດົງໝືອອກມາເຮັດໄຮ່ໄຖນາໂດຍພວກສະຫຍາມບໍ່ຍອມໃຫ້ປະຊາຊົນລາວຕັ້ງບ້ານ ແລະ ເຮັດໄຮ່ເຮັດນາຢ່າງເດັດຂາດ, ພວກເຂົາໄດ້ອອກນຳຈັບ ແລະ ກວາດຕ້ອນໄປຝັ່ງຂວາຈົນໝົດສິ້ນຈົນຂົງເຂດນີ້ກາຍເປັນດິນແດນທີ່ວ່າງເປົ່າບໍ່ມີຄົນຢູ່ອາໄສ, ພ້ອມດຽວກັນນັ້ນພວກເຂົາໄດ້ຕັ້ງດ່ານໄວ້ເພື່ອຄອຍຈັບ ແລະກວາດຕ້ອນປະຊາຊົນລາວມີ7ດ່ານຄື: ຢູ່ບ້ານບຶງໃນເຂດເມືອງແຊກ, ຢູ່ບ້ານໂພນແດນ ເມືອງວັງ, ຢູ່ເມືອງມະຫາໄຊກອງແກ້ວ, ຢູ່ລຳເນົາໜອງປີ, ຢູ່ເມືອງຊຽງຮົ່ມ, ຢູ່ບ້ານນາຫີນເມືອງຄຳເກີດ ແຂວງຄຳມ່ວນ ແລະຢູ່ບ້ານນາຄາຍເມືອງວັງເຊິ່ງມີສູນກາງບັນຊາດ່ານທັງໝົດຢູ່ນະຄອນພະນົມ. ພວກເຂົາໄດ້ຕັ້ງກອງລາດຕະເວນທ່ຽວໄປມາຫາກັນເປັນປະຈຳເຊິ່ງພວກເຂົາຄິດວ່າຖ້າເຮັດໄດ້ແນວນີ້ອານາມກໍຈະບໍ່ມາໃກ້ຂົງເຂດນີ້. ເພາະວ່າຈະບໍ່ມີຜູ້ໃຫ້ສະບຽງອາຫານ ແລະສົງຄາມໃນເຂດນີ້ກໍໝົດໄປແລ້ວພວກເຂົາກໍຈະຍູທ່າງສຸມໃສ່ກອງທັບໄປເຮັດເສິກກັບສັກດີນາອານາມເພື່ອຍຶດຄອງກຳປູເຈຍອັນເປັນດິນແດນສາມລ່ຽມແມ່ນ້ຳຂອງທີ່ອຸດົມສົມບູນ ເຊິ່ງພວກເຂົາກະຫາຍທີ່ສຸດ.

ຕໍ່ສະພາບທີ່ສະຫຍາມຕັ້ງດ່ານປາບປາມການຕໍ່ສູ້ຂອງປະຊາຊົນລາວແບບຍາວນານນັ້ນມັນຈຶ່ງເຮັດໃຫ້ຂະບວນການຕໍ່ສູ້ຂອງປະຊາຊົນລາວອ່ອນກຳລັງລົງຈຳນວນໜຶ່ງຖືກກວາດຕ້ອນໄປ ແລະ ອີກຈຳນວນໜຶ່ງກໍຕ້ອງເອົາ

ຕົວຫຼົບໜີໄປລີ້ຢູ່ຕາມພູຜາປ່າດົງ ແລະເຂົ້າໄປອາໄສຢູ່ໃນເຂດອານາມ ເພື່ອຄອຍໂອກາດລຸກຂຶ້ນຕໍ່ສູ້ກັບສະຫຍາມອີກເທື່ອໃໝ່ພາຍໃຕ້ຮູບການຜູ້ມີບຸນ ຫຼື ດ້ວຍຮູບການອື່ນ.

## 4. ສະເໜີຫຍໍ້ເລື່ອງພື້ນວຽງ

ພື້ນວຽງລວມມີ 64ບັ້ນ ໃນນັ້ນນັກແຕ່ງໄດ້ຍົກໃຫ້ເຫັນບາງເຫດການທີ່ເປັນພື້ນຖານຕົ້ນຕໍທີ່ເປັນຈຸດໃຈກາງນັ້ນແມ່ນໂທດກຳຂອງພວກສະຫຍາມໄດ້ກໍ່ຂຶ້ນກັບຄົນລາວພວກມັນບໍ່ຕ່າງຫຍັງກັບສັດສາວາສິ່ງ.ເຫດການດັ່ງກ່າວໄດ້ເຮັດໃຫ້ຄົນລາວກໍຄືເຈົ້າອະນຸໄດ້ມີຄວາມຄຽດແຄ້ນຈຶ່ງພ້ອມກັນລຸກຂຶ້ນຕໍ່ສູ້ຕ້ານຄືນກັບພວກເຂົາຈາກນັ້ນ ກໍເຫັນໄດ້ການເກັບກວາດຂອງພວກສັກດີນາສະຫຍາມຢູ່ຝັ່ງຊ້າຍແມ່ນ້ຳຂອງ. ອີກບັນຫາໜຶ່ງທີ່ຍົກໃຫ້ເຫັນສົງຄາມລະຫວ່າງສະຫຍາມ - ດາຍຫວຽດ (ຍວນ) ໂດຍຜ່ານຜືນແຜ່ນດິນລາວນັບແຕ່ພາກກາງເຖິງພາກໃຕ້.( ເນື້ອໃນຫຍໍ້ແຕ່ລະບັ້ນອີງໃສ່ປຶ້ມພື້ນວຽງສະໄໝເຈົ້າອານຸ).

## 5. ວິເຄາະທາງດ້ານເນື້ອໃນ

### 5.1 ສາເຫດທີ່ພາໃຫ້ເຈົ້າອະນຸຄຽດແຄ້ນ ແລະ ກະກຽມກຳລັງເພື່ອຕໍ່ສູ້.

ຍ້ອນພວກສະຫຍາມໄດ້ກົດຂີ່ຂູດຮີດຕໍ່ປະຊາຊົນລາວຢ່າງໜັກໜ່ວງດ້ວຍການເກັບຊ່ວຍ, ເສຍພາສີຈາກນັ້ນພວກເຂົາກໍໝິ່ນປະມາດຕໍ່ຄົນລາວ, ຖືຄົນລາວບໍ່ຕ່າງຍັງກັບສັດຕົວໜຶ່ງເຂົາເຈົ້າຈະເຮັດຫຍັງທຳຫຍັງກໍ່ໄດ້ສະແດງອອກຜ່ານການສັກເລກ.

ພວກສະຫຍາມໄດ້ມ້າງເພທຳລາຍບ້ານເມືອງຂອງລາວຢ່າງປ່າເຖື່ອນດ້ວຍການຈູດເລົາເຜົາຜານ ແລະ ອື່ນໆເຊັ່ນວ່າ:ຈູດເມືອງຈຳປາສັກເມືອງຂອງພະຍາໄກ, ສະນັ້ນຈຶ່ງພາໃຫ້ເຈົ້າອານຸວົງມີຄວາມຄຽດແຄ້ນ.

### 5.2 ສາຍເຫດທີ່ພາໃຫ້ຂະບວນການຕໍ່ສູ້ຂອງເຈົ້າ ອະນຸວົງຖືກປະລາໄຊ

- ຍ້ອນຂາດຄວາມເປັນເອກະລາດພາຍໃນ

ຕົວຢ່າງ: ກຳລັງຂອງເຈົ້າອຸປະຣາດມີການຂັດແຍ່ງກັນ

- ຍ້ອນກຳລັງຂອງເຈົ້າອະນຸມີໜ້ອຍທຽບໃສ່ກຳລັງຂອງຝ່າຍກົງກັນຂ້າມຄື: ສະຫຍາມແລະອາວຸດ ກໍຫຼ້າສະໄໝ

### 5.3 ເສິກສົງຄາມລະຫວ່າງສະຫຍາມກັບຍວນຜ່ານດິນແດນລາວ

- ເສິກສົງຄາມລະຫວ່າງສະຫຍາມກັບຍວນແມ່ນຢູ່ພາກກາງ ແລະ ພາກໃຕ້ແຕ່ແຮງທີ່ສຸດແມ່ນຢູ່ພາກໃຕ້.
- ເສິກສົງຄາມນີ້ແມ່ນເພື່ອສິດຜົນປະໂຫຍດຂອງກຸ່ມສັກດີນາຍວນ ແລະ ສັກດີນາສະຫຍາມ.

### 5.4 ດ້ານສິລະປະການແຕ່ງ

ໃນເລື່ອງ " ພື້ນວຽງ " ແຕ່ງເປັນຄຳກອນທີ່ມີການສຳຜັດເກາະກ່າຍກັນຢ່າງຄັກແນ່, ນັກແຕ່ງໄດ້ໃຊ້ສັບພາສາທີ່ງ່າຍມີຮູບພາບ.ເປັນສັບສາມັນຊົນ ເຊິ່ງມີເນື້ອໃນຄວາມຫມາຍເລິກເຊິ່ງ ແລະສ້າງຄວາມສະເທືອນໃຈໃຫ້ແກ່ຜູ້ອ່ານຜູ້ຟັງເປັນຢ່າງດີ ຕົວຢ່າງ:

| | | | |
|---|---|---|---|
| " ຜູ້ເຫັນ | ດວງດອກໄມ້ | ຮັງອະຣວນຫອມອ່ອນ | ພຸ້ນເຍີ |
| ຍາມເມື່ອ | ລົມພັດຕ້ອງ | ກະຈອນຟື້ງພຸ່ງຜາຍ..." | |
| " ໂອນໍ | ສັ່ງມາທຸກຍາກແທ້ | ກາງປ່າພະນອມໄພ | ດັ່ງນີ້ |
| ສັງມາ | ນໍລະນະໜີ | ແຕ່ພະອົງດຽວເຈົ້າ.. | |
| "ອັນແຕ່ | ໄທສໍານີ້ | ສັງມາເລົ່າທຳເວນ | ດັ່ງນີ້ |

ກໍ່ຊີ ນຳໄປຕີ ມຸ່ນວາຍປາງນີ້."

**ສະຫຼຸບ:**

ພື້ນວຽງແມ່ນວັນນະກຳໜຶ່ງທີ່ແຕ່ງຂຶ້ນດ້ວຍຄຳກອນ, ມີການສຳພັດເກາະກ່າຍ, ບໍ່ຫຍາບຊ້າເລື່ອງໄດ້ສ່ອງແສງເຖິງປະຫວັດສາດຢ່າງຈະແຈ້ງຄື: ສ່ອງແສງເຖິງຂະບວນການຕໍ່ສູ້ຂອງເຈົ້າອະນຸວົງຕ້ານກັບສັກດິນາສະຫຍາມ, ສ່ອງແສງເຖິງໂທດກຳຂອງສັກດິນາສະຫຍາມທີ່ກໍ່ຂຶ້ນໃນອານາຈັກລາວລ້ານຊ້າງ ແລະ ເລື່ອງໄດ້ກ່າວເຖິງສົງຄາມລະຫວ່າງສັກດິນາສະຫຍາມ ແລະ ສັກດິນາດາຍຫວຽດ(ຍວນ) ຜ່ານດິນແດນຂອງອານາຈັກລາວລ້ານຊ້າງ.

**ເນື້ອໃນຫຍໍ້ຂອງເລື່ອງ**

ເພື່ອໃຫ້ສະດວກໃນການຄົ້ນຄວ້າພວກເຮົາໄດ້ແບ່ງເນື້ອໃນຂອງເລື່ອງພື້ນວຽງສະໄໝເຈົ້າອະນຸອອກເປັນ 64 ບັ້ນ. ໃນນັ້ນບັ້ນແຖມທ້າຍ (ບັ້ນທີ່ແຕ່ງເພີ່ມພາຍຫລັງ) ມີ 9 ບັ້ນ. ເນື້ອໃນຫຍໍ້ຂອງບົດເລື່ອງພື້ນວຽງທັງໝົດ ຈະຖືກນຳສະເໜີຜ່ານເນື້ອໃນຫຍໍ້ຂອງແຕ່ລະບັ້ນຢ່າງເປັນລະບົບຕໍ່ເນື່ອງ; ( ໂດຍເລີ່ມແຕ່ບັ້ນທີ 1 ຈົນເຖິງຂັ້ນທີ 64) ດັ່ງຕໍ່ໄປນີ້:

1. **ປັ້ນທີ່ກ່າວເຖິງເມືອງວຽງຈັນ**

ຍັງມີເມືອງໜຶ່ງຮຽກຊື່ວ່າ ວຽງຈັນ ລ້ອມດ້ວຍກຳແພງ ແລະ ຄອງນ້ຳ, ມີປະຕູເມືອງທັງສີ່ດ້ານ ແລະຕາມກຳແພງຍັງມີປ້ອມຍາມຢາຍຢູ່ເປັນຍ່ານ. ເມືອງນີ້ເປັນເມືອງອຸດົມຮັ່ງມີ ແລະຮຸ່ງເຮືອງເຂັ້ມແຂງ, ກະສັດຜູ້ປົກຄອງເມືອງນີ້ຊື່ວ່າພະອະນຸລຸດທະລາດ (ເຈົ້າອະນຸ), ມີເທວີຂວາຊື່ວ່ານາງ ຄຳປ້ອງ ແລະເທວີຊ້າຍຊື່ວ່ານາງ ຄຳຈັນ, ມີນາງສະໜົມກົມມະວັງ, ມີເສນາອາມາດ ແລະທະຫານຜູ້ກ້າຫານນັບເປັນໝື່ນໆ: ມີຊ້າງ, ມ້າ ຢ່າງຫຼວງຫຼາຍ; ມີນາງລະບຳເສບຟ້ອນຖວາຍພະອົງຢູ່ທຸກວັນ. ຊາວເມືອງຢູທ່າງແລກປ່ຽນຊື້ຂາຍ ແລະດຳລົງຊີວິດຢູ່ຢ່າງສຸກກະເສີມສຳລານ ບໍ່ອາດຫາຫຍັງມາປຽບປານໄດ້. ໄພ່ຟ້າລາສະດອນພ້ອມກັບອົງກະສັດກໍພ້ອມກັນສ້າງສາບູລະນະວັດວາອາຮາມໃຫ້ຮຸ່ງເຮືອງເຫຼືອງເຫຼື້ອມ. ຕໍ່ມາໄດ້ມີເຫດລອງເກີດຂຶ້ນຄືຟ້າຜ່າທາດພະນົມ, ດິນກາງເມືອງແຕກຍະເປັນທາງອັນເປັນລາງສັງຫອນເພື່ອບອກຂ່າວລວງໜ້າວ່າເຫດຮ້າຍຈະເກີດຂຶ້ນກັບນະຄອນຫຼວງວຽງຈັນໃນໂອກາດອັນໃກ້ໆນີ້.

2. **ບັ້ນຍົກກະບັດເມື່ອງນະຄອນລາຊະສີມາຂານອາສາ**

ບັ້ນນີ້ກາວເຖິງພະຍາຍົກກະບັດ ເຈົ້າເມືອງແຫ່ງນະຄອນລາຊະສີມາໄດ້ໃຊ້ເລລ່ຽມຕົວະຍົວະຫຼອກລວງເຈົ້າປົກຄອງບາງກອກ ເພື່ອຂານອາສາໄປເກັບສວຍນຳພວກຂ້າລະແດຢູທາງດອນໂຂງ (ຈຳປາສັກ), ເຈົ້າຄອງເມືອງບາງກອກເຫັນດີ. ຫຼັງຈາກພະຍາຍົກກະບັດໄດ້ກັບມານະຄອນລາຊະສີມາ ແລະກະກຽມພົນທະຫານໄດ້ຄົບແລ້ວ ກໍອອກເດີນທາງໄປດອນໂຂງ ແລະໄດ້ຕັ້ງທັບຢູ່ແຄມຂອງ. ເມື່ອເຫັນຊາວຄ້າຂາຍກາຍໄປມາກໍປຸ້ນຈີ້ຍຶດເອົາສິນບັດໝົດ. ພ້ອມດຽວກັນພະຍາຍົກກະບັດຍັງໄດ້ແຜ່ອຳນາດປາບປາມ ແລະຍຶດເອົາທັງແປດຫົວເມືອງ. ມີແຕ່ເມືອງພູຂັນແຫ່ງພະຍາໄກບໍ່ເຫັນດີ ແລະຄັດຄ້ານພະຍາຍົກກະບັດ. ຍ້ອນແນວນັ້ນ ພະຍາຍົກກະບັດຈຶ່ງໄດ້ຄຽດແຄ້ນໃຫ້ພະຍາໄກອັນເປັນເຫດໃຫ້ ເມືອງພູຂັນຖືກທຳລາຍໃນຄາວຕໍ່ມາ.

3. **ບັ້ນພະຍາໄກຟ້ອງເລື່ອງຍົກກະບັດຕໍ່ບາງກອກ**

ຕໍ່ມາພະຍາໄກເຈົ້າຄອງເມືອງພູຂັນຄຽດແຄ້ນໃຫ້ໄທ(ຍົກກະບັດ) ທີ່ຂົ່ມເຫັງເຕັງເຕັກຕໍ່ປະຊາລາສະດອນຂອງຕົນ, ພະຍາໄກຈຶ່ງສົ່ງສານເມືອບາງກອກ ເພື່ອຟ້ອງເລື່ອງການກະທຳອັນປ່າເຖື່ອນຂອງຍົກກະບັດໃຫ້ເຈົ້າຄອງບາງກອກຮູ້ທຸກປະການ. ເມື່ອເຈົ້າຄອງບາງກອກຮູ້ເລື່ອງລາວ ແລະການເຄື່ອນໄຫວຂອງຍົກກະບັດແຈ່ມແຈ້ງແລ້ວ, ພະອົງຈຶ່ງແຕ່ງຄຸນມະຫາອາມາດ. ຂຶ້ນມາເມືອງໂຂງ ເພື່ອຈັບເອົາຍົກກະບັດລົງໄປບາງກອກ. ແຕ່ເມື່ອມະຫາອາມາດໄປຮອດເມືອງໂຂງແລ້ວ, ຍົກກະບັດໄດ້ປະຈົບປະແຈງ ແລະ ຖອກເທເງິນຄຳຊື່ຈາງເຈົ້າມະຫາອາມາດ, ມະຫາອາມາດຈຶ່ງປີ້ນຮ້າຍກາຍເປັນດີຍ້ອງຍົກວ່າເປັນຄົນດີ.ເປັນເວລາດົນນານສົມຄວນເຈົ້າຄອງບາງກອກກໍບໍ່ເຫັນຄຸນ

ມະຫາອາມາດກັບຄືນດ້ວຍຄວາມຢາກຮ້າຍພະອິງຈຶ່ງແຕ່ງໃຫ້ພະຍາໄກສອນຄຳແດງນຳໄປເມືອງໂຂງເພື່ອຈັບເອົາມະຫາມາດ ແລະຍົກກະບັດລົງໄປບາງກອກໂດຍດ່ວນ. ເມື່ອໄດ້ຮັບຄຳສັ່ງຈາກເຈົ້າຄອງບາງກອກແລ້ວ, ພະຍາໄກສອນຄຳແດງກໍຟ້າວຟັ່ງຂຶ້ນມາເມືອເມືອງ ໂຂງ, ເມື່ອມາເຖິງເມືອງໂຂງ, ພະຍາໄກສອນ ຄຳແດງກໍເອີ້ນເອົາມະຫາອາມາດມາສອບຖາມເຖິງເຫດການ ແລະເລື່ອງລາວຂອງຍົກກະບັດ, ມະຫາຊາດກໍຍ້ອງຍໍວ່າຍົກກະບັດເປັນຄົນດີ ແລະສະຫຼາດ. ຈາກນັ້ນ ເຂົາທັງສາມຈຶ່ງພາກັນກັບຄືນບາງກອກ ພ້ອມດ້ວຍເຄື່ອງບັນນາການຢ່າງຫຼວງຫຼາຍເປັນເງິນ, ຄຳ, ນໍ, ງາ, ຂ້ອຍຂ້າ ແລະອື່ນໆ ເມື່ອຖວາຍເຈົ້າຄອງບາງກອກ, ເຈົ້າຄອງບາງກອກມີຄວາມປິຕິຊົມຊື່ນ ແລະອະໄພໂທດໃຫ້ແກຍົກກະບັດ ແລ້ວຈຶ່ງປ່ຽນຊື່ (ເລື່ອນຍົດ)ຈາກຍົກກະບັດມາເປັນພະຍາພົມພັກດີ ແລະມອບໃຫ້ຄອງເມືອງຄອນລາດ, ແທນພະຍາບຸນຈັນໃນເມື່ອເຂົາຕາຍໄປ, ແຕ່ໃນປັດຈຸບັນພະຍາບຸນຈັນຍັງຄອງຄອນລາດຢູ່. ສະນັ້ນ, ພະຍາພົມພັກດີຈຶ່ງຂໍນຳເຈົ້າຂອງບາງກອກ ເມື່ອສ້າງເມືອງໂຂງຄືເກົ່າ, ເຈົ້າຄອງບາງກອກກໍ່ເຫັນດີ.

**4. ພະຍາພົມພັກດີກັບໄປຄອງເມືອງໂຂງອີກເທື່ອໜຶ່ງ**

ເມື່ອເຈົ້າຄອງບາງກອກເຫັນດີໃຫ້ພະຍາພົມພັກດີກັບຄືນເມືອຄອງເມືອງໂຂງແລ້ວ, ພະຍາພົມພັກດີກໍ່ທູນລາເຈົ້າຄອງບາງກອກກັບຄືນຖິ່ນເກົ່າເມື່ອເມືອເຖິງເມືອງຄອນລາດລາວກໍເຂົ້າພັກຜ່ອນຢູ່ຫໍໂຮງຂອງຕົນເອງເປັນເວລາເດືອນກວ່າ. ຈາກນັ້ນ ພະຍາພົມພັກດີກໍຈັດບ່າວໄພ່ເສນາອອກເດີນທາງໄປເມືອງໂຂງ, ຜ່ານການເດີນທາງຫຼາຍມື້, ພະຍາພົມພັກດີພ້ອມດ້ວຍໂຍທາຈຶ່ງລວງກາຍເຂດເມືອງພູຂັນໄປເຖິງແມ່ນ້ຳຂອງ ແລະດອນໂຂງບອນທີ່ລາວປະສົງຕັ້ງຢູ່. ຕໍ່ມາພະຍາພົມພັກດີຈຶ່ງສົ່ງສານໄປເຖິງຊູ່ທ້າວ, ຊູ່ພະຍາ ແລະຊູ່ເມືອງ ເຊັ່ນ ເມືອງໝັ້ນ, ຄຳທອງ, ອັດຕະປື, ແສນປາງ, ບ້ານດານ, ພູຂັນ, ອຸບົນ, ສີສະເກດ, ຈຳປາສັກ, ເມືອງຈຳປາ ແລະອື່ນໆ ບອກຫົວເມືອງຕ່າງໆເຫຼົ່ານັ້ນເກນເອົາຊ້າງ, ມ້າ, ເຂົ້າ ແລະຄົນ ເພື່ອໄປຕີເມືອງລະແດ (ຂ້າລະແດ). ພະຍາພົມພັກດີລວມກຳລັງພົນໄດ້ແລ້ວ ກໍຍົກທັບໄປຕີເມືອງຂ້າລະແດ ແລະຍາເຫີນ ເມືອງລະແດສູ້ບໍ່ໄຫວຈຶ່ງພາກັນແຕກໜີ ແລະຖືກຈັບເປັນຊະເລີຍສາມສີ່ບ້ານ. ເມື່ອຕີຊະນະເມືອງລະແດແລ້ວ ພະຍາພົມພັກດີກໍກັບຄືນມາເມືອງຄືເກົ່າ, ສ່ວນບັນດາພະຍາເມືອງຕ່າງໆເຫຼົ່ານັ້ນກໍພາກັນກັບຄືນສູ່ບ້ານເມືອງເກົ່າຂອງຕົນ.

**5. ເຈົ້າຫົວສາເກດໂງ້ງ.**

ບັນນີ້ກ່າວເຖິງສຳມະນະເຈົ້າ ຜູ້ທົງສິນເປັນນັກບວດແຕ່ພັດບໍ່ຕັ້ງຢູ່ໃນຄອງສິນທຳ. ເຈົ້ານັ້ນຊື່ວ່າເຈົ້າຫົວສາຕາມນາມທີ່ພໍ່ຄູຕັ້ງໃຫ້. ແມ່ຂອງເຈົ້າຫົວສາແມ່ນເຊື້ອວຽງຈັນ, ແຕ່ຖືກໄທກວາດເອົາໄປແຕ່ປາງກ່ອນ, ປັດຈຸບັນແມ່ນຢູ່ບ້ານໜອງບົວໃກ້ກັບບ້ານເຕົາປູນ ເຊິ່ງຂຶ້ນກັບອານາເຂດຂອງໄທ. ເຈົ້າຫົວສາບວດຮຽນຢູ່ແຫ່ງນີ້ຈົນເປັນຄົນມີຊື່ລືຊາທົ່ວໄປໃນແດນຂ້າຝ່າຍລາວ. ຍ້ອນຊື່ສຽງໂດ່ງດັງນັ້ນເອງປະຊາຊົນໃນຂົງເຂດນີ້ຈຶ່ງເອີ້ນຊື່ເຈົ້າຫົວສາວ່າ "ເກດໂງ້ງ". ເຈົ້າຫົວສາເກດໂງ້ງໄດ້ສ້າງວັດຂຶ້ນຢູ່ຈອມພູ ແລະເອົາສີລາມາກໍ່ເປັນບັນລັງ, ສ້າງຄວາມງຶດງໍ້ອັດສະຈັນຕໍ່ປະຊາຊົນໃນຂົງເຂດນີ້ ແລະເຂົາເຈົ້າ ຈຶ່ງມີຈິດໃຈເຫຼື້ອມໃສມາກິນທານດອມເຈົ້າສາຢ່າງບໍ່ຂາດ ແລະຍ້ອງຍໍສັນລະເສີນເຈົ້າຫົວສາເກດແຕ່ກໍເປັນໂງ້ງວ່າເປັນສົມຕົນປະເສີດ, ເຈົ້າຫົວສາເກດໂງ້ງໄດ້ປູກຕົ້ນໝາກພ້າວໃສພະລານຫີນ ແຕ່ກໍເປັນແຊງດົກໝາ, ໝາກກອງພວງພ້ໍ, ມີທັງຕົ້ນດອກໄມ້ເດຍລະດາດດວງດົກ, ຊຸດສະຢູກາງພະລານຫີນໃສສະອາດ, ບໍ່ຂາດແຫ້ງຈັກເທື່ອ. ຈາກນັ້ນ ເຈົ້າຫົວສາເກດໂງ້ງກໍ່ພາເຂົາສ້າງບັນລັງສູງໃຫ້ກວມແຜນພະລານຫີນ ແລະຜາສາດຂຶ້ນສູ່ຍອດປະດັບເອ້ດ້ວຍການແກະສະຫຼັກລວດລາຍມັງກອນກ້ຽວກັນຫົວຊ້ອງຂຶ້ນ ແລະຕັ້ງຊື່ວ່າ "ດອຍຄີລີວົງ"ເພາະວ່າພູເກດໂງ້ງແຫ່ງນີ້ ເຈົ້າຫົວເຄີຍໄດ້ມາຢູ່ແຫ່ງນີ້ຊາດແລ້ວ, ຊາດນີ້ແມ່ນເປັນຊາດທີ່ສີ່ ເຊິ່ງແມ່ນລາຊາເຈືອງຫານມາເກີດ. ຍ້ອນແນວນັ້ນຊາວຂ້າທັງຫຼາຍຈຶ່ງເຄົາລົບ ແລະເຊື່ອຖືເຈົ້າຫົວສາເກດໂງ້ງຄືເຈົ້າ ແລະຂານອາສາມາເປັນໄພ່ ແລະຍອມຮັບເຈົ້າຫົວສາເກດໂງ້ງທຸກປະການ.

ເມື່ອສ້າງວັດແລ້ວ, ເຈົ້າຫົວສາເກດໂປ້ງກໍຈັດເອົາພວກໝູ່ສາວມາຟ້ອນເບີກສະຫຼອງ, ສ່ວນເຈົ້າຫົວສາເກດໂງ້ງກໍສະຖິດເທິງບັນລັງ. ຝູງນາງສາວແອດລະວັງຂວາຊ້າຍ. ເຈົ້າຫົວສາເກດໂງ້ງເປັນຜູ້ອ່ານຄໍາກອນສອນຝູງສາວຮາມກໍເວົ້າຕາມພ້ອມກັບທັງຟ້ອນຈົນລືມຕົນລືມໂຕ.

### 6. ພະຍາພິມພັກດີຍົວະເຍົ້າໃຫ້ເຈົ້າຫົວສາເກດໂງ້ງຈູດຈໍາປາສັກ

ຊື່ສຽງອິດທິພົນຂອງເຈົ້າຫົວສາເກດໂງ້ງ ໂດ່ງດັງໄປຮອດຫູຂອງພະຍາພິມພັກດີ, ພະຍາພິມພັກດີຈິ່ງເຮັດຕີມາຂໍຮໍາຮຽນເອົາເວດມົນພ້ອມທັງຜູກພັນແຮກສ່ຽວເປັນສະຫາຍນໍາກັນ. ຈາກນັ້ນ ພະຍາພິມພັກດີກໍຍົວະເຍົ້າໃຫ້ເຈົ້າຫົວສາເກດໂງ້ງຈູດເມືອງຈໍາປາສັກເພື່ອຈະໄດ້ນັ່ງສືບເມືອງ ແລະເງິນຄໍາຈະຫຼັ່ງໄຫຼມາ. ບັນຫານີ້ຖືເປັນຄວາມລັບລະຫວ່າງພະຍາພິມພັກດີ ແລະເຈົ້າຫົວສາເກດໂງ້ງ. ພະຍາພິມພັກດີຍັງເວົ້າຕໍ່ເຈົ້າຫົວສາເກດໂງ້ງຕື່ມອີກວ່າໃຫ້ລະດົມກໍາລັງຊາວຂ້າທັງຫຼາຍແລ້ວຍົກໄປຈໍາປາສັກ, ສ່ວນຝ່າຍພະຍາພິມພັກດີກໍຈະຍົກກໍາລັງໄປຕາມຫຼັງເພື່ອຊ່ວຍ.

ຍ້ອນຟັງຄໍາຍົວະເຍົ້າຂອງພະຍາພິມພັກດີ ແລະ ໂດຍບໍ່ໄດ້ຄໍານຶງຢ່າງຖີ່ຖ້ວນເຈົ້າຫົວສາເກດໂງ້ງຈິ່ງລືມຕົວ. ລືມຄອງສະມະນະເພດ, ແລ້ວຫຼົງເຊື່ອຄໍາຂອງພະຍາພິມພັກດີ.ເຈົ້າຫົວສາເກດໂງ້ງຈິ່ງໄປຊັກຊວນຊາວຂ້າ, ຊາວຂ້າທັງຫຼາຍກໍພາກັນຂານອາສາໄປຕາມຄໍາສັ່ງຂອງເຈົ້າຫົວສາເກດໂງ້ງເພື່ອຈູດເມືອງປາສັກ, ແລ້ວຈະໄດ້ຮັບຄວາມສຸກໃນພາຍໜ້າ.

ເມື່ອລວມກໍາລັງພົນພໍແລ້ວ, ເຈົ້າຫົວສາເກດໂງ້ງກໍສົ່ງສານເຖິງພະຍາພິມພັກດີຜູ້ເປັນສະຫາຍບອກຂ່າວວ່າວັນໜ້າຈະຍົກກໍາລັງໄປ. ເມື່ອຮູ້ຂ່າວນີ້ແລ້ວ, ພະຍາພິມພັກດີກໍຈັດກໍາລັງມາສົມທົບໃຫ້ເປັນກໍາລັງດຽວກັບເຈົ້າຫົວສາເກດໂງ້ງ. ແຕ່ກໍາລັງຕົ້ນຕໍ່ຂອງພະຍາພິມພັກດີນັ້ນພຽງແຕ່ເປັນກອງໜູນເທົ່ານັ້ນບໍ່ໄດ້ເຂົ້າຮ່ວມໃນການຈູດເມືອງປາສັກນໍາເຈົ້າຫົວສາເກດໂງ້ງເລີຍ.

ຍ້ອນຄວາມໂລບມາກໃນການຄອງເມືອງ ແລະເງິນຄໍາແສນສິ່ງ, ເຈົ້າຫົວສາເກດໂງ້ງຈົນລືມລາຄອງວັດ (ລືມສິກ), ແລ້ວກໍ່ຍົກພົນໄປຈູດເມືອງຢ່າງບໍ່ລໍຊ້າ. ໄຟລຸກໄໝ້ໄປທົ່ວເມືອງເຮັດໃຫ້ຜູ້ຄົນແຕກຕື່ນ, ສຽງຮ້ອງສຽງໄຫ້ຟົດສະໜັ່ນໄປທົ່ວເມືອງ. ຄົນທັງຫຼາຍແຕກກະຈັດກະຈາຍພັດພາກຈາກກັນໄປຄົນລະແຫ່ງຫົນເພື່ອໜີຕາຍ. ສ່ວນພະຍາເມືອງບາສັກກໍປົບແລ່ນປະໄຟຟ້າລາສະດອນ ໂດຍບໍ່ໄດ້ທ້າງຫາກະກຽມສິ່ງໃດໝົດ, ເພາະບໍ່ຮູ້ວ່າຫົວເສິກແຫ່ງໃດເຂົ້າມາຕີຢ່າງກະທັນຫັນໂດຍທີ່ບໍ່ໄດ້ຮູ້ຂ່າວລ່ວງໜ້າມາກອນ.

ຈາກນັ້ນພະຍເມືອງປາສັກກໍ່ໜີໄປຫາພະຍາພິມພັກດີ, ພະຍາພິມພັກດີຕີຖາມເຈົ້າປາສັກວ່າມີເຫດການຫຍັງຈິ່ງມາເຖິງນີ້ເຈົ້າເມືອງປາສັກຈິ່ງຕອບວ່າ: ພະຍາຮູ້ບໍ່ແມ່ນໃຜໄປຈູດເມືອງປາສັກ? ພະຍາພິມພັກດີຕີດ່າເຈົ້າເມືອງປາສັກວ່າເສິກຮ້າຍແຮງປານນີ້ເປັນຫຍັງຈິ່ງແລ່ນປະເມືອງ? ເປັນຫຍັງບໍ່ມາບອກໃຫ້ເຮົາຮູ້ກອນ, ປະໃຫ້ພວກຂ້າເຂົ້າມາຈູດເມືອງ.ບໍ່ຄວນເປັນພະຍາເມືອງອີກ. ເມື່ອໄດ້ຍິນພະຍາພິມພັກດີເວົ້າແນວນັ້ນພະຍາເມືອງປາສັກກໍ່ຕົກສະເງີ້ ແລະເກີດມີຄວາມສົງໄສໃນຕົວພະຍາພິມພັກດີມພັກດີ, ຈິ່ງໜີເຂົ້າປ່າໄປ.ສ່ວນຊາວເມືອງຈໍານວນໜຶ່ງແມ່ນແຕກຂຶ້ນເມື່ອຮອດມຸກດາຫານ ແລະ ຈໍານວນໜຶ່ງກໍ່ແຕກໄປເຖິງນະຄອນພະນົມ.

ເມື່ອຈູດເມືອງປາສັກສໍາເລັດແລ້ວ, ເຈົ້າເກດໂງ້ງກໍຍົກທັບໜີໄປລີ້ຢູ່ຈອມພູຍ່າປຸ. ເພາະບ່ອນນັ້ນເປັນພູຫີນ, ຢູ່ເທິງຈອມພູເປັນຖໍ້າທີ່ສະໝຸກສະໝານ, ມີທັງສະນໍ້າເພື່ອອາບ ແລະກິນຢ່າງສະບາຍ, ແຕ່ບໍ່ມີທາງໃດຈະຂຶ້ນຮອດຈອມ. ເວລາເຈົ້າຫົວສາເກດໂງ້ງຂຶ້ນໄປນັ້ນ ແມ່ນໃຫ້ຝູງຂ້າທາດສະເພົາ (ແຕ່ງຫ້າງ) ຈິ່ງຂຶ້ນໄດ້. ຂຶ້ນເມື່ອເທິງຍອດແລ້ວ, ເຈົ້າຫົວສາເກດໂງ້ງໄດ້ສັ່ງໃຫ້ຊາວຂ້າທັງຫຼາຍຂົນເອົາເຂົ້າ, ເກືອ, ອາຫານ ແລະເຄື່ອງໃຊ້ສອຍຕ່າງໆຢ່າງຄົບຖ້ວນຂຶ້ນເມື່ອໃຫ້. ຈາກນັ້ນ ລາວກໍສັ່ງໃຫ້ຕັດສະເພົາ ແລະຂົນເອົາໄມ້ຕ່າງໆເຫຼົ່ານັ້ນໜີອອກຈາກທາງຂຶ້ນສູ່ຍອດພູໃຫ້ໝົດແລ້ວກໍສັ່ງຊາວຂ້າທັງໝົດໜີຈາກບໍລິເວນນັ້ນ.

### 7. ເຈົ້າອະນຸວົງໄປປາບເຈົ້າຫົວສາເກດໂງ້ງ

ເມື່ອເຈົ້າຄອງເມືອງວຽງຈັນ(ເຈົ້າອະນຸ) ຮູ້ຂ່າວວ່າເມືອງປາສັກຖືກຈູດ, ເພິ່ນກໍນໍາກໍາລັງຫຼວງລອງລົງຕາມລໍານໍ້າຂອງຈົນຮອດເມືອງປາສັກ ແລະເຫັນເມືອງສູນເປົ່າ, ເຫັນແຕ່ຊາກໄຟລາມໄໝ້ເປັນເທົ່າຖານບໍ່ເຫັນເຮືອນຈັກຫຼັງແລ້ວພະອົງກໍຕັ້ງທັບຢູ່ແຄມແມ່ນໍ້າຂອງ. ຈາກນັ້ນ ພະອົງໄດ້ສັ່ງໃຫ້ບ່າວໄພ່ເສນານໍາຊອກຫາຄົນຈຶ່ງໄປພົບຂ້າປ່າຄົນໜຶ່ງແລ້ວນໍາມາຖວາຍແກ່ພະອົງ. ເຈົ້າອະນຸໄດ້ຖາມຫາເຫດການຕ່າງໆທີ່ເກີດຂຶ້ນກັບເມືອງປາສັກ, ຂ້າຄົນນັ້ນໄດ້ຕອບພະອົງຕາມຄວາມຈິງວ່າເຈົ້າຫົວສາເກດໂງ້ງພາຊາວຂ້າມາຈູດເມືອງ, ເວລານີ້ເຈົ້າຫົວສາເກດໂງ້ງໄດ້ໄປລີ້ຢູ່ຈອມພູຍາປຸພຸ້ນພ້ອມກັບເມຍສາມຄົນ.

ເມື່ອເຈົ້າອະນຸຮູ້ເຫດການແຈ້ງແລ້ວ, ພະອົງກໍນໍາກໍາລັງພົນ ແລະບັງຄັບໃຫ້ຂ້າຄົນນັ້ນພາທາງໄປກ່ອນ. ເມື່ອໄປຮອດບ່ອນເຈົ້າສາລີ້ຢູ່, ບໍ່ມີທາງໃດຈະຂຶ້ນໄປຫາຖໍ້ານັ້ນໄດ້, ຖ້າວ່າຫຍັບເຂົ້າໃກ້ມັນກໍຍິງໂຕ້ຕອບມາ. ເຈົ້າອະນຸຈຶ່ງແຕ່ງໃຫ້ໝໍທໍາກົນສາຕະເພດ(ໃຊ້ເວດມົນຄາຖາ) ເພື່ອກ່ອມໃຫ້ເຈົ້າຫົວສາເກດໂງ້ງຢາກນອນ ແລະນອນຫຼັບບໍ່ຮູ້ເມື່ອຄືງ. ໃນເວລານັ້ນເອງ, ເຈົ້າອະນຸຈຶ່ງແຕ່ງໃຫ້ເສນາອາມາດແປງຫ້າງຄາດສະເພົາຂຶ້ນໄປຈັບເອົາເຈົ້າຫົວສາເກດໂງ້ງຢອນລົງມາ. ເມື່ອຈັບເອົາເຈົ້າຫົວສາເກດໂງ້ງໄດ້ແລ້ວເຈົ້າອະນຸຈຶ່ງສອບຖາມວ່າເປັນຫຍັງເຈົ້າເປັນສົມຈຶ່ງບຽດບຽນເມືອງບ້ານ, ເຈົ້າມີຄວາມເກົ່າຄວາມຫລັງບໍ ? ເຈົ້າຈຶ່ງທໍາກໍເວນລວງຄອງພະທໍາເຈົ້າ. ເຈົ້າຫົວສາເກດໂງ້ງໄດ້ຕອບເຈົ້າອະນຸວ່າ: ແຕ່ກ່ອນຂ້ານ້ອຍກໍ່ເປັນຄົນດີ, ຍ້ອນພະຍາພົມພັກດີໃຫ້ເອົາຊາວຂ້າພ້ອມດ້ວຍທະຫານຂອງ ລາວໄປຈູດເມືອງປາສັກ, ວ່າຈະໃຫ້ເປັນເຈົ້ານັ່ງເມືອງແທນເຈົ້າເມືອງປາສັກ. ເຈົ້າອະນຸຮູ້ແຈ້ງແນວນັ້ນແລ້ວ, ພະອົງຈຶ່ງສັ່ງໃຫ້ເສນາເອົາໂສ້ມາມັດແລ້ວເອົາພ້າຮ້າງເຜົາໄຟດາດຕີນຂອງເຈົ້າຫົວສາເກດໂງ້ງ ເພື່ອໃຫ້ອາຄົມຂອງລາວຫຼຸ້ຍ.

ຕໍ່ມາພະຍາເມືອງປາສັກກໍອອກຈາກປ່າມາເຝົ້າເຈົ້າອະນຸເພື່ອຂໍເພິ່ງປາລະມີ ແລະ ລາຍງານເຫດການຕ່າງໆທີ່ເກີດຂຶ້ນກັບເມືອງປາສັກ.ຕໍ່ມາເຈົ້າອະນຸຈຶ່ງແຕ່ງໃຫ້ຄົນໃຊ້ລ່ອງເຮືອເມືອງດອນໂຂງເພື່ອນໍາເອົາຕົວພະຍາພົມພັກດີຂຶ້ນມາ, ເມື່ອຂ້າໃຊ້ນໍາພະຍາພົມພັກດີມາຮອດແລ້ວ.ເຈົ້າອະນຸກໍ່ຖາມພະຍາພົມພັກດີວ່າ: ເສິກນີ້ແມ່ນໃຜເປັນຜູ້ຍຸແຫຍ່ ແລະປັ້ນແຕ່ງຂຶ້ນ ? ພະຍາພົມພັກດີຕອບເຈົ້າອະນຸວ່າ: ໄດ້ຍິນແຕ່ຂ່າວວ່າແມ່ນອ້າຍສາເກດໂງ້ງຊວນຊາວຂ້າຈູດເມືອງ.ແຕ່ເຫດການນີ້ຂ້ານ້ອຍໄດ້ຍິນແຕ່ເຂົາເວົ້າບໍ່ໄດ້ເຫັນກັບຕາ, ເມືອງຂອງໃຜຂອງມັນ, ຮັກສາບໍ່ລ້ອນກໍຕາມຊ່າງເຖີດ; ສ່ວນຜູ້ຂ້ານີ້ຮັກສາເຂດນີ້ມາເປັນເວລາດົນນານແລ້ວ, ແຕ່ກໍບໍ່ມີເຫດຮ້າຍຫຍັງເກີດຂຶ້ນ.

ຈາກນັ້ນ ເຈົ້າອະນຸພ້ອມດ້ວຍພະຍາພົມພັກດີກໍພາກັນລົງເມືອບາງກອກ, ທັງສອງກ່າວຟ້ອງກັນຕໍ່ເຈົ້າຄອງບາງກອກ. ສ່ວນອ້າຍສາເກດໂງ້ງແມ່ນໃສ່ສະແນນຫາມໄປ, ເຈົ້າເມືອງປາສັກກໍເດີນທາງໄປພ້ອມກັນ. ເມື່ອເຈົ້າຄອງບາງກອກຮູ້ເຫດຈະແຈ້ງແລ້ວກໍຕັດສັ່ງວ່າ: ເຈົ້າທັງສອງ (ໝາຍເຖິງເຈົ້າອະນຸ ແລະພະຍາພົມພັກ) ແມ່ນບໍ່ມີໃຜຜິດ, ຍັງຊົ່ວແຕ່ເຈົ້າຄອງເມືອງປາສັກເທົ່ານັ້ນ, ເພາະວ່າ ເສິກມາກໍບໍ່ສູ້, ຍັງຫຼົບໜີປະເມືອງ. ສ່ວນພະຍາພົມພັກດີນັ້ນແມ່ນມີຄຸນງາມຄວາມດີຫຼາຍ, ພໍ່ (ເຈົ້າຄອງບາງກອກ)ຂໍຊົມເຊີຍ ແລະເຊື່ອໝັ້ນເຈົ້າຫຼາຍ.

ສ່ວນອ້າຍສາເກດໂງ້ງນັ້ນມັນພານຄອງນັກບວດຜິດກັບລະບຽບຄອງທໍາຄວນລ້ຽງໄວ້ຕາມເວນກໍາຂອງມັນ, ມັນເປັນຄົນບາບບໍ່ຄວນຜູກມັດເຕະຕີເວນຈະນໍາທັນ, ແຕ່ບໍ່ຄວນໃຊ້ທາງການເມືອງເພາະບ້ານເມືອງຈະສູນເສົ້າ, ຄວນຂັບສົ່ງໜີຈາກເມືອງຍ້ອນມັນເປັນຄົນອະທໍານັ້ນເອງ.

**8. ເຈົ້າອະນຸຂໍອະນຸຍາດຈາກບາງກອກຄອງຈໍາປາສັກ**

ກ່ອນຈະຄືນວຽງຈັນເຈົ້າອະນຸໄດ້ທູນຂໍນໍາເຈົ້າຄອງບາງກອກເພື່ອຄອງເມືອງປາສັກ, ເຈົ້າຄອງເມືອງບາງກອກເຫັນດີ. ເມື່ອມາເຖິງເມືອງວຽງຈັນແລ້ວ, ເຈົ້າອະນຸຈຶ່ງແຕ່ງໃຫ້ຫົວເມືອງຕ່າງໆທີ່ຂຶ້ນກັບວຽງຈັນຈຶ່ງຊ່ວຍກັນສ້າງແປງເມືອງບາສັກຄືນໃໝ່, ເມື່ອສ້າງສໍາເລັດແລ້ວເຈົ້າອະນຸຈຶ່ງແຕ່ງໃຫ້ລູກຊາຍຂອງຕົນເປັນເຈົ້າຄອງເມືອງບາສັກ.

**9. ພະຍາພົມພັກດີຂໍອະນຸຍາດຈາກບາງກອກເພື່ອສັກເລກຄົນລາວ**

ບັດນີ້ຈະກ່າວເຖິງພະຍາພິມພັກດີຜູ້ມີກົນອຸບາຍລາຍລ່ຽມ, ເຂົາຂໍກາບໄຫວ້ເຈົ້າບາງກອກເພື່ອຂໍສັກເລກຄົນລາວທຸກຫົວເມືອງ, ເພາະຢ້ານຫົວເມືອງລາວລຸກຂຶ້ນຕ້ານກັບບາງກອກ. ຄໍາຍົວະເຍົ້າຂອງພະຍາພິມພັກດີເຮັດໃຫ້ເຈົ້າຄອງບາງກອກຫຼົງເຊື່ອ ແລະເຫັນດີຕໍ່ກົນອຸບາຍດັ່ງກ່າວ,ພະອົງຈຶ່ງນໍາເສນາທັງສີ່ມາບອກໃຫ້ຮູ້. ຈາກນັ້ນ ເຈົ້າຄອງບາງກອກກໍແຕ່ງໃຫ້ຂຸນໝື່ນຜູ້ທີ່ວາງໃຈໄດ້ຄື: ໝື່ນພັກດີ ແລະພິທັກໃຫ້ໄປປາບປາມຫົວເມືອງລາວຕັ້ງແຕ່ເມືອງກາລະສິນຈົນເຖິງເມືອງນະຄອນເຫມະລາດ(ເຂັມມະລາດ), ບັງມຸກ, ເຂດອຸບົນ ແລະເຂດອື່ນໆ. ການເຮັດແນວນັ້ນກໍເພື່ອໃຫ້ຄົນລາວຢ້ານບໍ່ກ້າທໍາສົງຄາມ. ເມື່ອກອງສັກຍົກກໍາລັງມາເຖິງຄອນລາດແລ້ວກໍໄດ້ພັກເຊົາຢູ່ຫັ້ນນານສົມຄວນ.

**10. ພະຍາພິມພັກດີໄດ້ຄອງເມືອງຄອນລາດແທນພະຍາບຸນຈັນ ແລ້ວສັ່ງກໍາລັງໄປສັກເລກຄົນລາວ**

ເມື່ອເຈົ້າຄອງບາງກອກຊາບວ່າພະຍາບຸນຈັນເຈົ້າເມືອງຄອນລາດມໍລະນະກໍາແລ້ວເພິ່ນກໍແຕ່ງຕັ້ງພະຍາພິມພັກດີຂຶ້ນຄອງເມືອງຄອນລາດແທນ. ຫຼັງຈາກໄດ້ຄອງເມືອງຄອນລາດປ່ຽນແທນພະຍາບຸນຈັນແລ້ວພະຍາພິມພັກດີຈຶ່ງສັ່ງໃຫ້ກອງສັກລົງໄປຈົດທະບຽນຄົນລາວທັງຍິງ ແລະ ຊາຍ, ຜົວ ແລະເມຍໃຫ້ຄົບຖ້ວນບໍ່ໃຫ້ລອດຫູຈັກຄົນ.

ເມື່ອຮອດເມືອງກາລະສິນ, ພວກເຂົາກໍຮຽກໂຮມເອົາຄົນລາວທຸກຄົນໃນເມືອງນີ້ມາສັກເລກພ້ອມທັງລົງທະບຽນລາຍຊື່ຄົບຖ້ວນ.ຈາກນັ້ນ ກໍ່ກາຍໄປເມືອງລະຄອນ ແລະເມືອງອຸບົນເພື່ອສັກເລກດັ່ງກ່າວເມືອງກາລະສິນນັ້ນເອງ. ເມື່ອສັກເລກ ແລະລົງທະບຽນລາຍຊື່ຄົນລາວຄົບທັງແປດຫົວເມືອງແລ້ວພວກເຂົາກໍພາກັນກັບຄືນບາງກອກ.

**11. ພະຍາພິມພັກດີໄປປັ່ນປວນ ແລະຮ່ວມຫົວກັບນ້ອງຊາຍພະຍາໄກຈູດເມືອງພູຂັນ**

ພະຍາພິມພັກດີຄອງເມືອງຄອນລາດໄດ້ສອງປີພໍດີແຕ່ກໍຍັງມີຄວາມແຄ້ນເຄືອງຢູ່, ຍ້ອນບໍ່ໄດ້ຄອງເມືອງປາສັກ. ເຂົາຈຶ່ງຕັດສິນໃຈຍົກຍ້າຍພົນອອກຈາກເມືອງຕົນ, ຕົວະວ່າຈະໄປກໍ່ສ້າງບ້ານດ່ານເມືອງປັດຈົມເພາະເປັນເສັ້ນທາງໄປມາຂອງພວກຂະເໝນເຂົາຈຶ່ງເຕົ້າໂຮມເອົາກໍາລັງຂອງສີ່ຫົວເມືອງທີ່ຢູ່ອ້ອມແອ້ມນັ້ນມາເປັນກໍາລັງອັນແຂງແກ່ນຂອງຕົນ.

ສ່ວນພະຍາໄກແຫ່ງເມືອງພູຂັນ ເຊິ່ງເປັນເມືອງຊາຍແດນກັບຂະເໝນ, ມີນ້ອງຊາຍຊື່ວ່າທ້າວກິ່ງຫຼ້າຢູ່ຕໍ່ມາມີໃຈຄິດລ້ຽວຫວັງຂ້າອ້າຍເພື່ອຢາກຄອງເມືອງ. ເມື່ອເຫັນພະຍາພິມພັກດີມາເຖິງ, ກິ່ງຫຼ້າຈຶ່ງຂໍຄວາມຊ່ວຍເຫຼືອ ເພື່ອໂຄ່ນລົ້ມອ້າຍຂອງຕົນເອງ. ທ້າວກິ່ງຫຼ້າໄດ້ເວົ້າຕໍ່ພະຍາພິມພັກດີວ່າເມື່ອສໍາເລັດເສັດສິ້ນແຜນທຸກປະການ, ເຂົາຈະຖວາຍເມືອງພ້ອມດ້ວຍໄພ່ພົນ, ຊ້າງ, ມ້າ ແລະ ສັບພະສິ່ງທັງປວງໃຫ້ພະຍາພິມພັກດີໝົດ.

ພະຍາພິມພັກດີຮັບຄວາມທ້າວກິ່ງຫຼ້າ, ເພາະພະຍາພິມພັກດີກໍຍັງຄຽດໃຫ້ພະຍາໄກ, ຍ້ອນວ່າພະຍາໄກບໍ່ປະຕິບັດຄໍາສັ່ງໃນເມື່ອກອນ. ດັ່ງນັ້ນ, ພະຍາພິມພັກດີຈຶ່ງສັ່ງໃຫ້ທະຫານພ້ອມທ້າວກິ່ງຫຼ້າຈູດເມືອງພູຂັນມຸນທະລາຍ. ເຫດການນີ້ເກີດຂຶ້ນໃນຂະນະທີ່ພະຍາໄກເພີຕົວຈຶ່ງຈໍາເປັນຕ້ອງປົບແລ່ນແຕ່ຕົວເພື່ອໜີຕາຍ. ສ່ວນປະຊາລາສະດອນເມືອງພູຂັນກໍພາກັນແຕກຕື່ນຮ້ອງໄຫ້ຢາງອຶນລະຫົນ, ແຕກກັນໄປຄົນລະທາງ, ລູກພັດພໍ່ແມ່, ຜົວພັດເມຍ ແລະອື່ນໆ. ສ່ວນພະຍາໄກນັ້ນ, ເມື່ອລວມບາວໄພ່ໄດ້ຈໍານວນໜຶ່ງກໍພາກັນໜີຈາກເມືອງໄປຫາເມືອງນາງລອງເພື່ອອາໄສໄພເພິ່ງ. ສ່ວນເມືອງພູຂັນໃນຄາວນີ້ແມ່ນໄດ້ຖືກພະຍາພິມພັກດີປຸ້ນສະດົມ ແລະເກັບກວາດເອົາທຸກຢ່າງນັບທັງຄົນ, ວັດຖຸເງິນຄໍາ ແລະຊ້າງມ້າ. ພວກເຂົາຂົ່ມຂູ່ບີບບັງຄັບຮ່າງກາຍ ແລະຈິດໃຈຂອງປະຊາຊົນເມືອງພູຂັນຢ່າງປ່າເຖື່ອນ, ຍິງໃດນົມຍານແມ່ນໃຫ້ເສຍພາສີບາດໜຶ່ງ, ສ່ວນຍິງໃດນົມເຄັ່ງນັ້ນໃຫ້ເສຍພາສີຫ້າສະຫຼຶງ.

**12. ປະຊາຊົນໜີຈາກການສັກເລກ, ຊະນວນສົງຄາມວຽງຈັນ-ບາງກອກ**

ໝົດລະດູຝົນກ້າວເຂົ້າສູ່ລະດູແລ້ງ, ຝູງນາຍກອງສັກກໍພາກັນອອກມາຈາກບາງກອກມາຕັ້ງທັບຢູ່ເມືອງກາລະສິນແລ້ວເລັ່ງຈັດເອົາບັນດາຫົວເມືອງມາໂຮມກັນເພື່ອສັກເລກ. ເຫດການດັ່ງກ່າວເປັນອຸບາດ ແລະເດືອດຮ້ອນເຖິງເສນາອາມາດຂອງບັນດາຫົວເມືອງໃນຂົງເຂດນີ້. ສະນັ້ນ, ຈຶ່ງມີຫຼາຍເມືອງຕະຫຼອດເຖິງເຈົ້າເມືອງບາງຄົນພາໄພ່ຟ້າລາສະດອນປົບໜີອອກຈາກເມືອງເພື່ອເມືອເພິ່ງເຈົ້າຂະໜ່ອມວຽງຈັນ(ເຈົ້າອະນຸ). ເຈົ້າພະສົມບໍພິດໄດ້ພາໄພ່ພົນໜີຈາກເມືອງກາລະສິນໄປຕັ້ງຢູ່ໜອງຫານ. ສ່ວນເຈົ້າແຫ່ງເມືອງສາກົນນະຄອນແມ່ນໄພ່ຟ້າ ລາສະດອນໄປເພິ່ງເຈົ້ານະຄອນພະນົມ.

ຕໍ່ມາ ພະຍາພິມພັກດີໄດ້ເຮັດສານໄປຕົວະເຈົ້າຄອງເມືອງປາສັກວ່າຈະເອົາກຳລັງຜ່ານເມືອງປາສັກເພື່ອໄປຕີພວກຂ້າ, ເພາະພວກຂ້າບໍ່ຍອມເສຍສ່ວຍໃຫ້ເຂົາ, ເຂົາຈະຈັບເອົາຂ້າຝູງນີ້ເມືອກແກເຈົ້າຄອງບາງກອກ, ເຈົ້າຄອງເມືອປາສັກໄດ້ຮ້າຍໃຫ້ແກ່ພະຍາພິມພັກດີວ່າ: ຢູ່ໃນຂົງເຂດນີ້ມີແຕ່ກູຄົນດຽວເປັນໃຫຍ່ບໍ່ອາດຈະອະນຸຍາດໃຫ້ໃຜມາຂົ່ມຂູ່ໄດ້. ແຕ່ພະຍາພິມພັກດີຍັງເວົ້າຕໍ່ເຈົ້າຄອງເມືອງປາສັກຊ້ຳສອງອີກວ່າ: ເຈົ້າຫ້າມຂ້ອຍກໍບໍ່ຟັງ, ຢ່າຂືນຄຳເຄັ່ນໃສ່ກັນແນວນັ້ນ.

ຄຳເວົ້າຂອງພະຍາພິມພັກດີໄດ້ເຮັດໃຫ້ເຈົ້າຄອງເມືອງປາສັກບໍ່ພໍໃຈເປັນຢ່າງຍິ່ງເພິ່ນຈຶ່ງຈັດເອົາກຳລັງແລ້ວລົງເຮືອເພື່ອຂຶ້ນເມືອລາຍງານຕໍ່ພະບິດາ(ເຈົ້າອະນຸ) ທີ່ນະຄອນວຽງຈັນ. ເມື່ອເຈົ້າອະນຸຊາບຂ່າວທຸກປະການແລ້ວ, ພະອົງກໍມີໃຈໂກດກ້າເປັນອັນມາກບວກກັບພະອົງຄິດເຫັນການກະທຳຂອງພະຍາພິມພັກດີຕໍ່ພະອົງໃນໄລຍະຜ່ານມາ.ດັ່ງນັ້ນ, ພະອົງຈຶ່ງເວົ້າວ່າ: "ກູຊິນຳໄປຕີໃຫ້ມຸ່ນວາຍປານນີ້....

## 13. ເຈົ້າອະນຸສັ່ງກະກຽມກອງທັບ

ຕໍ່ມາເຈົ້າອະນຸໄດ້ຮຽກປະຊຸມເສນາຜູ້ໃຫຍ່ ແລະວາງແຜນໃຫ້ພະໂອລົດຂອງພະອົງຕ້ອງປະຕິບັດວ່າ: ສຳລັບເຈົ້າລາຊະບຸດ, ເມື່ອເມືອເຖິງເມືອງແລ້ວໃຫ້ຈັດກຳລັງໄປໜີບທາງປີກຊ້າຍແມ່ນ້ຳມູນ, ເຮົາພະອົງນີ້ (ເຈົ້າອະນຸ) ຊິຕີເຂົ້ານະຄອນລາຊະສີມາໂດຍກົງ ແລະຕັນທາງປີກຂວາໄວ້. ສ່ວນເຈົ້າວັງໜ້າ(ເຈົ້າລາຊະວົງເຫງົ້າ)ແມ່ນໃຫ້ຕີຂະໜາບທາງກາງ. ຍຶດເອົາເມືອງກາລະສິນ ແລະກວາດເອົາຄົນມາໄວ້, ສ່ວນພວກກອງສັກ ແລະພະຍາເມືອງນັ້ນຈັບໄດ້ແລ້ວແມ່ນໃຫ້ຕັດຄໍຖິ້ມໝົດ.ເພາະເຈົ້າເມືອງກາລະສິນນີ້ເປັນໃຈໄທ ແລະກວາດເອົາລາສະດອນຂອງເຮົາໄປເປັນຂ້ອຍຂ້າ. ສ່ວນເມືອງເຫມະລາດນັ້ນກໍຄືກັນກັບເມືອງກາລະສິນ, ເຮົາເປັນຜູ້ນຳເອົາ,ເສິກສົງຄາມມາມ້າງເພເມືອງບ້ານ, ພວກນີ້ກໍໃຫ້ຕັດຄໍໃຫ້ໝົດບໍ່ຕ້ອງລ້ຽງມັນໄວ້.

ເມື່ອເຈົ້າລາຊະບຸດໄດ້ຮັບພະລາຊະໂອງການເສັດສິ້ນແລ້ວກໍທູນລາກັບເມືອເມືອງປາສັກເຮືອກະກຽມກຳລັງ. ເຈົ້າອະນຸໄດ້ສັ່ງຊານົນ(ແມ່ທັບ) ລົງໄປກະກຽມກຳລັງຢູ່ທາງເມືອງລະຄອນ (ເມືອງນະຄອນພະນົມ) ແລະມຸກດາຫານ. ສ່ວນເມືອງລະຄອນນັ້ນແມ່ນຢຸດລໍຖ້າກອນ, ເມື່ອໃດເຮົາພະອົງ (ເຈົ້າອະນຸ) ແລະເຈົ້າວັງໜ້າ (ເຈົ້າລາຊະວົງ) ຍຶດເມືອງນະຄອນລາຊະສີມາໄດ້ແລ້ວ ກອງກາງພວກສູ່ຈຶ່ງຍົກທັບຕາມລົງໄປດ່ອນ.

## 14. ເຈົ້າອະນຸເຄື່ອນທັບອອກຈາກວຽງຈັນ

ເມື່ອເຖິງຈຸລະສັກກະລາດ 1188 (ຄ.ສ. 1826) ເດືອນ 3ປີກຸນ, ເຈົ້າອະນຸໄດ້ຍົກກຳລັງຫຼວງອອກຈາກວຽງຈັນ, ມຸ່ງໜ້າໄປສູ່ນະຄອນລາຊະສີມາ, ເພື່ອຕ້ານກັບບາງກອກ, ຍ້ອນຄຽດໃຫ້ໄທຂົ່ມເຫັງ ແລະທຳຮ້າຍແກ່ລາສະດອນຂອງພະອົງ. ຂ່າວນີ້ຊາລືໄປທົ່ວຂົງເຂດລາວ-ໄທ, ທຸກເມືອງລ້ວນແຕ່ຢ້ານພະອົງ. ສະນັ້ນ, ບັນດາຫົວເມືອງທັງຫຼາຍທີ່ພະອົງຜ່ານໄປແມ່ນຂໍເພິ່ງບຸນສົມພານທັງໝົດ, ບໍ່ມີໃຜກ້າຕ້ານຄືນ. ເມື່ອພະຍາໄກແຫ່ງເມືອງພູຂັນຮູ້ຂ່າວນີ້ກໍຊົມຊື່ນ ແລະຄອງຄອຍເຈົ້າອານຸຊູ່ວັນ. ເມື່ອໃດເຈົ້າອະນຸຫາກມາເຖິງ, ພະຍາໄກກໍຈະນຳກຳລັງເຂົ້າຮ່ວມເພື່ອອາສາຕ້ານກັບພະຍາພິມພັກດີຢ່າງບໍ່ກົວເກງຢ້ານຍ້ອນວ່າພະຍາໄກຄຽດໃຫ້ພະຍາພິມພັກດີຈູດເມືອງຂອງຕົນ.

## 15. ເຈົ້າອະນຸເດີນທາງເຖິງເມືອງຄອນລາດ

ເມື່ອອອກຈາກນະຄອນຫຼວງວຽງຈັນແລ້ວ ເຈົ້າອະນຸໄດ້ພາພົນລັດເລັ່ງຫຼາຍມື້ຫຼາຍຄືນກໍໄປເຖິງຄອນລາດ (ນະຄອນລາຊະສີມາ). ເມື່ອພະອົງໄປເຖິງຄືນທັງເມືອງຄອນລາດກໍ່ອອກມາຕ້ອນຮັບ ແລະຂໍເພິ່ງບຸນພະອົງເຈົ້າ. ພວກເຂົາເວົ້າວ່າ: ຖ້າພະອົງມີຄວາມປະສົງແນວໃດກໍຂໍພະອົງເວົ້າມາຕາມແຈ້ງ. ເຈົ້າອະນຸເວົ້າຕໍ່ພວກເຮົາວ່າ: ຈັກເອົາຄົວຄືນເມືອວຽງຈັນ. ເວລານັ້ນ ພະຍາພົມພັກດີເຈົ້າຂອງເມືອງຄອນລາດບໍ່ຢູ່. ພວກເສນາອາມາດແຫ່ງເມືອງຄອນລາດຈຶ່ງພາກັນເວົ້າວ່າ: ຖ້າວ່າພະຍາພົມພັກດີຮູ້ຂ່າວ ແລະກັບຄືນມາຈະບໍ່ມີຜູ້ໃດສູ້ເຂົາໄດ້. ແຕ່ນັ້ນ ເຈົ້າອະນຸໄດ້ສັ່ງໃຫ້ຊາວຄົວກະກຽມເພື່ອກັບຄືນວຽງຈັນດ່ວນ. ເມື່ອໄດ້ຮັບຄຳສັ່ງໃນເມືອງຄອນລາດຈຶ່ງອຸກຂະລຸກວຸ້ນວາຍຂຶ້ນ, ຊາວຂະເໝນ, ຊາວໄທ, ຊາວຈີນ, ຊາວມອນໄດ້ພາກັນເອົາເຄື່ອງຂອງທີ່ສຳຄັນໄປຊຸກເຊື່ອງໄວ້. ລາງພ່ອງກໍຖິ້ມລົງໜອງ, ລາງພອງເອົາເຄື່ອງຝັງໄວ້ດິນ ແລະ ອື່ນໆ.

ເມື່ອເອົາເຄື່ອງຂອງທີ່ສຳຄັນຊຸກເຊື່ອງໄວ້ດີແລ້ວ, ຊາວຄອນລາດກໍພາກັນໃຊ້ກວຽນຂົນເຄື່ອງທີ່ຈະເອົາໄປນຳອອກໄປໂຮມກັນຢູ່ແຄມມູນເດັ້ງ. ສ່ວນທະຫານຂອງເຈົ້າອະນຸກໍ່ສ້າງຄ້າຍເປັນວຽງອ້ອມຮອບ, ເຈົ້າອະນຸເອງໄດ້ສະຖິດຢູ່ເຮືອນທີ່ງົດງາມຢູ່ກາງ, ທັງສີ່ດ້ານມີພະຍາສີ່ຫົວເມືອງ ແລະເສນາອາມາດແວດລະວັງອ້ອມຮອບ.

**16. ພະຍາໄກອາສາຈັບພະຍາພົມພັກດີ**

ເມື່ອພະຍາໄກຮູ້ຂ່າວວ່າເຈົ້າອະນຸເຂົ້າໄປເຖິງຄອນລາດແລ້ວ, ພະຍາໄກກໍພາບ່າວໄພ່ເສນາມາຫາເຈົ້າອະນຸ ແລະທູນເຫດການແຕ່ຄາວກ່ອນສູ່ພະອົງຮູ້ທຸກຢ່າງ, ຈາກນັ້ນ ພະຍາໄກກໍອາສາເພື່ອໄປຈັບພະຍາພົມພັກດີ, ເພາະເຂົາເປັນຜູ້ມ້າງເພເມືອງຂອງພະຍາໄກ. ພະຍາໄກເວົ້າຕໍ່ເຈົ້າອະນຸວ່າ: ພວກຂ້ານ້ອຍມານີ້ມາແຕ່ມືເປົ່າເທົ່ານັ້ນ, ຍ້ອນວ່າໂຕນອອກຈາກເມືອງ ບໍ່ທັນກະກຽມອັນໃດໝົດ, ຫອກງ້າວກໍບໍ່ມີ, ຖ້າວ່າມີອາວຸດ ຂ້ານ້ອຍຂໍອາສາໄປຈັບເອົາພະຍາພົມພັກດີໃຫ້ໄດ້ໂດຍບໍ່ໃຫ້ຮ້ອນເຖິງພະໄທພະອົງຈັກຢ່າງ. ເຈົ້າອະນຸໄດ້ມອບເຄື່ອງສົງຄາມໃຫ້ພະຍາໄກ ແລະເວົ້າຕໍ່ພະຍາໄກວ່າ: ທ່ານຈົ່ງໄປຈັບເອົາມັນສົ່ງມາຢ່າຊ້າ, ຫາກເອົາເປັນບໍ່ໄດ້ເອົາຕາຍກໍໄດ້, ຖ້າວ່າກຳລັງບໍ່ພໍເຮົາພະອົງຈະແຕ່ງກຳລັງໄປເພີ່ມ.

**17. ພະຍາພົມພັກດີວາງແຜນຕໍ່ຕ້ານວຽງຈັນ**

ເຫດການທີ່ເຈົ້າອະນຸຍຶດເມືອງຄອນລາດ ແລະພະຍາໄກອາສາໄປຈັບເຂົານັ້ນ, ພະຍາພົມພັກດີໄດ້ຊາບຂ່າວທຸກຢ່າງ, ເຂົາຈຶ່ງໄດ້ແກ້ເຄື່ອງຍົດເຈົ້າເມືອງອອກ ແລະປອມໂຕເປັນຄົນທຳມະດາສາມັນ ແລະບອກໃຫ້ລູກນ້ອງຂອງເຂົາວ່າຫາກເຫັນພະຍາໄກມາໃຫ້ບອກພະຍາໄກວ່າເຂົາໜີໄປລີ້ຢູ່ບ່ອນອື່ນແລ້ວ. ຈາກນັ້ນ ພະຍາພົມພັກດີກໍລັກລອບເຂົ້າໄປຢູ່ນຳຄອບຄົວຂອງຕົນທີ່ເມືອງຄອນລາດເພື່ອວ່າງແຜນຕ້ານກັບເຈົ້າອະນຸ, ເຂົາໄດ້ແຕ່ງໃຫ້ເສນາອາມາດຜູ້ມີປັນຍາຂອງເຂົາໄປທຳທາຂໍແກ່ຍາວເວລາອົບພະຍົບກັບຄືນວຽງຈັນນຳເຈົ້າອະນຸ, ພະອົງເຫັນດີ ແລະເວົ້າວ່າ: ສູ່ຈົ່ງເດົາດາຕົກແຕ່ງຊູ່ອັນໃຫ້ແລ້ວ ແລະຄຸມຕົວໄວ້ໃຫ້ດີ.

ເມືອພະຍາພົມພັກດີກົດໜ່ວງເວລາອອກເດີນທາງກັບຄືນວຽງຈັນໄດ້ແລ້ວ, ເຂົາກໍສັ່ງຈັດກະກຽມກຳລັງທັງຍິງ ແລະຊາຍ, ທັງຫອກ ແລະປືນ, ພ້ອມທັງບອກໃຫ້ທຸກຄົນຮັກສາຄວາມລັບ.ໃນເວລານັ້ນ, ເສນາຂອງພະຍາພົມພັກດີກໍຂີ່ມ້າແລ່ນໄປແລ່ນມາເພື່ອບອກເຕືອນກັນ, ເມື່ອເຫັນທະຫານລາວກໍຕົວະວ່າພວກເຂົາໄປຊອກເຕົ້າໂຮມຄົວເພື່ອຕຽມຂຶ້ນວຽງຈັນ, ທະຫານລາວກໍເຊື່ອຄວາມ. ຈາກນັ້ນ, ພະຍາພົມພັກດີກໍສັ່ງໃຫ້ຝູງໄທຄົວເຂົ້າຢູ່ທາງກາງ ແລ້ວເອົາກວຽນຢາຍເປັນກຳແພງອ້ອມຮອບ, ທຸກຄົນແມ່ນເປັນໃຈດຽວກັນ. ເມື່ອມີຄຳສັ່ງຍົກຍ້າຍຈາກເຈົ້າອະນຸເພື່ອກັບວຽງຈັນ, ກໍພ້ອມກັນລຸກຂຶ້ນຕ້ານຄືນທັນທີ. ນີ້ແມ່ນກົນອຸບາຍຂອງພະຍາພົມພັກດີທີ່ໄດ້ເຊື່ອງອຳໄວ້ຢ່າງມີດຽງບໃນເວລານີ້.

**18. ເຈົ້າອະນຸສັ່ງກວາດຄົວທັງເມືອງແປະ, ເມືອງປັກ**

ເຈົ້າອະນຸໄດ້ສັ່ງໃຫ້ກຳລັງໄປຈັດເອົາຊາວຄົວຕ່າງໆທັງໃນເມືອງ ແລະນອກເມືອງ, ທາງເມືອງແປະ ແລະ ເມືອງປັກບໍ່ໃຫ້ຄ້າງຄາຈັກຄົນມາເຕົ້າໂຮມກັນເພື່ອຈະກວາດຂຶ້ນໄປວຽງຈັນ. ຖ້າວ່າພະຍາເມືອງໃດຫາກບໍ່ປະຕິບັດ ຕາມ ແລະມີການຂັດຂືນແມ່ນອະນຸຍາດໃຫ້ຕັດຄໍ, ອີງໃສ່ຄຳສັ່ງຂອງພະອົງດັ່ງກ່າວທະຫານລາວຈຶ່ງໄປເກັບກວາດ ເອົາຊາວຄົວທັງລາວ, ໄທ, ຂະເໝນ, ສ່ວຍ ແລະຊາວຂ້າທັງຫຼາຍໄດ້ຢ່າງຫຼວງຫຼາຍ. ຕັ້ງແຕ່ດົງພະຍາໄຟຟາກນັ້ນ ທາງ ຂົງເຂດເມືອງສະລະບຸລີກໍຍອມມາຂຶ້ນກັບເຈົ້າອະນຸທັງໝົດ.

ສ່ວນພະຍາໄກກໍໄດ້ພາກຳລັງພົນກັບເມືອສູ່ບ້ານເມືອງຂອງຕົນ. ເມື່ອກັບເມືອເຖິງເມືອງຂອງຕົນແລ້ວ, ພະຍາໄກກໍນຳກຳລັງໄປປິດລ້ອມຄ້າຍຂອງພະຍາພິມພັກດີໂດຍທັນທີແຕ່ເຫັນກຳລັງຂອງພວກເຂົາພຽງແຕ່ໜ້ອຍ ດຽວ. ເມື່ອພະຍາໄກເຂົ້າໄປຖາມ, ບ່າວໄພຂອງພະຍາພິມພັກດີກໍຕົວະວ່າ: ພະຍາພິມພັກດີໄດ້ໜີຈາກຄ້າຍນີ້ໄປລີ້ຢູ່ ປາແຊງໃຫຍ່ພຸ້ນໄດ້ສາມສີ່ວັນແລ້ວ, ພະຍາໄກກໍຕາມໄປທັນທີ ແລະ ແຕ່ງຄົນຕິດຕາມໄປຈອບຟັງເບິ່ງ. ເມື່ອເຂົ້າໄປ ໃກ້ໆຊໍ້າພັດບໍ່ເຫັນຫຍັງເລີຍ. ພະຍາໄກໝົດຫວັງ, ບໍ່ຮູ້ວ່າພະຍາພິມພັກດີໄປທາງໃດ.

**19. ເຈົ້າວັງໜ້າວຽງຈັນເຂົ້າຍຶດກາລະສິນ**

ສ່ວນເຈົ້າວັງໜ້າ (ເຈົ້າລາຊະວົງເຫງົ້າ) ໄດ້ນຳກຳລັງຂອງເມືອງນະຄອນໄປຕາມຫຼັງສະເດັດພໍ່ (ເຈົ້າອະນຸ) ເພື່ອຊ່ວຍແຮງ, ທຳອິດພະອົງໄດ້ນຳກຳລັງເຂົ້າຍຶດກາລະສິນ, ສ່ວນທາງປີກຊ້າຍແມ່ນກຳລັງຂອງເຈົ້າຈຳປາສັກ, ເຊິ່ງ ໄດ້ນຳກຳລັງໄປຕັ້ງຢູ່ສິ້ມປ່ອຍແຄມມູນ ແລະກວາດເອົາບັນດາຊາວຄົວເຫຼົ່ານັ້ນໂຮມເຂົ້າມາໄວ້ແຫ່ງນັ້ນ.

ເຈົ້າໜ້າໄດ້ນຳກຳລັງຫຼວງອອກໄປຫຼາຍມື້ຫຼາຍວັນຈຶ່ງໄປເຖິງເມືອງກາລະສິນ, ປະຊາລາຊະດອນເມືອງນີ້ໄດ້ ອອກມາຕ້ອນຮັບຢ່າງຄັບຄາໜາແໜ້ນ ແລະພ້ອມກັນປຸກກວ້ານເພື່ອເປັນບ່ອນພັກເຊົາແກ່ພະອົງ. ຈາກນັ້ນ ເຈົ້າວັງ ໜ້າກໍສັ່ງໃຫ້ໄປນຳເອົາພວກກອງສັກອອກມາເພື່ອສອບຖາມຄວາມຈິງ. ພວກກອງສັກໄດ້ຕອບພະອົງວ່າ: ພວກ ຂ້ານ້ອຍມານີ້ກໍເພາະຢ້ານຕໍ່ເຈົ້າເໜືອຫົວ (ເຈົ້າຄອງບາງກອງ), ບອກໃຫ້ມາສັກເລກໄວ້ຊູ່ເມືອງ. ຈາກນັ້ນ, ເຈົ້າວັງໜ້າ ໄດ້ເວົ້າຕໍ່ກອງສັກວ່າ: ພວກສູ່ຈົ່ງຢູ່ຕາມສະບາຍ, ຖ້າບໍ່ພໍໃຈເມື່ອວຽງຈັນສັກຕື່ມອີກກໍໄດ້, ສູ່ຈົ່ງກັບເມືອກິນເຂົ້າໃຫ້ ອີ່ມ, ແລ້ວຈຶ່ງກັບຄືນມາໃຫ້ໝົດຕາມໃຈມັກສາ. ສ່ວນກູພະອົງກໍຟ້າວມາຢ້ານແຕ່ບໍ່ທັນສັກນຳເທົ່ານັ້ນແລ້ວ, ແຕ່ເມື່ອ ມາເຫັນພວກສູ່ກູພະອົງກໍພໍໃຈນຳແລ້ວ. ເມື່ອພວກກອງສັກໄດ້ຟັງຄຳເວົ້າຂອງເຈົ້າວັງໜ້າກໍມີຄວາມສົງໄສ. ເມື່ອ ພວກເຂົາມາຮອດເຮືອນແລ້ວກໍພາກັນງຽບສະຫງັດຢູ່ປານກັນກັບຕາຍ. ຈາກນັ້ນ ພວກເຂົາກໍ່ເອົາເຄື່ອງຂອງໄປທານ ໃຫ້ພະສົງເພື່ອໄຫວ້ວອນຂໍບຸນຍູ້ສົ່ງໃຫ້ພົ້ນເຫດຮ້າຍໃນປາງນີ້ເຈົ້າເມືອງກາລະສິນກໍເໝືອນກັນເຈົ້າກໍ່ຄິດກິນແໜງຕໍ່ ການກະທຳຂອງຕົນໃນປາງກ່ອນຄື: ການກັບກືນກິນຂວານປອນລິງທັງດ້າມ.

ຈາກນັ້ນໃນເວລາຕອນຄ່ຳຄືນເຈົ້າວັງໜ້າໄດ້ສັ່ງກຳລັງທະຫານປິດລ້ອມຕົວເມືອງໄວ້ແລ້ວໃຫ້ຈັບເອົາພວກ ກອງສັກໃຫ້ໝົດບໍ່ໃຫ້ເຫຼືອຈັກຄົນ, ແລ້ວກວາດເອົາພົນລະເມືອງຄືນເມືອວຽງຈັນໃຫ້ໝົດ. ໃນເວລານັ້ນເຈົ້າກາລະ ສິນກໍໂຕນໜີລົງເຮືອນ, ແຕ່ທະຫານຂອງເຈົ້າວັງໜ້າກໍຈັບເອົາໄດ້, ແລ້ວຮຸ່ງເຊົ້າມາກໍນຳມາຕັດເອົາຫົວສຽບປະຈານ ພ້ອມກັບເສນາຂອງເຂົາຫຼາຍຄົນ, ຍັງປ່ອຍແຕ່ຄົນດຽວຍ້ອນຈັບຫຼົງຍາມກາງຄືນບໍ່ທັນຈື່ໜ້າຄັກ. ຈາກນັ້ນ ກໍສັ່ງ ປັດກວາດຄົວຂຶ້ນໄປວຽງຈັນໃຫ້ໝົດ.

**20. ເຈົ້າວັງໜ້າກວາດຫົວກາລະສິນຂຶ້ນວຽງຈັນ**

ເມື່ອຮຽກໂຮມຊາວຄົວຂອງເມືອງກາລະສິນສຳເລັດແລ້ວ, ເຈົ້າວັງໜ້າກໍ່ສັ່ງໃຫ້ຊາວຄົວທັງໝົດທັງຍິງ ແລະ ຊາຍ, ນ້ອຍ ແລະໃຫຍ່ໂດຍເອົາງົວ, ຄວາຍ, ຊ້າງ ແລະມ້າເປັນພາຫະນະແລ້ວຍ້າຍອອກຈາກເມືອງໄປ, ໃນຍາມ ແດດຮ້ອນແຜດເຜົາ. ສ່ວນເຈົ້າວັງໜ້າແມ່ນຄຸມເອົາພວກກອງສັກໄປ. ຫຼັງຈາກນັ້ນ ພະອົງກໍສັ່ງໃຫ້ຂ້າພວກກອງສັກ ໝົດຊູ່ຄົນ, ຈຶ່ງໄວ້ແຕ່ນາຍຂອງເຂົາຄົນດຽວ, ເຫດວ່າແມ່ຂອງເຂົາເປັນຄົນໄທວຽງຈັນ. ພະອົງໄດ້ນຳທັບໄປຕັ້ງຢູ່ເມືອງ ຮ້ອຍເອັດ.ໃນຂະນະນັ້ນ, ຝ່າຍເມືອງຮ້ອຍເອັດກໍ່ກະກຽມກຳລັງເພື່ອຈະຕ້ານກັບເຈົ້າວັງໜ້າ.

## 21. ເຈົ້ານະຄອນຈຳປາສັກກວາດຄົວຂຶ້ນວຽງຈັນ

ກຳປົກຊ້າຍແມ່ນເຈົ້າແຫ່ງຈຳປາສັກ, ເຈົ້າກໍກວາດຄົວຈາກບັນດາຫົວເມືອງຕ່າງໆໃນຂົງເຂດນັ້ນເພື່ອຂຶ້ນມາວຽງຈັນພໍປານຊາຍໄຫຼແລ້ງ. ຍັງເຫຼືອແຕ່ເມືອງອຸບົນວ່າຈະຍົກຍ້າຍຄົວມາຕາມຫຼັງ, ມີບາງເມືອງທີ່ຍັງແຂງຂັດຕໍ່ເຈົ້ານະຄອນຈຳປາສັກ, ພະອົງກໍສັ່ງໃຫ້ຂ້າເສຍເຊັ່ນ: ເຈົ້າພະຍາເມືອງເຂມະລາດ ພ້ອມກັບສາມພະຍາເມືອງອົກຍ້ອນຂັດຄຳສັ່ງ.

## 22. ເຈົ້າວັງໜ້າສັ່ງໃຫ້ເມືອງນະຄອນມາຊ່ວຍ

ເມື່ອໄດ້ຮັບຄຳສັ່ງຈາກເຈົ້າວັງໜ້າແລ້ວ, ເຈົ້າເມືອງນະຄອນ (ນະຄອນພະນົມ) ກໍກະກຽມກຳລັງຂຶ້ນມາໂດຍປະດັບເຄື່ອງນຸ່ງແບບທະຫານແກວ, ນຸ່ງຫົ່ມໂສ້ງເສື້ອຍ່າມກວ້າງ, ຫົວໃສ່ໝວກແຊມຫາງໄກ່. ເມື່ອໂຍທາເຈົ້າເມືອງນະຄອນໄປເຖິງຮ້ອຍເອັດແລ້ວ, ຊາວເມືອງຮ້ອຍເອັດເຫັນຄິດວ່າແມ່ນແກວມາຫຼາຍກໍອອນໂຍມຕໍ່ເຈົ້າວັງໜ້າ ແລະພະອົງກໍສັ່ງໃຫ້ໂຮມຊາວຄົວແຫ່ງເມືອງຮ້ອຍເອັດຂຶ້ນເມື່ອວຽງຈັນໂດຍດ່ວນ. ພະຍາເມືອງຮ້ອຍເອັດກໍ່ສະໝັກໄປຕາມເຈົ້າວັງໜ້າຄືກັນ.

ຝ່າຍພະຍາເມືອງສຸວັນນະພູມເມື່ອຮູ້ຂ່າວກໍນຳບ່າວໄພ່ມາເຝົ້າເຈົ້າວັງໜ້າ ແລະມອບເມືອງໃຫ້ພະອົງດູແລ. ເຈົ້າວັງໜ້າເວົ້າຕໍ່ພະຍາເມືອງສຸວັນນະພູມວ່າ: ທ່ານຈົ່ງໄປນຳເຮົາເພື່ອຄວາມມ່ວນຊື່ນຊື່ໆ. ສ່ວນຊາວຄົວຂອງທ່ານນັ້ນແມ່ນເອົາຕາມໃຈເຂົາ, ບາງເທື່ອໃນພາຍໜ້າພຸ້ນອາດມີເວລາມາທ່ອງທ່ຽວທາງນີ້. ຈາກນັ້ນ ເຈົ້າເມືອງສຸວັນນະພູມກໍເວົ້າຕໍ່ພະອົງວ່າ: ຂ້ານ້ອຍຂໍມອບຄົວໃຫ້ນະພະອົງທັງໝົດ.

ຕໍ່ມາເຈົ້າວັງໜ້າພ້ອມກັບພະຍາເມືອງຕ່າງໆກໍພ້ອມກັນຍົກໄພ່ພົນໄປເມືອງສຸວັນນະພູມ ແລະ ໄດ້ຕັ້ງຄ້າຍພັກເຊົາຢູ່ແຫ່ງນັ້ນນານພໍປະມານ.

## 23. ພະຍາເມືອງນະຄອນລົງໄປຄອນລາດ ແລະເຈົ້າອະນຸໄດ້ມອບໃຫ້ຄອງເມືອງຄອນລາດ

ພະຍາເມືອງນະຄອນ (ນະຄອນພະນົມ) ອຳລາເຈົ້າວັງໜ້າ, ເພື່ອນຳພາກຳລັງພົນເດີນທາງຈາກເມືອງສຸວັນນະພູມໄປເມືອງຄອນລາດ ແລະເດີນທາງຫຼາຍມື້ຈຶ່ງເຖິງເມືອງຄອນລາດ ເມື່ອໄປຮອດເມືອງຄອນລາດແລ້ວເຈົ້າເມືອງນະຄອນກໍເຂົ້າເຝົ້າເຈົ້າອະນຸ ແລະທູນເຫດການຕ່າງໆໃຫ້ພະອົງຊາບ. ເຈົ້າອະນຸກໍຊົມຊື່ນຍິນດີ ແລະແຕ່ງຕັ້ງໃຫ້ເຈົ້າເມືອງນະຄອນຄອງເມືອງຄອນລາດ ແລະສັ່ງໃຫ້ນຳກຳລັງພົນເຂົ້າໄປຢູ່ໂຮງຂອງພະຍາພິມພັກດີ, ຫໍໂຮງຂອງພະຍາພິມພັກດີມີ 7 ຫຼັງ, ມີສວນໝາກໄມ້ກວ້າງຂວາງກຳລັງຂອງພະຍານະຄອນຢູ່ສອງພັນຄົນກໍບໍ່ເຕັມ.

ເມື່ອພະຍານະຄອນໄດ້ເຂົ້າຢູ່ໂຮງຂອງພະຍາພິມພັກດີແລ້ວ, ທະຫານຂອງພະຍານະຄອນແມ່ນສະໜຸກກິນໝູ, ກິນໄກ່, ກິນໝາກໄມ້ຂອງພະຍາພິມພັກດີ, ຈາກນັ້ນກໍຊອກເອົາເຄື່ອງຂອງທີ່ຊາວຄົວຄອນລາດຂຸດເຊື່ອງໄວ້ຕາມສະ ແລະຝັງດິນໄວ້, ຢູ່ໃສກໍເອົາໝົດຖ້າຊອກເຫັນ. ດັ່ງນັ້ນ, ຊາວຈີນພາກັນຮ້ອງໄຫ້ຍ້ອນເຄື່ອງຂອງເສຍ, ສ່ວນພວກສາວໄທ ແລະສາວມອນແມ່ນໄດ້ປ່ຽນຜຽນກັນເປັນໝູ່ໆເພື່ອຂົນເອົາເຂົ້າ ແລະເກືອໄປສົ່ງໃຫ້ຊາວຄົວ.

## 24. ພະຍາໄກຂານອາສານຳຈັບພະຍາພິມພັກດີຄັ້ງທີສອງ

ພະຍາໄກກັບຈາກເມືອງພູຂັນເພື່ອມາລາຍງານຕໍ່ເຈົ້າອະນຸ, ຕໍ່ກັບການນຳຈັບຕົວພະຍາພິມພັກດີບໍ່ໄດ້, ເພາະວ່າພະຍາພິມພັກດີໄດ້ເຂົ້າປ່າແຊງຫຼວງເພື່ອຫຼົບຫຼີກແຕ່ຕົວຜູ້ດຽວ, ປະແຕ່ລູກນ້ອງໄວ້ໃນຄ້າຍ. ພະຍາໄກໄດ້ທູນຕໍ່ເຈົ້າອະນຸວ່າ: ຈະເອົາຕາຍ ຫຼື ເອົາເປັນ, ຖ້າເອົາຕາຍແມ່ນບໍ່ຍາກ, ຫາກຈັບເອົາທັງເປັນແມ່ນຍາກໜ້ອຍໜຶ່ງ.

ເຈົ້າອະນຸເວົ້າຕໍ່ພະຍາໄກວ່າ: ຕ້ອງເອົາທັງເປັນ, ເພາະພະຍາພິມພັກດີມີສິນບັດຫຼວງຫຼາຍ ແລະກໍຢາກຈັບມາສອບປາກຄໍພ້ອມກັບຂ້ຽນຕີໃຫ້ມັນເຂັດຫຼາບ.

ເມື່ອພະຍາໄກແຕ່ງເມືອງພູຂັນແຈ້ງພະລາຊະປະສົງຂອງເຈົ້າອະນຸແນວນັ້ນແລ້ວພະຍາໄກກໍເມືອງພູຂັນ. ພະຍາໄກໄດ້ໃຊ້ເວລາຫຼາຍວັນຄືນຜຶກຈອບເບິ່ງພະຍາພິມພັກດີແຕ່ກໍບໍ່ເຫັນເຂົາຈະໃຫ້ເຫັນໄດ້ແນວພະຍາພິມພັກດີໄດ້ປອມຕົວມາຢູ່ນຳຊາວຄົວທີ່ເມືອງຄອນລາດ ເພື່ອວາງແຜນໃຫ້ຊາວຄົວຕຽມລຸກຮືຂຶ້ນຕ້ານກັບການກວາດຕ້ອນຂອງເຈົ້າອະນຸແຕ່ດົນແລ້ວ; ດຽວນີ້ເຂົາພຽງແຕ່ລໍເຖິງເວລາຍ້າຍຊາວຄົວຂຶ້ນເມືອວຽງຈັນເມື່ອໃດກໍຈະພາຊາວຄົວລຸກຂຶ້ນຕ້ານກັບເຈົ້າອະນຸຄືນໃນທັນທີໂລດ.

## 25. ຊາວຄົວເຈັກຂໍປະທານຊ້າງນຳເຈົ້າອະນຸເພື່ອຂຶນຄົວ

ຍັງມີເຈັກຄົນໜຶ່ງຊື່ວ່າ ເຈັກຈ໊າຍມາແຕ່ວຽງຈັນ, ມາຕາມຂະບວນຂອງລູກຊາຍເຈົ້າອະນຸຜູ້ໄປເມືອງເລີຍ. ຊາວຄົວເຈັກເມືອງຄອນລາດໄດ້ໄປຫາເຈັກຈ໊າຍເພື່ອຫາລາວໄປທູນເຈົ້າອະນຸວາ: ພວກເຂົາບໍ່ຮູ້ເຮັດສິ່ງຄາມ, ເມືອງໃດດີກໍເພິ່ງດອມເມືອງນັ້ນ, ຊາວຄົວເຈັກໄດ້ໂຮມເງິນຄຳນັບເປັນຫາບ ແລະ ມອບໃຫ້ແກ່ເຈັກຈ໊າຍນຳເຂົ້າເຝົ້າຂໍຊ້າງນຳເຈົ້າອະນຸ, ພໍໄດ້ໃສເຄື່ອງເມືອວຽງຈັນ.

ເຈົ້າອະນຸສັ່ງໃຫ້ຫົວໜ້າໝວດທະຫານເມືອງຄອນລາດເອົາຊ້າງສີ່ຮ້ອຍຕົວພ້ອມກັບຄວາຍຂົນເອົາເຄື່ອງຂອງແລະໃສ່ຄົວຊາວເຈັກໄປສົ່ງຮອດປາກຊ່ອງສາມໝໍແລ້ວກັບຄືນ. ພະຍາເມືອງນະຄອນກໍຮັບປາກເຈົ້າອະນຸ, ແລ້ວຈັດເອົາຊ້າງສີ່ຮ້ອຍຕົວພ້ອມຄວານຊູ່ຕົວແລ້ວຈັດເຈັກໃຫ້ເອົາຄົວມາໃສ່ໝົດຖ້ວນແລ້ວກໍພາຍ້າຍອອກໄປ.

## 26. ຊາວຄົວຄອນລາດຂັດຂືນການກວາດຕ້ອນແລະລຸກຮື້ຂຶ້ນຕ້ານຄືນ

ເຈົ້າອະນຸໄດ້ສັ່ງໃຫ້ຄົນໃຊ້ໄປສັ່ງໃຫ້ຊາວຄົວຕ້ອງເລັ່ງລັດອອກເດີນທາງ, ຖ້າວ່າຊັກຊ້າຈະບໍ່ທັນໃນການສ້າງໄຮທຳນາ. ເມື່ອໄດ້ຮັບຄຳສັ່ງຈາກພະອົງແລ້ວ, ຄົນໃຊ້ກໍໄປເຖິງຊາວຄົວທີ່ແຄມມູນເດັ້ງ, ແລະ ຈັດພວກເຂົາໃຫ້ຕຶກແຕ່ງໂດຍໄວ, ຊາວຄົວຕອບວ່າກະກຽມຍັງບໍ່ທັນເພາະວ່າກວຽນລໍ້ທັງຫຼາຍເປ່ເພໄປໝົດແລ້ວ, ນອກນັ້ນ ສະບຽງອາຫານກໍຂາດເຂີນ. ແຕ່ນັ້ນຄົນໃຊ້ກໍຄືນມາຄອບເຈົ້າອະນຸຕາມຂໍ້ຄວາມທີ່ຊາວຄົວສະເໜີ.

ວັນລຸນມາເຈົ້າອະນຸກໍຈຳໃຫ້ຄົນໃຊ້ນຳໄປຈັດອີກ, ຊາວຄົວພາກັນຕີຮ້າຍ ແລະຕູ່ຫາວ່າ: ເປັນຫຍັງຈິ່ງຈັດກະຈັ້ນກະຈໍ້ແນວນີ້, ຂໍແກ່ຍາວເວລາເພື່ອສ້ອມແປງພາຫະນະກໍບໍ່ໄດ້, ທະຫານພວກເຈົ້າກໍລັກເອົາເຄື່ອງຂອງ ແລະລ່ວງເກີນລູກເມຍພວກເຮົາ. ແຕ່ນັ້ນນາຍກອງລາວກໍ່ຮ້າຍ ແລະຖາມຄືນວ່າ: ທ່ານຈຳໜ້າໄດ້ບໍ່ແມ່ນໃຜເປັນຜູ້ລ່ວງເກີນລູກເມຍ ແລະລັກເອົາເຄື່ອງຂອງພວກທ່ານ, ຈັບເອົາມັນມາເຮົາຈະຕັດຫົວມັນໃຫ້ເບິ່ງ. ຈາກນັ້ນ ຊາວຄົວກໍຫຸ້ມຟັນແທງທະຫານລາວພວກໄປສັ່ງໃຫ້ຊາວຄົວອອກເດີນທາງນັ້ນຕາຍໝົດ ແລະຊາວຄົວກໍ່ແຕ່ງກັນໄປເຝົ້າເຈົ້າອະນຸວົງ ແລະໃຊ້ເລ່ລ່ຽມຫຼອກລວງພະອົງ, ພະອົງກໍຫຼົງເຊື່ອຄຳຊາວຄົວ ແລະເວົ້າວ່າ: ສູຈິ່ງຕັດຄໍໃຫ້ມັນຕາຍເສຍເພາະມັນລວງເກີນຄຳກູຫ້າມ. ຈາກນັ້ນ ຊາວຄົວກໍທູນລາເຈົ້າອະນຸເມືອຫາຄົວຂອງຕົນແລ້ວກໍໃຊ້ມ້າແລ່ນໄປມາເພື່ອເຮັດໃຫ້ທະຫານລາວເຊື່ອວ່າບໍ່ມີຫຍັງເກີດຂຶ້ນ, ຕັ້ງທີ່ແທ້ແມ່ນເຂົາແລ່ນບອກກັນເພື່ອກະກຽມກຳລັງ ແລະຄອຍໂອກາດລຸກຂຶ້ນຕ້ານຄືນ.

ຕໍ່ມາເຈົ້າອະນຸໄດ້ປົງພະລາຊະໂອງການໃຫ້ຄົນໃຊ້ໄປຄຸມເອົາຫົວໜ້າຂອງຊາວຄົວມາ ແລະ ປ່າວເຕືອນໃຫ້ຊາວຄົວກຽມເຄື່ອງຂອງເພື່ອອອກເດີນທາງ. ເມື່ອຍິນຄຳສັ່ງແນວນັ້ນຊາວຄົວທັງຫຼາຍກໍພາກັນລຸກຂຶ້ນຕ້ານຄືນກັບທະຫານລາວ, ຄົນໃຊ້ຈິ່ງກັບຄືນມາລາຍງານໃຫ້ເຈົ້າອະນຸຊາບວ່າ: ເຂົາຂ້ານາຍເຈົ້າຕາຍແລ້ວ, ເມື່ອຮູ້ເຫດການແລ້ວພະອົງຈິ່ງໄດ້ສັ່ງໃຫ້ທະຫານໄປຄຸມຊາວຄົວດ່ວນ, ຜູ້ໃດຂັດຂຶ້ນໃຫ້ຂ້າຖິ້ມ, ລູກຂອງເຈົ້າອະນຸໄດ້ນຳກຳລັງຄົນບຸກເຂົ້າ

ໄປຫາຊາວຄົວ, ພວກຊາວຄົວພາກັນຫຸ້ມເຂົ້າໃສ່ທັງປີກຊ້າຍ ແລະປີກຂວາໂດຍໃຊ້ຫອກງ້າວ, ຄ້ອນໂປ້ງ ແລະປືນຕັ້ງແຕ່ແຄມມູນເດັ້ງ, ດ້ານຄອນຄົບ, ສົ້ມໂຮງຊ່ອງດູ່ຈົນເຖິງໂຄກພະຍາ. ພວກຊາວຄົວລຸກຂຶ້ນຕ້ານຄືນກັບທະຫານລາວທຸກບ່ອນ, ເຈົ້າວັງໜ້າກໍນໍາພາພົນໄລ່ຜ່າ, ຊາວຄົວກໍໃຊ້ກໍາລັງຟັນເຂົ້າທຸກທິດ, ສຽງປືນກໍດັງກ້ອງສະໜັ່ນຫວັ່ນໄຫວຄົນລົ້ມຕາຍເປັນຈໍານວນຫຼວງຫຼາຍປານຂອນໄຮ່, ທັງຊາວຄົວ ແລະທະຫານລາວ, ແຕ່ຊາວຄົວກໍບໍ່ຍອມຖອຍ, ພວກເຂົາບຸກເຂົ້າບໍ່ມີຖອຍ, ທະຫານລາວທົນບໍ່ໄດ້ເລີຍແຕກໜີໄປ, ຊາວຄົວກໍໃຊ້ກໍາລັງບ້ານແທງກໍາລັງຂອງລາວຕາຍຢ່າງຫຼວງຫຼາຍຢູ່ຕາມທົ່ງເຂດນໍ້າມູນ.

## 27. ເຈົ້າອະນຸສັ່ງຖອຍທັບໄປຕັ້ງທີ່ໜອງບົວລໍາພູ

ເຈົ້າອະນຸວິງບອກວ່າບໍ່ຄວນສູ້ກັບຊາວຄົວນີ້ອີກ, ຈິ່ງຄືນເມືອຕັ້ງທັບຢູ່ອງບົວລໍາພູເພື່ອຕ້ານກັບພວກເຂົາ ແລະພະອົງສັ່ງໃຫ້ເຈົ້າເມືອງນະຄອນຈິ່ງນໍາທັບກັບຄືນບໍ່ໃຫ້ຄ້າງຄາຈັກຄົນ. ເມື່ອເມືອຮອດເມືອງແລ້ວຈິ່ງພາກັນແປງວຽງໄວ້ໃຫ້ດີ, ເມື່ອໄດ້ຮັບຄໍາສັ່ງແລ້ວ, ເຈົ້າເມືອງນະຄອນພ້ອມໄພ່ພົນກໍພ້ອມກັນຖອຍທັບກັບໄປ. ໄທກໍໃຊ້ມ້າໄລ່ຕາມຫຼັງໄປ, ເຈົ້າເມືອງນະຄອນອວາຍກໍາລັງຕ້ານຄືນກັບໄທທັງຕີທັງຖອຍຕັ້ງແຕ່ຄອນລາດຈົນເຖິງຂີງເຂດມະລຸມ, ໄທກໍນໍາກໍາລັງໄປລັດໜ້າຊູ່ທາງ: ມື້ມຈາກທົ່ງຊຽງໄຕໄທກໍເອົາກໍາລັງໄລ່ຕີເຖິງເມືອງພິມາຍ, ແຕ່ເຈົ້າເມືອງນະຄອນກໍເອົາກໍາລັງຜ່າໄປຫຼາຍວັນ ແລະຄືນຈິ່ງເມືອເຖິງເມືອງນະຄອນຂອງຕົນ. ເມື່ອເມືອຮອດເມືອງແລ້ວ, ພະຍານະຄອນກໍສັ່ງໃຫ້ເຂົາເອົາຄົວຂ້າມຂອງໃຫ້ໝົດ, ນັບທັງບັນດາຊາວຄົວທີ່ກວາດມາຈາກຫົວເມືອງຕ່າງໆເພາະຢ້ານວ່າພວກເຂົາຕິດຕໍ່ຫາກັນ ແລ້ວຈະພາກັນລຸກຂຶ້ນຕ້ານຄືນຄືຢູ່ເມືອງຄອນລາດ. ຈາກນັ້ນ ພະຍານະຄອນກໍຈັດຄົນສ້າງແປງວຽງຢູ່ທ່າແຂກ, ລວງຍາວສາມຮ້ອຍກວ່າວາ, ລວງສູງເຈັດສອກໂດຍແມ່ນທາງວຽງຈັນ ແລະວຽງແກ ມາແນະນໍາໃຫ້ພວກເຂົາສ້າງວຽງ(ກໍາແພງ).

ສ່ວນເຈົ້າອະນຸກໍນໍາກໍາລັງຄ່ອຍຍ້າຍຈາກຄອນລາດມາຕັ້ງທັບຢູ່ໜອງບົວ. ສໍາລັບຄອບຄົວລາວຈໍານວນໜຶ່ງທີ່ມາຈາກສະລະບູລີເມື່ອມາເຖິງປາກຊ່ອງແລ້ວແຕ່ບໍ່ຮູ້ຂ່າວວ່າຊາວຄົວເກີດເປັນເສິກ, ຍັງຫວັງຈະກັບຄືນເມືອຫາເຈົ້າເກົ່າໂດຍບໍ່ຮູ້ວ່າພວກເພິ່ນໜີແລ້ວ, ຊາວຄົວລາວຈຶ່ງເດີນໄປຕາມລໍາພັງພໍໄປເຖິງທັບຄົວໄທ ແລະໄທຮູ້ວ່າແມ່ນຊາວວຽງຈັນ, ໄທຈຶ່ງຂ້າຊາວຄົວລາວຈໍານວນນີ້ແລ້ວປຸ້ນສະດົມເອົາເຄື່ອງຂອງ, ຊ້າງ, ມ້າຈົນໝົດ.

## 28. ພະຍາພົມພັກດີໄປລາຍງານບາງກອກແລະບາງກອກສັ່ງຕຽມທັບ

ໝື່ນພັກດີລັກລອບໜີຈາກຄອນລາດເຂົ້າໄປເຖິງເມືອງບາງກອກເພື່ອທູນເຈົ້າຄອງບາງກອກ ຮູ້ເຫດການວ່າເຈົ້າອະນຸໄດ້ຍົກທັບມາຕີເມືອງຄອນລາດ ເຈົ້າບາງກອກຈຶ່ງເວົ້າຕໍ່ໝື່ນພັກດີວ່າ: ເວລານີ້ທາງບາງກອກມີພະຍາດໂລຄາບຽດບຽນຫຼາຍ (ສະພາບຫຍຸ້ງຍາກຫຼາຍ) ເຈົ້າຊ່ວຍພໍ່ໄດ້ບໍ? ໝື່ນພັກດີຕອບວ່າ: ບໍ່ໃຫ້ພໍ່ເຄືອງພະໄທ. ລູກຂໍສູ້ໃຫ້ພໍ່ຊື່ນໃຈເຈົ້າບາງກອກຈຶ່ງແຖມນາມະຍົດໃຫ້ພະຍາໃຫ້ໝື່ນພັກດີຂຶ້ນເປັນພະຍາ ແລະມອບບ່າວໄພ່ລາສະດອນໃຫ້ຕາມໃຈກັບທັງສອງອ້າຍນ້ອງພະຍາຊຽງສາ, ພ້ອມຈະລາຊະລົນ, ພະຍານະລົນເປັນຄູ່ກັນ, ເຈົ້າບາງກອກຍັງເວົ້າຕື່ມອີກວ່າພະຍາພົມພັກດີນັ້ນເມືອງມັນແຕກສວ່ານ, ໃຫ້ມັນປັບປຸງເມືອງກ່ອນ. ສ່ວນພວກສູໃຫ້ໄປເກັບກວາດຄົວຄືນມາ, ທັງຄົວໄທ ແລະລາວກວາດເອົາມາໃຫ້ໝົດ, ພວກເຂົາກໍຮັບຄໍາເຈົ້າບາງກອກ ແລ້ວພ້ອມກັນກະກຽມບ່າວໄພນັບທັງໝໍໂຫນ, ໝໍດູ, ໝໍໂຫນທວາຍວ່າ: ເດືອນຫ້າຂຶ້ນທຸກສິ່ງຈະໄດ້ດັ່ງໃຈ, ຄວນຈະອອກເສິກໃນຍາມນີ້.

ສ່ວນພະຍາໄກແຫງເມືອງພູຂັ້ນກໍກັບເມືອເມືອງຄອນລາດເພື່ອຈະໄປລາຍງານເຈົ້າອະນຸ, ແຕ່ເມື່ອຮູ້ຂ່າວວ່າພະອິງໄດ້ກັບຄືນວຽງຈັນແລ້ວ, ພະຍາໄກກໍພາພົນກັບຄືນເມືອທາງໃຕ້, ເຂົ້າໄປທູນຕໍ່ອະຕໍ່ເຈົ້າຈໍາປາສັກ, ເຈົ້າຄອງຈໍາປາສັກເຫັນຜິດປົກກະຕິກໍຈັບເອົາພະຍາໄກໄປຂ້າ ແລະນໍາເອົາຫົວຂອງພະຍາໄກເມືອຖວາຍຕໍ່ເຈົ້າອະນຸຊາບ.

**29. ພະຍາພົມພັກດີຍົກທັບຕ່າວໂຈມຕີທັບລາວ ທີ່ຄ້າຍໜອງບົວລໍາພູ**

ເມື່ອເຖິງທ້າຍເດືອນ 5 ຕໍ່ໃສ່ຕົ້ນເດືອນ 6 ພະຍາພົມພັກດີ, ພະຍາຊຽງສາ, ພະລາຊະສຸລິນ ແລະ ພະຍານະລິນໄດ້ນໍາກໍາລັງສາມພັນກວ່າຄົນໃນຂັ້ນຕົ້ນ ແລະຍັງເກັບເອົາທາງໜ້າອີກເພື່ອໄປບຸກຄ້າຍໜອງບົວລໍາພູຂອງທະຫານລາວ. ກອງທະຫານພະຍາພົມພັກດີໄປຕາມທາງພົບຊາວຄົວລາວທີ່ໜີອອກຈາກຄາຍມູນເດັ້ງພວກເຂົາກໍພັນຂ້າເປັນຈໍານວນຫຼວງຫຼາຍ. ເມືອພະຍາພົມພັກດີໄປເຖິງຄ້າຍໜອງບົວລໍາພູແລ້ວ, ພວກເຂົາກໍເອົາກໍາລັງອ້ອມໄວ້ເຖິງ 7 ຊັ້ນ, ໃນຄ້າຍນັ້ນມີຊາວຄົວທັງລາວ ແລະຍວນເຕັມຢູ່, ແຕ່ໄທກໍ່ໃຊ້ກໍາລັງບຸກເຂົ້າທຸກດ້ານ, ທະຫານລາວ ແລະຊາວຄົວວຽງຈັນສູ້ບໍ່ໄຫວຈຶ່ງນໍາກໍາລັງຖອຍອອກຈາກໜອງບົວລໍາພູ ແລະຄ້າຍໜອງບົວລໍາພູຖືກກອງທັບໄທຍຶດເອົາໄດ້ພວກເຂົາກໍກວາດເອົາຊາວຄົວລາວກັບຄືນເມືອໝົດ.

ໃນເວລານີ້ເອງເຈົ້າວັງໜ້າໄດ້ຂີ່ມ້າອອກສູ້ກັບພະຍາຊຽງສາ (ນາຍໄທ) ພະຍາຊຽງສາຖືກຟັນໃນສະໜາມ, ທະຫານໄທຈໍາຕ້ອງຖອຍທັບ ແລະກວາດເອົາຄົວຄືນໄປເປັນຈໍານວນຫຼວງຫຼາຍນັບແຕ່ໜອງຫານ, ວັງຍາວ, ຜ້າຂາວ, ພັນນາບ້ານໄຜ່, ບ້ານເຂົ້າແປ້ງ, ບ້ານຝາງພ້າວ ແລະອື່ນໆຍັງມີຊາວຄົວຈໍານວນໜຶ່ງຍ້ອນການຕົກທຸກໄດ້ຍາກຫຼາຍເທື່ອໂພດ, ເຂົາຈຶ່ງຄິດນ້ອຍໃຈຕາຍສາດີກວ່າຈຶ່ງຊ່ອຍໄທເຮັດເສິກ. ສະນັ້ນ, ເມື່ອພວກເຂົາເຫັນຊາວວຽງຈັນ ຈຶ່ງໄລຂ້າໄລແທງກັນ.

**30. ເຈົ້າອະນຸຕຽມອົບພະຍົບໄປເພິ່ງເຈົ້າພູຊຸນ, ໄປຕັ້ງທັບທີ່ເມືອງມະຫາໄຊ**

ເຈົ້າອະນຸເຫັນວ່າເສິກສົງຄາມນີ້ຮຸນແຮງ, ຊາວຄົວໄດ້ລຸກຂຶ້ນທົ່ວທຸກບ່ອນ, ພະອົງຈຶ່ງກັບຄືນວຽງຈັນແລ້ວສັ່ງກະກຽມກໍາລັງ ແລະເຮືອແພເພື່ອບັນທຸກເອົາເຄື່ອງຂອງ ແລະຄອບຄົວໄປເພິ່ງເຈົ້າ ພູຊຸນ(ຫວຽດນາມ). ມາເຖິງເດືອນ 6 ຂຶ້ນ 12 ຄໍ່າ, ເຈົ້າອະນຸໄດ້ສັ່ງໃຫ້ກໍາລັງໄປຕີເມືອງເຫມະລາດ, ເພາະຢູ່ແຫ່ງນັ້ນເກີດມີເສິກສົງຄາມ, ສໍາລັບການກໍ່ແປງວຽງນັ້ນແມ່ນໃຫ້ຢຸດກອນເພາະບໍ່ຮູ້ວ່າສະຖານະການໃນຕໍ່ໜ້າຈະເປັນແນວໃດ.

ເມື່ອພວກສ້າງວຽງແກໄດ້ຮັບສານຂອງເຈົ້າອະນຸແລ້ວກໍຟ້າວນໍາກໍາລັງຟ້າວຟັງມາຫາພະອົງເຫັນແຕ່ເຮືອແພເຕັມລໍານໍ້າຂອງ, ເຮືອແຕ່ລະລໍາແມ່ນໄດ້ບັນທຸກເຄື່ອງຂອງເຕັມໄປໝົດ. ບ່າວໄພ່ເມືອງວຽງຈັນກໍຂົນເຄື່ອງໄປຊຸກເຊື່ອງໄວ້ສະຖານະການໃນວຽງຈັນອົນລະຫົນວຸ່ນວາຍທີ່ສຸດ, ຈໍານວນໜຶ່ງກໍຈັດສິ່ງຄົວຂຶ້ນເມືອເມືອງພວນ, ມາຮອດເດືອນ 6 ຂຶ້ນ 14 ຄໍ່າ, ເມືອງນະຄອນ(ນະຄອນພະນົມ): ຈັດກໍາລັງຂຶ້ນມາຢ່າງເຄັ່ງຮ້ອນ. ເມື່ອເຖິງວຽງຈັນແລ້ວພະຍານະຄອນ ແລະເຈົ້າອະນຸກໍຈັດກໍາລັງລົງເຮືອລອງລົງໄປເມືອງນະຄອນ, ເຈົ້າອະນຸໄດ້ສັ່ງໃຫ້ຊາວຄົວໃນຂົງເຂດເມືອງນະຄອນເອົາຄົວໜີ, ສ່ວນກໍາລັງທະຫານແມ່ນໃຫ້ທັ້ງທັບຢູ່ເມືອງນະຄອນນັ້ນສາກ່ອນ; ອາດເວົ້າໄດ້ວ່ານັບແຕ່ນະຄອນວຽງຈັນ, ຈົນເຖິງເມືອງນະຄອນພະນົມແມ່ນເປັນເຂດບ້ານຮ້າງເມືອງເປົ່າເພາະອາຄົນໜີອອກຈາກບ້ານເຮືອນ ແລະເມືອງໄປໝົດປະຊາຊົນມີຈິດວິ່ໃຈວອນຄິດເຖິງບ້ານເກົ່າເມືອງຫຼັງຂອງຕົນຫຼາຍ.

ຕັ້ງແຕ່ເມືອງພຽນເຖິງເມືອງມະຫາໄຊໝູ່ຄົນເຕົ້າໂຮມກັນເປັນຈໍານວນຫຼວງຫຼາຍຢູ່ທາງໃຕ້ນັບແຕ່ເມືອງເຊໂປນຂຶ້ນຫາເມືອງນະຄອນກໍມີຊາວຄົວອັ່ງອໍກັນໄປໝົດ, ເມືອງເກົ່ານັ້ນແມ່ນກາຍເປັນປ່າຊ້າງດົງເສືອ. ສ່ວນເຈົ້າອະນຸຫຼັງຈາກອອກເມືອງນະຄອນໄປແລ້ວ ພະອົງກໍ່ພາຄອບຄົວເມືອຕັ້ງເມືອງມະຫາໄຊເພື່ອຟັງສະພາບການບ້ານເມືອງ.

**31. ເຈົ້າວັງໜ້າວຽງຈັນຖອຍທັບຈາກເມືອງສຸວັນນະພູມ**

ເຈົ້າວັງໜ້າຍັງຢູ່ເມືອງສຸວັນນະພູມເພື່ອສູ້ກັບໄທ, ພະອົງບໍ່ຮູ້ຂ່າວວ່າເຈົ້າອະນຸໜີຈາກເມືອງວຽງຈັນໄປແລ້ວ, ເພິ່ນຍັງນຳກຳລັງໄປເລວກັບໄທຢູ່ຕໍ່ໄປ. ທາງພາກໃຕ້ແມ່ນເຈົ້າຈຳປາສັກກໍຍັງສືບຕໍ່ງສູ້ກັບຊາວຄົວເໜືອນກັນ, ເຈົ້າວັງໜ້າບໍ່ສາມາດຕ້ານກັບຊາວຄົວທີ່ລຸກຂຶ້ນຢູ່ທົ່ວທຸກບ່ອນໄດ້, ພະອົງຈຶ່ງພາກຳລັງພົນຖອຍກັບຄືນມາເມືອງນະຄອນເຫັນເມືອງນະຄອນເປັນເມືອງຮ້າງ. ພະອົງກໍຢຸດຢູ່ທີ່ນັ້ນເພື່ອຖາມຫາເຈົ້າຂະໜ່ອມວຽງຈັນ(ເຈົ້າອະນຸພະພໍ່ຂອງຕົນ) ເມື່ອຊາບຂ່າວແລ້ວ, ພະອົງຈຶ່ງຕາມໄປ.

## 32. ທັບພະຍາບັບພາວະດີເຂົ້າຍຶດເມືອງຈຳປາສັກແລະຈັບເຈົ້າເມືອງໄດ້

ພະຍາບັບພາວະດີແມ່ທັບໃຫຍ່ຂອງໄທ, ເມື່ອປັດກວາດເອົາຊາວຄົວໄດ້ໝົດທຸກບ່ອນແລ້ວ, ເຂົາກໍນຳກຳລັງລົງເມືອທາງໃຕ້ຂົງເຂດຈຳປາສັກ, ເພື່ອຊຳລະໃຫ້ກ້ຽງໝົດທຸກບ່ອນ. ສຳລັບເຈົ້າເມືອງຈຳປາສັກ, ພະອົງກໍ່ເອົາຕົວຫຼົບໜີໄປຊ່ອນຕົວຢູ່ປ່າດົງ, ພະຍາບັບພາວະດີກໍເອົາກຳລັງປິດລ້ອມ ແລະຕິດຕາມຫາຫຼາຍເດືອນ. ຍ້ອນຄວາມອົດອ່ອນໂຮຍແຮງອຶດຢາກເຂົ້າປາອາຫານ, ເຈົ້າຈຳປາສັກຈຶ່ງຖືກພະຍາບັບພາວະດີຈັບໄດ້ ແລະນຳເຂົ້າເມືອບາງກອກ. ເມື່ອຈັບເຈົ້າຄອງຈຳປາສັກໄດ້ແລ້ວ, ພະຍາບັບພາວະດີໄດ້ສັ່ງໃຫ້ແຕ່ລະເມືອງຕັ້ງແຕ່ເມືອງຍະໂສທອນ, ເມືອງອຸບົນຈົນເຖິງເຂມະລາດໃຫ້ນຳກຳລັງໄປຕັ້ງທັບຂະໜາບໄວ້ຢູ່ທີ່ເມືອງລະຄອນ. ແຕ່ບ້ານຜ້າຂາວພັນນາຈົນເຖິງເມືອງວຽງຈັນແມ່ນພະຍາບັບພາວະດີເປັນຜູ້ຄວບຄຸມລໍຖ້າກວາດຕ້ອນເອົາຄົວລາວ ແລະໃຫ້ພະລາຊະສຸລົມເປັນຜູ້ຮັກສາດ່ານ.

## 33. ເຈົ້າວັງໜ້າວຽງຈັນເຂົ້າຍອມທັບໄທ

ເມື່ອເຈົ້າວັງໜ້າຮູ້ຂ່າວວ່າເຈົ້າອະນຸໄປເມືອງແກວແລ້ວ, ພະອົງຈະໄປຕາມກໍບໍ່ຮູ້ຈະໄປແນວໃດ,ຈຶ່ງພາກັນກັບຄືນເມືອງເກົ່າ, ສັ່ງໃຫ້ພົນທະຫານປະຊ້າງມ້າແລ້ວເຂົ້າສູ່ໄທເພື່ອສະຫວາມິພັກ, ພະຍາບັບພາວະດີແມ່ທັບໃຫຍ່ຂອງໄທມີຄວາມຍິນດີຕໍ່ການສະຫວາມິພັກຂອງເຈົ້າວັງໜ້າປານວ່າພວກເຂົາໄດ້ເຄິ່ງເມືອງ. ພະຍາບັບພາວະດີເວົ້າຕໍ່ເຈົ້າວັງໜ້າວ່າ: ເມື່ອສະພາບສະຫງົບແລ້ວຈະໃຫ້ເຈົ້າວັງໜ້າກັບຄືນເມືອຄອງເມືອງວຽງຈັນ. ຈາກນັ້ນ ພະຍາບັບພາວະດີກໍພາກັນຂຶ້ນເມືອວຽງຈັນເພື່ອເກັບກວາດເອົາຄົວລາວທີ່ຍັງເຫຼືອກະຈັດກະຈາຍນັ້ນໂຮມເຂົ້າເປັນບ້ານ, ສ່ວນທາງຫົວເມືອງຍະໂສທອນ ແລະເຂມະລາດ, ເຂົາກໍໂຮມເອົາຊາວຄົວເຂົ້າສູ່ເມືອງໃຫຍ່. ຈາກນັ້ນ ພວກເຂົາກໍຕັ້ງເມືອງນະຄອນເປັນເມືອງດ່ານ, ເພື່ອເກັ້ຍກອມເອົາຊາວຄົວອອກມາ, ແລ້ວໂຮມກຳລັງໄປຕີເມືອງມະຫາໄຊ ແລະເມືອງອື່ນໆຈຶ່ງບໍ່ຍາກ, ສວນພະຍາບັບພາວະດີແມ່ນຕັ້ງໜອງຄາຍເປັນເມືອງແຂງເຂື່ອນ, ເອົາບ້ານພັນພ້າວເປັນດ່ານ.

## 34. ພະຍາບັບພາວະດີຈັບມະເຫສີຂອງເຈົ້າອະນຸ

ນາງສອນເປັນມະເຫສີຂອງເຈົ້າອະນຸ, ນາງເປັນເຊື້ອສາຍເມືອງນະຄອນ ແລະມີບຸດຊາຍກັບເຈົ້າອະນຸຄົນໜຶ່ງຊື່ວ່າໝື່ນນາມ. ແຕ່ນາງ ແລະສາມີທີ່ຮັກໄດ້ພັດພາກຈາກກັນໃນເວລາແຕກເສິກໄທ. ສ່ວນລູກຊາຍແມ່ນໄປຕາມເຈົ້າອະນຸ, ເມື່ອໄດ້ຍິນຂ່າວວ່າລູກຊາຍຂອງນາງໄດ້ເສຍຊີວິດໄປແລ້ວ, ນາງກໍ່ມີຄວາມອຸກອັ່ງຄັ່ງແຄ້ນ. ນາງຈຶ່ງຄິດວ່າຈະໄປເຮັດບຸນແຈກເຂົ້າໝາຍທານຫາລູກຈຶ່ງໃຊ້ເຮືອລອງລົງຕາມລຳນ້ຳຂອງ ແລະໄປຈອດເຊົາຢູ່ປາກກະດິງ. ເມື່ອທະຫານຂອງພະຍາບັບພາວະດີຮູ້ຂາວກໍ່ເອົາກຳລັງມາປິດລ້ອມ ແລະຈັບເອົານາງໄດ້, ສ່ວນທະຫານປ້ອງກັນນາງແມ່ນໂຕນໜີປະໜົດ. ພະຍາບັບພາວະດີໄດ້ນຳເອົາຕົວນາງສອນເມືອບາງກອກເພື່ອຖວາຍໃຫ້ເຈົ້າຫຼວງ(ເຈົ້າຄອງບາງກອກ) ເຈົ້າຄອງບາງກອກຈຶ່ງມອບເຄື່ອງຂອງຕ່າງໆໃຫ້ແກ່ພະຍາບັບພາວະດີເພື່ອເປັນລາງວັນ.

## 35. ເຈົ້າອະນຸຍ້າຍຈາກເມືອງກອງແກ້ວເຂົ້າສູ່ພູຊຸນ

ຈາກເມືອງກອງແກ້ວເຈົ້າອະນຸໄດ້ເຂົ້າສູ່ເມືອງພູຊຸນແຫ່ງປະເທດແກວ. ພໍໄປເຖິງກໍໄດ້ຮັບການຕ້ອນຮັບຢ່າງອົບອຸ່ນຈາກສາມອົງກວານພ້ອມກັນນັ້ນກໍ່ໄດ້ຈັດເຄື່ອງບັນນາການມາຖວາຍພະອົງ, ເຈົ້າຟ້າໃຫຍ່ຫົວຄຳ (ເຈົ້າຊີວິດ

ແກວ) ຊຶມຊື່ນ ແລ້ວຈຶ່ງຈັດເອົາໝູ່ແກວມາກໍ່ສ້າງຫໍໂຮງເປັນບ່ອນທີ່ພັກເຊົາໃຫ້ແກ່ເຈົ້າອະນຸພ້ອມທັງໂພຊະນາຫານມາລ້ຽງດູ ແລະຈັດແຈງກຳລັງແກວມາເຝົ້າທຸກຄ່ຳເຊົ້າວັນຄືນ.

ສ່ວນຊາວເມືອງນະຄອນແມ່ນໄປຕັ້ງຕົວຢູ່ປາກນ້ຳພິດເຊິ່ງເປັນອານາເຂດຂອງມະຫາໄຊ, ເຈົ້າເມືອງນະຄອນຈຶ່ງບໍ່ໄດ້ນຳກຳລັງເຂົ້າໄປຮອດເມືອງແກວ, ເມືອງມະຫາໄຊມີອານາເຂດກວ້າງຂວາງ ແຕ່ໃນເວລານີ້ມີຊາວຄົວເຕັມໝົດທຸກແຫ່ງ, ເຈົ້າເມືອງມະຫາໄຊໄດ້ວາງແຜນປ້ອງກັນເປັນຢ່າງດີ, ນັບແຕ່ປາກຊ່ອງຈີນເຖິງທ່າບາດຄຳຂຽວເປັນດ່ານ, ທາງແມ່ນ້ຳຂອງແມ່ນເອົາທ່າແຂກເປັນຫຼັກ. ຖ້າວ່າມີເສິກມາໃຫ້ຮີບສົ່ງຂ່າວໃຫ້ກັນຮູ້, ເຈົ້າຟ້າໃຫຍ່ເມືອງແກວຈະຈັດກຳລັງແກວລົງຊ່ວຍ. ສ່ວນຢູ່ຝັ່ງຂອງຟາກພຸ້ນແມ່ນມີເສິກເຕັມຢູ່ນັບຕັ້ງແຕ່ວຽງຈັນຈົນເຖິງເມືອງນະຄອນ, ເຂົາໄດ້ເອົາກຳລັງຂອງເມືອງຍະໂສທອນ, ອຸບົນ, ເຂມະລາດມາຕັ້ງຄ້າຍຢູ່ແຫ່ງນັ້ນ. ທາງເບື້ອງໃຕ້ກໍມີຄ້າຍຢູ່ທີ່ມຸກດາຫານເຊິ່ງຂານອາສາວ່າຈະມາຕີເອົາເມືອງຊຸມພອນ, ພະລານ ແລະເມືອງພ້ອງ. ສະນັ້ນ ຝ່າຍຂອງຟາກນີ້ (ຝັ່ງຕາເວັນອອກ), ພວກເຮົາຕ້ອງຈັດຢາຍກຳລັງເປັນດ່ານໄວ້ໃຫ້ທົ່ວເຖິງຕັ້ງແຕ່ເມືອງຊຸມພອນເຖິງເມືອງມະຫາໄຊ, ເມື່ອເສິກມາທາງໃດກໍໃຫ້ຊ່ວຍກັນໄດ້ທັນເວລາ.

### 36. ເຈົ້າບຸນຈັນວາງອຸບາຍໃຫ້ຫວຽດນາມມາຊ່ວຍຕີໄທ

ເຈົ້າບຸນຈັນສີສຸລາດຜູ້ທີ່ຮັກສາດ່ານມີຈຸດປະສົງຢາກເຮັດໃຫ້ປະຊາຊົນແຕກຕື່ນແລ້ວເວົ້າໂຮມກັນຈຶ່ງມີອຸບາຍໄປຫຼອກຊາວເມືອງວ່າເສິກໄດ້ຂ້າມມາຮອດເມືອງຟາກຂອງເບື້ອງເຮົາແລ້ວຂ່າວນີ້ເຮັດໃຫ້ຊາວເມືອງນະຄອນແລະເມືອງມະຫາໄຊແຕກຕື່ນ ຈຶ່ງໄດ້ຟ້າວຂຶ້ນເມືອລາຍງານຕໍ່ສາມກວານແຫ່ງເມືອງແກວຮູ້, ເມື່ອອົງສາມກວານຊາບຂ່າວແລ້ວກໍຮີບຈັດກຳລັງລົງມາວ່າຈະຕີໄນເມື່ອມາເຖິງເມືອງມະຫາໄຊແລ້ວແກວກໍແຕ່ງຄົນໄປສອດແນມເບິ່ງເມືອງທ່າແຂກແຕ່ກໍບໍ່ເຫັນເສິກເຫັນແຕ່ຄົນລາວຢູ່ເຕັມເມືອງນະຄອນຟາກນັ້ນຄືເກົ່າ, ຜູ້ໄປສອດແນມຈຶ່ງກັບຄືນມາທູນເຈົ້າສາມກວານຈຶ່ງຮ້າຍດາລາວວ່າເປັນຄົນຕົວະລາຍເພາະເມືອງນະຄອນນັ້ນແມ່ນບ້ານເກົ່າພວກເຂົາຢ່າໄປຫຍຸ້ງນຳເຂົາ. ຈາກນັ້ນ, ແກວຈຶ່ງບອກໃຫ້ລາວໄປສ້າງຄ້າຍຢູ່ໜອງຫຼວງເພື່ອເອົາທະຫານຂອງແກວໄປຕັ້ງຢູ່ທີ່ນັ້ນ, ໜ່ວຍໜຶ່ງຕັ້ງຢູ່ທາແຂກແຄມຂອງແລ້ວຈັດຄົນຢູ່ຍາມເປັນປະຈຳແກວຈະເອົາກຳລັງໜູນຊ່ວຍ, ຄັນວ່າລາວຂ້າມມາຍາມໃດແມ່ນລາຍງານໃຫ້ແກວຮູ້ໂດຍດ່ວນ. ສ່ວນເຈົ້າຈຸນລະນີແມ່ນຕັ້ງຄ້າຍຢູຜາຮອມເປັນດ່ານທຳອິດ, ຈາກນັ້ນຍັງມີຄ້າຍທ່າຫາດເປັນບ່ອນທ້ອນໂຮມສະບຽງອາຫານໃຫ້ດ່ານໜ້າ, ແຕ່ກໍແມ່ນບ່ອນທີ່ຫົວເສິກມັກທຽວເຂົ້າອອກຢູ່ເລື້ອຍໆເພື່ອມາລັກລອບເອົາສະບຽງອາຫານ.ດ່ານທາງເບື້ອງໃຕ້ແມ່ນບ້ານທັບນາຊຶ່ແມ່ນພະຍາຈັນເປັນຜູ້ຄຸ້ມຄອງເມື່ອມີເຫດການຫຍັງເກີດຂຶ້ນໃຫ້ໃຊ້ມ້າແລ່ນສົ່ງຂ່າວໃຫ້ກັນຮູ້. ຂ່າວທີ່ທະຫານແກວຫຼູຫຼັ່ງເຂົ້າລາວເຮັດໃຫ້ຫົວເມືອງລາວທີ່ຂຶ້ນກັບໄທຢູ່ຝັ່ງຂອງຟາກນັ້ນຄືເມືອງຍະໂສທອນ, ເຂມະລາດ, ເມືອງອຸບົນເຮຮົນຢ້ານກົວຈົນກິນເຂົ້າບໍ່ລົງ, ຢ້ານແກວຂ້າມຂອງມາຕີເຂົາກໍເຕົ້າໂຮມກັນທັງສີ່ຫົວເມືອງແລ້ວແຕ່ງໃຫ້ຄົນໄປສອດແນມເບິ່ງແມ່ນຄວາມຈິງຫຼືບໍ່, ເມື່ອຕົກລົງກັນໄດ້ແລ້ວສີຫົວເມືອງດັ່ງກ່າວຈຶ່ງແຕ່ງເພຍແກ້ວ ແລະ ອຸປະຮາດພ້ອມດ້ວຍພັກພວກຫ້າຄົນພາກັນຂ້າມຂອງໂດຍດ່ວນ. ເມື່ອມາເຖິງຝັ່ງລາວພວກເຮົາໄດ້ຕົກເຂົ້າສູ່ວົງສະກັດຂອງເຈົ້າຈຸນລະນີກັບພວກແກວ, ພວກເຂົາຖືກຈັບໄດ້ສອງຄົນເຫຼືອນັ້ນປົບກັບຄືນຝັ່ງຂວາ (ລາວເບື້ອງນັ້ນ) ແລ້ວໄປລາຍງານພວກເຈົ້າເມືອງຝັ່ງນັ້ນວ່າທະຫານແກວມີຢ່າງຫຼວງຫຼາຍແທ້. ຂ່າວນີ້ເຮັດໃຫ້ບັນດາຫົວເມືອງລາວທາງຝັ່ງຂອງເບື້ອງນັ້ນກະວົນກະວາຍຢ້ານພວກແກວຈະຂ້າມໄປຕີ, ພວກເຂົາມີແຕ່ເຈົ້າເມືອງອຸບົນຍັງທຸນທ່ຽງລະດົມບັນດາເຈົ້າເມືອງຕ່າງໆນັ້ນວ່າພວກເຈົ້າຢູ່ໃນສິນກິນໃນທຳບໍ່ເຄີຍທຳຮ້າຍໃຜ, ບຸນສິນເຫຼົ່ານັ້ນຈະປົກປ້ອງພວກເຮົາ, ຈາກນັ້ນກໍເຫັນບັນດາເຈົ້າຕ່າງໆນັ້ນຊຶມຊື່ນ ແລະສັ່ງໃຫ້ທະຫານເບິ່ງແຍງດູແລດ້ານຕ່າງໆໃຫ້ດີ.

### 37. ໄທວາງອຸບາຍຕໍ່ສູ້ກັບຫວຽດນາມເພື່ອຍາດເອົາຄົວລາວ

ທາງຟາກຂອງເບື້ອງຂວາແຕ່ອຸບົນຈົນຮອດວຽງຈັນພວກເຂົາໄດ້ແຕ່ງກັນເຝົ້າຍາມຕະຫຼອດທັງວັນແລະຄືນ. ແຕ່ບັງມຸກ (ມຸກດາຫານ) ຂຶ້ນເຖິງເມືອງນະຄອນໄທໄດ້ໃຊ້ເລກິນແຕ່ງໃຫ້ນັກສືບປອມຕົວເປັນພໍ່ຄ້າຂາຍຜ້າແພໃນລາຄາຖືກຂ້າມມາສືບສະພາບທາງລາວຝັ່ງຊ້າຍ, ອີກອັນໜຶ່ງກໍເພື່ອລໍ້ລວງເອົາຄົວລາວອອກມາ ແລະສ້າງຄວາມຄຸ້ນເຄີຍກັບພວກເຂົາບໍ່ໃຫ້ແຕກຕື່ນ. ເມື່ອສະພາບສຸກງອມແລ້ວຈິ່ງຂ້າມໄປຕີ ແລະກວາດເອົາຄົວລາວບໍ່ໃຫ້ເຫຼືອຈັກແຫ່ງ, ເພາະວ່າການຍາດເອົາຄົວແມ່ນຍາກກວ່າທີ່ຈະຕີຍາດເອົາເມືອງ. ຕໍ່ມາແກວສັ່ງໃຫ້ຊາວລາວສ້າງເຮືອເຫຼັ້ມໃຫຍ່ກຽມໄວ້ເພື່ອຈະຂ້າມໄປໄລ່ໄທ. ສໍາລັບລໍາຂອງອິງຕີ ແລະ ຂອງອິງລາກລະບຽນໃຫ້ໄດ້ເຮືອຄົນລະເຫຼັ້ມໃຫຍ່ແລະນ້ອຍສະເໝີກັນ, ເພາະວ່າເຖິງເດືອນສິບສອງນີ້ກໍາລັງຫຼວງຈະລົງມາຮອດຖ້າວ່າພວກລາວຝັ່ງນັ້ນຫາກຍັງບໍ່ຢຸດເຊົາກົນອຸບາຍດັ່ງກ່າວຈະຕີເຂົ້າຮອດໄທ. ແຕ່ນັ້ນຊາວເມືອງມະຫາໄຊພ້ອມກັບຊາວເມືອງນະຄອນກໍຊົມຊື່ນຍິນດີ, ເຂົາກໍກຽມນາຍຊ່າງພ້ອມດ້ວຍຂວານ ແລະພ້າມາພ້ອມຊູ່ຄົນໄປຫາໄມ້ປາວຕົ້ນໃຫຍ່, ມາຖາກເປັນແປ້ນແລ້ວຂົນມາໄວ້ປາກນໍ້າພິດແລ້ວຈຶ່ງສ້າງເປັນເຮືອເຫຼັ້ມໃຫຍ່ຂຶ້ນ. ເມື່ອສ້າງເຮືອສໍາເລັດແລ້ວແກວກໍຂົນເຄື່ອງເຂົ້າໄປໄວ້. ຈາກນັ້ນອົງສາມກວານແມ່ທັບຂອງແກວໄດ້ເມືອທູນຕໍ່ເຈົ້າໜ້າ (ເຈົ້າຊີວິດແກວ) ວ່າ: ວຽງຈັນເປັນເມືອງຮ້າງ, ຄັນເຈົ້າຟ້າຫາກມີຄວາມເມດຕາຊ່ວຍເຫຼືອເຂົາເຈົ້າເຂົາເຈົ້າຈຶ່ງຈະສາມາດກັບໄປນັ່ງເມືອງໄດ້.

## 38. ເຈົ້າອະນຸກັບຈາກພູຊຸນມາພັກຢູ່ຊຽງຂວາງຕຽມເຂົ້າຍຶດວຽງຈັນ

ເມື່ອໄດ້ຮັບຄໍາກາບທູນຈາກອົງສາມກວານແລ້ວ, ອົງເຈົ້າຟ້າຜູ້ທໍາຄໍາ(ເຈົ້າຊີວິດຂອງແກວ) ຈຶ່ງມີຄໍາສັ່ງໃຫ້ອົງສາມກວານວ່າ: ສູຈົ່ງນໍາເອົາໝານເຕືອງ ເມືອສົ່ງເຖິງເມືອງທ່ານ, ຢ່າໃຫ້ເສິກໄທຕີຜ່າ ແລະຍາດເອົາໄດ້, ໃຫ້ເລືອກເອົາກໍາລັງທະຫານທີ່ເປັນຄົນເກັ່ງສາມພັນຄົນເພື່ອປ້ອງກັນພະອົງເມືອຮອດເມືອງ. ຄັນວ່າພວກທະຫານໄທຫາກຍັງຄ້າງຢູ່ວຽງຈັນນັ້ນ, ໃຫ້ບອກເຂົາໜີ, ຖ້າເຂົາບໍ່ຟັງແມ່ນຕີເຂົ້າຮອດເມືອງໂລດ.ແຕ່ນັ້ນ ອົງສາມກວານກໍປະຕິບັດຄໍາສັ່ງຂອງເຈົ້າຟ້າໃຫຍ່, ນໍາເອົາເຈົ້າອະນຸໄປສົ່ງເມືອງຊຽງຂວາງເຊິ່ງເປັນອານາເຂດຂອງເມືອງວຽງຈັນ, ເຈົ້າອະນຸໄດ້ຕັ້ງທັບຢູ່ທີ່ນັ້ນໂດຍໄດ້ຮັບການປົກປັກຮັກສາຈາກທະຫານແກວຢ່າງໜາແໜ້ນ.

ໃນຂະນະນັ້ນ ພະຍາບັບພາວະດີແມ່ທັບໃຫຍ່ຂອງໄທ, ເຂົາໄດ້ມາຕັ້ງທັບຢູ່ວຽງຈັນແຕ່ດົນແລ້ວ. ເມື່ອພວກເຂົາຮູ້ຂ່າວວ່າເຈົ້າອະນຸກັບຄືນມາແລ້ວພ້ອມກັບກອງທັບແກວຢ່າງຫຼວງຫຼາຍ, ເຂົາຈຶ່ງເອົາກໍາລັງຂ້າມຝັ່ງຂອງໄປລີ້ຢູ່ຟາກນັ້ນ, ຄິດວາລໍຖ້າແກວກັບຄືນເມືອແລ້ວຈຶ່ງຈະກັບຄືນຂ້າມມາອີກ. ຕໍ່ມາອົງສາມກວານໄດ້ແຕ່ງໃຫ້ທະຫານໄປຈອບເບິ່ງທະຫານໄທຢູ່ທີ່ວຽງຈັນ, ແຕ່ບໍ່ເຫັນທະຫານໄທຈັກຄົນ. ພວກເຂົາຈຶ່ງກັບຄືນເມືອທູນຕໍ່ເຈົ້າອະນຸຊາບ ແລະເຊີນເຈົ້າອະນຸເຂົ້າໄປນັ່ງເມືອງໄດ້ຢ່າງສະບາຍ. ຈາກນັ້ນ ກອງທັບແກວກໍອໍາລາເຈົ້າອະນຸ ແລະກັບຄືນເມືອງພູຊຸນທັງຫມົດ.ຕໍ່ມາພະຍາບັບພາວະດີແມ່ທັບໃຫຍ່ຂອງໄທໄດ້ໃຊ້ທະຫານຜູ້ເກັ່ງກ້າໄປຈອບເບິ່ງສະພາບຂອງທະຫານແກວ, ເຫັນວ່າທະຫານແກວກັບຄືນເມືອໝົດແລ້ວ, ເຂົາກໍນໍາເອົາກໍາລັງຂ້າມຂອງມາວຽງຈັນຄືເກົ່າ ແລະເອົາກໍາລັງໄປຕັ້ງຄ້າຍຢູ່ໃນວັດແສນເຊິ່ງເປັນວັດທີ່ມີກໍາແພງອ້ອມຮອບຢ່າງໜາແໜ້ນ. ຈາກນັ້ນ ຍັງຢາຍກໍາລັງໄປທົ່ວທຸກບ່ອນ ແລະເວນຍາມຮັກສາຊູ່ທາງ ແລະມິດຢູ່ຄືບໍ່ມີຄົນ.ຕໍ່ມາເຈົ້າອະນຸກໍນໍາກໍາລັງເຂົ້າມາວຽງຈັນດ້ວຍຄວາມລະມັດລະວັງ, ກ່ອນຈະເຂົ້າເມືອງເພິ່ນໄດ້ສັ່ງໃຫ້ກໍາລັງຢຸດຢູ່ນອກເມືອງກ່ອນເດິກທ່ຽງຄືນຈຶ່ງສັ່ງໃຫ້ທະຫານເຂົ້າໄປສອດແນມເບິ່ງໃນເມືອງທົ່ວທຸກຄຸ້ມ, ຖ້າວ່າທະຫານໄທຍັງຢູ່ໃນເມືອງໃຫ້ກັບຄືນມາລາຍງານໂດຍໄວ, ເມື່ອທະຫານຂອງເຈົ້າອະນຸເຂົ້າເມືອເຖິງກໍາແພງວັດແສນກໍເຫັນກໍາລັງຂອງທະຫານໄທຍັງເຕັມຢູ່. ທະຫານຂອງເຈົ້າອະນຸຈຶ່ງຟ້າວກັບຄືນເມືອທູນພະອົງວ່າ: ທະຫານໄທຍັງຢູ່ເຕັມເມືອງໂດຍແມ່ນພະຍາບັບພາວະດີເປັນນາບັນຊາ.

## 39. ເຈົ້າອະນຸແຍ່ງວຽງຈັນຄືນພະອົງຖືກທັບໄທນໍາຈັບໄດ້

ເມື່ອຊາບຂ່າວວ່າທະຫານໄທຍັງຢູ່ໃນວຽງຈັນ, ເຈົ້າອະນຸກໍສັ່ງໃຫ້ກໍາລັງທະຫານບຸກຕີເຂົ້າຍຶດເອົາເມືອງ. ເມື່ອໄດ້ຮັບຄໍາສັ່ງຈາກເຈົ້າອະນຸແລ້ວທະຫານລາວກໍບຸກໂຈມຕີເຂົ້າໃສ່ທະຫານໄທໃນສົງຄາມຄັ້ງນີ້ເຈົ້າລາຊະວົງໄດ້ກໍາດາບຟັນຜ່າເຂົ້າໃສ່ທະຫານໄທຢ່າງອົງອາດກ້າຫານ, ທະຫານທັງສອງຝ່າຍລົ້ມຕາຍຢ່າງຫຼວງຫຼາຍ. ເຈົ້າອະນຸໄດ້

ຮັບບາດເຈັບຍ້ອນຖືກປືນຂອງທະຫານໄທ, ພະອິງຈຶ່ງສັ່ງໃຫ້ຖອຍທັບແລ້ວພາບ່າວໄພ່ຂຶ້ນເມືອທາງຊຽງຂວາງໄປລີ້ຊອນຢູ່ເຂດພູວຶງ, ໄທກໍນໍາກໍາລັງໄລ່ຕາມສ່ວນວ່າເຈົ້າລາຊະວົງ ແລະເມຍໄດ້ລົງເຮືອແລ້ວພາຍຂຶ້ນຕາມລໍານໍ້າງຽບ, ເພາະເມື່ອບິດາໄດ້ຮັບບາດເຈັບແລ້ວກໍບໍ່ຮູ້ວ່າຊະຕາກໍາຈະເປັນແນວໃດໃນຕໍ່ໜ້າ, ໄທໄດ້ນໍາກໍາລັງໄລຕາມຈົນຮອດເມືອງພວນໄປສອບຖາມ ແລະຊູເຈົ້ານ້ອຍເມືອງພວນວ່າເອົາເຈົ້າອະນຸໄປເຊື່ອງໄວ້ໃສ, ຢ່າປິດລັບຂໍໃຫ້ບອກພວກເຮົາສາ. ຈາກນັ້ນ ເຈົ້ານ້ອຍເມືອງພວນກໍບໍ່ໄດ້ຄິດໜ້າຄິດຫຼັງເລີຍພາທະຫານໄທໄປປິດລ້ອມ ແລະຈັບເຈົ້າອະນຸໄດ້. ເຈົ້າອະນຸບໍ່ສາມາດໜີພົ້ນໄດ້ເພາະໄສ້ຢູ່ທ້ອງກາຍເກີດເປັນໝອນ.

**40. ທັບຂອງຊານົນຕີເມືອງຕ່າງໆຕັ້ງແຕ່ໄຊຍະບູລີລົງຮອດມຸກດາຫານ**

ສ່ວນເຈົ້າຊານົນຜູ້ເປັນນາຍທະຫານທີ່ເກັ່ງກ້າຂອງເຈົ້າອະນຸນັ້ນ, ລາວຖອຍທັບຈາກເມືອງຄອນລາດບໍ່ທັນພະອົງເພາະຖອຍທັບອອກຕາມຫຼັງຈຶ່ງໄປຕັ້ງທັບຢູ່ທາງໄຊຍະບູລີເມື່ອຮູ້ຂ່າວວ່າເຈົ້າອະນຸກັບມາແຕ່ເມືອງແກວແລ້ວ, ເຈົ້າຊານົນ ແລະພະຍາເພັດຈຶ່ງຈັດກໍາລັງໂຮມກັນແລ້ວລ່ອງນໍ້າຂອງລົງມາພ້ອມກັບກໍາລັງພົນສາມພັນຄົນລ້ວນແຕ່ເປັນຄົນກ້າຫານຕີແຕ່ເມືອງໄຊຍະບູລີຈົນເຖິງເມືອງນະຄອນ(ນະຄອນພະນົມ). ເມື່ອມາເຖິງບັງມຸກຊາວຄົວລຸກຂຶ້ນຕ້ານຄົນຢ່າງຮຸນແຮງ,ແຕ່ເຈົ້າຊານົນກໍຕໍ່ສູ້ບໍ່ມີຖອຍຈົນຍາດໄດ້ເຄິ່ງເມືອງ. ສ່ວນພະຍາເພັດແມ່ນຕີຂະໜາບທາງກໍ້າຂວາ ແລະເອົາໄຟຈູດເຂົ້າເມືອງທຸກແຫ່ງ. ຊາວຄົວບັງມຸກສູ້ບໍ່ໄຫວເລີຍແຕກສະຫຼຸພ່າຍປົບແລ່ນປະເມືອງເຂົ້າປ່າດົງເພື່ອຊອກຫາບ່ອນລີ້ຊ່ອນ. ທະຫານຂອງເຈົ້າຊານົນສະໜຸກຊອກເອົາເຄື່ອງຂອງເງິນຄໍາແລ້ວເອົາລົງໃສ່ເຮືອທຸກລໍາເພື່ອກະກຽມຕີລົງເມືອທາງເຫມະລາດ ແລະອຸບົນ, ແຕ່ໃນເວລານີ້ເຈົ້າຊານົນ ແລະພະຍາເພັດກໍຍັງຕັ້ງຢູ່ບັງມຸກນີ້ເອງ.

**41. ພະຍາບັບພາວະດີທໍາອຸບາຍຫຼອກຊານົນຂຶ້ນໄປວຽງຈັນ**

ເມື່ອພະຍາບັບພາວະດີຮູ້ຂ່າວວ່າເຈົ້າຊານົນ ແລະພະຍາເພັດຍັງຕັ້ງຢູ່ມຸກດາຫານ ແລະຈະກຽມຕີລົງເມືອທາງເຫມະລາດ ແລະອຸບົນຈະເປັນການຕັດຫຼັງພວກເຂົາ, ພະຍາບັບພາວະດີຈຶ່ງຂຽນສານປອມແປງຕົວະລ່າຍວ່າແມ່ນໜັງສືຂອງເຈົ້າອະນຸຂຽນເຖິງຊານົນໃຫ້ຂຶ້ນມາວຽງຈັນໂດຍດ່ວນມາແກ້ໄຂສະພາບເຄັ່ງຮ້ອນ. ເມື່ອເຈົ້າຊານົນ ແລະພະຍາເພັດໄດ້ຮັບໜັງສືນັ້ນແລ້ວຄິດວ່າແມ່ນໃຊ້ຂອງເຈົ້າອະນຸແທ້ຈຶ່ງພ້ອມກັນຍົກກໍາລັງຈາກມຸກດາຫານຄືນມາວຽງຈັນໂດຍໄວແຕ່ໄປທາງບົກ, ສ່ວນເຮືອແພນາວາຕ່າງໆເຫຼົ່ານັ້ນພາຍຫຼັງຂ້າມມາທາງຝັ່ງຊ້າຍແລ້ວກໍສັ່ງໃຫ້ຈູດຖິ້ມທັງໝົດ.

ກ່ອນຈະພາກໍາລັງພົນອອກເດີນທາງຕໍ່ເຈົ້າຊານົນໄດ້ຂ້າພະຍາເພັດເພາະພະຍາເພັດເປັນຄົນເກັ່ງກວ່າເຈົ້າຊານົນໃນການສູ້ຮົບ, ໃນສະໜາມຮົບຕີມຸກດາຫານນີ້ເອງ, ພະຍາເພັດກໍ່ສະແດງຄວາມສາມາດຂອງຕົນເໜືອກວ່າເຈົ້າຊານົນ. ສະນັ້ນ, ເຈົ້າຊານົນຈໍາເປັນຕ້ອງຂ້າພະຍາເພັດເພື່ອບໍ່ໃຫ້ພະຍາເພັດຟອງຕົນຕາມທີຫຼັງ. ເມື່ອຂ້າພະຍາເພັດຕາຍແລ້ວເຈົ້າຊານົນກໍຍ້າຍກໍາລັງອອກຈາກມຸກດາຫານໄປ, ຫຼາຍວັນຄືນຈຶ່ງໄປເຖິງບ້ານທັບ ເຊິ່ງເປັນເຂດແດນຂອງເມືອງມະຫາໄຊ, ເຂົາເຈົ້າຈັດຮັກສາເຝົ້າດ່ານເປັນຢ່າງດີ, ເມື່ອກໍາລັງພົນຂອງເຈົ້າຊານົນໄປເຖິງເຂດເມືອງດັ່ງກ່າວ, ທະຫານປ້ອງກັນເມືອງມະຫາໄຊບໍ່ໃຫ້ກໍາລັງພົນຂອງເຈົ້າຊານົນເຂົ້າຜ່ານເມືອງ, ຈໍາໃຫ້ເຈົ້າຊານົນຕ້ອງເອົາກໍາລັງພົນເວັ້ນຈາກເມືອງໄປເພື່ອຄວາມປອດໄພ.

ໃນເວລານັ້ນ ກໍາລັງພົນຂອງເຈົ້າຊານົນອຶດຢາກ ແລະເຈັບປ່ວຍເປັນຈໍານວນຫຼວງຫຼາຍ, ຈໍາຕ້ອງເອົາເຄື່ອງຂອງເງິນຄໍາ, ເສື້ອຜ້າ, ປືນຜາໜ້າຫອກໄປຂາຍແລກເຂົ້າມາກິນຊູ່ວັນ, ຕໍ່ສະພາບດັ່ງກ່າວເຈົ້າຊານົນຜູ້ເປັນນາຍຄິດຫາທາງອອກບໍ່ໄດ້ຈຶ່ງປະລະບ່າວໄພ່ຂອງຕົນ ແລະເລືອກເອົາບ່າວຜູ້ເກັ່ງກ້າຈໍານວນໜຶ່ງຕາມຕົນ ແລ້ວກໍເລາະລຽບຕາມຝັ່ງແມ່ນໍ້າຂອງຂຶ້ນເມືອວຽງຈັນ.

**42. ພະຍາບັບພາວະດີສົ່ງເຈົ້າອະນຸວົງເມື່ອບາງກອກ.**

ພະຍາບັບພາວະດີແມ່ທັບໃຫຍ່ຂອງໄທຈັບເຈົ້າອະນຸໄດ້ແລ້ວພວກເຂົາກໍຫາມພະອົງຂ້ຽວວັນຂ້ຽວຄືນລົງເມື່ອບາງກອກພ້ອມດ້ວຍເທວີຊື່ວ່າ ນາງຄໍາປ້ອງໄປພ້ອມກັນ. ການເດີນທາງຫຼາຍວັນຫຼາຍຄືນ, ພະຍາບັບພາວະດີ

ຈຶ່ງນໍາຕົວເຈົ້າອະນຸເມື່ອເຖິງບາງກອກ. ເມື່ອຮອດເມືອງບາງກອກ, ພະຍາບັບພາວະດີກໍຂຶ້ນເມືອທູນເຈົ້າຊີວິດບາງກອກ, ເຈົ້າຄອງບາງກອກໄດ້ມອບລາງວັນໃຫ້ແກ່ພະຍາບັບພາວະດີຢ່າງຫຼວງຫຼາຍພ້ອມທັງຍົກຖານະໃຫ້ເປັນພະຍາມຸນິນເດຊາລິເດດ, ຈາກນັ້ນ ເຈົ້າຄອງບາງກອກຍັງເວົ້າວ່າ: ທຸກຫົວເມືອງ, ເມືອງລາວ, ເມືອງຂາ, ເມືອງຂະເໝນ, ເມືອງພວນແມ່ນມອບໃຫ້ລູກເປັນຜູ້ເກັບກ່ອມ, ຍົວະເຍົ້າເອົາເຂົາອອກມາ, ບໍ່ດັ່ງນັ້ນຄົວເຂົາຈະແຕກສວ່ານເຂົ້າປ່າໝົດ, ເຂົາເປັນເຊື້ອໄທດົງຢູ່ແລ້ວ.

ເມື່ອຮັບຄໍາຕັກເຕືອນຈາກເຈົ້າຄອງບາງກອກພະຍາມຸນິນເດຊາລິເດດກໍອໍາລາເຈົ້າຄອງບາງກອກໄປພ້ອມດ້ວຍກໍາລັງພົນສາມພັນຄົນແລ້ວໄປຕັ້ງທັບທີ່ເມືອງປັດຕະບອງເປັນເມືອງດ່ານ, ບັນຊາຫົວເມືອງລາວ, ຫົວເມືອງຂະເໝນເພື່ອຕຽມເຮັດສົງຄາມກັບເມືອງແກວ.

**43. ຊານິນນໍາລິງໄປຫາເຈົ້າອະນຸທີ່ບາງກອກແລະເຈົ້າອະນຸສິ້ນພະຊົນ**

ຈາກເມືອງມະຫາໄຊ, ເຈົ້າຊານິນພາໄພ່ພົນເລາະລຽບຕາມລໍາແມ່ນໍ້າຂອງຂຶ້ນເມືອວຽງຈັນ, ເມືອຮອດເມືອງວຽງຈັນ ເຈົ້າຊານິນກໍບໍ່ໄດ້ພົບເຈົ້າອະນຸ, ໄດ້ຍິນແຕ່ຂ່າວວ່າເຈົ້າອະນຸຖືກໄທຈັບເອົາເມືອບາງກອກແລ້ວ, ເຈົ້າຊານິນບໍ່ຄິດຫຍັງຕື່ມອີກ, ຟ້າວຟັງນໍາລິງໄປຫາເຈົ້າອະນຸຫວັງຕາຍພ້ອມກັນກັບເຈົ້າອະນຸ ເພາະຊາຕາເຄີຍຮ່ວມກັນມາແຕ່ຊາດກ່ອນ. ເມື່ອຄິດແນວນັ້ນແລ້ວ, ເຈົ້າຊານິນກໍພາພົນເດີນທາງຫຼາຍວັນຫຼາຍຄືນ ຈຶ່ງເມື່ອເຖິງເມືອງບາງກອກ, ເມື່ອເຖິງບາງກອກ ທະຫານໄທກໍຈັບເອົາເຈົ້າຊານິນຂັງໄວ້. ໃນເວລານີ້ເຈົ້າອະນຸໄດ້ສິ້ນພະຊົນໄປແລ້ວ, ເມື່ອເຈົ້າອະນຸສິ້ນພະຊົນແລ້ວ ເຂົາກໍພ້ອມກັນຈັດສິ່ງສະການເຈົ້າອະນຢ່າງສົມກຽດ, ພະເມນໄດ້ປະດັບປະດາດ້ວຍເຄື່ອງຄໍາຢ່າງສວຍງາມ , ເມື່ອຄົບງັນຕາມສົມຄວນແລ້ວກໍຈູດສົບ ພ້ອມທັງຢາດນໍ້າສົ່ງບຸນໃຫ້ແກ່ພະອົງຕາມປະເພນີ.

**44. ຫວຽດກັບເຈົ້າເມືອງລະຄອນຜິດກັນ**

ຕໍ່ມາເຈົ້າເມືອງລະຄອນ(ນະຄອນພະນົມ) ມີເລ່ລ່ຽມເພື່ອຢາກໃຫ້ແກວມາຕີໄທຊ່ວຍ, ຈຶ່ງໃຊ້ຄົນໄປຕົວະແກວວ່າດຽວນີ້ທະຫານໄທມາເຕັມເມືອງແລ້ວ, ເມື່ອແກວນໍາກໍາລັງພົນມາເຖິງເມືອງນະຄອນ, ແຕ່ບໍ່ເຫັນທະຫານໄທຈັກຄົນ, ເຫັນແຕ່ລາວຊາວລະຄອນດໍາລົງຊີວິດເປັນປົກກະຕິຢູ່. ແກວຈຶ່ງຮ້າຍດ່າເຈົ້າລະຄອນວ່າເປັນຄົນຂີ້ຕົວະ, ມີພຽງແຕ່ໂຈນເລັກໆນ້ອຍກໍວ່າມີເສິກໃຫຍ່.

ເຈົ້າລະຄອນກໍຄຽດໃຫ້ແກວວ່າເປັນຄົນອວດສະຫາວເຫັນແກ່ເງິນຄໍາ ແລະເຮົາໄດ້ເສຍເງິນ, ງາ, ນໍ ເປັນເຄື່ອງບັນນາການໃຫ້ຢ່າງຫຼວງຫຼາຍແລ້ວ ແຕ່ກໍບໍ່ມີປະໂຫຍດຫຍັງໝົດ. ເຈົ້າເມືອງລະຄອນຈຶ່ງພິປອງຂ້າແກວດ້ວຍວິທີຕົວະຍົວະໃຫ້ແກວເອົາກໍາລັງມາຊອຍຂ້າໄທ, ເມື່ອອົງສາມກວານເອົາກໍາລັງມາເຖິງເມືອງທ່າແຂກ, ເຈົ້າລາກບຽນເຈົ້າເມືອງລະຄອນພ້ອມກັບກໍາລັງເມືອງມະຫາໄຊກໍຈັບເອົາແກວໄປຂ້າຖິ້ມເກືອບໝົດ, ປອຍແກວຄືນເມືອໜ້ອຍໜຶ່ງແລ້ວທະຫານຝ່າຍເມືອງລະຄອນ ແລະມະຫາໄຊກໍເວົ້າວ່າພວກກູນີ້ແລ້ວແມ່ນເສິກໄທ, ພວກກູຈະຕີຂັບໄລພວກສູໄປຈົນເຖິງໄມ້ເນັ້ງແດນແກວພັນ. ແກວທີ່ຍັງເຫຼືອປົບຕາຍເມືອລາຍງານໃຫ້ອົງສາມກວານຮູ້, ອົງສາມກວານຈຶ່ງເວົ້າວ່າ: ເສິກຄັ້ງນີ້ຕັ້ງແມ່ນເມືອງລະຄອນເປັນຜູ້ກໍ່ຂຶ້ນບໍ່ແມ່ນເສິກໄທດອກ.

ອົງສາມກວານຈຶ່ງແຕ່ງໃຫ້ບ່າວໄພລົງມານໍາເອົາເຈົ້າລາກບຽນເຈົ້າເມືອງລະຄອນຂຶ້ນເມືອລາຍງານ, ເຈົ້າລາກບຽນຮູ້ແຜນຈຶ່ງຕີວ່າເປັນປ່ວຍໄປບໍ່ໄດ້ຈຶ່ງແຕ່ງໃຫ້ເຈົ້າລາຊະບຸດ ແລະເຈົ້າເມືອງຈັນຂຶ້ນເມືອກ່ອນ. ເມື່ອໄດ້ຮັບຄໍາສັ່ງທັງສອງກໍອອກເດີນທາງຫຼາຍວັນຈຶ່ງໄປເຖິງດົງເຫັ້ຍທີ່ເປັນເມືອງຂອງອົງສາມກວານ. ພໍແຕ່ໄປເຖິງ, ທັງສອງກໍຖືກອົງສາມກວານໂຈດຖາມທັນທີວ່າເປັນຫຍັງເຈົ້າລາກບຽນບໍ່ມາ.

**45. ຫວຽດຈັບເຈົ້າລາຊະບຸດແລະເຈົ້າເມືອງຈັນ**

ເຈົ້າລາຊະບຸດ ແລະເຈົ້າເມືອງຈັນກໍ່ຕອບອົງສາມກວານວ່າ: ເຈົ້າລາດບຽນກໍາລັງປ່ວຍ, ຫາຍແລ້ວກໍ່ຈະຂຶ້ນມາຕາມຫຼັງ. ຈາກນັ້ນ ແກວກໍຈັບເອົາເຈົ້າເມືອງຈັນ ແລະເຈົ້າລາຊະບຸດໃສ່ຄາ, ມັດດ້ວຍໂສ້ຂັງຄອກໄວ້.ສ່ວນເຈົ້າ

ລາຊະວົງນັ້ນແກວໄດ້ຈັບພະອົງໄປຂັງໄວ້ແຕ່ດົນນານແລ້ວ, ມາຮອດດຽວນີ້ຈິ່ງຖືກປ່ອຍຕົວ, ເມື່ອໄດ້ຮັບການປ່ອຍຕົວ, ເຈົ້າລາຊະວົງຈຶ່ງຟ້າວຂ້ຽວຄໍ່າຢ່ຳຄືນກັບຄືນມາເມືອງມະຫາໄຊ, ເຂົ້າໄປທູນຕໍ່ເຈົ້າລາກບຽນວ່າ: ແກວໄດ້ຈັບເອົາຄົນເຮົາທັງໝົດແລ້ວຂໍໃຫ້ພະອົງຈົ່ງຮໍ່າຄະນຶງໃຫ້ຖ້ວນຖີ່ເບິ່ງທ້ອນ, ຖ້າເຮົາຍັງຢູ່ຊ້າແກວຈະນຳກຳລັງລົງມາເຮົາຄວນກັບເມືອເມືອງເກົ່າຂອງເຮົາດີກວ່າບໍ່, ເພິ່ງໃສ່ແກວນີ້ຍັງຮ້າຍຍິ່ງກວ່າເພິ່ງໄທອີກ.

**46. ເຈົ້າເມືອງລະຄອນໂຕນກັບຄືນເມືອເມືອງລະຄອນແລະວາງແຜນກັບມາກວາດເອົາຄົວ**

ເມື່ອໄດ້ຍິນຄຳກາບທູນຈາກເຈົ້າລາຊະວົງແລ້ວ, ເຈົ້າເມືອງລະຄອນກໍຄຽດແຄ້ນໃຫ້ແກວ ແລະ ໃຫ້ບ່າວໄພ່ກະກຽມກັບຄືນເມືອເມືອງເກົ່າ. ເຈົ້າກໍສັ່ງໃຫ້ເຂົາເອົາເຮືອແກວຂຽນລົງຫາ, ແລ້ວກໍສັ່ງໃຫ້ເຂົາຂົນຄົວລົງເຮືອໃຫ້ໝົດ. ສ່ວນເຮືອແກວທີ່ຍັງເຫຼືອແມ່ນຈູດໃຫ້ໝົດ, ຈາກນັ້ນ ເຈົ້າເມືອງລະຄອນຈຶ່ງພ້ອມກັບໄພ່ພົນລົງເຮືອລ່ອງຕາມເຊຫຼວງອອກສູ່ແມ່ນ້ຳຂອງແລ້ວຈຶ່ງພາຍເຮືອຂຶ້ນເມືອຮອດເມືອງລະຄອນ, ບ່າວໄພ່ເສນາເກົ່າກໍລົງມາຕ້ອນຮັບ, ເຈົ້າເມືອງລະຄອນລາຍງານໃຫ້ຝ່າຍໄທຊາບວ່າຊາວຄົວສ່ວນຫຼາຍແມ່ນຂ້າມມາພ້ອມກັນນີ້ແລ້ວຍັງຊາວຄົວຈຳນວນໜຶ່ງຍັງເຫຼືອຢູ່ເຈົ້າລາຊະວົງຍັງເປັນຜູ້ທ້ອນໂຮມແລ້ວຈະມາຕາມຫຼັງ ແຕ່ຈຳພວກນັ້ນຍັງອາໄສເພິ່ງພາແກວຢູ່.ຊາວຄົວທີ່ມານເຈົ້າເມືອງລະຄອນນັ້ນເມື່ອມາເຖິງເມືອງລະຄອນແລ້ວເຂົາກໍຖືກພວກເຈົ້ານາຍຜູ້ຢູ່ໃນເມືອງເກົ່າແບ່ງປັນກັນເປັນຂ້ອຍໃຊ້ ແລະພວກຍິງສາວເຂົາກໍເອົາເປັນເມຍນ້ອຍພວກເຂົາຈົນໝົດ, ເຄື່ອງຂອງຕ່າງໆທີ່ມີຄ່າກໍຖືກຍຶດເອົາຍັງເຫຼືອແຕ່ເຄື່ອງຂອງໆເຈົ້າເມືອງເທົ່ານັ້ນຍັງໄດ້ຄືນຄືເກົ່າ.

ເມື່ອມາຕົກເມືອງລະຄອນແລ້ວ, ເຈົ້າລາກບຽນກໍ່ວາງເລ່ລ່ຽມໄປຕົວະພວກຂຸນດ່ານໃຫ້ຢ້ານກົວຕໍ່ແກວ. ຫຼັງຈາກນັ້ນ ພວກເຈົ້າລາກບຽນຈຶ່ງນຳກຳລັງຂຶ້ນໄປຕີເອົາຊາວຄົວທີ່ຍັງຄ້າງຢູ່ເມືອງເກົ່າ (ເມືອງມະຫາໄຊ) ແລ້ວນຳຂ້າມຂອງໄປ. ຈາກນັ້ນ ເຈົ້າລາກບຽນຍັງວາງແຜນຕີເອົາເມືອງພະລານ, ເມືອງຊຸມພອນ ແລະບັນດາເມືອງຢູ່ຝັ່ງຂອງຟາກຕາເວັນອອກຫຼາຍເມືອງເຊັ່ນ: ເມືອງມະຫາໄຊ, ເມືອງພວນ, ເມືອງຄຳເກີດ ແລະຕີກວາດຂຶ້ນເມືອຮອດເມືອງກະບອງ ແລະເຂດໄມ້ເນີ້ງແດນແກວ, ນຳເອົາຄົວໝູ່ນັ້ນໄປຖວາຍໃຫ້ເຈົ້າຄອງບາງກອກ, ຖ້າວ່າແກວມາເຮົາກໍ່ຕົວ່າຢ້ານແກວແລ້ວມິດຢູ່ບໍ່ຕິງ, ເມື່ອແກວກັບເມືອແລ້ວເຮົາກໍຂ້ຽວກວາດຄົວຂ້າມຂອງ, ແນ່ນອນແກວນຳບໍ່ໄດ້ ແລະຕ້ອງນາບຂູ່ຊາວຄົວຕື່ມອີກວ່າຖ້າໃຜຟັງຄວາມແກວແມ່ນຈະຕາຍບໍ່ຮູ້ເມື່ອຄືງ. ນີ້ແມ່ນແຜນຂອງເຈົ້າລາກບຽນເຈົ້າເມືອງນະຄອນເຊິ່ງເວົ້າຕໍ່ແມ່ທັບຂອງໄທທີສັງກັດໃນເມືອງລະຄອນຊາບ. ເມື່ອຮູ້ແຈ້ງຕໍ່ແຜນການຂອງເຈົ້າລາກບຽນດັ່ງກ່າວແລ້ວ, ແມ່ທັບໄທກໍມີຄວາມຊົມຊື່ນຍິນດີເປັນຢ່າງຍິ່ງ.

**47. ແມ່ທັບໄທຕຽມບຸກໂຈມຕີຫົວເມືອງຕ່າງໆທາງຝັ່ງຊ້າຍຂອງແມ່ນ້ຳຂອງ**

ເມື່ອພະລາຊະສຸລິນ ແມ່ທັບໄທຮູ້ແຈ້ງແຜນການຂອງເຈົ້າລະຄອນແລ້ວເຂົາກໍ່ເລັ່ງທ້ອນໂຮມກຳລັງນັບແຕ່ເມືອງລະຄອນ, ບັງມຸກຈົນເຖິງເມືອງເຫມະລາດ ແລະອຸບົນໄດ້ສາມພັນປາຍ ແລ້ວແບ່ງກຳລັງເພື່ອຈະຕີເຂົ້າແຕ່ລະເມືອງ, ຈາກນັ້ນ ພະລາຊະສຸລິນແຕ່ງໃຫ້ຄຸນໂຍທາຄຸມກຳລັງຂອງເມືອງມຸກດາຫານຕີເອົາເມືອງພະລານ, ເມືອງພ້ອງ ແລະເມືອງຊຸມພອນ ແລ້ວກວາດເອົາຊາວຄົວຂ້າມຂອງພາຍໃນມື້ດຽວ. ພະຍາຍົມພິບານແມ່ນນຳກຳລັງຂອງເມືອງລະຄອນເມື່ອຕີເອົາເມືອງມະຫາໄຊເພາະເມືອງນີ້ເຊື່ອ ແລະເພິ່ງແກວ ແລະບໍ່ເຄີຍອອກມາຍອມຕໍ່ຝ່າຍໄທ. ເມື່ອໄດ້ຮັບມອບໝາຍຈາກແມ່ທັບໄທແລ້ວເຈົ້າເມືອງລະຄອນກໍສະແດງຄວາມພໍໃຈ ແລະບໍ່ຢ້ານກຳລັງຂອງແກວເພາະຄຽດວ່າແກວຂ້ານ້ອງຊາຍຂອງຕົນຊື່ວາລາຊະບຸດໃນເມື່ອກອນ. ດັ່ງນັ້ນ, ຖ້າວ່າພົບກັບກຳລັງຂອງແກວພະອົງຈັບຂ້າໃຫ້ໝົດ, ສ່ວນພະຍາລາຊະສຸລິນແມ່ນນຳກຳລັງທາງວຽງຈັນຂຶ້ນເມືອຕີເມືອງພວນ ແລະກວາດເອົາຄົວພວນເຫຼົ່ານີ້ເມື່ອ

ບາງກອກໃຫ້ໝົດ, ເພາະແຕ່ກ່ອນເຂົາເຄີຍມາຫາພະຍາລາຊະສຸລິນແຕ່ດຽວນີ້ເຂົາພາກັນໄປລີ້ຕາມພູຜາປ່າດົງເພິ່ງແກວໝົດກ້ຽງ.

ເມື່ອວາງແຜນສຳເລັດເສັດສິ້ນແລ້ວພວກເຂົາກໍພາກັນຢູ່ແບບມິດງຽບ ແລ້ວຈຶ່ງແຕ່ງຄົນປອມເປັນພໍ່ຄ້າໄປຄ້າຂາຍສິ່ງຂອງຕາມຫົວເມືອງຕ່າງໆ. ທຳເປັນມິດສະຫາຍລົ້ງເຄີຍກັນເພື່ອສືບສະພາບການຕາມຫົວເມືອງເຫຼົ່ານັ້ນ ແລະພວກພໍ່ຄ້າປອມໂຕນັ້ນຍັງໂຄສະນາຊວນເຊື່ອວ່າ: ຖ້າມີເສິກໄທມາແທ້ພວກເຂົາຈະບອກໃຫ້ຮູ້, ດຽວນີ້ບໍ່ມີຫຍັງ ມີແຕ່ຮູ້ຂ່າວວ່າອິງແຈ້ງ(ແກວ)ລົງເມືອຕີບາງກອກ ແລະ ຂະເໝນ. ສ່ວນພະຍາມຸນິນ(ບັບພາວະດີ)ນັ້ນແມ່ນຖືກຂ້າຕາຍແລ້ວທະຫານແກວແມ່ນເອົາກຳລັງມາ. ທາງນ້ຳໄປຕີ ແລະຍຶດບາງກອກໄດ້ແຕ່ດົນແລ້ວ.

ນອກຈາກນັ້ນ, ພໍ່ຄ້ານັກສືບຂອງໄທຍັງຕົວະຊາວເມືອງຂອງລາວວ່າ: ແກວນັ້ນກໍແມ່ນເຂີຍຂອງລາຊະວົງວຽງຈັນ, ສ່ວນເຈົ້າອະນຸນັ້ນເມື່ອໄທຈັບເອົາບິດາແຫ່ງພະອົງແລ້ວ, ເຈົ້າກໍໜີໄປເຊົ່ງເມືອງພູຊຸນ, ກວານຫຼວງ ແລະເຈົ້າຫໍຄຳ (ເຈົ້າຊີວິດແກວ) ໄດ້ເອົາລູກສາວຂອງຕົນມອບໃຫ້ເປັນມະເຫສີພ້ອມກັບມອບກຳລັງໃຫ້ຕາມໃຈຂອງລາຊະບຸດເລີຍ. ພະອົງຄິດເຖິງເລື່ອງຜ່ານມາຈຶ່ງຍົກກຳລັງລ່ອງລົງທາງນ້ຳມາເຖິງເມືອງປະທາຍຂະເໝນ, ຕັ້ງແຕ່ເມືອງໂພທິສັດ, ປັດຕະບອງ, ທະເລສາບ, ເມືອງພະນົມເພັງ, ເມືອງພະນົມເປັນ ແລະເມືອງໄຊ່ງ່ອນເຂົາກໍເຂົ້າເປັນແກວໝົດແລ້ວ, ເພາະເຂົາຄຽດແຄ້ນໃຫ້ພະຍາມຸນິນທີ່ເອົາກຳລັງໄປຕີໄຊ່ງ່ອນແຕ່ຄາວກ່ອນ. ພວກເຂົາໄດ້ຕີຂັບໄລ່ທະຫານຂອງພະຍາມຸນິນຈົນໄດ້ຖອຍທັບໄປຕັ້ງຢູ່ເມືອງປັດຕະບອງແລ້ວ. ຝ່າຍພະຍາມຸນິນກໍມີຄວາມຄຽດຂຶມຕໍ່ຝ່າຍກຸງສີແລ້ວມີແຕ່ລໍຖ້າຈະເຂົ້າຮ່ວມກັບຝ່າຍແກວເທົ່ານັ້ນ. ສິ່ງທີ່ເວົ້າມານີ້, ພວກເຮົາໄດ້ຍິນຂ່າວພຽງແຕ່ເປັນລາງໆ. ເຮົາເປັນໄພ່ຟ້າລາສະດອນບໍ່ຕ້ອງຢ້ານກົວແຕ່ປະການໃດ, ຜູ້ໃດຊະນະກໍຢູ່ນຳຜູ້ນັ້ນ. ນອກຈາກການຕົວະຍົວະດ້ອຍຄວາມດີແລ້ວ, ພວກເຂົາຍັງໄດ້ຂຽນໜັງສືມານາບຂູ່ຕໍ່ຊາວລາວເມືອງຊຸມພອນຫຼາຍຕໍ່ຫຼາຍເທື່ອວ່າຢາກຢູ່ບ້ານຢູ່ເມືອງໃຫ້ອອກມາດີໆຖ້າຫາກຍັງຂັດຂວາງໜີໄປໄກເມື່ອໄທຈັບໄດ້ຈະເກັບກວາດຂ້າມຂອງ ແລະແບ່ງປັນກັນເອົາມາເປັນຂ້ອຍ.

ຕໍ່ມາເມືອງຊຸມພອນຂຶ້ນໄປຂໍເອົາກຳລັງແກວມາຊ່ວຍເພື່ອຕີກັບລາວຝັ່ງຂອງເບື້ອງນັ້ນ (ຕ້ານກັບໄທ) ເມື່ອແກວມາເຖິງພວກໄທກໍຟ້າວຂ້າມຂອງກັບຄືນໄປຕາມກົນອຸບາຍຂອງເຂົາ. ເມື່ອແກວມາຮອດກໍບໍ່ເຫັນທະຫານໄທຈັກຄົນ. ແກວຈຶ່ງເວົ້າໃຫ້ວ່າ: ລາວຝັ່ງນັ້ນມີແຕ່ຄວາມຕົວະ, ທະຫານໄທບໍ່ຮອດຈະມາສູ້ເຮົາໄດ້ບໍ່, ຖ້າວ່າເກັ່ງກໍລອງມາສູ້ກັນເບິ່ງດູຟ້າວປົບໜີເຮັດຫຍັງ? ພວກໄທທຳວ່າຢ້ານແກວນັ້ນກໍເພື່ອໃຫ້ຫົວເມືອງລາວທັງຫຼາຍອຸ່ນອ່ຽນບໍ່ຢ້ານແລະແຕກຕື່ນເຂົ້າປ່າແລ້ວມາເກັບກວາດເອົາຈຶ່ງງ່າຍ.ເມືອງມະຫາໄຊກໍເໝືອນກັນ, ເຈົ້າວົງນະຄອນໄດ້ເກັບກວາດເອົາຊາວຄົວມາໂຮມກັນຢູ່ໜອງພູ່ໂດຍຕົວະວ່າຢ້ານຊາວຄົວເຫຼົ່ານັ້ນໄປເປັນໄທຈຶ່ງເອົາກັນມາໂຮມຢູ່ບ່ອນດຽວ. ນີ້ກໍແມ່ນແຜນຂອງໄທເພື່ອຈະຂ້າມມາເກັບກວາດເອົາໄດ້ງ່າຍຄືກັນ.

### 48. ເຈົ້າເມືອງມະຫາໄຊໄປລາຍງານຫວຽດ

ຕໍ່ມາເຈົ້າອິງຕິ, ເຈົ້າເມືອງມະຫາໄຊຈຶ່ງແຕ່ງໃຫ້ລາຊະບຸດໄປບອກອິງສາມກວານໃຫ້ຮູ້ວ່າເຈົ້າອາລະຄອນໜີຈາກເມືອງໄປແລ້ວ. ພວກເຂົາເອົາເຮືອຂອງອິງລອງໄປນຳໝົດຍັງເຫຼືອແຕ່ເຮືອລຳນ້ອຍຂອງຂ້ານ້ອຍ(ຂອງອິງຕິແຕ່ເຂົາກໍ່ຈູດເຜົາໝົດແລ້ວ, ບໍ່ມີໃຜຮູ້ເມື່ອຄິງຍ້ອນວ່າອິງຫຼວງເອງເປັນຜູ້ມອບສິດໃຫ້ເຂົາຮັກສາດ່ານນັບແຕ່ປາກນ້ຳພິດຂຶ້ນໄປ. ມາຮອດນີ້ໄສ້ໃນທ້ອງກັບເກີດເປັນໜອນ, ຊາວຄົວໄປເປັນເສິກກໍບໍ່ມີໃຜຮູ້. ເມື່ອໄດ້ຍິນຄຳລາຍງານຈາກບ່າວໄພ່ຂອງເຈົ້າອິງຕິງແລ້ວ, ອິງຫຼວງກໍ່ຮ້າຍດ່າ ແລະຈຳໃຫ້ເຈົ້າເມືອງມະຫາໄຊໃຊ້ຄ່າເຮືອທັງສີ່ເຫຼັ້ມໆລະສີ່ແນນ (ສີ່ຮາງ, ສີ່ຂັນ) ໃຫ້ນຳມາໃຊ້ດຽວນີ້ເພາະສູຮັກສາບໍ່ດີ, ສ່ວນເຮືອທີ່ເຈົ້າລາກບຽນເອົາໄປນັ້ນແມ່ນຮັກສາໄວ້ໃຫ້ກູ, ມັນ (ລາກບຽນ) ບອກວ່າເມື່ອໄປຮອດເມືອງແລ້ວຈະນຳມາສົ່ງຄືນຕາມສັນຍາ. ລາຊະບຸດກໍ່ນຳຄຳເວົ້າດັ່ງກ່າວຂອງອິງຫຼວງມາແຈ້ງໃຫ້ເຈົ້າເມືອງມະຫາໄຊຊາບທຸກປະການ. ເມື່ອເຈົ້າອິງຕິຈຸນລະນີເຈົ້າເມືອງມະຫາໄຊໄດ້ຟັງຄຳລາຍງານຈາກລາຊະບຸດແລ້ວກໍແປກໃຈຈຶ່ງຈັດດ່ານປ້ອງກັນໄວ້ເປັນຢ່າງດີທົ່ວທຸກບ່ອນ. ສ່ວນພະລາຊາຜູ້ເປັນອ້າຍກໍ່ນຳກຳລັງ

ເມື່ອປ້ອງກັນທາງເບື້ອງຕາເວັນຕົກ, ທຸກຄໍາເຊົ້າວັນຄືນແມ່ນອອກແຮງຝຶກແອບວິຊາການທະຫານ. ເຂົາເຈົ້າຢູ່ທ່າງ ເກັບເອົາເຂົ້າຂອງໆຊາວຄົວທີ່ແຕກຕື່ນໜີໄປມາໃສ່ເລົ້າເຍຍຂອງຕົນເອງໄວ້ລ້ຽງລູກເມຍ. ສ່ວນຊາວຄົວທີ່ຍັງຄ້າງຢູ່ ເຂດນັ້ນທຸກຍາກປາກໝອງປານໃດພວກເຂົາກໍບໍ່ສົນໃຈມີແຕ່ຄວາມໂລພາຂອງພວກເຈົ້ານາຍ. ນີ້ອາດແມ່ນເຫດ ບັນດົນ ແລະບົ່ງບອກເຖິງເກນແຫ່ງເມືອງຈະສູນເສັຍ.

### 49. ໄທຍົກທັບກວາດຕ້ອນຊາວຄົວລາວຕາມຫົວເມືອງຕ່າງໆທາງຝັ່ງຊ້າຍແມ່ນໍ້າຂອງ

ມາຮອດຈຸລະສັກກະຫຼາດ1195 (ຄ.ສ. 1833) ເດືອນສາມປີມະແມໄທໄດ້ຍົກທັບຂຶ້ນມາ ແລະ ສົ່ງສານ ໄປບອກຂ່າວໃຫ້ຫົວເມືອງລາວທຸກແຫ່ງໃຫ້ຮີບຮ້ອນອອກມາຍອມບໍ່ຄວນອີງອາໄສຕໍ່ແກວຈະບໍ່ເປັນການດີ. ນອກ ນັ້ນໄທຍັງໂຄສະນາຊວນເຊື່ອວ່າ: ພວກເຂົາໄດ້ສົ່ງສານເຖິງເມືອງແກວໃຫ້ມາຊ່ວຍ, ແກວກໍ່ຕອບວ່າຢ່າຮ້ອນຮົນ ພວກເຮົາຈະຊ່ວຍມີແຕ່ວ່າຂໍໃຫ້ພວກທ່ານມາຕີເອົາໃຫ້ໄວ, ສ່ວນຄົວທີ່ຍັງເຫຼືອນັ້ນພວກເຮົາຈະກວາດໂຮມໄວ້ ແລ້ວ ພວກທ່ານຈຶ່ງຄ່ອຍທຽວມາຂົນເອົາ. ພວກເຮົາຈະຈັດເປັນຄ້າຍວຽງເພື່ອປ້ອງກັນໄວ້ຕີວ່າເປັນການປ້ອງກັນບ້ານເມືອງ ໃຫ້ແກ່ເຂົາ, ພວກເຮົາຈະຈັດໃຫ້ເຂົາເອົາເງິນ, ຄໍາ, ນໍ, ງາ, ເຜີ້ງມາເສຍສ່ວຍ, ຊາວຄົວລາວເຂົາຈະຢູ່ບໍ່ໄດ້ຊີລັກລອບ ຄືນໄປເພິ່ງພວກເຈົ້າ, ໃຫ້ພວກເຈົ້າມາພົກຈອບເອົາໄປເທື່ອລະນ້ອຍ, ຢ່າຊີຕັ້ງເປັນອ້າຍໃຫຍ່ໂຕມະໂຫລານຈະໂດງ ດັງໄປເຖິງຫູຂອງເຈົ້າຫໍຄໍາອີງໃຫຍ່ (ເຈົ້າຊີວິດແກວ) ເພິ່ນຈະຂ້າພວກເຮົາຕາຍໝົດ, ເພິ່ນຢ້ານພວກເຮົາະນໍາໄທຂຶ້ນ ເມືອຕີເມືອງເພິ່ນ, ເພາະຢູ່ທາງພຸ້ນເສີກກໍ່ຍັງບໍ່ແລ້ວເໝືອນກັນ, ເພິ່ນຢ້ານຊູ່ທາງ ແລະຢ້ານບັນດາເມືອງດັ່ງກ່າວບໍ່ ມີໃຈຊື່ສັດຕໍ່ເພິ່ນ, ພວກເຮົາເປັນເວນນໍາເພິ່ນຫຼາຍເທື່ອແລ້ວ, ຖ້າວ່າເມືອງເຫຼົ່ານີ້ຫາກແຍກອອກຈາກເພິ່ນແລ້ວພວກ ເຮົາກໍ່ສວ່າງໃຈ ແລະຖ້າວ່າເຂົາບໍ່ແຍກພວກເຮົາກໍຈະຈໍາໃຫ້ເຂົາແຍກໜີດ້ວຍການຈ້າງວານເມືອງລະແປດຮ້ອຍ ແນນ. ນີ້ເປັນຄໍາເວົ້າຕົກລົງກັນລະຫວ່າງແກວກັບໄທ.ບັນດາຫົວເມືອງລາວໝູ່ນັ້ນບໍ່ອາດຮູ້ຈັກເລ່ລ່ຽມຂອງພວກເຂົາ ເລີຍ, ພວກເຂົາຄິດວ່າໄທຢ້ານແກວເກົ່າບໍ່ກັບມາ, ຖ້າຫາກວ່າໄທກັບຄືນມາເຂົາກໍຈະນໍາເອົາແກວມາໄລ່ເຂົາຈະຕາຍ ໃນແມ່ນໍ້າຂອງນັ້ນໝົດ.

ຈາກນັ້ນ ເຈົ້າຍົມພິບານແມ່ທັບໃຫຍ່ຂອງໄທໄດ້ວາງແຜນ ແລະແປງກໍາລັງຕີເຂົ້າແຕ່ລະຫົວເມືອງໃນວັນ ເວລາດຽວກັນ, ສ່ວນພະລາຊະສຸລິນໃຫ້ຍົກຍົນອອກກ່ອນ, ເອົາກໍາລັງວຽງຈັນຕີກວາດຂຶ້ນໄປທາງເມືອງພວນ. ເມື່ອ ມາຮອດສິບເອັດຄໍ່າເດືອນແປດຂຶ້ນ, ເຈົ້າຍົມພິບານກໍ່ນໍາກໍາລັງເມືອງນະຄອນ ບຸກເຂົ້າເມືອງມະຫາໄຊ. ຄຸນໂຍທານໍາ ກໍາລັງເມືອງມຸກດາຫານບຸກເຂົ້າເມືອງຊຸມພອນ, ເຈົ້າບຸນ ແລະ ເຈົ້າປິດກໍ່ນໍາກໍາລັງບຸກເຂົ້າເມືອງພ້ອງຮອດເມືອງພະ ລານ. ພວກເຂົາຍິງປືນສະໜັ່ນຫວັ່ນໄຫວເໝືອນດັ່ງຟ້າຜ່າແລ້ງເດືອນຫ້າຄືນເຄັ່ງ. ສ່ວນເຈົ້າຍົມພິບານໄດ້ຊົງເຄື່ອງ ຢ່າງຄົບຖ້ວນ, ໃສ່ເຄື່ອງຄໍາເອ້ຢ້ອງ, ຫົວໃສ່ມົງກຸດເປັນຊໍ່, ຫ້ອຍດອກໄມ້ຄໍາເປັນພວງທັງສອງຂ້າງ ແລ້ວກໍໃຫ້ເຂົາ ຫາມແຫ່ໄປ.

ເມື່ອເຈົ້າລາຊະວົງຫົວໜ້າດ່ານເມືອງມະຫາໄຊເຫັນແນວນັ້ນພະອົງກໍຟ້າວຟັ່ງນໍາກໍາລັງອອກມາຕັ້ນຕ້ອນ ແລະ ໂຈດຖາມວ່າຫົວເສີກນີ້ມາຈາກໃສ? ເຈົ້າກໍໄປເຖິງຕໍ່ໜ້າພະຍາຍົມພິບານແລ້ວຖາມວ່າ: ພວກເຈົ້າມາດີ ຫຼື ມາ ຮ້າຍ? ເມື່ອໄດ້ຍິນຄໍາໂຈດຖາມຂອງເຈົ້າລາຊະວົງແນວນັ້ນແລ້ວທະຫານໄທບໍ່ຕອບມີແຕ່ນໍາກໍາລັງອ້ອມໄວ້ແລ້ວກໍ ຍິງປືນມາໃສ່ປານຫ່າຝົນ, ໂດຍເລັງໃສ່ເຈົ້າລາຊະວົງດີແຕ່ວ່າມ້າຫາກພາເຈົ້າລາຊະວົງໜີລອດ. ສ່ວນທະຫານຂອງພະ ອົງແມ່ນພາກັນແລ່ນຄົນລະທາງກັບຄືນສູ່ເມືອງ ແລະຕີກອງຫ້ວງປ່າວໃຫ້ທັງເມືອງຮູ້ເຫດ ແລະແຕກຕື່ນກັນໄປ. ໃນ ເວລານັ້ນ ໄທກໍຕົກກໍາລັງອ້ອມເມືອງ ແລະຈັບເອົາຊາວຄົວໄວ້ໄດ້ເປັນສ່ວນຫຼາຍ.

ທາງປີກຊ້າຍບຸດຕະລາດເປັນລູກພະຍາເມືອງກໍນໍາກໍາລັງຜ່າຊົນເຂົ້າຕັ້ງແຕ່ປາກຊ່ອງຈົນເທົ້າຮອດຜາຫຸງ. ຈາກນັ້ນ ເຈົ້າຈຸນລະນີກໍຟ້າວຟັ່ງຈັດເລັ່ງນໍາກໍາລັງແກວລົງມາຊ່ວຍ. ສ່ວນກໍາລັງຂອງເມືອງລະຄອນກໍ່ອາສາສະໝັກ ເລວຊ່ວຍ, ແຕ່ໃນຕົວຈິງແລ້ວແມ່ນຍິງປືນຂຶ້ນເມື່ອປົນ, ບໍ່ຍິງໃສ່ທະຫານໄທຈັກບາດ ແລະກໍນໍາກໍາລັງຖອຍເຂົ້າສູ່ ຝ່າຍໄທ. ເຫັນສະພາບເປັນແນວນັ້ນແລ້ວເຈົ້າອົງຕີແຫ່ງເມືອງມະຫາໄຊຈຶ່ງນໍາກໍາລັງຖອຍເຂົ້າເມືອໃນເມືອງແລ້ວ

ຈັດເລັ່ງໃຫ້ຊາວເມືອງຫຼົບໜີຈາກເມືອງ,ຍັງແຕ່ທະຫານແກວຕໍ່ສູ້ປ້ອງກັນເມືອງໄວ້. ແຕ່ສຸດທ້າຍທະຫານແກວກໍຖືກໄທຂ້າຕາຍເຮ່ຍຮວາຍໄປເກືອບໝົດ. ນັບແຕ່ປາກຖໍ້າປາກຝາງຈີນເຖິງທົ່ງນາຫຼົງ, ມີແຕ່ແກວຈຳນວນໜ້ອຍໜຶ່ງປົບໜີໄດ້. ຊາວເມືອງມະຫາໄຊສູ້ບໍ່ໄຫວຕໍ່ຫໍ້ວເສີກຄາວນີ້ ກໍພາກັນແຕກກະຈັດກະຈາຍ, ແຕ່ກໍຖືກຫໍ້ວເສີກໄລ່ຕາມຈັບໄດ້ໝົດຍັງໜີພົ້ນແຕ່ພະຍາເທົ່ານັ້ນ.

ຖັດນັ້ນ ພະຍາຍົມພິບານແມ່ທັບໃຫຍ່ຂອງໄທກໍຈັດກຳລັງມາຕັ້ງຄ້າຍຢູ່ແທນຄ້າຍຂອງພວກແກວ ແລະເກັບກວາດໂຮມເອົາຄົວຢູ່ໃນແຫ່ງນັ້ນ, ທາງຫໍ້ວຄ້າຍຕັ້ງແຕ່ຫຼົ້ມຈີນເຖິງແຄມເຊກໍ່ຕັ້ງເປັນວຽງສູງເພື່ອລ້ອມໄວ້. ໃນຄາວນີ້ໄທຈັບເອົາຊາວຄົວເມືອງມະຫາໄຊໄດ້ສອງສ່ວນ.ຍັງໜີທັນແຕ່ສ່ວນໜຶ່ງພ້ອມດ້ວຍຄອບຄົວຂອງເຈົ້ານາຍເພາະເຂົາຮູ້ລ່ວງໜ້າແລ້ວຄົວໜີກອນ.ເມື່ອເພິ່ງຊາວເຊ (ພວກຂ້າ)ຊາວເຊໄດ້ເປັນທະຫານອາສາສະໝັກເພື່ອຮັກສາດ່ານ (ເຂດແດນ)ແຫ່ງນັ້ນໄວ້. ເຂົາເປັນຄົນໜັງຫຍາບມີຜິວດຳເໜືອນກາ. ເຂົາເປັນຄົນກ້າຫານໃນການຕໍ່ສູ້ເຂົາໃຊ້ຂວາກຫ່າວ,ຫຼາວ,ແຫຼມເປັນອາວຸດເພື່ອຕໍ່ສູ້. ໃຜຫາກກ້າເຂົ້າໄປໃນເຂດແດນເຂົາ, ເຂົາຈະຂ້າໃຫ້ຕາຍບໍ່ຫຼົ່ມາຈັກຄົນ.

ຕໍ່ມາ ທະຫານຂອງເມືອງລະຄອນ ແລະເມືອງສີໂສທອນກໍນຳກຳລັງລັກລອບຕິດຕາມຊາວຄົວທີ່ແຕກໜີນັ້ນເພື່ອຈະເກັບກວາດຄືນມາ, ເຂົາກໍຈັບເອົາຊາວບ້ານເພື່ອເປັນນາຍທາງພາໄປຊອກ. ຊາວຄົວທີ່ໜີຢູ່ໃກ້ແມ່ນຖືກເຂົາເກັບກວາດມາໂຮມກັນໝົດ, ສ່ວນຊາວຄົວທີ່ໜີໄປຢູ່ເມືອງກະປອງຄອຍຜົກຈອບເອົາເທື່ອລະນ້ອຍຕາມຫຼັງ. ສ່ວນຊາວຄົວທັງເກົ່າ ແລະໃໝ່ທີ່ເຕົ້າໂຮມກັນຢູ່ໃນຄ້າຍນັ້ນແມ່ນຖືກພະຍາຍົມພິບານກວາດຂ້າມຂອງເມືອເມືອງລະຄອນໝົດ.

ຈາກນັ້ນ ໄທຍັງສິ່ງກຳລັງນຳຈັບເອົາເຈົ້າຈຸນລະນີຢູ່ແຕ່ຖືກຊາວເຊຕ້ານຄືນຢ່າງຮຸນແຮງໄທສູ້ບໍ່ໄຫວຈຳຕ້ອງຖອຍກັບຄືນ ແລ້ວຈຶ່ງເອົາໄມ້ໄຜ່ມາສານເປັນກະລາເພື່ອບັງລູກໜ້າ, ຕໍ່ມາຈຶ່ງກຳລັງກັບເມື່ອສູ້ກັບຊາວເຊໜ້າບໍ່ສາມາດສູ້ກັບປືນໄດ້, ຊາວເຊຈຶ່ງແຕກຄືນແລ້ວເມື່ອລາຍງານໃຫ້ເຈົ້າຈຸນລະນີຊາບ ເພື່ອໃຫ້ພາກັນຫຼົບໜີໂດຍໄວບໍ່ດັ່ງນັ້ນກໍຈະຖືກກຳລັງຂອງໄທນຳຈັບທັນ. ເມື່ອຮູ້ຂາວແນວນັ້ນແລ້ວເຈົ້າຈຸນລະນີກໍຈຶ່ງພາຄອບຄົວຫຼົບໜີເມືອຢູ່ເມືອງກະປອງ. ທະຫານໄທເຂົ້າໄປຊອກຫາທີ່ໃດກໍບໍ່ພົບຈຶ່ງໄດ້ພາກັນກັບຄືນມາວຽງຫຼວງຄືເກົ່າເພື່ອຜົກຈອບເອົາຊາວຄົວເໜືອນເດີມ. ສ່ວນວ່າເຈົ້າສຸໂພວົງລະຄອນກໍ່ຕິກຈອບເອົາຊາວຄົວລະຄອນທີ່ຍັງຄ້າງຄາຢູ່, ເຫັນຄົວໃດກໍນຳຜູກເອົາໝົດ.

## 50. ເຈົ້າລາຊະວົງວຽງຈັນໜີໄປຫວຽດນາມ. ເຈົ້າຈຸນລະນີ(ອິງຕີນຳທັບຫວຽດຕ່າວໂຈມຕີທັບໄທ)

ເຈົ້າລາຊະວົງພະໂອລົດຂອງເຈົ້າອະນຸວຽງຈັນຄິດອຸກອັ່ງຄັ່ງແຄ້ນຈຶ່ງພາຄອບຄົວໜີອອກຈາກຄ້າຍປ່າມັນເມືອງກອງແກ້ວໄປລີ້ຢູ່ເຂດພູພະນັງ, ແຕ່ກໍຍັງຖືກຫໍ້ວເສີກຕິດຕາມໄລ່ນຳຢູ່. ພະອົງຈຶ່ງໄດ້ນຳຄອບຄົວຂຶ້ນເມືອເມືອງຄຳເກີດແລ້ວນຳຄອບຄົວຂຶ້ນເມື່ອອາໄສໄພເພິ່ງອົງກວານຢູ່ຊາຍແດນແກວ. ອົງກວານຈຶ່ງຈັດກຳລັງມາເຝົ້າ ແລະຮັກສາພະອົງຢູ່ຊູ່ວັນ.

ສ່ວນເຈົ້າຈຸນລະນີ(ອົງຕີ) ເມື່ອນຳຄອບຄົວເມືອລີ້ຢູ່ເມືອງກະປອງແລ້ວ, ພະອົງກໍຂຶ້ນເມືອຂໍກຳລັງແກວລົງມາຕີທັບໄທຄືນ. ຈາກນັ້ນ ເຈົ້າຈຸນລະນີກໍຟ້າວນຳກຳລັງລົງມາກ່ອນເພາະຢ້ານວ່າໄທຈະກວາດຕ້ອນເອົາຄົວລາວເມືອກອນ. ເມື່ອມາເຖິງເມືອງມະຫາໄຊແລ້ວ, ພະອົງກໍປະທະກັບກຳລັງໄທ, ໄທກໍຈັບເອົາເຈົ້າຈຸນລະນີໄດ້ແລ້ວເຂົາກໍ່ເຮັດຄາໃສ່ເພິ່ນໂດຍທັນທີແລ້ວນຳໄປຂັງໄວ້ໃນວຽງ. ຕໍ່ມາກຳລັງແກວໃຕ້ການບັນຊາຂອງກວານແກວກໍ່ມາເຖິງ. ແກວກໍ່ນຳກຳລັງຕີໄທແຕກກະຈັດກະຈາຍປະຄ້າຍຄູ່ທຸກແຫ່ງແລ້ວນຳກຳລັງຂ້າມຂອງກັບຄືນ, ແກວໄດ້ກູ້ເອົາເຈົ້າຈຸນລະນີພົ້ນຈາກຄວາມຕາຍ. ຈາກນັ້ນ ແກວກໍ່ນຳກຳລັງກັບເມືອ, ສວນເຈົ້າຈຸນລະນີກໍກັບຄືນເມືອລີ້ຢູ່ເມືອງກະປອງຂອງເກົ່າເມື່ອແກວກັບຄືນເມືອແລ້ວ, ໄທກໍ່ນຳກຳລັງກັບຄືນມາຄືເກົ່າເພື່ອຜົກຈອບເອົາຄົວລາວຂ້າມຂອງໄປຝັ່ງຕາເວັນຕົກ.

ສະພາບຂອງການພັດພາກຈາກກັນຂອງຊາວຄົວລາວກໍ່ຍັງເກີດມີຢູ່ສະເໝີ. ສ່ວນວ່າຝຸງຊາວກະເລີງ, ຊາວຂ້າແມ່ນພາກັນຂຶ້ນເມືອລີ້ຊ່ອນຢູ່ຕາມພູດອຍບ່ອນພູຜາເຫວຊັນ. ພວກທະຫານໄທກໍຍັງດຳເນີນການສະກັດລັດຕ້ອນຈັບຜູກເອົາຊາວຄົວລາວຢູ່ທຸກເຊົ້າຄ່ຳວັນຄືນຕັ້ງແຕ່ຂຶງເຂດເມືອງຄຳອໍ້ເຖິງເຂດສະເງີຍ, ແຕ່ເຂດເມືອງເຊຂຶ້ນເຖິງເຂດເມືອງກະປອງ. ຢູ່ບ່ອນໃດກໍ່ໄດ້ຍິນແຕ່ຄົນເອົ້າຈົ່ມທຸກຈົ່ມຍາກ, ເວລາໃດໄທຫາກບໍ່ກັບຄືນເມືອຊາວລາວບໍ່ອາດຈະເປັນບ້ານເປັນເມືອງໄດ້.

**51. ສະໜາມຣົບທາງເມືອງຊຸມພອນ**

ໄປພ້ອມໆກັບການບຸກໂຈມຕີເຂົ້າເມືອງມະຫາໄຊ, ໄທກໍນຳກຳລັງບຸກເຂົ້າເມືອງຊຸມພອນເໝືອນກັນພາຍໃຕ້ການບັນຊາຂອງພະຍາຄຸນໂຍທາ. ພວກເຂົາໄດ້ປິດລ້ອມເມືອງຊຸມພອນອ້ອມຮອບແລ້ວຍະຫວ່າງໄວ້ພໍຊື່ວປືນຍິງເຖິງ. ທະຫານຂອງຊາວເມືອງຊຸມພອນຄິດວ່າໄທນັ້ນຢ້ານພາກັນປົບໜີເລີຍນຳກຳລັງໄລ່ຕາມກໍ່ຖືກໄທນຳກຳລັງຕັດຫຼັງ ແລະຍິງປືນສຸມໃສ່, ທະຫານຂອງຊາວເມືອງຊຸມພອນຖືກຍິງຕາຍເປັນຈຳນວນຫຼວງຫຼາຍຈຶ່ງຮູ້ສຶກວ່າຕົນຖືກເລ່ກົນຂອງໄທ. ຈາກນັ້ນ ໄທກໍ່ຍິງປືນສຸມເຂົ້າໃສ່ໃນເມືອງເໝືອນດັ່ງໄຟໄໝ້ລາມປ່າເພື່ອຂາບຂູ່, ເຮັດໃຫ້ຊາວເມືອງຊຸມພອນອົນລະໜົນວຸ້ນວາຍແຕກຕື່ນໄປທົ່ວເມືອງ. ສຳລັບເຂດເມືອງພ້ອງ ແລະເມືອງພະລານກໍ່ຕົກຢູ່ໃນສະພາບດຽວກັນກັບເມືອງຊຸມພອນ. ປະຊາຊົນໃນສອງເມືອງດັ່ງກ່າວກໍພາກັນແຕກຕື່ນປົບໜີເພື່ອເອົາຕົວລອດພໍໃຜພໍລາວ. ທະຫານໄທໄດ້ນຳກຳລັງໄປລັດຕ້ອນຕາມທາງແຄບຕ່າງໆເພື່ອຜົກຈອບເອົາຊາວຄົວທີ່ແຕກຕື່ນປົບໜີ. ໃນຄາວນີ້ຫົວເສິກເຕັມໄປໝົດທຸກບ່ອນປະຊາຊົນບໍ່ຮູ້ປົບໜີໄປທາງໃດ, ຢູ່ແຫ່ງໃດກໍເຫັນແຕ່ທະຫານໄທລາດຕະເວນຢູ່. ທະຫານໄທຈຶ່ງເກັບກວາດເອົາເຄື່ອງຂອງ, ຊ້າງ ແລະຄວາຍພ້ອມກັບຊາວຄົວລາວໄດ້ເປັນຈຳນວນຫຼວງຫຼາຍ; ຍັງບໍ່ຖືກກວາດຕ້ອນແຕ່ພະຍາເມືອງເພາະໜີໄປກ່ອນ.

ຈາກນັ້ນ ໄທກໍປຸກແປງຄ້າຍເພື່ອໂຮມເອົາຊາວຄົວມາໄວ້ໃນບ່ອນດຽວກັນ. ຍັງເຫຼືອແຕ່ຊາວຄົວລາວຈຳນວນໜຶ່ງທີ່ໜີໄປອາໄສໄພເພິ່ງເຈົ້າເມືອງວັງ, ເພາະພວກໄທຢ້ານອຳນາດຂອງເຈົ້າເມືອງວັງຈຶ່ງບໍ່ກ້ານຳໄປກວາດເອົາຊາວຄົວດັ່ງກ່າວ. ນອກຈາກນັ້ນແລ້ວ ຊາວຄົວລາວທັງຫຼາຍນັບແຕ່ເຂດເມືອງຊຸມພອນ, ເມືອງພະລານ ແລະເມືອງພ້ອງແມ່ນຖືກໄທກວາດຕ້ອນເອົາມາໄດ້ທັງໝົດ.ປະເມືອງດັ່ງກາວກາຍເປັນເມືອງຮ້າງ. ເມື່ອພວກເຂົາເກັບເອົາຊາວຄົວລາວ ແລະເຄື່ອງຂອງໄດ້ຫຼາຍແລ້ວກໍນຳຂ້າມຂອງສົ່ງເມືອ, ປະແຕ່ພົນທະຫານໄວ້ເພື່ອປ້ອງກັນແລ້ວພວກເຂົາຍັງເວົ້າວາຈະຕີກວາດຂຶ້ນເມືອເມືອງຕະໂປນ(ເມືອງເຊໂປນ)ພຸ້ນອີກ.

**52. ກອງທັບຫວຽດນາມມາຊ່ວຍເມືອງຊຸມພອນ**

ໃນເວລາທີ່ໄທຕີເມືອງຊົມພອນໃກ້ຈະແຕກ, ເຈົ້າເມືອງຊຸມພອນກໍ່ໄດ້ນຳພາຄອບຄົວໜີໄປລີ້ຢູ່ເມືອງພະລອງ.ຈາກນັ້ນ ພະອົງກໍແຕ່ງເຄື່ອງບັນນາການຂຶ້ນຂໍເອົາກຳລັງແກວມາຊ່ວຍ. ເມື່ອໄດ້ຮັບຄຳຮ້ອງຂໍຈາກເຈົ້າເມືອງຊຸມພອນແລ້ວ, ອົງແຈັງ ແລະອົງຍີ່ກໍນຳກຳລັງພົນຂອງແກວລົງມາຈຳນວນແປດພັນປາຍຄົນ. ເມື່ອມາເຖິງເມືອງຊຸມພອນ, ທະຫານແກວກໍ່ໄລ່ຕີທະຫານໄທໂດຍທັນທີໃນທຸກແຫ່ງ. ທະຫານໄທສູ້ທະຫານແກວບໍ່ໄດ້ຈຶ່ງພາກັນແຕກກະຈັດກະຈາຍປົບໜີ, ພາກັນລົງເຮືອຂ້າມຂອງໄປ. ຖ້າບໍ່ມີແມ່ນ້ຳຂວາງຂັ້ນ, ທະຫານໄທອາດຖືກທະຫານແກວດັບສູນໝົດກ້ຽງ. ເມື່ອທະຫານໄທຂ້າມຂອງໝົດໝົດແລ້ວ,ທະຫານແກວກໍ່ກັບເມືອ. ປະກຳລັງໄວ້ຈຳນວນໜຶ່ງໄປຕັ້ງຄ້າຍຢູ່ທີ່ສະຄຽງ ແລະເຊທ່າມວກເພື່ອຕິດຕາມເບິ່ງສະພາບການຂອງໄທ, ຢ້ານທະຫານໄທຫຼອນມາຕີຕາມຫຼັງ, ຄ້າຍດັ່ງກ່າວແມ່ນໃຕ້ການບັນຊາຂອງອົງຍີ່.

ເມື່ອຕັ້ງຄ້າຍແລ້ວ, ແກວກໍນໍາເອົາຊາວຄົວລາວທີ່ຍັງເຫຼືອຢູ່ນັ້ນມາເຝົ້າເວນຍາມໃຫ້ພວກເຂົາ, ຊາວຄົວລາວທີ່ມາເຝົ້າຍາມໃຫ້ແກວແມ່ນຖືກຕົກໃນສະພາບອຶດຢາກເຂົ້ານໍ້າແສນສາຫັດເພາະວຽກບໍ່ໄດ້ເຮັດນາບໍ່ໄດ້ທໍາ, ພວກເຂົາຈຶ່ງພາກັນປົບໜີໄປລີ້ຢູ່ຕາມພູຜາປ່າດົງ. ພວກຊາວຄົວທີ່ບໍ່ໜີກໍຜັດປ່ຽນກັນໄປເຝົ້າຄ້າຍໃຫ້ແກວຢູ່ວັນ.

**53. ທັບໄທຕ່າວໂຈມຕີຫວຽດ**

ຕໍ່ມາເຈົ້າບຸນຈັນ, ເຈົ້າຄອງເມືອງເຫມະລາດກໍ່ໄດ້ຈັດກໍາລັງຂອງເມືອງບັງມຸກ, ເມືອງອຸບົນ, ເມືອງສີສະເກດ (ໄທປັດຈຸບັນ) ແລະຫົວເມືອງໝັ້ນ, ຄໍາທອງ (ລາວປັດຈຸບັນ) ໄດ້ຈໍານວນແປດພັນຫ້າຮ້ອຍຄົນກຽມເຄື່ອງຂອງພາຫະນະເພື່ອສູ້ກັບແກວ, ເມື່ອເຈົ້າບຸນຈັນເຕົ້າໂຮມກໍາລັງຄົບຖ້ວນແລ້ວກໍ່ນໍາກໍາລັງຂ້າມຂອງມາຕັ້ງຄ້າຍຢູ່ທີ່ກຸດລີມຍອງ, ຊາວຄົວລາວເຂດນັ້ນກໍພາກັນປົບແລ່ນໜີໄປລີ້ຊ້ອນຢູ່ປ່າດົງທັງໝົດ.

ຂ່າວທະຫານໄທນໍາກໍາລັງກັບຄືນມາຕັ້ງຄ້າຍຢູ່ຝັ່ງລາວທີ່ກຸດລີມຍອງໄດ້ໄປຮອດຫູຂອງອົງກວານແກວ, ແກວຈຶ່ງນໍາຂ່າວນີ້ເມືອລາຍງານອົງຫຼວງວ່າ: ໄທນໍາກໍາລັງມາຕັ້ງຄ້າຍຢູ່ເມືອງພະລານ ແລະເມືອງພ້ອງແລ້ວວ່າຈະນໍາກໍາລັງຂຶ້ນມາຕີຕັ້ງແຕ່ເມືອງລະນອງ, ເມືອງພິນ, ເມືອງເຊໂປນຈົນເຖິງເຂດພູຊຸນ, ເມື່ອອົງຫຼວງໄດ້ຊາບຂ່າວດັ່ງກ່າວນີ້ແລ້ວກໍ່ນໍາກໍາລັງລົງມາເຖິງເມືອງເຊໂປນ ແລະ ຄ່ຽນຄົນລົງມາເຖິງທີ່ຄ້າຍສະຄຽນ ແລະເຊທ່າມອກ. ຈາກນັ້ນ ແກວກໍໃຊ້ທະຫານໄປສືບຂາວເບິ່ງກໍເຫັນວ່າທະຫານໄທມາຕັ້ງຄ້າຍຢູ່ເຂດກຸດລີມຍອງແທ້, ເຂົາກໍ່ກັບມາລາຍງານຕໍ່ອົງຫຼວງວ່າເຫດການດັ່ງກ່າວແມ່ນມີແທ້. ຕໍ່ມາເຈົ້າບຸນຈັນກໍ່ແຕ່ງທະຫານໄປສືບເບິ່ງທະຫານແກວ, ກໍ່ເຫັນວ່າແກວເອົາກໍາລັງມາເຕັມຄ້າຍເຊທ່າມອກ ແລະພວມສົ່ງກໍາລັງມາຕື່ມຢູ່ບໍ່ຂາດ.

ເຈົ້າບຸນຈັນຮູ້ສະພາບຄັບຂັນດັ່ງກ່າວ ຈຶ່ງຕົວະເຈົ້າວິເສດສັກດາວ່າຈະກັບຄືນເມືອໂຮມກໍາລັງມາຕື່ມເພາະກໍາລັງໄທມີໜ້ອຍກວ່າກໍາລັງແກວ, ເຈົ້າວິເສດສັກດາເຫັນດີໃຫ້ເຈົ້າບຸນຈັນກັບເມືອ, ແຕ່ບອກວ່າຕ້ອງກັບຄືນມາໂດຍໄວເພາະສະພາບການເຄັ່ງຮ້ອນ, ສ່ວນເຈົ້າວິເສດສັກດາເອງຈະສູ້ກັບແກວລໍຖ້າ ແລະເພື່ອຢາກລອງຄວາມເກັ່ງກ້າຂອງແກວເພື່ອເປັນບົດຮຽນໃນພາຍໜ້າ. ເມື່ອໄດ້ຄວາມເຫັນດີຈາກເຈົ້າວິເສດສັກດາແລ້ວ, ເຈົ້າບຸນຈັນແຫ່ງເມືອງເຫມະລາດກໍ່ກັບເມືອເພື່ອຫຼີກສົງຄາມ. ຖ້າວ່າທະຫານໄທຫາກຊະນະແກວແມ່ນເຈົ້າບຸນຈັນຈະກັບມາ. ຖ້າທະຫານໄທຫາກປະລາໄຊໃຫ້ແກວເຈົ້າບຸນຈັນຈະບໍ່ກັບມາເປັນເດັດຂາດ.

**54. ທັບຫວຽດຕີທັບພະຍາວິເສດແຕກແລະແກວຈັບພະຍາວິເສດໄດ້**

ເມື່ອເກັບກໍາຂໍ້ມູນກ່ຽວກັບສະພາບຂອງກອງທະຫານໄທໄດ້ດີແລ້ວ, ອົງກວານແກວກໍ່ແຕ່ງຕັ້ງໃຫ້ອົງຍີ່ນໍາກໍາລັງອອກໄປກ່ອນເພື່ອສູ້ຮົບກັບທະຫານໄທ ແລະອົງກວານແກວໄດ້ສັ່ງເດັດຂາດຕໍ່ອົງຍີ່ວ່າຖ້າບໍ່ຊະນະທະຫານໄທກັບຄືນມາຈະຖືກຕັດຄໍໝົດທຸກຄົນ. ເມື່ອໄດ້ຮັບຄໍາສັ່ງຈາກອົງກວານແກວນັ້ນແລ້ວ, ອົງຍີ່ກໍນໍາກໍາລັງທະຫານ ແລະຊ້າງບຸກເຂົ້າຄາຍກຸດລີມຍອງຂອງໄທຢ່າງແຂງແຮງ. ທັງສອງຝ່າຍຍິງປືນເຂົ້າໃສ່ກັນປານຫາຝົນ, ຜົນສຸດທ້າຍທະຫານໄທຖືກເຈັບຫຼາຍ ແລະພາກັນແຕກກະແຈກກະຈາຍລົງເຮືອ ແລະ ໂຕນນໍ້າຂອງກັບຄືນ. ພວກທີ່ລົງເຮືອບໍ່ທັນກໍ່ແຕກສະລຸຜຸພາຍເຂົ້າໄປຊ່ອນຕາມປ່າດົງ. ສ່ວນເຈົ້າວິເສດສັກດາແມ່ທັບໃຫຍ່ຂອງໄທກໍຖືກແກວຈັບໄດ້.ທະຫານແກວໄດ້ເກັບກວາດເອົາເຄື່ອງຂອງ, ເງິນ, ຄໍາ ແລະເຄື່ອງສິນເສີກຕ່າງໆໄດ້ເປັນຈໍານວນຫຼວງຫຼາຍ, ຈາກນັ້ນແກວກໍ່ນໍາກໍາລັງຖອຍທັບກັບຄືນຜ່ານໄປທາງເມືອງພິນ, ເມືອງລະນອງ ເມືອງເຊໂປນເຂົ້າໃສ່ເມືອງຮ່າຕິງ, ຕາມທາງກັບຄືນນີ້, ທະຫານແກວໄດ້ເຈັບປ່ວຍໄຂ້ ແລະຕາຍໄປເປັນຈໍານວນຫຼວງຫຼາຍ. ເມື່ອເຂົ້າໄປຮອດເມືອງຮ່າຕິງແລ້ວ, ໂດຍຍີ່ກໍ່ເຂົ້າເມືອລາຍງານອົງສາມກວານ, ເຂົາກໍ່ນໍາເອົາເຈົ້າວິເສດສັກດາເມືອທູນແກ່ເຈົ້າຫໍຄໍາ(ເຈົ້າຊີວິດແກວ). ເຈົ້າຫໍຄໍາຈຶ່ງຍ້ອງຍໍຊົມເຊີຍຕໍ່ໂດຍຍີ່ຜູ້ອາສາຄໍ້າຊ່ວຍລາວ ແລະໃຫ້ຂອງຂວັນເປັນເງິນ, ຄໍາ ແລະຂອງອື່ນໆເປັນຈໍານວນຫຼວງຫຼາຍ ແລະແຕ່ງໃຫ້ໂດຍຍີ່ກັບຄືນມາຕັ້ງຄ້າຍເພື່ອປ້ອງກັນ ແລະປົກປັກຮັກສາເມືອງຊຸມພອນ.

**55. ໂດຍຍີ່ນາຍກອງຫວຽດຮັກສາເມືອງຊຸມພອນ**

ເມື່ອໄດ້ຮັບການແຕ່ງຕັ້ງແລ້ວ, ໂດຍຍີ່ກໍທູນລາຈາກເຈົ້າຫໍຄໍາເພື່ອກັບມາຕັ້ງທັບຢູ່ເມືອງຊຸມພອນໂດຍບໍ່ຢ້ານກົວຕໍ່ຝ່າຍໄທແຕ່ຢ່າງໃດ. ມາເຖິງເມືອງຊຸມພອນໂດຍຍີ່ກໍ່ກະເກນເອົາປະຊາຊົນຕາມເມືອງໃກ້ຄຽງມາກໍ່ສ້າງຄ້າຍຄູເພື່ອກຽມຕ້ານກັບໄທ. ໃນຄັ້ງນີ້ປະຊາຊົນທີ່ຖືກກະເກນມາຕ້ອງໄດ້ເຮັດວຽກຢ່າງໜັກ ແລະທົນທຸກທໍລະມານ, ປະຊາຊົນລາວຢູ່ຂົງເຂດນັ້ນຕົກທຸກໄດ້ຍາກຍ້ອນການມາເຝົ້າເວນຍາມ, ວຽກບໍ່ໄດ້ເຮັດນາບໍ່ໄດ້ທໍາອຶດຫິວເຂົ້ານໍ້າ. ນອກນັ້ນ ຍັງຖືກເກັບເກນເອົາເງິນ, ຄໍາ, ນໍ, ງາ ແລະເຜີ້ງມາສ່ວຍໃຫ້ແກວເປັນປະຈໍາ. ເມື່ອເກັບສ່ວຍໄດ້ແລ້ວກໍ່ນໍາເມືອສົ່ງຮອດເມືອງແກວ.ທົນບໍ່ໄຫວຕໍ່ການກະທໍາດັ່ງກ່າວຂອງແກວ, ຊາວຄົວລາວຈໍານວນບໍ່ໜ້ອຍແມ່ນໄດ້ພາກັນຂ້າມຂອງໄປເພິ່ງໄທ ແລະຫຼົບໜີຈາກແກວ. ຖ້າວ່າແກວຍັງປົກຄອງຢູ່ແນວນີ້ບໍ່ອາດເປັນບ້ານເປັນເມືອງໄດ້. ຊາວຄົວລາວໜີໄປເພິ່ງໄທແນວນັ້ນແກວກໍບໍ່ຮ້ອນບໍ່ເດືອງຫຍັງຈັກຢ່າງເພາະໃນຄວາມຈິງແລ້ວແກວກໍ່ນໍາຄົວລາວຢູ່ຝັ່ງນີ້ລັກສົ່ງໄປໃຫ້ໄທຢູ່ແລ້ວ ເພາະເຂົາ(ແກວ)ລໍາຄານທີ່ຈະຕ້ອງທຽວໄປທຽວມາ ເພື່ອປ້ອງກັນຊາວຄົວລາວເຫຼົ່ານີ້.

( "ບັດນີ້ ບໍລິບອນແລ້ວ ພື້ນເມືອງວັງຮ້າງຄວ່າງ, ສາວເຮີຍ")

### 56. ປີ້ນແຖມສຸດທ້າຍ

ບັນນີ້ເວົ້າເຖິງຄວາມເຈັບຊໍ້າໃນໃຈຂອງຄົນລາວທີ່ຖືກເສິກຮ້າຍໄລ່ຟັນໄທຂັບໄລ່ຕ້ອນ, ເສຍບ້ານເສຍເມືອງບໍ່ມີບ່ອນເພິ່ງພາອາໄສຄືບົວລອຍຢູ່ກາງນໍ້າແກ່ງ, ມີແຕ່ເມືອງນິລະພານເມືອງສະຫວັນເທົ່ານັ້ນທີ່ອະມະຕະ. ຖ້າຄົນເຮົາຫາກຍັງຊີວິດຢູ່ຍອມມີໂພຍໄພບຽດບຽນ.

ນອກນັ້ນ, ບົ້ນນີ້ຍັງໄດ້ແຖມທ້າຍດ້ວຍຄວາມອາໄລອາວອນຂອງບັນດາເທວີເຈົ້າອະນຸຮ້ອງໄຫ້ຈົມຫາພະອົງໃນເວລາທີ່ພະອົງສິ້ນພະຊົນອີກດ້ວຍ.

### 57. ຫວຽດຈັບເຈົ້ານ້ອຍເມືອງພວນໄປຂ້າ

ເມື່ອອົງສາມກວານແກວຮູ້ຂ່າວວ່າເຈົ້າອະນຸຖືກໄທຈັບຍ້ອນເຈົ້ານ້ອຍເມືອງພວນເປັນຜູ້ຈັບພະອົງມອບໃຫ້ແກ່ໄທ, ແກວຈຶ່ງເອົາກໍາລັງມາເມືອງພວນຈັບເອົາເຈົ້ານ້ອຍເມືອງພວນເມືອເມືອງແກວໃສ່ຊົກສາມປະການ ແລະເອົາຄາເຫຼັກໃສ່ຄໍຍັງໄວ້. ແລ້ວເຂົາປາດຊີ້ນເຖືອໜັງຂອງເຈົ້ານ້ອຍອອກຈົນໝົດ, ເຈົ້ານ້ອຍກໍ່ສິ້ນຊີວິດໄປ, ເມື່ອເຈົ້າເມືອງພວນຕາຍແລ້ວ, ແກວກໍທວງຖາມເອົາເຄື່ອງຂອງໆເຈົ້າອະນຸທີ່ປະໄວ້ຈົນໝົດ. ແກວຂ້າເຈົ້າເມືອງພວນນັ້ນ ເນື່ອງຈາກວ່າແກວຢາກໄດ້ເຄື່ອງຂອງໆເຈົ້າອະນຸທີ່ຂົນມາຈາກເມືອງວຽງຈັນມາໄວ້ເມືອງພວນເປັນຈໍານວນຫຼວງຫຼາຍນັ້ນເອງ. ແກວຈຶ່ງຫາເລື່ອງວ່າເຈົ້ານ້ອຍເມືອງພວນຈັບເຈົ້າອະນຸມອບໃຫ້ໄທ. ແຕ່ໃນຄວາມເປັນຈິງແລ້ວ, ຫາກແມ່ນແກວເອງນໍາເຈົ້າອະນຸມາຈາກເມືອງແກວໄປສົ່ງໃຫ້ໄທ. ດັ່ງນັ້ນ, ຄໍາສຸພາສິດບູຮານຈຶ່ງເວົ້າວ່າ: "ຟັງຄວາມແກວເສຍແນວເຂົ້າປູກ; ໝາກັບແມວແກວກັບລາວ".

ບໍ່ມີຍາມໃດແກວຈະມາຕົບແຕ່ງສ້າງແປງບ້ານເມືອງລາວ, ມີແຕ່ມາມ້າງເພເມືອງລາວຫຼາຍຄັ້ງຫຼາຍຫົນເຂົານັ້ນເປັນຄົນທີ່ບໍ່ເຊື່ອຖືສາສະໜາ, ເຂົາເອົາຮອດຮູບພະພຸດທະເຈົ້າ (ພະພຸດທະຮູບ) ໄປຊື້ຈ່າຍຂາຍກິນ. ເຂົາຖືພາສາສັດບໍ່ຢໍາເກງພຸດໂທເຈົ້າ, ພະພຸດທະເຈົ້າເປັນຜູ້ໂຜດເຂົາມາເກີດແຕ່ເຂົາກໍ່ປະໝາດຢາດຖຸນ. ແມ່ນແຕ່ເມືອງລະຄອນແລະເມືອງມະຫາໄຊທີ່ອາໄສຕໍ່ແກວແກວກໍຍັງບີບບັງຄັບໃຫ້ລາສະດອນເມືອງດັ່ງກ່າວສ້າງເຮືອໃຫ້ວ່າຈະໄປເລວກັບໄທ, ຕັ້ງທີ່ແທ້ແມ່ນຄໍາຫຼອກລວງເທົ່ານັ້ນ. ຈາກນັ້ນ ແກວກໍໃຫ້ຊາວລາວຈັດເອົາເງິນຮາງ, ນໍ ແລະເຜີ້ງມາໃຫ້ພວກເຂົາທຽວໄປມາບໍ່ຂາດເພື່ອຕົວະລາວໃຫ້ເຊື່ອໃຈ. ຕັ້ງທີ່ແທ້ແມ່ນມາສືບເອົາສະພາບຈະເປັນແນວໃດເຂົາກໍຈະຮູ້ກ່ອນ. ຖ້າວ່າຊາວລາວຄົນໃດຫາກຕັດຜົມເໝືອນຊົງຂອງໄທເຂົາກໍຈັບເອົາມາຕີ, ເຂົາວ່າຜິດຕໍ່ເຈົ້າຟ້າ. ຈາກນັ້ນ ກໍປັບໄໝກິນໝູ ແລະອື່ນໆ.

ຖ້າວ່າແກວກັບຄືນມື້ໃດໄທກໍ່ຂ້າມມາຫຼອນຫຼອກ. ເຂົາວ່າເສິກໄທຂ້າມຂອງມາແລ້ວ, ນາຍດ່ານກໍຟ້າວຄືນຂຶ້ນເມືອເອົາແກວລົງມາໄລ່, ເວລາຂຶ້ນເມືອລາຍງານໃຫ້ອົງສາມກວານຮູ້ຂ່າວກໍ່ໄດ້ນຳເອົາເຄື່ອງບັນນາການເປັນນໍ ແລະເຜີ້ງເຂົ້າໄປຖວາຍກອນ. ຈາກນັ້ນ ອົງສາມກວານຈຶ່ງຈັດກຳລັງລົງມາໄລ່.

### 58. ພະຍາລາຊະສຸລິນຂຶ້ນຕີເມືອງພວນແລະກວາດຊາວຄົວພວນລົງໄທ

ບັນນີ້ກ່າວເຖິງພະຍາລາຊະສຸລິນນຳກຳລັງຂຶ້ນເມືອຕີເມືອງພວນ, ໄປປາບທຸກເມືອງຕັ້ງແຕ່ຊຽງຂວາງຈົນຮອດຊຽງຄຳ (ເມືອງຄຳ) ແລະກວາດເອົາຊາວຄົວພວນພ້ອມດ້ວຍເຊື້ອພະຍາທຸກແຫ່ງເລີ່ມແຕ່ຊຽງໝີ, ຊຽງແມນ, ເມືອງເຄິງ, ຊຽງດີບໍ່ຫຼອດບໍ່ຫຼໍ່ຈັກບ່ອນນັບເປັນໝື່ນຄົວທັງຄົວພວນ ແລະ ຄົວຂ່າ. ເມື່ອເຕົ້າໂຮມໄດ້ແລ້ວກໍ່ກວາດລົງໄປ. ຕາມເສັ້ນທາງຍິນແຕ່ສຽງຮ້ອງໄຫ້ຈົ່ມທຸກເພາະຄິດເຖິງບ້ານເກົ່າເມືອງຫຼັງ, ບໍ່ຮູ້ວ່າຈັກໄປຢູ່ຄ້າງແຫ່ງຫົນໃດ ແລະກໍ່ບໍ່ຮູ້ວ່າດິນແດນໄທນັ້ນຢູ່ໄກປານໃດ. ຍ້ອນສະພາບການເດີນທາງແສນຫຍຸ້ງຍາກລຳບາກຜ່ານຫຼາຍທ້ອງຖິ່ນດົນນາ, ຜ່ານຫຼາຍເຂດແຄວ້ນແດນດິນ, ບ່ອນຫຼຸບບ່ອນໂນນ, ບ່ອນສູງບ່ອນຕ່ຳ, ເປັນຫ້ວຍນ້ຳ ແລະພູສູງ, ຜ່ານລະດູຮ້ອນ, ລະດູໜາວ ແລະອື່ນໆ. ຄວາມລຳບາກຍາກແຄ້ນດັ່ງກ່າວຍິ່ງພາໃຫ້ຊາວຄົວພວນຄິດເຖິງບ້ານເກົ່າເມືອງຫຼັງ ຂອງເຂົາເຈົ້າ, ບາງຄົນຄິດໂສສຸດຢາກກິນງ້ວນໃຫ້ຕາຍໃຫ້ມັນແລ້ວກຳແລ້ວເວນສາ, ແຕ່ເມື່ອຄິດແລ້ວພັດຍ້ານເປັນບາບກຳ. ເຂົາເຈົ້າພັດພາກຈາກກັນໄປຄົນລະທິດລະທາງ, ຜົວພັດເມຍ, ລູກພັດພໍ່ພັດແມ່. ໄດ້ແຕ່ພາກັນຮ້ອງໄຫ້ຮ່ຳໄຮຕະຫລອດເສັ້ນທາງ.

ການເດີນທາງຫຼາຍມື້ຫຼາຍເດືອນ ຈຶ່ງໄປເຖິງເຂດພະຍາດົງ(ດົງພະຍາໄຟ) ທີ່ເປັນດິນແດນຂອງໄທ ແລະໄດ້ພັກຢູ່ທີ່ນັ້ນຫຼາຍຄືນ ແລ້ວຈິ່ງເດີນທາງຕໍ່ໄປຫຼາຍວັນຫຼາຍຄືນ ຈຶ່ງເຖິງເມືອງບາງກອກເຊິ່ງເປັນເມືອງຫຼວງຂອງໄທ.

### 59. ພະຍາເມືອງມະຫາໄຊ(ອົງຕິຈຸນລະນີ)ຕາຍໃນປ່າ

ບັນນີ້ເວົ້າເຖິງເລື່ອງເມືອງມະຫາໄຊຄືນອີກເພາະວ່າເສິກໄດ້ທຳການຮຸກຮານຢູ່ບໍ່ຂາດຈັກເທື່ອ, ສ່ວນເຈົ້າອົງຕິຈຸນລະນີເຈົ້າຄອງເມືອງມະຫາໄຊທີ່ພາຄອບຄົວໄປລີ້ຊ່ອນຢູ່ໃນປ່າຫຼາຍເດືອນຫຼາຍປີກໍ່ອຶດຢາກເລີຍພາຄອບຄົວຍ້າຍອອກມາຢູ່ເມືອງກະປອງ, ຊາວເມືອງຈຶ່ງພາກັນລ້ຽງດູເບິ່ງແຍງພະອົງຢູ່ຕະຫຼອດ. ເຈົ້າກໍແຕ່ງຕັ້ງໃຫ້ບ່າວໄພ່ຕິດຕາມເບິ່ງສະພາບເສິກສົງຄາມເປັນປະຈຳ ແລະແຕ່ງໃຫ້ເຂົາເວນຍາມທຸກເຊົ້າຄ່ຳວັນຄືນຢູ່ຕາມຖານເປັນປະຈຳ. ຍ້ອນຄວາມທຸກທໍລະມານທາງດ້ານຮ່າງກາຍຈິດໃຈ ແລະການຢູ່ກິນຂາດເຂີນເຈົ້າອົງຕິຈຶ່ງໄດ້ສິ້ນພະຊົນຢູ່ໃນປ່າຂອງຂົງເຂດເມືອງກະປອງ. ເມື່ອພະອົງສິ້ນພະຊົນໄປແລ້ວ ຝູງເທວີພ້ອມດ້ວຍເຊື້ອສາຍວົງຕະກຸນກໍ່ພາກັນຮ້ອງໄຫ້ຮ່ຳໄຮຈົ່ມທຸກຈົ່ມຍາກວ່າຫາກພະອົງສິ້ນພະຊົນໃນຄາວຍັງຢູ່ເມືອງມະຫາໄຊນັ້ນ, ສົບຂອງພະອົງຄົງຈະຖືກຈັດຂຶ້ນໃສ່ເມມຢ່າງຄັກແນ່, ພະເມມກໍ່ຈະຖືກປະດັບເອ້ໃຫ້ງົດງາມ ແລະສົມກຽດ, ແຕ່ມາຕາຍຢູ່ກາງປ່າກາງດົງແນວນີ້ສົບກໍ່ບໍ່ໄດ້ໃສ່ເມມ, ກິນທານກໍບໍ່ໄດ້ເຮັດພຽງແຕ່ໄດ້ຈູດ ແລະເກັບໂຮມດູກໄວ້ເທົ່ານັ້ນ, ເມື່ອສິ່ງສະການເຈົ້າອົງຕິຈຸນລະນີສຳເລັດແລ້ວກໍພາກັນແຍກຍ້າຍໄປລີ້ຢູ່ພໍໃຜພໍລາວ.

### 60. ເຈົ້າອຸປະຮາດຕິ(ເມືອງມະຫາໄຊ)ອອກໄປຍອມໄທ

ພາຍຫຼັງເຈົ້າຈຸນລະນີສະຫວັນນະຄົດແລ້ວ ເຈົ້າອຸປະຮາດຕິກໍພາຄອບຄົວອອກມາຕັ້ງຈຸດຢູ່ແຄມນາຂອງຕົນ. ພະອົງຄິດຫຼາຍສິ່ງຫຼາຍປະການແນວໃດກໍ່ເອົາຕົວໄປບໍ່ລອດຈຶ່ງໄດ້ຂຽນສານໄປຫາເຈົ້ານະຄອນເພື່ອຂໍຄວາມກະລຸນາ. ເມື່ອໄດ້ຮັບສານຈາກເຈົ້າອຸປະຮາດຕິແລ້ວ, ເຈົ້າວັງໜ້າສົງທອນກໍ່ຮັບຄວາມເຈົ້າອຸປະຮາດຕິໂດຍທັນທີ, ເພາະເຂົາລໍຖ້າສະພາບການນີ້ມາແຕ່ດົນນານແລ້ວ. ພ້ອມກັນນັ້ນເຈົ້າວັງໜ້າສົງທອນກໍ່ສັ່ງໃຫ້ເຮືອ ແລະຄົນຂ້າມມາຢູ່ເມືອງກະປອງເພື່ອມາຮັບເອົາເຈົ້າອຸປະຮາດຕິໂດຍທັນທີ.

ເມື່ອກຳລັງຂອງເຈົ້າວັງໜ້າສິງທອນໄປເຖິງເມືອງກະປອງແລ້ວ, ເຈົ້າອຸປະຣາດຕິກໍ່ໄດ້ພາຊາວຄົວອອກມາ, ເຈົ້າວັງໜ້າເວົ້າຕໍ່ເຈົ້າອຸປະຣາດຕິວ່າ: ໃຫ້ເຈົ້າພາຊາວຄົວໄປສ້າງເມືອງສາກົນນະຄອນ, ເພາະບັນຫານີ້ເຮົາໄດ້ເວົ້າກັບເຈົ້າຢູ່ຫົວ(ເຈົ້າຊີວິດ)ແລ້ວ, ເມື່ອໄດ້ຍິນຄຳເວົ້າຂອງເຈົ້າວັງໜ້າສິງທອນແນວນີ້ເຈົ້າອຸປະຣາດຕິກໍ່ຍິນດີຊົມຊື່ນເປັນຢ່າງຍິ່ງ. ຈາກນັ້ນ ເຈົ້າອຸປະຣາດຕິກໍ່ນຳຄົວລົງໄປເມືອງສາກົນນະຄອນ. ໜອງຫານແຕ່ກ່ອນເປັນເມືອງງາມ, ແຕ່ໃນປັດຈຸບັນແມ່ນຖືກຫຼົ່ມລົງໝົດຍັງແຕ່ດອນແມ່ໝ້າຍ. ນອກນັ້ນ ມີແຕ່ນໍ້າແວດລ້ອມກວ້າງສຸດສາຍຕາ. ແຕ່ກ່ອນເມືອງນີ້ຂຶ້ນກັບເມືອງວຽງຈັນ, ມີເຈົ້າພະນິດເປັນເຈົ້າປົກຄອງເມືອງໃສ່ຊື່ວ່າ "ເມືອງສາກົນຕະນະຄອນ ", ສ້າງຂຶ້ນບໍ່ທັນຮອດປີບ້ານເມືອງຖືກທຳລາຍ. ມາເຖິງປັດຈຸບັນໄທໄດ້ມອບໃຫ້ອຸປະຣາດຕິເປັນເຈົ້າປົກຄອງ ແລະໃຫ້ໄປນຳເອົາໄພ່ຟ້າຂ້າມະຫາດຂອງຕົນມາຢູ່ພ້ອມ, ຍັງເຫຼືອຢູ່ຫົນໃດກໍ່ໃຫ້ໄປນຳເອົາມາໝົດ, ຖ້າວ່າມີໄພ່ຫຼາຍບັນດາຫົວເມືອງຕ່າງໆຈຶ່ງເກງຂາມ. ຈາກນັ້ນ, ໄທກໍ່ຈັດເອົາບັນດາຫົວເມືອງລະຄອນ, ກາລະສິນ ແລະເຫມະລາດມາກໍ່ສ້າງຫໍໂຮງໃຫ້ແກ່ເຈົ້າອຸປະຣາດຕິ, ນີ້ແມ່ນຄຳສັ່ງຂອງເຈົ້າຄຸນໂຍທານາຍໃຫຍ່ຂອງໄທ.

ເມື່ອໄດ້ປົກຄອງໜອງຫານ (ເມືອງສາກົນນະຄອນ)ແລ້ວ, ອຸປະຣາດຕິກໍ່ໄດ້ແຕ່ງໃຫ້ຄົນຂຶ້ນເມື່ອເກັ້ຍກ່ອມເອົາຄົວທີ່ຍັງເຫຼືອຄ້າງຕາມພູຜາປ່າດົງຕ່າງໆຕາມເຂດເມືອງເກົ່າ (ເມືອງມະຫາໄຊ) ໃຫ້ພາກັນອອກມາບໍ່ໃຫ້ຢ້ານກົວຕໍ່ສິ່ງໃດໝົດ. ຖ້າຫາກຍັງດື້ດ້ານລີ້ຊ່ອນຢູ່ຕາມປ່ານັ້ນຈະມີອັນຕະລາຍຫຼາຍຢ່າງ, ການອຶດຫິວຈະພາໃຫ້ຕົນເອງຕາຍ. ຖ້າວ່າເສິກຫາກພົບ ແລະຈັບໄດ້ຕົນເອງກໍ່ຕາຍຄືເກົ່າ, ເພາະໃນປັດຈຸບັນເສິກຍັງມີຢູ່ຕະຫຼອດ. ຖ້າວ່າໄປເພິ່ງແກວກໍ່ຕາຍດັ່ງໄດ້ເຫັນຜ່ານມານັ້ນແລ້ວ, ດີແທ້ແມ່ນພາກັນອອກມາແລ້ວຈະລາຍງານເຈົ້າຢູ່ຫົວອະໄພຍະໂທດໃຫ້. ສ່ວນເຈົ້າຄຸນໂຍທາແມ່ທັບໄທໄດ້ກຽມກຳລັງໄວ້ສາມພັນເພື່ອຈະຍົກທັບໄປຕີຍາດເອົາຄົວຢູ່ເຂດຕ່າງໆຂອງເມືອງມະຫາໄຊ.

ແຕ່ໃນເວລານີ້ ອຸປະຣາດຕິຂໍນຳເຈົ້າຄຸນໂຍທາວ່າ: ໃນປັດຈຸບັນຍັງບໍ່ທັນຕ້ອງການຈະນຳກຳລັງຂຶ້ນເມືອຕີເອົາໃຊ້ຄຳເກັ້ຍກ່ອມເອົາເຂົາອອກມາເສຍກ່ອນ, ຖ້າໃຊ້ກຳລັງເຂົາຈະແຕກໜີ ແລະຈະເສຍຄົວໄປ. ອັນໜຶ່ງທາງໄປຫາເຂົານັ້ນເປັນທາງທີ່ຫຍຸ້ງຍາກເປັນເຫວ, ເປັນຕາດ ແລະຮົກເຮື້ອ, ທະຫານອາດເຈັບເປັນລົ້ມຕາຍຫຼາຍ. ຕໍ່ຄຳຮ້ອງຂໍຂອງອຸປະຣາດຕິເຈົ້າຄຸນໂຍທານາຍໃຫຍ່ຂອງໄທກໍ່ຍິນດີ ແລະເອົາແຕ່ເຈົ້າອຸປະຣາດຈະເກັ້ຍກ່ອມເທິງນານ ຫຼືໄວເທົ່າໃດກໍ່ຕາມໃຈ.

## 61. ເຈົ້າລາຊະວົງຫຼານຊາຍເຈົ້າອຸປະຣາດຕິອົບພະຍົບຂ້າມໄປສາກົນນະຄອນ

ເມື່ອໄດ້ຮັບຄວາມຮັບຮອງຈາກອຸປະຣາດຕິຜູ້ເປັນລຸງ, ເຈົ້າລາຊະວົງກໍ່ໂຮມຄົວຂ້າມຂອງເມືອເມືອງສາກົນນະຄອນໄປເພິ່ງຜູ້ເປັນລຸງ. ເມື່ອເຈົ້າລາຊະວົງເອົາຄົວໄປເຖິງເມືອງສາກົນນະຄອນແລ້ວ, ຜູ້ເປັນລຸງກໍ່ຊົມຊື່ນຍິນດີຕ້ອນຮັບຜູ້ເປັນຫຼານ, ຜູ້ເປັນຫຼານຍັງແຈ້ງຕໍ່ລຸງວ່າຈຳນວນຄົວທີ່ຍັງຄ້າງຢູ່ຕາມພູຜາປ່າດົງນັ້ນ, ເຂົາຮູ້ຂ່າວວ່າ: ຢູ່ພີ້ສະໜຸກສຸກສະບາຍ, ເຂົາກໍ່ຈະກຽມກັນມາຕາມຫຼັງ, ແຕ່ຕ້ອງມາເທື່ອລະໜ້ອຍເພາະສະພາບການຍັງບໍ່ສະຫງົບ. ສ່ວນຜູ້ທີ່ເປັນພີ່ນ້ອງເຊື້ອສາຍເຮົານັ້ນຈະອອກມາໝົດ. ສ່ວນຊາວເມືອງກະປອງແມ່ນພາກັນແຕກເຂົ້າປ່າໝົດ, ປະບ້ານເມືອງເປັນຮ້າງ, ເຫດວ່າເຂົາຢ້ານເສິກໄລ່ນຳຈັບເອົາເພາະເຂົາເຈົ້າເຫັນວ່າເຈົ້າກະຕາກນຳຄົວຂຶ້ນເມືອເພິ່ງເມືອງຊຶນ, ເຂົາກໍ່ຍັງເອົາກຳລັງນຳໄປຈັບເອົາມາຈົນໄດ້. ສ່ວນເຈົ້າຊຽງເໜືອກໍ່ນຳຄົວໄປລີ້ຢູ່ຕາມປ່າຕາມດົງເໝືອນກັນ ແລະບໍ່ຍອມອອກມາເປັນເດັດຂາດ. ເຈົ້າອຸປະຣາດຕິສະເໜີວ່າພວກເຈົ້າຕ້ອງໃຊ້ເວລາເພື່ອເກັ້ຍກ່ອມເຂົາອອກມາໃຫ້ໄດ້. ສ່ວນຄົນທີ່ເກັບກວາດມາໄດ້ແລ້ວນັ້ນໃຫ້ຄຸມເມືອສາກົນນະຄອນໃຫ້ໝົດ.

ຕໍ່ມາອຸປະຣາດຕິໄດ້ແຈ້ງຕໍ່ເຈົ້າຄຸນໂຍທານາຍໃຫຍ່ຂອງໄທວ່າບໍ່ອາດຈະເກັບກວາດເອົາຄົວລີງມາໄດ້ໝົດ, ໄດ້ສໍ່າໃດກໍ່ເອົາລີງມາສໍ່ານັ້ນ, ເຈົ້າຄຸນໂຍທາກໍ່ຊົມຊື່ນຍິນດີ ແລະເວົ້າຕໍ່ອຸປະຣາດຕິວ່າ: ກ່ຽວກັບຊາວຄົວພວກນັ້ນ, ຖ້າເຂົາຢາກຂ້າມຂອງມາຢູ່ພີ້ກໍຕາມໃຈເຂົາ. ຖ້າເຂົາບໍ່ຢາກມາກໍ່ປະໃຫ້ເຈົ້າຢູ່ບ້ານເກົ່າເມືອງຫຼັງຂອງເຂົາ, ພຽງແຕ່ໃຫ້ເຂົາເຕົ້າໂຮມໝາກແໜ່ງ, ເຜີ້ງ, ນໍ ແລະງາໄວ້ເພື່ອເອົາໄປເປັນເຄື່ອງບັນນາການໃຫ້ແກ່ເຈົ້າຢູ່ຫົວ ຫຼື ໃຊ້ເປັນສິນຄ້າກໍ່ຍັງໄດ້. ເຈົ້າອຸປະຣາດຕິກໍ່ເຫັນຕາມຄໍາເຫັນຂອງເຈົ້າຄຸນໂຍທາ. ເພາະຝັ່ງນັ້ນກັບຝັ່ງນີ້ກໍ່ຢູ່ໃກ້ກັນ, ທ່ຽວໄປມາຫາກັນກໍ່ໄດ້. ອີກຢ່າງໜຶ່ງກໍ່ຕັ້ງເປັນດ່ານໄວ້. ຈາກນັ້ນ, ເຈົ້າອຸປະຣາດຕິກໍ່ສັນຍາວ່າຈະໄປຈັດແຈງເມືອງເຫຼົ່ານັ້ນໃຫ້ເປັນບ້ານເປັນເມືອງຕໍ່ໄປ ແລະໃຫ້ເຂົາມາຂຶ້ນກັບເຮົາ.

### 62. ເຈົ້າອຸປະຣາດຕິ (ຈຸນລະນີ)ສະຫວັນນະຄົດ

ຫຼັງຈາກອອກມາຍອມຕໍ່ໄທແລ້ວ, ເຈົ້າອຸປະຣາດຕິກໍ່ຖືກແຕ່ງຕັ້ງໃຫ້ເປັນເຈົ້າປົກຄອງເມືອງສາກົນນະຄອນບໍ່ດົນປານໃດກໍ່ເລີຍເກີດເປັນອໍາມະພາດໜັກໜໍ່ຢາທັງໄທ ແລະລາວປິ່ນປົວປານໃດກໍ່ບໍ່ດີ, ສຸດທ້າຍກໍເຖິງແກ່ມໍລະນະກໍາໄປເຮັດໃຫ້ຍາດຕິພີ່ນ້ອງພ້ອມດ້ວຍລູກເມຍຮ້ອງໄຫ້ອາໄລຫາເປັນອັນມາກ.

ຫຼັງຈາກເຈົ້າຈຸນລະນີໄດ້ສະຫວັນນະຄົດໄປແລ້ວ, ເຂົາກໍໃຊ້ຂ້າມະຫາດໄປປ່າວຍາວໃຫ້ບັນດາຫົວເມືອງຕ່າງໆໃນຂົງເຂດນັ້ນມາກິນທານນໍາ ແລະເສບງັນພະອົງເຈົ້າເປັນຈໍານວນຫຼວງຫຼາຍ. ຈາກນັ້ນ ເຂົາກໍ່ໂຈມຊາກເຈົ້າຍໍຂຶ້ນໃສ່ໂລງ, ທໍາພະເມນປະດັບເອ້ຍ້ອງຕົບແຕ່ງລວດລາຍຢ່າງສວຍສົດງົດງາມມີຮູບດອກໄມ້, ຮູບເທວະດາ ແລະນາງກິນນາລີຟ້ອນຢ່າງງົດງາມຕະການຕາ, ສ່ວນເຈົ້າຄຸນໂຍທາທີ່ເປັນນາຍໃຫຍ່ຂອງໄທຢູ່ໃນຂົງເຂດນີ້ ກໍ່ນໍາຂ່າວການມໍລະນະກໍາຂອງເຈົ້າຈຸນລະນີລາຍງານຕໍ່ເຈົ້າໜ່ອມກຸງສີ, ພະອົງຈຶ່ງບໍລິຈາກວັດຖຸເຄື່ອງຂອງຈໍານວນໜຶ່ງເພື່ອເປັນເຄື່ອງກິນທານໃນການຫຼີນມ່ວນຄົບງັນສົບຂອງເຈົ້າຈຸນລະນະນີໃນຄັ້ງນີ້.

ເມື່ອພະສົງໃຫ້ບຸນແລ້ວ, ເຂົາກໍແກ່ໂກດເຈົ້ານໍາໄປຈູດຫຼັງຈາກເກັບດູກແລ້ວກໍພາກັນເລີກລາເມືອຖິ່ນໃຜຖິ່ນລາວ. ຈາກນັ້ນ, ໄທກໍແຕ່ງຕັ້ງຫຼານຊາຍຂອງເຈົ້າຈຸນລະນີຂຶ້ນສະເຫວີຍເມືອງແທນພ້ອມທັງມອບໜ້າທີ່ໃຫ້ໄປເກ້ຍກ່ອມຊາວເມືອງກະປອງອອກມາ. ຖ້າວ່າເຂົາຫາກຍັງຢ້ານກົວກໍ່ໃຫ້ເຂົາຢູ່ຕາມໃຈເຂົາ, ພຽງແຕ່ໃຫ້ຊາວເມືອງດັ່ງກ່າວພໍໃຈຂຶ້ນກັບຝ່າຍເຮົາກໍ່ພໍ . ຕັ້ງແຕ່ເຂດປາກຊອກເຖິງແຄມຂອງແມ່ນເປັນເຂດຂອງເມືອງລະຄອນໃຫ້ເຂົາອອກມາທໍາໄຮ່ນາສວນ, ຢ່າໄປຂຶ້ນຕໍ່ແກວມັນຈະເປັນອັນຕະລາຍ. ຖ້າເມືອງໃດຫາກຍັງເພິ່ງແກວຢູ່ເຮົາຈະນໍາກໍາລັງໄປຕີໃຫ້ມຸ່ນທະລາຍ. ເມືອງໃດຫາກພາກັນອອກມາເພິ່ງເຮົາ, ເຮົາຈະປ່ອຍໃຫ້ເປັນບ້ານເປັນເມືອງຕໍ່ໄປ.

### 63. ເຈົ້າວັງໜ້າເມືອງລະຄອນອາສາໄປຕີເມືອງຄໍາເກີດ

ເຈົ້າວັງໜ້າແຫ່ງເມືອງລະຄອນຮ້ອງຂໍຕໍ່ເຈົ້າຄຸນໂຍທານາຍໃຫຍ່ຂອງໄທວ່າ: ຂ້າຂໍອາສານໍາກໍາລັງຂຶ້ນໄປຕີເມືອງຄໍາເກີດເພາະເມືອງດັ່ງກ່າວຍັງຂັດເຮົາ ແລະເອົາແກວເປັນທີ່ເພິ່ງ. ຄໍາຮ້ອງຂໍດັ່ງກ່າວໄດ້ຮັບຄໍາເຫັນດີຈາກເຈົ້າຄຸນໂຍທາ.

ເມື່ອກັບເມືອເຖິງເມືອງລະຄອນແລ້ວ, ເຈົ້າວັງໜ້າກໍ່ເຕົ້າໂຮມກໍາລັງແລ້ວນໍາເຮືອຂ້າມຂອງ. ເຈົ້າວັງໜ້າກໍ່ພາພົນລັດເລັ່ງຂຶ້ນເຖິງເຂດພູບວມລຸ ທີ່ເປັນອານາເຂດຂອງເມືອງຄໍາມ່ວນ ແລະເມືອງຄໍາເກີດເຂດນັ້ນແກວໄດ້ນໍາກໍາລັງມາຕັ້ງຄ້າຍວຽງຕັ້ງແຕ່ແຄມຂອງຂຶ້ນໄປເພື່ອຮັກສາບໍ່ໃຫ້ຄົວແຕກຕື່ນອອກໜີ. ເມື່ອກໍາລັງຂອງເຈົ້າວັງໜ້າແຫ່ງເມືອງລະຄອນໄປເຖິງກໍ່ຈັດກໍາລັງປິດລ້ອມຄ້າຍເຈັດຮອບ, ທະຫານແກວອອກບໍ່ໄດ້, ພວກລາວກໍເລີຍຢູທາງເຫມ້າງເອົາຄົວທຸກບ່ອນແລ້ວກວາດເມືອເມືອງລະຄອນ, ຊາວຄົວດັ່ງກ່າວຖືກນາຍໄທແບ່ງປັນກັນເປັນຂ້ອຍຂ້າໜຶ່ງສ່ວນ, ອີກສອງແມ່ນຖືກເອົາໄປມອບຖວາຍໃຫ້ແກ່ທູນຂະໜ່ອມ (ເຈົ້າບາງກອກ)

ເຫດການດັ່ງກ່າວເຮັດໃຫ້ແກວມີຄວາມຄຽດແຄ້ນຫຼາຍທີ່ລາວມາຍາດເອົາຄົວໄປ. ແກວຈຶ່ງນໍາກໍາລັງໄລ່ຕາມຕີທະຫານລາວຮອດບອນລຸຄັງກົ່ວ, ແກວຈັບໄດ້ທະຫານລາວທຸກຄົນ, ຂ່າວນີ້ໄດ້ດັງໄປເຖິງເມືອງລະຄອນ, ເຈົ້າວັງໜ້າາແຫ່ງເມືອງລະຄອນເສຍໃຈຫຼາຍຈຶ່ງນໍາກໍາລັງຂ້າມຂອງມາຕີແກວ. ແກວສູ້ບໍ່ໄຫວຈຶ່ງພາກັນແຕກໜີ ແລະຖືກຈັບໄດ້ເປັນຈໍານວນຫຼວງຫຼາຍ, ຍັງເຫຼືອແຕ່ສາມສີ່ຄົນເທົ່ານັ້ນທີ່ປົບໜີໄດ້. ຈໍານວນທະຫານແກວທີ່ຖືກຈັບນັ້ນ ຖືກທຸບຕີທໍລະມານຢ່າງໜັກ, ຍ້ອນວ່າເຈົ້າວັງໜ້າຄຽດໃຫ້ແກວຂ້າລາຊະບຸດຜູ້ເປັນອ້າຍຂອງຕົນເສຍໃນຄາວກ່ອນ. ຈາກນັ້ນ, ເຂົາກໍ່ນໍາທະຫານແກວຂ້າມຂອງເມືອເມືອງລະຄອນ ແລະສົ່ງມອບໃຫ້ແກ່ເຈົ້າຄຸນໂຍທານາຍໃຫຍ່ຂອງໄທ.

**64. ເຫດການເມືອງຊຸມພອນ**

ກ່າວເຖິງເຈົ້າເມືອງຊຸມພອນເຊິ່ງພາຄອບຄົວໜີໄປລີ້ຊ່ອນຢູ່ໃນປ່າຕັ້ງແຕ່ສະໄໝທີ່ໄທມາຕີເມືອງຊຸມພອນພຸ້ນ, ມາບັດນີ້ກໍພາກັນອຶດຢາກເຂົ້ານໍ້າ, ເພາະບໍ່ມີໂອກາດໄດ້ສ້າງໄຮ່ທໍານາ, ມີວແຕ່ໜີເສີກ. ມາດຽວນີ້, ແກວຊໍ້າພັດຈັດໃຫ້ໄປເຝົ້າຍາມຄ້າຍຢູ່ຕະຫຼອດ, ສິ່ງນີ້ໄດ້ພາໃຫ້ເຈົ້າເມືອງມີຄວາມອຸກອັ່ງຄັ່ງແຄ້ນ ບໍ່ຕ່າງຫຍັງກັບກືນກິນຂວານທັງດ້າມ.

ຕໍ່ມາຈຸຜາບນາຍດ່ານແກວໄດ້ໄປປັດກວາດເອົາບັນດາຄົວທີ່ແຕກຕື່ນເຂົ້າປ່ານັ້ນມາໂຮມໄວ້ຄ້າຍນີ້ບ່ອນດຽວພ້ອມທັງປະກາດວ່າບໍ່ໃຫ້ຊາວຄົວຢ້ານກົວຫຍັງ, ເພາະພວກກູຍັງຢູ່ນີ້ພວກລາວຢ້ານຢ່າງຕາຍພຸ້ນແລ້ວ. ຕໍ່ມາທະຫານລາວໄດ້ແຕ່ງຄົນມາສືບເບິ່ງເຫັນແຕ່ແກວຢູ່ໃນຄ້າຍໜ້ອຍດຽວຈຶ່ງນໍາກໍາລັງພົນຫ້າຮ້ອຍກວ່າຄົນຂ້າມມາໄລຕີແກວ. ທະຫານຂອງຈຸຜາບສູ້ລາວບໍ່ໄຫວກໍແຕກສະຫຼຸຝຸຟາຍໄປ. ຈາກນັ້ນ, ລາວກໍກັບຄືນມາຢູ່ເມືອງຊຸມພອນຄືເກົ່າ. ຈົບແລ້ວທ່ານເອີຍລິດຈະນາແລ້ວຍາມແຖໃກ້ທ່ຽງ ແລທ່ານເອີຍ ເນນສິງເປັນຜູ້ລິດຈະນາ... ເສນາເປັນເຈົ້າລາມາແລທ່ານເອີຍ.



**(ຄັດຕອນ)**

**ຕອນທີ 1: " ເມືອງວຽງຈັນ"**

| | | | |
|---|---|---|---|
| ບັດນີ້ | ຮຽມຈັກຈາຕອງແຕ້ມ | ຕຳນານໄຂອ່ານ ກ່ອນແລ້ວ | |
| ພໍໃຫ້ | ເຫັນເຫດຮ້າຍ | ເມືອງບ້ານວຸ່ນວາຍ ເຈົ້າເອີຍ | |
| ເພື່ອຈັກ | ຈາໄປກວ້າງ | ກໍ່ຍັງຫຼາຍຍາວຍິ່ງ ຈິງແລ້ວ | |
| ຮຽມກໍ | ເວົ້າແຕ່ຂໍ້ | ເປັນບັ້ນບ່ອນຮອມ ແທ້ແລ້ວ | |
| ຟັງເຍີ | ຍິງຊາຍເຖົ້າ | ສາວຮາມຂຶ້ນໃໝ່ ຮຽມເຮີຍ | |
| ຫຼອນວ່າ | ຈຳຈື່ໄດ້ | ເມືອໜ້າສືບ ໄປບໍ່ຮູ້ | |
| ຄັນວ່າ | ຍືນຍາວພັ້ນ | ຫຼາຍປີຕິດຕໍ່ ໄປນັ້ນ | |
| | ເວົ້າພາກພື້ນ | ເຂົານັ້ນຢາກຟັງ ແທ້ແລ້ວ | |
| ຍັງມີ | ນັກຄະເລດລ້ຳ | ຮຽກຊື່ວຽງຈັນ | |
| | ປາການສູງ | ແອດລະອັງແຄມນ້ຳ | |
| | ຫໍເກີຍຕັ້ງ | ກາງເມືອງດູອາດ | |
| | ຄຳ ແລະ ແກ້ວ | ເຮືອງຂັນຮຸ່ງແສງ | |
| ຍາມເມື່ອ | ລິມພານຕ້ອງ | ສຽງກະດິງດັງມ່ອນ | |
| ຄືດັ່ງ | ຜາສາດແກ້ວ | ເມືອງໄທ້ເທພະດິງ ແທ້ແລ້ວ | |
| | ຕົ້ນກະສັດໄທ້ | ສະເຫວີຍເມືອງເອກະລາດ | |
| ຊື່ວ່າ | ພະອະນຸລຸດະລາດເຈົ້າ | ບຸນກວ້າງນັ່ງປອງ ຫັ້ນແລ້ວ | |
| ອັນວ່າ | ເຫວີແກ້ວ | ທຽມອິງທະລາດ | |
| ຊື່ວ່າ | ຄຳປອງເຈົ້າ | ແຝງຂ້າມຝ່ານຂວາ | ແທ້ແລ້ວ |
| ອັນວ່າ | ເຫວີຊ້າຍ | ຄຳຈັນທັດຖະບາດ | |
| | ສະໜົມໝຸ່ມນ້ອຍ | ພໍຮ້ອຍແອດລະອັງ | |
| | ພາຍສານຊ້າງ | ສາມພັນຕົວອາດ | |
| | ມ້າມິ່ງຕົ້ນ | ສາມຮ້ອຍເຄື່ອງຄຳ | ແທ້ແລ້ວ |
| | ເສນາຊັ້ນ | ອາສາສາມໝື່ນ | |
| ເຂົານັ້ນ | ຄືນຂະໜາດກ້າ | ຟັນຂ້າບໍ່ຕາຍ | ແທ້ແລ້ວ |
| ມີທັງ | ໄທພວກຟ້ອນ | ຂັບເສບເພງລະບຳ | |
| | ຫົວທຽມບັກ | ປິ່ນຕີນເມືອຟ້າ | |
| | ມົງກຸດແກ້ວ | ສຸບຫົວເປາະຢ້ອງ | |
| | ຄິງກ້ອມຄ້ອມ | ທວາຍເຫຼື້ອມແກວ່ງແພນ | |
| | ກະສິງໂຂນພ້ອມ | ມະໂຫລີເປັນໝູ່ | |

| | | |
|---|---|---|
| | ແອະແອ່ນຟ້ອນ | ຖວາຍເຈົ້າຊູ່ຍາມ |
| ຟັງເຍີ | ພິນພາດຄ້ອງ | ສຽງເສບສອນໄລ ພຸ້ນເຍີ |
| | ທັງລະບໍາສຽງ | ຊຸ່ຍແຄນເພງໄຄ້ |
| | ຫອຍສັງກ້ອງ | ສີມສຽງກະຈັບປີ |
| | ຊຸງຕ່ອຍຕ້ອງ | ກົມກົ້ວປີ່ແກ. |
| | ຄ້ອງກອງພ້ອມ | ໄຊພາດລັ່ນສຽງ |
| | ສຽງສະໜັ່ນກອງ | ກົມກົ້ວກ່ອມໃຈ |
| | ໄທລະບໍາເມັງຟ້ອນ | ແກມລະຄອນເປາະປອກ |
| | ແຂນໃສ່ມ້າວ | ເທັງສ້ອຍເຄື່ອງຄໍາ |
| | ສັງວານກ້ຽວ | ສາຍສະເອັ້ງສີບສອດ |
| ຄືດັ່ງ | ອິນແຕ່ງແຕ້ມ | ມາແທ້ແຕ່ສະຫວັນ |
| ກໍບໍ່ | ມີອາດຢ້ານ | ເມືອງອື່ນໝາຍຜະຈົນ ໄດ້ແລ້ວ |
| | ຢູ່ກະເສີມສຸກ | ໄພ່ໄທທຽວຄ້າ |
| ຢູ່ທ່າງ | ທໍາການສ້າງ | ຫຼາຍປະການທຸກສິ່ງ |
| | ວັດກໍ່ຕັ້ງ | ຄໍາແກ້ວເຮື່ອເຮືອງ |
| ແມ່ນວ່າ | ມະຫາເທວີເຈົ້າ | ຕຸພະນິມຫຼັກໂລກ ເຮົານັ້ນ |
| | ຄໍາແຕ່ພື້ນ | ເຖີງເທົ້າຍອດປາຍ ແທ້ແລ້ວ |
| ຝູງໝູ່ | ຍິງຊາຍພ້ອມ | ຍິນດີຊົມຊື່ນ |
| | ລິງລາດຕັ້ງ | ປະສິງຊື້ຈ່າຍຂອງ |
| | ສາວບ່າວເຖົ້າ | ຕໍ່ແຍລວກໃສໃຍ |
| | ທັງວັນຄືນ | ບໍ່ນອນຄາວນ້ອຍ |
| ພໍເມື່ອ | ໝື່ນນານແລ້ວ | ສາລະມວນມາຮອດ |
| ກໍຈຶ່ງ. | ຂໍາເຂືອກຮ້ອນ | ຝູງຂ້າໄພ່ພົນ ແທ້ແລ້ວ |
| ເຫດວ່າ | ເທໂວເຈົ້າ | ນໍາດີນອຸບາດ ຈິງແລ້ວ |
| ກໍ່ຈຶ່ງ | ບັງເກີດຮ້ອນ | ສູນເຂົ້າບັນດິນ |
| ອິນກໍ | ນິລະມິດໃຫ້ | ຫຼາຍສິ່ງນາໆ |
| ເພື່ອວ່າ | ຊາຕາເມືອງ | ເຄື່ອນຄາວຄາດຄ້ອຍ |
| ແມ່ນວ່າ | ມະຫາເທວີເຈົ້າ | ຕຸພະນິມອີງປະເສີດ ກໍດີ |
| ເຈົ້າກໍ | ບັງເກີດໃຫ້ | ເປັນຟ້າຜ່າລີງ ແທ້ແລ້ວ |
| ອັນໜຶ່ງ | ດອນຂອນຂວາງ | ສິນເຊຂະໜູນຢູ່ ພາຍພຸ້ນ |

| | | |
|---|---|---|
| ເລີຍເລົ່າ | ຫຍັບເຄື່ອນເຂົ້າ | ມາໃກ້ຈິ່ມຈີ່ນ. |
| ອັນໜຶ່ງ | ດິນເມືອງທ່ານ | ແຕກຫວະເປັນທ້າງ |
| | (ປາງປະສາດເຈົ້າ | ອີງເອກດົງກະສັດ) |
| | ລິມພານພັດ | ເປເພທະລາຍມ້າງ |
| ອັນໜຶ່ງ | ຫາກແມ່ນອິນທາເຈົ້າ | ສັນຍານບົງບອກ ແທ້ແລ້ວ |
| ເພື່ອໃຫ້ | ຄຶດສືບໄວ້ | ສ້າງຊ່ວຍແຮງ ຫັ້ນແລ້ວ |



## ຮູບທີ1: ຂະບວນທັບຂອງເຈົ້າອະນຸວົງ

## ຕອນທີ 14 " ຈົ້າອະນຸວົງເຄື່ອນທັບອອກຈາກວຽງຈັນ"

| | | |
|---|---|---|
| ຈຸລະ | ສັກກະລາດໄດ້ໜຶ່ງພັນໜຶ່ງຮ້ອຍ | ເສດຍິ່ງຍັງມີ |
| | ແປດສິບແປດປີ | ແມ່ນຈິງບໍ່ຂາດ |
| ປີນັ້ນ | ເປັນປີກຸນ | ທ່ຽງຈິງຈຳໝັ້ນ |
| | ເດືອນສາມເຕົ້າ | ລະດູໜາວຕັ້ງຢູ່ |
| ເລີຍເລົ່າ | ຍົກຍ່າງຍ້າຍ | ພົນລ້ານລ່ວງໄປ |
| ຜໍ່ດູ | ຍາບໆເຫຼື້ອມ | ລົມແກວ່ງຫາງປະຄື ພຸ້ນເຍີ |
| | ອໍລະຊອນສຽງ | ເສບພະອົງຍ່າງຍ້າຍ |
| ຟັງຍິນ | ສຽງປີ່ແຕ້ | ສົມພາດດົນຕີ |
| | ພົນລະບຳເສບ | ຂຸ່ຍແຄນເພງໄດ້ |
| | ບັ້ງອີ່ພ້ອມ | ຫອຍສັງກະຈັບປີ່ |
| | ຊຸງຕ່ອຍຕ້ອງ | ກົມກົ້ວກ່ອມໃຈ |
| | ສຽງລະນາດຄ້ອງ | ກຸມກ່ອມສຽງລະຄັງ |
| | ເພລີກອງ | ຄື່ນເຄັງດັງຫ້າວ |
| | ຫັດຖີຊ້າງ | ສະເທືອນສຽງດັງສະໜັ່ນ |
| | ມ້າແຫ່ລ້ອມ | ຄົນເຂົ້ານີ້ນັ້ນ |
| | ພະບາດເຈົ້າ | ສະເດັດຂີ່ສີວິກາຍ |
| | ເສນາຫຼາຍ | ແຫ່ຕາມພະອົງເຈົ້າ |
| | ເທວີເຄົ້າ | ສະເດັດຕາມພະບາດ |
| | ສະໜົມໝຸ່ມລ້ອມ | ລະວັງເຈົ້າຊູ່ພາຍ |
| | ຍາບໆເຫຼື້ອມ | ເຂົາແກວ່ງຈຳມອນ |
| | ພູທອນສະເດັດ | ອອກເມືອງຍ່າງຍ້າຍ |
| ເຈົ້ານຳ | ໄປຈອດຢັ້ງ | ທຳໄຊໂຮມບ່າວ |

| | | |
|---|---|---|
| ຄັນວ່າ | ມາຖ້ອນແລ້ວ | ຍາມກ້າດ່ອນໄປ |
| | ຄືນຄັ້ງເທົ້າ | ເຕັມແຜ່ນທໍລະນີ |
| | ປະຖະພີບິດ | ໃງ່ຄວັນຖຸງຟ້າ |
| | ຍາບໆແສ | ໄຫຼລັງຕາມທາງ |
| ພະກໍ | ທົ່ງພາຍສານ | ຍ່າງເວີຍງາມລະຫ້ອຍ |
| | ແຊງງ່ອນຕັ້ງ | ເຫິງຫຼັງດູອາດ |
| | ຍາບໆແກ້ວ | ຄຳລ້ອນເຣື່ອເຮືອງ |
| | ຜ້າມ່ານກັ້ງ | ຖືກອອກລະວັງເສຍ |
| | ໄໝຄຳປັກ | ແສ່ວລາວແກມແກ້ວ |
| | ເສີນໆຊ້າງ | ພາຍສານຍົກຍ່າງ |
| | ຄືນແຫ່ລ້ອມ | ສອງຂ້າງແລ່ນຕາມ |
| | ໃຍໆແສ້ | ປະຄືເບີກຕາມລົມ |
| | ທົມໆສຽງ | ແຜ່ນດິນດາພື້ນ |
| | ໄທຢືນພ້ອມ | ດາກັນເປັນໝູ |
| | ຫອກແລະງ້າວ | ແຂວນສ້ອຍໃສ່ຍອງ |
| | ໄທພວກມ້າ | ສຸບໝວກຖືທວນ |
| | ເດີນພະລັນໄປ | ກ່ອນພົນຫົວໜ້າ |
| | ຄືນທັ່ງເທົ່າ | ເຫຼືອດິນເດຍລະດາດ |
| | ຍາບໆແສ້ | ຄືນຳຍິ່ງຢາຍ |
| | ເລີຍເລົ່າກາຍຫົນຫ້ອງ | ເມືອງສີສັດຕະນາກ |
| | ຂ້າມໂຄກກວ້າງ | ຄະນິງໂອ້ອ່າວຫຼັງ |
| | ເດືອນສາມເຕົ້າ | ຍຸງແງວຫາຄູ່ |
| | ຫອມດອກໄມ້ | ຍິນສະບັ້ນເໝື່ອຍມະໂນ |
| ໂອນໍບັດນີ້ | ມາໄກຫ້ອງ | ໂສໂກຍິນໂສກ |
| ຄຽດທໍ່ | ໄຮ້ຂີ້ຮ້າຍ | ທຳສິມແກ່ໃຈ ດັ່ງນີ້ |
| ກູຊິ. | ທຳມຸ່ນມ້າງ | ເມືອງແຫ່ງມັນເສຍ ບໍ່ຢ່າແລ້ວ |
| | ເອົາຄົວມັນ | ກວາດມາເປັນຂ້ອຍ |

| | | |
|---|---|---|
| ກູຈັກ | ທຳໃຫ້ແລ້ວ | ສົມດັ່ງຄຳຄິດ |
| ສັງມາ | ປອງທຳເວນ | ຊູ່ປີເລີງເລື້ອຍ |
| ຄອຍເລົ່າ | ວອຍໆຍ້າຍ | ເຊີງຊຳຊໍ້າຍ່າງ |
| ເຖິງທີ່ | ຄາວຈອດແລ້ວ | ຮຽງຮ້ານສຳລານ |
| | ຝູງບ່າວແກ້ວ | ຕັ້ງຕູບແປງວຽງ |
| ລາງພ່ອງ | ຫາອາຫານ | ໃສ່ພາສະເຫວີຍເຈົ້າ |
| ລາງພ່ອງ | ເອົາຊ້າງມ້າ | ລົງອາບສົງຊິນ |
| | ບໍລິບອນເລີຍ | ຄຳລົງແລຄ້ອຍ |
| | ເຂົາເສບເຈົ້າ | ສະເຫວີຍແລງແລ້ວຢ່າ |
| | ມືອມືດໄມ້ | ຕາວັນເຂົ້າສູ່ເຂົາ |
| ເຂົາກໍ | ເອົາກັນຕັ້ງ | ຮັກສາຍາມປັນປ່ຽນ |
| | ຢາຍອ່ານໄວ້ | ລະວັງລ້ອມຢູ່ພາຍ |
| | ພະບາດເຈົ້າ | ທົງບັນທົມໄສຍາດ |
| | ເຖິງຮຸ່ງແຈ້ງ | ວັນເຂົ້າຂອງເຂົາ |
| ເຈົ້າກໍ | ສະເຫວີຍງາຍແລ້ວ | ເຕີນພົນປະດັບເຄື່ອງ |
| | ເໝີດຖ້ອນແລ້ວ | ສະເດັດຍ້າຍເຄື່ອນໄປ ຫັ້ນແລ້ວ |
| ແຕ່ນັ້ນ | ຄວາມຊ່າເຫົ້າ | ເໝີດຂອບລາວໄທ |
| ເປັນດັ່ງ | ແສງສຸລິໂຍໄທ | ທຽງຍາມເດືອນຫ້າ |
| ເຂົາກໍ | ຍິນຂາມແທ້ | ສົມພານພູວະນາດ |
| ເຂົາກໍ | ໝາຍເພິ່ງເຈົ້າ | ບຸນກວ້າງຊູ່ເມືອງ ແທ້ແລ້ວ |
| ໃຜບໍ່ | ຂັດແຂງໄດ້ | ກົວຕາຍຢ້ານສັ່ນ ຈິງແລ້ວ |
| ຄອງວ່າ | ເຈົ້າຮອດແລ້ວ | ຂໍເຂົ້າເພິ່ງບຸນ ຫັ້ນແລ້ວ |
| ແຕ່ນັ້ນ | ພະຍາໄກເຈົ້າ | ພູຂັນຮູ້ຂ່າວ |
| ມັນກໍ | ຊົມຊື່ນແທ້ | ຄອງເຈົ້າຊູ່ວັນ |
| ເມື່ອໃດ | ພະຫາກມາເຖິງແລ້ວ | ຊິເອົາຍົນໄປຊ່ວຍ ຈິງແລ້ວ |
| ຄຽດທີ່ | ໄທຂີ້ຮ້າຍ | ເມືອງຂວໍ້າມຸ່ນວາຍ ແທ້ແລ້ວ |
| | ຈັກອາສາຄໍ້າ | ພະຍາພົມບໍ່ມີຢ່ອນ ມັນແລ້ວ |
| | ຈັບຜູກປີ້ງ | ຕີຂ້າແມ່ນໃຈ ແທ້ແລ້ວ |
| ຄຽດທີ່ | ມັນເປ່ມ້າງ | ປອງຈູດເມືອງເສຍ ດັ່ງນັ້ນ |

ບັດນີ້ ເວນນຳທັນ ຄອບມັນລາງແລ້ວ

## ຕອນທີ12

## " ປະຊາຊົນໜີຈາກການສັກເລກ, ຊະນວນສົງຄາມວຽງຈັນ-ບາງກອກ "

ພໍເມື່ອ ເໜີດເຂດແລ້ວ ມື້ມແຕ່ງລະດູຝົນ

ຝູງໝູ່ ນາຍກອງສັກ ອອກມາມີຊ້ຳ

ເຂົາກໍ ໄປຕັ້ງຢູ່ ທັບທີ່ກາລະສິນ

ຈັດຫົວເມືອງ ເລັ່ງມາໂຮມທັນ

ແຕ່ນັ້ນ ເລີຍເລົ່າຂຳເຂືອກຮ້ອນ ອຸບາດຫຼາຍປະການ

ເສນາເຂົາ ແຫກເມືອງໜີເຈົ້າ

ເຂົາກໍ ໝາຍເພິ່ງເຈົ້າ ຢັ້ງຂະໜ່ອມວຽງຈັນ

ເຂົາກໍ ຂົນຄົວມາ ເພິ່ງບຸນຈອມເຈົ້າ

ພະຍາສິມບໍພິດເຈົ້າ ແຫກຈາກກາລະສິນ

ວຽນກິນເມືອງ ເອກໂຫນຈິງແທ້

ເຈົ້າກໍ ມາຢູ່ສ້າງ ແທນທີ່ໜອງຫານ

| | | |
|---|---|---|
| ຊື່ວ່າ | ສາກົນນະຄອນ | ແຜ່ນປະຖະພີພະທາດໃຫຍ່ |
| ແຕ່ນັ້ນ | ພະຍາພົມເຈົ້າ | ແປງຕາໄປຫຼອກ |
| | ຕົວະຍົວະໃຫ້ | ເມືອງບ້ານຫຼົ້ມຫຼວງ ແທ້ແລ້ວ |
| | ມັນກໍ ຂໍດອມເຈົ້າ | ຢັ້ງຂະໜ່ອມບາສັກ |
| ຂ້າຈັກ | ເອົາກຳລັງ | ລ່ວງມາທັງພີ້ |
| ຂ້າຈັກ | ໄປຕີຂ້າ | ຄົນດີງບໍ່ອອກສ່ວຍ ໃຜນັ້ນ |
| ເອົາເມືອ | ຖວາຍແກ່ທູນຂະໜ່ອມເຈົ້າ | ເປັນຂ້າໃຊ້ສອຍ ແທ້ແລ້ວ |
| ແຕ່ນັ້ນ | ອີງອາດເຈົ້າ | ສະເຫວີຍລາດປາສັກ ເຈົ້າກໍ |
| | ຢືນຄຳແຂງ | ກ່າວໂກທາກ້າ |
| ອັນວ່າ | ໃນເຂດນີ້ | ຕັ້ງແຕ່ດຽວກູ ແທ້ແລ້ວ |
| ໃຜຫາກ | ຍັງຂື່ມຂັດ | ວ່າຈິງເອົາແທ້ |
| ແຕ່ນັ້ນ | ພະຍາພົມເຈົ້າ | ຊໍ້າຄອບສອງທີ |
| | ເປັນສັນໃດ | ກໍບໍ່ພັງຄຳແລ້ວ |
| ຂ້າກໍ | ບົນບອກໃຫ້ | ຮູ້ເຫດສັນຍາ ສະໜ່ອຍນັ້ນ |
| ຢ່າໄດ້ | ຂືນຄຳເຄັມ | ຂື່ມກັນສັນນັ້ນ |
| ແຕ່ນັ້ນ | ພະບາດເຈົ້າ | ອີງອາດບາສັກ |
| ເຈົ້າກໍ | ໂກທາຂຶມ | ປານໄຟສຸມເອົາ |
| ເຈົ້າກໍ | ຈັດບ່າວແກ້ວ | ມາຮີບໂດຍພະລັນ |
| | ລົງເຮືອພາຍ | ຖີບເມືອທູນເຈົ້າ |
| | ເລີຍເລັ່ງເທົ້າ | ເຖິງທີ່ວຽງຈັນ |
| ເຈົ້າກໍ | ທູນກອນຖວາຍ | ຊູ່ອັນດີຮ້າຍ |
| ແຕ່ນັ້ນ | ລາຊາໄທ້ | ບິດາຕົນພໍ່ |
| ເຈົ້າກໍ | ໃຈໂກດກ້າ | ຫຼາຍຂໍ້ແຕ່ຫຼັງ |
| ອັນແຕ່ | ໄທສໍ່ານີ້ | ສັງເລົ່າທຳເອນ ດັ່ງນີ້ |
| ກູຊິ | ນຳໄປຕີ | ມຸນວາຍປາງນີ້ |
| ຍາມເມື່ອ | ເຈົ້າຮອດນັ້ນ | ຜີຮ່າໜູນມາ |
| | ຄົນທັງຫຼາຍ | ເລົ່າຕາຍເຫຼືອລົ້ນ |
| ເຈົ້າກໍ | ຢັ້ງຢູ່ຫັ້ນ | ຊາມສະຫວ່າງໂພຍໄພ |
| | ພໍປະມານເລີຍ | ສວ່າງຫາຍເສຍສ້ຽງ |

## ຕອນທີ 13

## " ເຈົ້າອະນຸສັ່ງກະກຽມກອງທັບ "

:

| | | |
|---|---|---|
| ແຕ່ນັ້ນ | ອິງອາດເຈົ້າ | ຢັ້ງຂະໜ່ອມເໜືອຫົວ |
| ພະກໍ | ມີໂອງການ | ໃສ່ຫູຕົງສັ່ງ |
| ຄັນວ່າ | ເຈົ້າຫາກເມືອຮອດແລ້ວ | ຈັດເລັ່ງໂຍທາ ທ່ຽວເຫີ້ນ |
| ແລ້ວຈິ່ງ | ໄປຂະໜູນເຕັງ | ທີມູນຫົວຊ້າຍ |
| | ເຮົາພະອິງນີ້ | ຊິໄປເຕັງນະຄອນລາດ |
| | ແຂງຂິ່ມໄວ້ | ຕົນໜ້າປີກຂວາ ຫັ້ນແລ້ວ |
| ອັນວ່າ | ວັງໜ້າເຈົ້າ | ໃຫ້ຂິ່ມຫົວກາງ |
| | ເອົາກາລະສິນ | ກວາດຄົວຢ່າໄວ້ |
| ກັບທັງ | ກອງສັກພ້ອມ | ພະຍາເມືອງຢ່າໃຫ້ປ່ອຍ |

| | | | |
|---|---|---|---|
| ແລ້ວຈຶ່ງ | ສິນມອດມ້ຽນ | ຢ່າລ້ຽງສວ່າງໃຈ | |
| ເຫດວ່າ | ເຈົ້າກາລະສິນນີ້ | ຂັດແຂ່ງເຄື່ອງພະໄທ | |
| ມັນກໍ | ແຂ່ງຄວາມຕາຍ | ຕໍ່ໄທຈິງແທ້ | |
| ແມ່ນວ່າ | ຂ້ອຍພະທາດເຈົ້າ | ມັນກວາດເອົາໜີ | |
| ກັບທັງ | ຝູງໄທພູ | ກໍດັ່ງດຽວກັນແທ້ | |
| ກູຫາກ | ໄດ້ເວົ້າແລ້ວ | ຫຼາຍຄໍາມັນບໍ່ຢາ | ເລີງແລ້ວ |
| ມັນກໍ | ດູງາຍແທ້ | ແຂງຕັ້ງຕໍ່ຕາຍ | ແທ້ແລ້ວ |
| ອັນໜຶ່ງ | ເຫມະລາດນີ້ | ກໍເປັນດັ່ງດຽວກັນ | ແທ້ແລ້ວ |
| ມັນກໍ | ນໍາເອົາເສິກດັນ | ຍາດຊິງເມືອງບ້ານ | |
| ໃຫ້ເຈົ້າ | ສິນຫົວມ້ຽນ | ຂືນມືໃຫ້ມັນສວ່າງ | ຫັ້ນທ້ອນ |
| | ຢ່າໄດ້ລ້ຽງ | ເຂົາໄວ້ບໍ່ດີ | ແທ້ແລ້ວ |
| ແຕ່ນັ້ນ | ລາຊະບຸດເຈົ້າແຈ້ງອາດແລ້ວ | ເລີຍເລົ່າລາເມືອ | |
| | ລົງເຮືອພາຍ | ລ່ອງລົງບໍ່ມີຊ້າ | |
| ຄ້ອມວ່າ | ເຖິງເມືອງແລ້ວ | ຈັດຄົນເຂາະຂອດ | |
| | ເມືອງໝູ່ນັ້ນ | ຕຽມໄວ້ຊູ່ຄົນ | |
| ແຕ່ນັ້ນ | ອິງອາດເຈົ້າ | ຕີນຜ່ານວຽງຈັນ | |
| ເຈົ້າກໍ | ຈໍາຊານົນ | ເລັ່ງລົງມີຊ້າ | |
| ເຈົ້າກໍ | ໄປເຖິງເທົ້າ | ເມືອງລະຄອນແວນຮີບ | ຈິງເທີ້ນ |
| ບອກໃຫ້ | ຈັດບ່າວແກ້ວ | ຫານໄວ້ຢ່ານານ | ທຽວເທີ້ນ |
| | ປັດຂອດເທົ້າ | ຮອດເຂດມຸກດາຫານ | |
| | ເກນກໍາລັງ | ຊູ່ເມືອງຢ່າຊ້າ. | |
| ອັນວ່າ | ເມືອງລະຄອນນັ້ນ | ໃຫ້ຟັງດູຢຸດກ່ອນ | ຫັ້ນທ້ອນ |
| ຄັນວ່າ | ວັງໜ້າຍ້າຍ | ໄປແລ້ວຈຶ່ງຕາມ | ຫັ້ນທ້ອນ |
| ອັນວ່າ | ເຮົາພະອິງນີ້ | ຊິເອົາໄຊເສຍກ່ອນ | |
| | ຍົກທັບເຂົ້າ | ວັນໜ້າກ່ອນພົນ | |
| ກູຫາກ | ເຖິງແຫ່ງຫ້ອງ | ນະຄອນລາສະສີມາ | ເມື່ອໃດ |
| | ຫົວກາງສູ | ຮີບໄປຢ່າຊ້າ | |
| ອັນນີ້ | ຫາກແມ່ນອຸບາດແທ້ | ເທເວດບັນດົນ | ເຈົ້າເອີຍ |
| ເຫດວ່າ | ເກນເມືອງເໝີດ | ຄອບງາມແທ້ | |

## ຕອນທີ 15

## “ ເຈົ້າອະນຸເດີນທາງເຖິງເມືອງໂຄລາດ ”

| | | | |
|---|---|---|---|
| ແຕ່ນັ້ນ | ພະບາດເຈົ້າ | ດັ້ນສະດຸ່ງໂດຍສະເດັດ | |
| | ຫຼາຍວັນຄືນ | ຄ່ຽນຄາວເມືອໜ້າ | |
| | ເຖິງແຫ່ງຫ້ອງ | ຄອນລາດສີມາ | |
| | ທັງເມືອງຫູ | ອອກມາຫາເຈົ້າ | |
| | ບົວບາງພ້ອມ | ຖວາຍພະອົງທຸກສິ່ງ | |
| ຂໍໃຫ້ | ພະໂຜດລ້ຽງ | ເປັນຂ້າຊ່ວຍຕີນ | ແດ່ທ້ອນ |
| ຄັນວ່າ | ອົງປະທານໃຫ້ | ສັນໃດຕັດພະໂອດ | ມາເທີ້ນ |
| ຂ້ານ້ອຍ | ເຝົ້າຄູນຂະໜ່ອມແກ້ວ | ຂໍແຈ້ງລາຊະການ | ທ່ຽງແລ້ວ |
| ຈັກວ່າ | ເອົາຄືວຂຶ້ນ | ວຽງຈັນຮູ້ວ່າຢູ່ | ດີນັ້ນ |
| ຄັນວ່າ | ພະໂຜດໃຫ້ | ໃດແທ້ຮ່ວມໂດຍ | ຫັ້ນແລ້ວ |

| | | | |
|---|---|---|---|
| ອັນວ່າ | ພະຍາພິມເຈົ້າ | ໜີເມື່ອງຄວ້າງຢູ່ | ສັນນັ້ນ |
| ມັນບໍ່ | ຮູ້ເຫດກ້ຳ | ສັງແທ້ທໍ່ໃຍ | ພະເອີຍ |
| ເກງບາດ | ມັນຮູ້ແລ້ວ | ກັບຕ່າວຄືນມາ | ດັ່ງນັ້ນ |
| ກໍບໍ່ | ມີຝີມື | ດຶ້ຊີນນໄດ້ | |
| ເພື່ອວ່າ | ຢາກຖາງທາງຂຶ້ນ | ວຽງຈັນໃຫ້ສວ່າງ | ເສຍນັ້ນ |
| | ເຫຼືອແຕ່ ການເຮັ່ງຮ້ອນ | ຫຼາຍຂໍ້ບໍ່ວາຍ | ພະເອີຍ |
| ແຕ່ນັ້ນ | ອິງກະສັດເຈົ້າ | ປົງປະທານຄົບເຄື່ອງ | |
| | ປືນແລະງ້າວ | ວາງໃຫ້ຊູ່ອັນ | ແທ້ແລ້ວ |
| ພະກໍ | ມີອາດໃຫ້ | ກຸມອອກຍັງຄົວ | |
| ສູຈິ່ງ | ເມືອວຽງຈັນ | ຢ່າເນີນນານແທ້ | |
| ເຈົ້າກໍ | ຈັດເລັ່ງຟ້າວ | ຂີນອອກຍັງຄົວ | |
| ເຂົາກໍ | ໂດຍຄຳພະ | ແລ່ນເມືອທັງຟ້າວ | |
| | ອຸກຂະລຸກເອົ້າ | ເຕັມເມືອງຊີຊວ່າ | |
| | ຄອນລາດກວ້າງ | ສຽງໄຫ້ທົ່ວເມືອງ | ຫັ້ນແລ້ວ |
| | ຂະເໜນໄຫພ້ອມ | ຈີນມອນຟ້າວຝັ່ງ | |
| ເຂົາກໍ | ຊຸກເຊື່ອງໄວ້ | ຂອງນັ້ນຊູ່ອັນ | |

## **ເອກະສານອ້າງອີງ**


1. ບຸນລ້ອມ ສີບຸນເຮືອງ ແລະ ຣສ. ສີມໄພວັນ ວິໄລສັກ ( 2012 ) ວັນນະຄະດີລາວ ຊັ້ນມັດທະຍົມສຶກສາ ປີທີ 3 ພິມໂຮງພິມ PITAMBRA BOOKS PRIVATE LTE
2. ວັນນະສຸກ ໂຄດໄຊ ແລະ ຄຳສອນ ຝ່າຍມໄຊ ( 2009 ) ວັນນະຄະດີລາວ 1 ສາຍສ້າງຄູມັດທະຍົມຕົ້ນ ພິມໂຮງພິມ Nhan Dan Printing House HCMC
3. ບຸນລ້ອມ ສີບຸນເຮືອງ,ຣສ. ສີມໄພວັນ ວິໄລສັກ, ສີມເໝາະ ປັນຍາວົງ ແລະ ພວງມະໄລ ສີສຸ່ຳ ( 2015) ວັນນະຄະດີລາວຊັ້ນມັດທະຍົມສຶກສາ ປີທີ 6 ພິມໂຮງພິມ Phu Thinh Printing and Service CoLtd ( ປະເທດຫວຽດນາມ )
4. ນູໄຊຍະ ສິດທິວົງ ( 2001 ) ປື້ມກາບເມືອງພວນ ພາກວິຊາ ພາສາລາວ - ວັນນະຄະດີ ຄະນະອັກສອນສາດ ພິມຄັ້ງທີ 1 ໂຮງພິມສຶກສາ
5. ນູໄຊຍະ ສິດທິວົງ ( 2004 ) ປື້ມກາບເມືອງພວນ ພາກວິຊາ ພາສາລາວ - ວັນນະຄະດີ ຄະນະອັກສອນສາດ ພິມຄັ້ງທີ 1 ໂຮງພິມສຶກສາ